ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---------000--------

ກະຊວງສຶກສາທິການ ແລະ ກິລາ

# ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025
# ແລະ
# ແຜນພັດທະນາຂະແໜງການສຶກສາ ແລະ ກິລາ
# 5 ປີ ຄັ້ງທີ VIII (2016-2020)

ນະຄອນຫຼວງວຽງຈັນ, ທັນວາ 2015

## ສາລະບານ


ຄຳນຳ ........ iv

ຄຳຂອບໃຈ ........ v

**ພາກທີ I ວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ........ 1**

**I. ພາກທີ 1: ຜົນສຳເລັດຂອງການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ 2001-2015 ........ 2**

1.1 ການສຶກສາກ່ອນໄວຮຽນ: ........ 3

1.2 ການສຶກສາຊັ້ນປະຖົມ: ........ 3

1.3 ການສຶກສາຊັ້ນມັດທະຍົມ: ........ 4

1.4 ການສຶກສານອກໂຮງຮຽນ ........ 5

1.5 ການສຶກສາຄູ ........ 5

1.6 ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ........ 6

1.7 ການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ........ 7

1.8 ພະລະສຶກສາ ແລະ ກິລາ-ກາຍຍະກຳ ........ 7

1.9 ສິ່ງທ້າທາຍໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ........ 8

**II. ພາກທີ 2: ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ແລະ ຍຸດທະສາດຮອດປີ 2025 ... 9**

2.1 ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ........ 9

2.2 ທິດທາງລວມຂອງວິໄສທັດ ........ 10

2.3 ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ຮອດປີ 2025 ........ 10

**III. ພາກທີ 3: ມາດຕະການໃນການຈັດຕັ້ງປະຕິບັດ ........ 15**

3.1 ກົນໄກການຈັດຕັ້ງປະຕິບັດ: ........ 15

3.2 ມາດຕະການດ້ານການຕິດຕາມຄຸ້ມຄອງການປະຕິບັດຍຸດທະສາດ: ........ 16

**ພາກທີ II ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020) ........ 17**

**I. ພາກສະເໜີ ........ 18**

1.1 ຄວາມສຳຄັນຂອງວຽກງານສຶກສາ ........ 18

1.2 ພື້ນຖານໃນການພັດທະນາຂະແໜງການສຶກສາ ........ 19

1.3 ວິທີການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາປີ 2016-2020 ........ 19

**II. ຜົນສຳເລັດ ແລະ ສິ່ງທ້າທາຍໃນການພັດທະນາວຽກງານສຶກສາ ແລະ ກິລາ ........ 20**

2.1 ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2011-2015 ........ 20

2.2 ຜົນສຳເລັດໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ ແລະ ເປົ້າໝາຍການສຶກສາເພື່ອທຸກຄົນ ........ 21

2.3 ບັນຫາສິ່ງທ້າທາຍ ແລະ ບາດກ້າວໃນໄລຍະຕໍ່ໜ້າ ........ 23

**III. ເປົ້າໝາຍ, ຈຸດປະສົງ ແລະ ຜົນໄດ້ຮັບສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 .. 25**

3.1 ເປົ້າໝາຍລວມ ........ 25

3.2 ຜົນໄດ້ຮັບລວມ ........ 26

3.3 ຈຸດປະສົງ ແລະ ຄາດໝາຍ ........ 26

3.4 ບັນດາຜົນໄດ້ຮັບ: 27
**IV. ຊັບພະຍາກອນ ແລະ ຄວາມຕ້ອງການດ້ານການເງິນ 46**
4.1 ພາກສະເໜີ 46
4.2 ຄວາມຕ້ອງການດ້ານການເງິນ ສໍາລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 48
4.3 ຄາດຄະເນງົບປະມານພາຍໃນ 49
4.4 ຊັບພະຍາກອນຈາກພາຍນອກ 52
**V. ການຈັດຕັ້ງປະຕິບັດ, ຂອບການຕິດຕາມກວດກາ ແລະ ປະເມີນຜົນ 53**
5.1 ການແບ່ງຂັ້ນໃນການບໍລິຫານ, ຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດແຜນ 53
5.2 ຂະບວນການວາງແຜນງົບປະມານເພື່ອຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 54
5.3 ຂອບການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນ 55
5.4 ໂຄງປະກອບສະໜັບສະໜູນການຕິດຕາມກວດກາ ແລະ ປະເມີນຜົນ 57
5.5 ຕົວຊີ້ບອກຫຼັກ ສໍາລັບການຕິດຕາມ ແລະ ປະເມີນຜົນ 58

**ພາກທີ III ແຜນພັດທະນາ 5 ປີ (2016-2020) ສໍາລັບຂະແໜງການຍ່ອຍ 61**
**1. ການສຶກສາກ່ອນໄວຮຽນ 62**
**2. ການສຶກສາຊັ້ນປະຖົມ 65**
**3. ມັດທະຍົມສຶກສາຕອນຕົ້ນ 70**
**4. ມັດທະຍົມສຶກສາຕອນປາຍ 74**
**5. ການສຶກສານອກໂຮງຮຽນ 77**
**6. ການສຶກສາຄູ 82**
**7. ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ 90**
**8. ການສຶກສາຊັ້ນສູງ 94**
**9. ການບໍລິຫານ ແລະ ຄຸ້ມຄອງການສຶກສາ 100**
**10. ກິລາ-ກາຍຍະກໍາ 106**

## ສາລະບານຕາຕະລາງ ແລະ ຮູບ


ຕາຕະລາງ 1: ຄວາມຄືບໜ້າຂອງຕົວຊີ້ບອກ ການສຶກສາກ່ອນໄວຮຽນ ແຕ່ປີ 2000-2015 ........................................ 3
ຕາຕະລາງ 2: ຄວາມຄືບໜ້າຂອງຕົວຊີ້ບອກການສຶກສາຊັ້ນປະຖົມສຶກສາ ແຕ່ປີ 2000-2015 .................................... 4
ຕາຕະລາງ 3: ຄວາມຄືບໜ້າຂອງຕົວຊີ້ບອກຊັ້ນມັດທະຍົມສຶກສາແຕ່ປີ 2000-2015 ............................................... 5
ຕາຕະລາງ 4: ຈຳນວນນັກຮຽນຄູແຕ່ລະຊັ້ນລະສາຍ ແຕ່ປີ 2000-2015 ............................................................. 6
ຮູບສະແດງ ທີ 1 – ງົບປະມານສຳລັບການສຶກສາ ໃນແຜນພັດທະນາຂະແໜງການສຶກສາປີ 2011-2015 ........................ 47
ຕາຕະລາງ 5: ຄາດໝາຍຄວາມຕ້ອງການດ້ານການເງິນ ໃນແຜນ 5 ປີ (2011-2015) ທຽບໃສ່ງົບປະມານທີ່ໄດ້ຮັບຕົວຈິງ .... 47
ຕາຕະລາງ 6: ຄວາມຕ້ອງການດ້ານການເງິນເພື່ອຈັດຕັ້ງປະຕິບັດແຜນງານ ........................................................ 48
ຕາຕະລາງ 7: ສັດສ່ວນຂອງງົບປະມານທີ່ຕ້ອງການສຳລັບຂະແໜງການສຶກສາ ແລະ ກິລາ ........................................ 49
ຕາຕະລາງ 8: ອັດຕາສ່ວນແບ່ງຄວາມຕ້ອງການດ້ານການເງິນຂອງຂະແໜງການຍ່ອຍ ............................................. 49
ຕາຕະລາງ 9: ຂໍ້ຈຳກັດດ້ານການເງິນ ແລະ ຊ່ອງຫວ່າງ/ສ່ວນເກີນດ້ານການເງິນ ....................................................51
ຕາຕະລາງ 10: ທຶນຊ່ວຍເຫຼືອທີ່ ODA ໄດ້ຕົກລົງໃຫ້ການສະໜັບສະໜູນ ............................................................ 52
ຕາຕະລາງ 11: ການຊ່ວຍເຫຼືອຈາກພາຍນອກ (ຄູ່ຮ່ວມພັດທະນາຫຼັກ) ໃຫ້ແກ່ແຕ່ລະຂະແໜງການຍ່ອຍ ......................... 52
ຕາຕະລາງ 12: ຕົວຊີ້ບອກຫຼັກສຳລັບການຕິດຕາມ ແລະ ປະເມີນຜົນ ................................................................. 59
ຕາຕະລາງ 13: ສົມທຽບບາງຕົວຊີ້ບອກຂອງການສຶກສາກ່ອນໄວຮຽນ ແຕ່ 2010-2015 ............................................. 62
ຕາຕະລາງ 14: ຄາດຄະເນການເຂົ້າຮຽນສຳລັບການສຶກສາກ່ອນໄວຮຽນ ............................................................... 65
ຕາຕະລາງ 15: ຄາດຄະເນຊັບພະຍາກອນທີ່ຕ້ອງການສຳລັບການສຶກສາກ່ອນໄວຮຽນ ............................................... 65
ຕາຕະລາງ 16: ສົມທຽບບາງຕົວຊີ້ບອກສຳລັບການສຶກສາຊັ້ນປະຖົມແຕ່ປີ 2010-2015 ............................................ 66
ຕາຕະລາງ 17: ສົມທຽບປະສິດທິພາບພາຍໃນສຳລັບການສຶກສາຊັ້ນປະຖົມແຕ່ປີ 2010-2015 ..................................... 66
ຕາຕະລາງ 18: ຄາດຄະເນການເຂົ້າຮຽນສຳລັບການສຶກສາຊັ້ນປະຖົມ ................................................................. 70
ຕາຕະລາງ 19: ຄາດຄະເນງົບປະມານສຳລັບຊັ້ນປະຖົມສຶກສາ ........................................................................ 70
ຕາຕະລາງ 20: ສົມທຽບຕົວຊີ້ບອກສຳລັບຊັ້ນມັດທະຍົມຕອນຕົ້ນແຕ່ປີ 2010-2015 ...............................................71
ຕາຕະລາງ 21: ຄາດຄະເນການເຂົ້າຮຽນໃນຊັ້ນມັດທະຍົມຕອນຕົ້ນ .................................................................... 74
ຕາຕະລາງ 22: ຄາດຄະເນງົບປະມານສຳລັບຊັ້ນມັດທະຍົມຕອນຕົ້ນ ................................................................. 74
ຕາຕະລາງ 23: ສົມທຽບຕົວຊີ້ບອກຊັ້ນມັດທະຍົມຕອນປາຍ ແຕ່ປີ 2010-2015 ...................................................... 75
ຕາຕະລາງ 24: ຄາດຄະເນການເຂົ້າຮຽນຊັ້ນມັດທະຍົມຕອນປາຍ ...................................................................... 77
ຕາຕະລາງ 25: ຄາດຄະເນງົບປະມານສຳລັບການສຶກສາຊັ້ນມັດທະຍົມຕອນປາຍ ................................................... 77
ຕາຕະລາງ 26: ຄາດຄະເນງົບປະມານສຳລັບການສຶກສານອກໂຮງຮຽນ ................................................................ 82
ຕາຕະລາງ 27: ຈຳນວນນັກສຶກສາຄູທັງໝົດໃນແຕ່ລະປີ ................................................................................ 83
ຕາຕະລາງ 28: ຈຳນວນນັກຮຽນຄູທີ່ຈົບໃນແຕ່ລະປີ ..................................................................................... 83
ຕາຕະລາງ 29: ຄາດຄະເນການເຂົ້າຮຽນໃນສະຖາບັນສ້າງຄູ ........................................................................... 90
ຕາຕະລາງ 30: ຄວາມຕ້ອງການດ້ານການເງິນສຳລັບການກໍ່ສ້າງຄູ .................................................................... 90
ຕາຕະລາງ 31: ຄາດຄະເນການເຂົ້າຮຽນໃນສາຍອາຊີວະສຶກສາ ........................................................................ 93
ຕາຕະລາງ 32: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບອາຊີວະສຶກສາ ...................................................... 94
ຕາຕະລາງ 33: ຄາດຄະເນການເຂົ້າຮຽນໃນມະຫາວິທະຍາໄລ 4 ແຫ່ງ ............................................................... 99
ຕາຕະລາງ 34: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບມະຫາວິທະຍາໄລ .................................................. 99
ຕາຕະລາງ 35: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບການບໍລິຫານ ແລະ ຄຸ້ມຄອງການສຶກສາ........................106
ຕາຕະລາງ 36: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບວຽກງານກິລາ-ກາຍຍະກຳ.........................................112

# ຄຳນຳ

ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ໄລຍະ 10 ປີ (2016-2025) ແມ່ນແຜນຍຸດທະສາດການພັດທະນາການສຶກສາທີ່ສືບຕໍ່ຈາກຍຸດທະສາດຮອດປີ 2020 ທີ່ຮັບຮອງ ໃນປີ 2001, ຊຶ່ງມີຈຸດປະສົງເພື່ອສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IX ແລະ X ຂອງພັກ, ເປັນແຜນຍຸດທະສາດບຸກທະລຸຮັບປະກັນການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ, ແນໃສ່ນຳພາປະເທດຊາດຫຼຸດພົ້ນອອກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020.ຄຽງຄູ່ກັບການກຳນົດວິໄສທັດ ແລະ ຍຸດທະສາດແລ້ວ ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ (2016-2020).

ການສ້າງວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ແມ່ນສ້າງຂຶ້ນບົນພື້ນຖານຜົນສຳເລັດ, ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະກິລາ ແຕ່ປີ 2001-2015. ໂດຍອີງໃສ່ຜົນການປະເມີນແຜນ 5 ປີ ໃນແຕ່ລະໄລຍະ ເປັນຕົ້ນແມ່ນ ຜົນການທົບທວນການສຶກສາແຫ່ງຊາດເພື່ອໝົດທຸກຄົນ ປີ 2015 ແລະ ຜົນການປະເມີນສຸດທ້າຍ ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ VII (2011-2015) ເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ, ແຜນດັ່ງກ່າວນີ້ ໄດ້ກຳນົດຍຸດທະສາດ ແລະ ວິທີການທີ່ຂະແໜງການສຶກສາ ແລະ ກິລາ ຈະນຳໄປຈັດຕັ້ງປະຕິບັດເພື່ອປະກອບສ່ວນຕໍ່ຜົນສຳເລັດເປົ້າໝາຍລວມ ແລະ ວິໄສທັດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020).

ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2016-2020 ແມ່ນໄດ້ອີງໃສ່ວິໄສທັດການພັດທະນາການສຶກສາຮອດປີ 2030 ແລະ ຍຸດທະສາດຮອດປີ 2025. ວາລະການພັດທະນາການສຶກສາ ຫຼັງປີ 2015 ກໍ່ຄືເປົ້າໝາຍການພັດທະນາແບບຍືນຍົງ ກໍ່ແມ່ນເອກະສານໜຶ່ງສຳຄັນທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ນຳໃຊ້ເພື່ອເປັນບ່ອນອີງໃນການກຳນົດນະໂຍບາຍ, ຄາດໝາຍ ແລະ ຍຸດທະສາດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຮອດປີ 2020.

ຈຸດປະສົງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ນີ້ ກໍ່ແມ່ນເພື່ອເຮັດໃຫ້ບັນດາແນວທາງນະໂຍບາຍ ແລະ ຍຸດທະສາດຂອງລັດຖະບານ ກໍ່ຄືການສ້າງເງື່ອນໄຂໃຫ້ແກ່ປະເທດຊາດຫຼຸດພົ້ນອອກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020. ເອກະສານສະບັບນີ້ ຍັງໄດ້ເປັນບ່ອນອີງໃຫ້ແກ່ບັນດາຄູ່ຮ່ວມພັດທະນາ ໃນການສ້າງແຜນງານ ແລະ ໂຄງການໃຫ້ຊ່ວຍເຫຼືອແກ່ລັດຖະບານ ເພື່ອສ້າງເງື່ອນໄຂໃຫ້ພົນລະເມືອງລາວໄດ້ເຂົ້າເຖິງການສຶກສາທີ່ມີຄຸນນະພາບ, ມີຄວາມສະເໝີພາບ ແລະ ເທົ່າທຽມກັນ. ໂດຍປະຕິບັດຕາມຖະແຫຼງການວຽງຈັນ, ແຜນພັດທະນາຂະແໜງການການສຶກສາ ແລະ ກິລາ ແມ່ນໄດ້ຮັບການພັດທະນາຂຶ້ນ ໂດຍຜ່ານການປຶກສາຫາລື ລະຫວ່າງກະຊວງສຶກສາທິການ ແລະ ກິລາ ກັບທຸກໆ ຄູ່ຮ່ວມພັດທະນາພາຍໃນໜ່ວຍງານວິຊາການຂອງຂະແໜງການສຶກສາ ແລະບັນດາຜູ່ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ. ເມື່ອແຜນດັ່ງກ່າວໄດ້ນຳໄປຈັດຕັ້ງປະຕິບັດ, ກະຊວງສຶກສາທິການ ແລະ ກິລາ ຈະເປັນຜູ່ປະສານງານກັບບັນດາຄູ່ຮ່ວມພັດທະນາໃນການຕິດຕາມປະສິດທິພາບ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນໃນແຕ່ລະໄລຍະໂດຍຈະດຳເນີນການຕິດຕາມ ແລະ ປະເມີນຜົນເປັນປະຈຳ ລວມທັງການທົບທວນ, ການຕິດຕາມ ແລະ ປະເມີນຜົນຮ່ວມກັບຄູ່ຮ່ວມພັດທະນາ ແລະ ຈະໄດ້ສ້າງບົດລາຍງານການຈັດຕັ້ງແຜນປະຈຳປີຂອງຂະແໜງການ.

ຂ້າພະເຈົ້າເຊື່ອວ່າເອກະສານດັ່ງກ່າວນີ້ ຈະເປັນເອກະສານອ້າງອີງທີ່ມີຄຸນຄ່າ ສໍາລັບອົງການຈັດຕັ້ງຂອງລັດຖະບານໃນທຸກລະດັບ ແລະ ບັນດາຄູ່ຮ່ວມພັດທະນາໃນການເຮັດວຽກຮ່ວມກັນ ເພື່ອໃຫ້ບັນລຸໄດ້ບັນດາເປົ້າໝາຍແຫ່ງຊາດຂອງລັດຖະບານ ແລະ ການຈັດຕັ້ງປະຕິບັດບັນດາແຜນງານ ແລະ ກິດຈະກໍາທີ່ກ່ຽວຂ້ອງກັບການພັດທະນາການສຶກສາ ແລະ ກິລາ ໃຫ້ມີຄຸນນະພາບໂດຍອີງໃສ່ພັນທະ ແລະ ພາລະບົດບາດຄວາມຮັບຜິດຊອບຂອງແຕ່ລະຂັ້ນ.

ນະຄອນຫຼວງວຽງຈັນ, ວັນທີ 05 JAN 2016

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ**



ພັນຄໍາ ວິພາວັນ

# ຄຳຂອບໃຈ

ກະຊວງສຶກສາທິການ ແລະ ກິລາ ຂໍສະແດງຄວາມຂອບໃຈ ຕໍ່ບັນດາກົມ, ສູນ, ສະຖາບັນ ລວມທັງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຕະຫຼອດຄູ່ຮ່ວມພັດທະນາຕ່າງໆ ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ປະກອບຄຳຄິດຄຳເຫັນເຂົ້າໃນການພັດທະນາວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020.

ພິເສດ ຂໍສະແດງຄວາມຍ້ອງຍໍ ແລະ ຊົມເຊີຍມາຍັງ ກອງທຶນຮ່ວມສາກົນເພື່ອການສຶກສາ (GPE), ອົງການອຸຍນິເຊັບ ປະຈຳ ສປປ ລາວ, ສະຖານທູດອົດສະຕຣາລີ, ສະຫາພາບເອີຣົບ ແລະ ບັນດາຄູ່ຮ່ວມພັດທະນາອື່ນໆ ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ທາງດ້ານການເງິນເຂົ້າໃນການຈັດກອງປະຊຸມປຶກສາຫາລືການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ກໍຄືການຈັດພິມເອກະສານສະບັບນີ້.

ດ້ວຍຄວາມຈິງໃຈຈາກກະຊວງສຶກສາທິການ ແລະ ກິລາ

# ພາກທີ I

# ວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025

# I. ພາກທີ 1: ຜົນສຳເລັດຂອງການຈັດຕັ້ງປະຕິບັດ ແຜນພັດທະນາການສຶກສາ ແລະ ກິລາ 2001-2015

ໃນໄລຍະ 15 ປີຜ່ານມາ ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະຂອງລັດຖະບານ ແລະ ແຜນພັດທະນາການສຶກສາ ແລະ ກິລາ ເຊິ່ງລວມທັງແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ຂອບພັດທະນາຂະແໜງການສຶກສາ, ແຜນປະຕິບັດງານການສຶກສາເພື່ອທຸກຄົນ ແລະ ແຜນຍຸດທະສາດການພັດທະນາກິລາ-ກາຍຍະກຳ. ພາຍໃຕ້ການນຳພາຂອງຄະນະນຳກະຊວງສຶກສາທິການ ແລະ ກິລາ, ຜູ່ບໍລິຫານການສຶກສາ ແລະ ກິລາ ແຕ່ສູນກາງຮອດທ້ອງຖິ່ນ ໄດ້ເອົາໃຈໃສ່ປະຕິບັດຕາມພາລະບົດບາດ ແລະ ໜ້າທີ່ ທີ່ພັກ ແລະ ລັດຖະບານມອບໝາຍໃຫ້ເປັນຢ່າງດີ.

ໃນປີ 2011 ລັດຖະບານໄດ້ເຕົ້າໂຮມເອົາວຽກງານສຶກສາ ແລະ ກິລາ ເຊື່ອມສານເຂົ້າກັນ ເພື່ອເຮັດໃຫ້ການພັດທະນາການສຶກສາ ແລະ ກິລາ ໄປຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາ ພ້ອມທັງໄດ້ສຸມໃສ່ດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ປັບປຸງວຽກງານກິລາ-ກາຍະກຳຢ່າງແຂງແຮງ, ກວ້າງຂວາງ, ເລິກເຊິ່ງດ້ວຍຈິດໃຈບຸກທະລຸ ເຮັດໃຫ້ດ້ານປະລິມານ ແລະ ຄຸນນະພາບ ຂອງການສຶກສາ ແລະ ກິລາ ເລີ່ມມີຄວາມກົມກຽວກັນ ແລະ ມີຜົນສຳເລັດສູງຂຶ້ນກວ່າເກົ່າ, ຄ່ອຍໆເຊື່ອມໂຍງເຂົ້າກັບມາດຕະຖານການສຶກສາ ແລະ ກິລາ ຂອງພາກພື້ນ ແລະ ສາກົນເປັນກ້າວໆ, ສາມາດຕອບສະໜອງບຸກຄະລາກອນໃນລະດັບຕ່າງໆ ໃຫ້ແກ່ອົງການຈັດຕັ້ງຂອງພັກ, ຂອງລັດ ແລະ ພາກເອກະຊົນ ໃນທົ່ວສັງຄົມໂດຍພື້ນຖານ. ນອກຈາກນັ້ນ ຍັງໄດ້ປັບປຸງ ແລະ ຂະຫຍາຍການສຶກສາ ແລະ ກິລາຢ່າງມີຈຸດສຸມ, ສ້າງຕັ້ງໂຮງຮຽນພອນສະຫວັນນັກຮຽນເກັ່ງ ນັບທັງພອນສະຫວັນກິລາ-ກາຍຍະກຳ, ສ້າງສູນໄອຊີທີ, ສູນໂຄສະນາຂ່າວສານການສຶກສາ-ກິລາ, ສະຖາບັນພັດທະນາການບໍລິຫານການສຶກສາ, ປັບປຸງຫຼັກສູດທຸກຊັ້ນ, ທຸກສາຍຈາກແບບຫົວຂໍ້ລາຍວິຊາ ທີ່ເນັ້ນເນື້ອໃນມາເປັນແບບເນັ້ນສະມັດຕະພາບ. ປັບປຸງບັນດາສະຖາບັນການສຶກສາທຸກລະດັບ ທັງພາກລັດ ແລະ ພາກເອກະຊົນໄປຕາມຂອບມາດຕະຖານຄຸນນະພາບການສຶກສາແຫ່ງຊາດ. ຊຸກຍູ້, ສົ່ງເສີມປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການສຶກສາ ແລະ ກິລາ ຕາມເງື່ອນໄຂ ແລະ ປະຕິບັດການສຶກສາປະຖົມພາກບັງຄັບໂດຍຈັດເປັນບູລິມະສິດໃຫ້ເຂດຊົນນະບົດ, ຫ່າງໄກສອກຫຼີກ ແລະ ບ້ານ 3 ສ້າງ. ພ້ອມດຽວກັນນີ້ ກໍ່ໄດ້ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຜນງານແຫ່ງຊາດການສຶກສາເພື່ອທຸກຄົນ 2003-2015 ກໍ່ຄືເປົ້າໝາຍສະຫັດສະວັດດ້ານການພັດທະນາ ແລະ ສູ້ຊົນຍົກລະດັບເຕັກນິກການແຂ່ງຂັນກິລາປະເພດຕ່າງໆໃນລະດັບພາຍໃນປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນ.

ໃນໄລຍະຜ່ານມາ ລັດຖະບານໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຫຼາຍຕໍ່ກັບການພັດທະນາການສຶກສາ ໂດຍຖືເອົາວຽກງານນີ້ເປັນຈຸດໃຈກາງຂອງການພັດທະນາຊັບພະຍາກອນມະນຸດ. ດັ່ງນັ້ນ, ໃນຊຸມປີຜ່ານມາລັດຖະບານໄດ້ຈັດສັນງົບປະມານປະຈຳປີ ໃຫ້ຂະແໜງການສຶກສາ ກວມເອົາລະຫວ່າງ 11-15 ເປີເຊັນ ຂອງລາຍຈ່າຍລັດຖະບານ ເຂົ້າໃນການບໍລິຫານ, ການພັດທະນາພື້ນຖານໂຄງລ່າງດ້ານການສຶກສາ ແລະ ປັບປຸງລະບົບການຮຽນ-ການສອນ ນັບແຕ່ການສຶກສາກ່ອນໄວຮຽນ ຈົນເຖິງການສຶກສາຊັ້ນສູງ. ພ້ອມກັນນັ້ນ, ຍັງໄດ້ສຸມໃສ່ຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ ເປັນຕົ້ນ ແມ່ນໄດ້ສົ່ງເສີມໃຫ້ເດັກໃນເກນອາຍຸ 6 ປີ ເຂົ້າຮຽນໃນຊັ້ນປະຖົມຢ່າງທົ່ວເຖິງ ແລະ ຊຸກຍູ້, ສົ່ງເສີມນັກຮຽນ ທີ່ຮຽນຈົບຊັ້ນປະຖົມໄດ້ເຂົ້າຮຽນຕໍ່ຊັ້ນມັດທະຍົມຫຼາຍຂຶ້ນ ໂດຍຫັນເອົາບັນດາໂຄງການ ແລະ ແຜນງານໄປພັດທະນາທ້ອງຖິ່ນຫຼາຍຂຶ້ນ ໂດຍສະເພາະແມ່ນໂຄງການພັດທະນາຄຸນນະພາບການສຶກສາ, ໂຄງການພັດທະນາການສຶກສາຂັ້ນພື້ນຖານ, ໂຄງການສ້າງຫໍພັກໃຫ້ນັກຮຽນ, ໂຄງການສະໜອງອາຫານເສີມ ແລະ ອາຫານທ່ຽງໃນໂຮງຮຽນ. ນອກຈາກນັ້ນ, ກໍ່ໄດ້ພັດທະນາຫຼັກສູດ, ປັບປຸງ ແລະ ຂະຫຍາຍໂຮງຮຽນວິຊາຊີບ ແລະ ມະຫາວິທະຍາໄລ, ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ. ນອກຈາກນັ້ນ, ວຽກງານກິລາ-ກາຍຍະກຳກໍ່ໄດ້ຮັບການປັບປຸງ ແລະ ພັດທະນາດີຂຶ້ນເທື່ອລະກ້າວ. ລາຍລະອຽດຂອງຜົນສຳເລັດແຕ່ລະໜ້າວຽກມີດັ່ງນີ້:

**1.1 ການສຶກສາກ່ອນໄວຮຽນ:**

ໃນໄລຍະ 15 ປີ ຜ່ານມາ ການສຶກສາສຳລັບເດັກກ່ອນໄວຮຽນ ຢູ່ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງທັງດ້ານປະລິມານ ແລະ ຄຸນນະພາບ. ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງຂັ້ນທ້ອງຖິ່ນ ໄດ້ເອົາໃຈໃສ່ກໍ່ສ້າງໂຄງລ່າງພື້ນຖານ, ສະໜອງຄູ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ການຫຼິ້ນຂອງເດັກ. ນອກຈາກນັ້ນ, ກໍ່ໄດ້ພັດທະນາຫຼັກສູດການສອນ ເພື່ອໃຫ້ສອດຄ່ອງກັບການພັດທະນາເດັກໃນແຕ່ລະສົກອາຍຸ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການສຶກສາກ່ອນໄວຮຽນໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ ສະແດງອອກໃນຕົວຊີ້ບອກຕົ້ນຕໍລຸ່ມນີ້:

**ຕາຕະລາງ 1: ຄວາມຄືບໜ້າຂອງຕົວຊີ້ບອກ ການສຶກສາກ່ອນໄວຮຽນ ແຕ່ປີ 2000-2015**

| ຕົວຊີ້ບອກ | 2000 | 2005 | 2010 | 2015 | ຄາດໝາຍ2015 |
|---|---|---|---|---|---|
| *ຈຳນວນໂຮງຮຽນທັງໝົດ (ລັດ ແລະ ເອກະຊົນ)* | *741* | *969* | *1,284* | *2,403* | |
| *ຈຳນວນຄູ (ລັດ ແລະ ເອກະຊົນ)* | *2,205* | *2,702* | *4,361* | *9,806* | |
| *ຈຳນວນເດັກ 0-2 ປີ* | *2,555* | *2,960* | *4,913* | *10,995* | |
| *ຈຳນວນນັກຮຽນ 3-5 ປີ (ລວມ)* | *35,231* | *45,328* | *89,249* | *117,156* | |
| *ອັດຕາເຂົ້າຮຽນລວມຂອງເດັກອາຍຸ 3-5 ປີ* | *7.9%* | *8.2%* | *22.1%* | *43.2%* | *39%* |
| *ອັດຕາເຂົ້າຮຽນລວມ ຂອງເດັກອາຍຸ 5 ປີ* | *NA* | *NA* | *36.6%* | *66.0%* | *55%* |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເຖິງວ່າໃນພາບລວມຂອງການສຶກສາກ່ອນໄວຮຽນໄດ້ຮັບການຂະຫຍາຍຕົວໄວໃນໄລຍະຜ່ານມາ ແຕ່ການຂະຫຍາຍຕົວດັ່ງກ່າວແມ່ນຢູ່ໃນຕົວເມືອງໃຫຍ່ ໂດຍສະເພາະແມ່ນການສຶກສາພາກເອກະຊົນຂະຫຍາຍຕົວໄວຢູ່ເຂດເທດສະບານ, ສ່ວນຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ການຂະຫຍາຍໂຮງຮຽນອະນຸບານ ແລະ ລ້ຽງເດັກຍັງຈຳກັດ. ແຕ່ເພື່ອເຮັດໃຫ້ການຂະຫຍາຍວຽກງານການສຶກສາກ່ອນໄວຮຽນໄປເຖິງເຂດດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ໄດ້ມີນະໂຍບາຍໃນການຈັດຕັ້ງກຸ່ມຫຼິ້ນ ເພື່ອການຮຽນຮູ້ໃນເຂດທີ່ບໍ່ມີໂຮງຮຽນ ແລະ ສ້າງຫ້ອງກຽມປະຖົມຢູ່ບັນດາໂຮງຮຽນປະຖົມສົມບູນ ບ່ອນທີ່ມີເງື່ອນໄຂ ຊຶ່ງເຮັດໃຫ້ເດັກອາຍຸ 5 ປີ ໄດ້ເຂົ້າກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມສຶກສາຫຼາຍຂຶ້ນເປັນກ້າວໆ.

**1.2 ການສຶກສາຊັ້ນປະຖົມ:**

ຄຽງຄູ່ກັບການສຶກສາກ່ອນໄວຮຽນ, ການສຶກສາຊັ້ນປະຖົມກໍ່ໄດ້ຮັບການເອົາໃຈໃສ່ຈາກລັດຖະບານ ກໍ່ຄືຄູ່ຮ່ວມພັດທະນາ. ລັດຖະບານໄດ້ຈັດສັນງົບປະມານຈຳນວນຫຼວງຫຼາຍເຂົ້າໃນການກໍ່ສ້າງໂຮງຮຽນ ເພື່ອຂະຫຍາຍຕາໜ່າງໂຮງຮຽນປະຖົມສຶກສາ ເຮັດໃຫ້ເດັກໃນເກນອາຍຸແຕ່ 6-10 ປີ ໄດ້ເຂົ້າຮຽນຢ່າງທົ່ວເຖິງ ແລະ ເທົ່າທຽມຕາມສິດ ແລະ ພັນທະຂອງຕົນ. ພ້ອມດຽວກັນນັ້ນ ກໍ່ໄດ້ເອົາໃຈໃສ່ໃນການພັດທະນາຄູ, ພັດທະນາຫຼັກສູດ ແລະ ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ໃຫ້ສອດຄ່ອງກັບສະພາບການສຶກສາໃນແຕ່ລະໄລຍະ. ນັບແຕ່ປີ 2000 ເຖິງປັດຈຸບັນ. ມີຫຼາຍໂຄງການໄດ້ຮັບການຈັດຕັ້ງປະຕິບັດ ນັບແຕ່ຂັ້ນສູນກາງຮອດທ້ອງຖິ່ນເຊັ່ນ: ໂຄງການເດັກຍິງ, ໂຄງການພັດທະນາການສຶກສາໄລຍະທີ 1 ແລະ ໄລຍະທີ 2 (EDP I ແລະ EDP II), ໂຄງການກອງທຶນເລັ່ງລັດສຳລັບການສຶກສາເພື່ອທຸກຄົນ (EFA-FTI); ນອກຈາກນັ້ນ, ຍັງມີອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານຫຼາຍອົງການ ທີ່ໄດ້ເຂົ້າມາຊ່ວຍປັບປຸງວຽກງານນີ້, ຈຶ່ງເຮັດໃຫ້ວຽກງານປະຖົມສຶກສາໄດ້ຮັບການພັດທະນາດີຂຶ້ນຫຼາຍ ຊຶ່ງສະແດງໃນຕາຕະລາງທີ 2 ລຸ່ມນີ້:

ຕາຕະລາງ 2: ຄວາມຄືບໜ້າຂອງຕົວຊີ້ບອກການສຶກສາຊັ້ນປະຖົມສຶກສາ ແຕ່ປີ 2000-2015

| ຕົວຊີ້ບອກ | 2000 | 2005 | 2010 | 2015 | ຄາດໝາຍ 2015 |
|---|---|---|---|---|---|
| ຈຳນວນໂຮງຮຽນ (ລັດ ແລະ ເອກະຊົນ) | 8,161 | 8,573 | 8,968 | 8,889 | |
| ຈຳນວນຄູ (ລັດ ແລະ ເອກະຊົນ) | 27,592 | 27,588 | 31,782 | 35,206 | |
| ຈຳນວນນັກຮຽນລວມ | 831,521 | 890,821 | 916,341 | 850,466 | |
| ອັດຕາເຂົ້າຮຽນສຸດທິ | 77.3% | 84.2% | 92.7% | 98.5% | 98% |
| ອັດຕາເຂົ້າຮຽນໃໝ່ສຸດທິ | ບໍ່ມີຂໍ້ມູນ | 66,4% | 84.2% | 97.2% | 98% |
| ອັດຕາການປະລະ ປ. 1 | ບໍ່ມີຂໍ້ມູນ | 13% | 10.5% | 8.5% | 3% |
| ອັດຕາການຄ້າງຫ້ອງ ປ. 1 | ບໍ່ມີຂໍ້ມູນ | 34.1% | 28.4% | 13.5% | 3% |
| ອັດຕາການປະລະຊັ້ນປະຖົມ | ບໍ່ມີຂໍ້ມູນ | 8.9% | 6.8% | 5.2% | 2% |
| ອັດຕາການຄ້າງຫ້ອງຊັ້ນປະຖົມ | ບໍ່ມີຂໍ້ມູນ | 19.3% | 14.2% | 5.8% | 2% |
| ອັດຕາລອດເຫຼືອ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 71.1% | 78.3% | 95% |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເຖິງວ່າການສຶກສາຊັ້ນປະຖົມ ໄດ້ມີການຂະຫຍາຍຕົວທາງດ້ານປະລິມານໄວໃນໄລຍະຜ່ານມາກໍ່ຕາມ ແຕ່ວ່າດ້ານປະສິດທິພາບພາຍໃນຍັງຈະຕ້ອງໄດ້ຮັບການປັບປຸງ ແລະ ເອົາໃຈໃສ່ເປັນພິເສດໃນໄລຍະຕໍ່ໜ້ານີ້. ການປະລະການຮຽນ ແລະ ການຄ້າງຫ້ອງຂອງນັກຮຽນ ໂດຍສະເພາະຢູ່ຊັ້ນປະຖົມຂັ້ນຕົ້ນ (ປ1-ປ2) ຍັງມີສູງ; ການອ່ານ, ການຂຽນແລະ ການຄິດໄລ່ເລກພື້ນຖານ 4 ປະການ (ບວກ, ລົບ, ຄູນ, ຫານ) ຂອງນັກຮຽນຍັງບໍ່ສາມາດບັນລຸໄດ້ຕາມຈຸດປະສົງຂອງຫຼັກສູດ. ຈຳນວນຫ້ອງຄວບ, ໂຮງຮຽນມູນລະປະຖົມຍັງກວມເປີເຊັນສູງ.

### 1.3 ການສຶກສາຊັ້ນມັດທະຍົມ:

ເລີ່ມແຕ່ສົກປີ 2008-2009 ໄດ້ມີການປະຕິຮູບຫຼັກສູດຊັ້ນມັດທະຍົມສຶກສາ ໂດຍໄດ້ເພີ່ມຈຳນວນປີຮຽນຈາກ6 ປີ (3+3) ເປັນ 7 ປີ (4+3) ພ້ອມທັງໄດ້ພັດທະນາປຶ້ມແບບຮຽນ, ຄູ່ມືຄູໃຫ້ສອດຄ່ອງກັບຫຼັກສູດດັ່ງກ່າວ. ຄຽງຄູ່ກັນນັ້ນ ທັງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນທະນາຄານພັດທະນາອາຊີ, ລັດຖະບານຍີ່ປຸ່ນ, ລັດຖະບານ ສ. ເກົາຫຼີ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ໄດ້ລົງທຶນເຂົ້າໃນການສ້າງຫ້ອງຮຽນ, ສ້າງຫໍພັກ, ຝຶກອົບຮົມຄູ ແລະ ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ຊຶ່ງໄດ້ເຮັດໃຫ້ຈຳນວນໂຮງຮຽນ, ຈຳນວນຄູ ແລະ ຈຳນວນນັກຮຽນເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຄຸນນະພາບກໍ່ດີຂຶ້ນ, ລະອຽດເບິ່ງຕາຕະລາງຂ້າງລຸ່ມນີ້:

**ຕາຕະລາງ 3: ຄວາມຄືບໜ້າຂອງຕົວຊີ້ບອກຊັ້ນມັດທະຍົມສຶກສາແຕ່ປີ 2000-2015**

| ຕົວຊີ້ບອກ | 2000 | 2005 | 2010 | 2015 | ຄາດໝາຍ 2015 |
|---|---|---|---|---|---|
| *ຈຳນວນໂຮງຮຽນ (ລັດ ແລະ ເອກະຊົນ)* | *811* | *956* | *1,236* | *1,651* | |
| *ມັດທະຍົມຕອນຕົ້ນ* | *589* | *641* | *833* | *935* | |
| *ມັດມະຍົມຕອນປາຍ* | *222* | *31* | *32* | *34* | |
| *ມັດມະຍົມສົມບູນ* | *N/A* | *284* | *371* | *682* | |
| *ຈຳນວນພະນັກງານ ແລະ ຄູສອນ (ລັດ ແລະ ເອກະຊົນ)* | *12,064* | *14,597* | *20,534* | *34,011* | |
| *ຈຳນວນນັກຮຽນມັດທະຍົມຕອນຕົ້ນ* | *183,588* | *243,137* | *335,388* | *442,848* | |
| *ຈຳນວນນັກຮຽນມັດທະຍົມຕອນປາຍ* | *77,209* | *144,907* | *98,039*[1] | *187,416* | |
| *ອັດຕາເຂົ້າຮຽນລວມ ມ. ຕົ້ນ* | *45.8%* | *54.8%* | *60.2%* | *78.1%* | *75%* |
| *ອັດຕາເຂົ້າຮຽນລວມ ມ. ປາຍ* | *22.6%* | *34.4%* | *33.9%* | *45.8%* | *43%* |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

## 1.4 ການສຶກສານອກໂຮງຮຽນ

ຄຽງຄູ່ກັບການສຶກສາໃນໂຮງຮຽນແລ້ວ ກະຊວງສຶກສາຍັງໄດ້ເອົາໃຈໃສ່ຕໍ່ວຽກງານການສຶກສານອກໂຮງຮຽນ ເພື່ອສະໜອງການສຶກສາໃຫ້ແກ່ເດັກ ແລະ ຊາວໜຸ່ມທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ອອກໂຮງຮຽນອັນເຮັດໃຫ້ອັດຕາການຮູ້ໜັງສື ໃນກຸ່ມອາຍຸ 15-24 ປີ ແລະ ປະຊາກອນທີ່ມີອາຍຸ15ປີ ຂຶ້ນໄປໄດ້ເພີ່ມຂຶ້ນ. ຕົວຢ່າງຂອງວຽກງານທີ່ພົ້ນເດັ່ນມີ:

- ໄດ້ຈັດການຮຽນ-ການສອນໃຫ້ເດັກເກນອາຍຸ 6-14 ປີ ທີ່ບໍ່ໄດ້ເຂົ້າຮຽນຊັ້ນປະຖົມຢູ່ເຂດຫ່າງໄກສອກຫຼີກໂດຍນຳໃຊ້ຄູສອນເຄື່ອນທີ່.
- ສົກຮຽນ 2014-2015 ສາມາດຈັດຕັ້ງພິທີປະກາດຈົບຊັ້ນປະຖົມບຳລຸງທົ່ວເມືອງໄດ້ 148 ເມືອງ ແລະ ປະກາດຈົບຊັ້ນປະຖົມບຳລຸງທົ່ວແຂວງ ໄດ້ 18 ແຂວງ/ນະຄອນຫຼວງວຽງຈັນ ແລະ ຈັດຕັ້ງພິທີປະກາດຈົບຊັ້ນປະຖົມບຳລຸງທົ່ວປະເທດໃນ ເດືອນສິງຫາ ປີ 2015.
- ຈັດຕັ້ງພິທີປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວເມືອງໄດ້ 36 ເມືອງ ແລະ ແຂວງ ໄຊຍະບູລີ ເປັນແຂວງທຳອິດ ທີ່ໄດ້ປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ.

ຄຽງຄູ່ກັບຜົນງານດີເດັ່ນຂ້າງເທິງ, ວຽກງານການສຶກສານອກໂຮງຮຽນ ຍັງມີບາງບັນຫາທີ່ຍັງຄ້າງຄາເຊັ່ນ: ນັກຮຽນທີ່ລືບລ້າງຈົບປະຖົມແລ້ວຈຳນວນໜຶ່ງຍັງກັບກືນ; ຄຸນນະພາບຂອງການຮຽນ-ການສອນວຽກງານການສຶກສານອກໂຮງຮຽນຍັງຕ່ຳ ບໍ່ສາມາດນຳເອົາຄວາມຮູ້ໄປພັດທະນາຄຸນນະພາບຊີວິດໃຫ້ດີຂຶ້ນຕາມຈຸດປະສົງ.

## 1.5 ການສຶກສາຄູ

ເພື່ອຕອບສະໜອງໃຫ້ແກ່ການຂະຫຍາຍຕົວຂອງການສຶກສາຂັ້ນພື້ນຖານ, ການກໍ່ສ້າງຄູກໍ່ໄດ້ຮັບການປັບປຸງ ແລະ ພັດທະນາໃຫ້ດີຂຶ້ນ ເຊັ່ນ: ໄດ້ກໍ່ສ້າງຄູປະຖົມສຳລັບເດັກຍິງຊົນເຜົ່າ ລະບົບ 5+4 ແລະ 8+3 ເພື່ອສະໜອງຄູໃຫ້ແກ່ເຂດຊົນເຜົ່າທີ່ດ້ອຍໂອກາດ. ໃນໄລຍະການດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະ II (2011-2015) ກໍ່ໄດ້ມີການປັບປຸງຫຼັກສູດສ້າງຄູອະນຸບານ ແລະ ປະຖົມ ໄປຕາມລະບົບ 9+3, 12+2 ແລະ 12+4, ຫຼັກສູດສ້າງຄູມັດທະຍົມທີ່ສອນໄດ້ແຕ່ ມ 1-ມ 7. ນອກນັ້ນ,ຍັງໄດ້ເອົາໃຈໃສ່ສອນພາສາອັງກິດຢູ່ໃນຫຼັກສູດສ້າງຄູປະຖົມ,

[1] ຈຳນວນນັກຮຽນມັດທະຍົມຕອນປາຍຫຼຸດລົງເນື່ອງຈາກນັກຮຽນ ມ 7 ຍັງບໍ່ທັນມີເທື່ອ

ພ້ອມນັ້ນກໍ່ເພີ່ມທະວີການສອນພາສາອັງກິດ ແລະ ICT ຢູ່ໃນຫຼັກສູດສ້າງຄູມັດທະຍົມລະບົບຕ່າງໆ ເພື່ອໃຫ້ສອດຄ່ອງກັບຫຼັກສູດສາຍສາມັນ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

ມີຫຼາຍແຂວງ, ຫຼາຍເມືອງໄດ້ຈັດຝຶກອົບຮົມຄູປະຖົມ ແລະ ສະໜອງຄູພາສາອັງກິດໄປຊ່ວຍສອນຢູ່ຊັ້ນປະຖົມດ້ວຍຮູບການຕ່າງໆ, ເຮັດໃຫ້ການສອນພາສາອັງກິດຢູ່ໃນໂຮງຮຽນປະຖົມໄດ້ເພີ່ມຈາກ 10-15 ເປີເຊັນ ໃນປີ 2011-2012 ເປັນ 30-40% ໃນປີ 2014-2015. ໃນນີ້, ໄດ້ມີການເອົາໃຈໃສ່ພິເສດຕໍ່ການຝຶກອົບຮົມພາສາອັງກິດໃຫ້ແກ່ຄູປະຖົມໃນບ້ານ 3 ສ້າງ ໃນຂອບເຂດທົ່ວປະເທດ. ຄຽງຄູ່ກັນນັ້ນ, ເພື່ອປັບປຸງຄຸນນະພາບຂອງການສ້າງຄູ ກະຊວງສຶກສາທິການ ແລະ ກິລາ ໄດ້ສະໜອງອຸປະກອນການທົດລອງ ແລະ ສື່ການສອນປະເພດຕ່າງໆ; ເຮັດໃຫ້ຖາບັນສ້າງຄູທຸກແຫ່ງໄດ້ມີຫ້ອງຟັງສຽງ, ຫ້ອງທົດລອງ, ມີກາຍຍະພາບ ແລະ ສິ່ງແວດລ້ອມທີ່ດີ ເອື້ອອຳນວຍໃຫ້ແກ່ການສ້າງຄູເປັນຕົວແບບທີ່ດີ ໃນການປະຕິບັດຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາແຫ່ງຊາດ.

ເພື່ອສະໜອງຄວາມຕ້ອງການຄູໃນແຕ່ລະປະເພດ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງທ້ອງຖິ່ນ, ກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ມີການປັບປຸງ ແຜນການກໍ່ສ້າງຄູຄືນໃໝ່ ດ້ວຍການເພີ່ມທະວີທາງດ້ານປະລິມານໃນການກໍ່ສ້າງຄູອະນຸບານ, ປະຖົມ ແລະ ມັດທະຍົມສາຍວິທະຍາສາດທຳມະຊາດ. ເວົ້າລວມ, ການກໍ່ສ້າງຄູເກືອບທຸກປະເພດແມ່ນສາມາດສະໜອງໄດ້ໃນຂັ້ນພື້ນຖານ, ແຕ່ສິ່ງທີ່ຍັງເປັນປະເດັນບັນຫາ ແມ່ນຂອດສັບຊ້ອນ ແລະ ແຈກຢາຍຄູຄືນໃໝ່. ລາຍລະອຽດ ໃຫ້ເບິ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 4: ຈຳນວນນັກຮຽນຄູແຕ່ລະຊັ້ນລະສາຍ ແຕ່ປີ 2000-2015**

| ຕົວຊີ້ບອກ | 2000 | 2005 | 2010 | 2015 |
|---|---|---|---|---|
| *ຈຳນວນນັກຮຽນຄູອະນຸບານ* | *129* | *297* | *1,207* | *4,839* |
| *ຈຳນວນນັກຮຽນຄູປະຖົມ* | *1,981* | *3,213* | *2,491* | *5,401* |
| *ຈຳນວນນັກຮຽນຄູມັດທະຍົມ* | *2,242* | *9,861* | *13,062* | *9,468* |
| *ຈຳນວນນັກຮຽນຄູພະລະສຶກສາ* | *230* | *258* | *304* | *824* |
| *ຈຳນວນນັກຮຽນຄູສິລະປະສຶກສາ* | *126* | *209* | *232* | *552* |

*ແຫຼ່ງຂໍ້ມູນ: ກົມສ້າງຄູ*

### 1.6 ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ

ສະຖາບັນອາຊີວະສຶກສາທັງພາກລັດ ແລະ ເອກະຊົນ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາ. ປັດຈຸບັນນີ້ທົ່ວປະເທດ ມີສະຖາບັນອາຊີວະທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງສຶກສາທິການ ແລະ ກິລາ ທັງໝົດ 23 ແຫ່ງ ແລະ 2 ສູນ, ພາກເອກະຊົນ ຈຳນວນ 76 ແຫ່ງ ແລະ ສະຖາບັນທີ່ຂຶ້ນກັບຂະແໜງການອື່ນ ຈຳນວນ 23 ແຫ່ງ. ນອກຈາກນັ້ນ ຍັງໄດ້ມີການປະຕິຮູບຫຼັກສູດຕ່າງໆ ເຊັ່ນ: ຫຼັກສູດສາມັນວິຊາຊີບ, ອາຊີວະສຶກສາທີ່ເນັ້ນມາດຕະຖານສີມືແຮງງານແຫ່ງຊາດ, ປັບປຸງຍົກລະດັບຄູ-ອາຈານ ເຮັດໃຫ້ຄຸນນະພາບຂອງການຮຽນ-ການສອນດີຂຶ້ນ.

ເພື່ອປັບປຸງຄຸນນະພາບຂອງການສຶກສາຊັ້ນສູງ, ໃນປີ 1996 ໄດ້ມີການເຕົ້າໂຮມເອົາ 10 ສະຖາບັນການສຶກສາຊັ້ນສູງຂອງລັດຈາກກະຊວງຕ່າງໆ ເຂົ້າເປັນມະຫາວິທະຍາໄລດຽວຄື: ມະຫາວິທະຍາໄລແຫ່ງຊາດ ຊຶ່ງປະກອບດ້ວຍ 10 ຄະນະ ແລະ 1 ວິທະຍາໄລວິທະຍາສາດພື້ນຖານ. ຫຼັງຈາກນັ້ນ ເພື່ອຮອງຮັບການເຕີບໃຫຍ່ຂະຫຍາຍຕົວຂອງເສດຖະກິດ-ສັງຄົມແຫ່ງຊາດ, ຄວາມຕ້ອງການແຮງງານຂອງຕະຫຼາດແຮງງານ, ໃນປີ 2000 ການສຶກສາຊັ້ນສູງມີການປັບປຸງຄືນອີກຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 87/ນຍ ລົງວັນທີ 20/06/2000, ເພື່ອເຮັດໃຫ້ການພັດທະນາຊັບພະຍາກອນມະນຸດທັງດ້ານປະລິມານ ແລະ ດ້ານຄຸນນະພາບ ມີການກະຈາຍຢ່າງທົ່ວເຖິງ ຕາມເຂດແຄວ້ນ ແລະ ຕາມຂະແໜງການຕື່ມ ຈຶ່ງສ້າງຕັ້ງມະຫາວິທະຍາໄລຈຳປາສັກ ໃນປີ 2002, ສ້າງຕັ້ງມະຫາວິທະຍາໄລສຸພານຸວົງຢູ່ທີ່ແຂວງຫຼວງພະບາງ ໃນປີ 2003; ຍົກຖານະຄະນະວິທະຍາສາດການແພດ ເປັນມະຫາວິທະຍາໄລວິທະຍາສາດສຸຂະພາບ ໃນ 2007 ແລະ ສ້າງຕັ້ງມະຫາວິທະຍາໄລສະຫວັນນະເຂດ ໃນປີ 2009. ມະຫາວິທະຍາໄລດັ່ງກ່າວໄດ້ເປີດ

ການຮຽນ-ການສອນລະດັບອະນຸປະລິນຍາ (ຊັ້ນສູງ) ຮອດປະລິນຍາເອກຢູ່ບາງຄະນະວິຊາ. ພ້ອມດຽວກັນນັ້ນ ການສຶກສາພາກເອກະຊົນ ກໍ່ມີການເຕີບໃຫຍ່ຂະຫຍາຍຕົວໂດຍໄວ.

ນອກຈາກສະຖາບັນການສຶກສາຊັ້ນສູງ ທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ, ຍັງມີຫຼາຍຂະແໜງການໄດ້ສ້າງວິທະຍາໄລ ແລະ ມະຫາວິທະຍາໄລ ຫຼື ທຽບເທົ່າມະຫາວິທະຍາໄລຕື່ມເຊັ່ນ: ສະຖາບັນການເມືອງ-ການປົກຄອງ, ວິທະຍາຄານປ້ອງກັນຄວາມສະຫງົບ, ວິທະຍາຄານໄກສອນພົມວິຫານ, ສະຖາບັນການເງິນ, ສະຖາບັນການທະນາຄານ ແລະ ວິທະຍາໄລກົດໝາຍ ທີ່ຮອງຮັບການສ້າງພະນັກງານໃນລະດັບອະນຸປະລິນຍາ ແລະ ປະລິນຍາຕີ ຕາມຄວາມຕ້ອງການຂອງຂະແໜງການ ຕາມຫຼັກສູດທີ່ໄດ້ຮັບການອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ.

ການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະທີ 2 ໄດ້ມີນະໂຍບາຍຊຸກຍູ້ໃຫ້ນັກຮຽນ ໄປເຂົ້າຮຽນໃນສາຍອາຊີວະສຶກສາຫຼາຍຂຶ້ນ ແລະ ຫຼຸດຜ່ອນຈຳນວນນັກສຶກສາທີ່ເຂົ້າໃນລະດັບມະຫາວິທະຍາໄລ ໂດຍຫຼຸດຜ່ອນການຮັບນັກຮຽນໃນແຜນໃຫ້ເຫຼືອພຽງແຕ່ 20% ຂອງແຜນຮັບທັງໝົດ ໂດຍເນັ້ນໃສ່ນັກຮຽນພອນສະຫວັນ, ຊົນເຜົ່າຈາກຄອບຄົວທຸກຍາກ ແລະ ນັກຮຽນຍິງ.

### 1.7 ການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ

ຄຽງຄູ່ກັບການປັບປຸງການຂະຫຍາຍໂອກາດການເຂົ້າຮຽນຂອງນັກຮຽນໃນແຕ່ລະລະດັບ ແລະ ການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງແລ້ວ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ເອົາໃຈໃສ່ວຽກງານການບໍລິຫານ ແລະ ຄຸ້ມຄອງບຸກຄະລາກອນອີກດ້ວຍ. ມາຮອດສົກປີ 2013-2014 ທົ່ວກະຊວງສຶກສາທິການ ແລະ ກິລາ ມີພະນັກງານຄູອາຈານລັດທັງໝົດ 83,361 ຄົນ (ພະນັກງານບໍລິຫານ 9,572 ຄົນ, ຄູອາຈານ 73,789 ຄົນ; ໃນນັ້ນປະລິນຍາເອກ 121 ຄົນ, ປະລິນຍາໂທ 1,051 ຄົນ, ປະລິນຍາຕີ 14,440, ຊັ້ນສູງ 26,616 ຄົນ, ຊັ້ນກາງ 33,693 ຄົນ, ຊັ້ນຕົ້ນ 6,832 ຄົນ ແລະ ບໍ່ມີຊັ້ນ 585 ຄົນ.

ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາໃຫ້ດີຂຶ້ນ ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ເອົາໃຈໃສ່ການຍົກລະດັບ ແລະ ຝຶກອົບຮົມຜູ້ບໍລິຫານການສຶກສາແຕ່ລະ ລະດັບແຕ່ສູນກາງຮອດທ້ອງຖິ່ນ ໂດຍສະເພາະໃນຫົວຂໍ້ການບໍລິຫານ ແລະ ຄຸ້ມຄອງໂຮງຮຽນ, ການຄຸ້ມຄອງຂໍ້ມູນຂ່າວສານການສຶກສາ, ການສ້າງແຜນ, ການຄຸ້ມຄອງການເງິນ ແລະ ການຕິດຕາມ ແລະ ປະເມີນຜົນ.

### 1.8 ພະລະສຶກສາ ແລະ ກິລາ-ກາຍຍະກຳ

ກິລາ-ກາຍຍະກຳລາວ ໄດ້ມີການຂະຫຍາຍຕົວ ຢ່າງກວ້າງຂວາງນັບທັງຕົວເມືອງ ແລະ ຊົນນະບົດ, ກິລາ-ກາຍຍະກຳ ໄດ້ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ, ລວມທັງແກ້ໄຂຄວາມທຸກຍາກ, ການພັດທະນາເສດຖະກິດ-ສັງຄົມ. ວຽກງານກິລາ-ກາຍຍະກຳໄດ້ປະກອບສ່ວນເຂົ້າໃນການເຊື່ອມໂຍງ ລະຫວ່າງປະເທດເຮົາ ກັບບັນດາປະເທດເພື່ອນມິດສາກົນ, ເຮັດໃຫ້ຖານະບົດບາດຂອງລາວສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ ຊຶ່ງສາມາດເວົ້າໄດ້ວ່າ: ມາຮອດປະຈຸບັນ ກິລາ-ກາຍຍະກຳໄດ້ເຊື່ອມສານ ແລະ ເຈື່ອຈ່ານເຂົ້າສູ່ສັງຄົມຕົວຈິງ ຢ່າງກວ້າງຂວາງໃນທຸກຂົງເຂດ, ທຸກສຳນັກງານອົງການ, ຄຸ້ມບ້ານ, ສະຖານທີ່ຊຸມຊົນລ້ວນແຕ່ມີຂະບວນການຫລິ້ນກິລາ-ກາຍຍະກຳ ຕາມຄວາມສາມາດຕົວຈິງຂອງແຕ່ລະບ່ອນ, ເວົ້າໄດ້ວ່າ: "ບ່ອນໃດມີຊຸມຊົນບ່ອນນັ້ນມີກິລາ-ກາຍຍະກຳເກີດຂຶ້ນ"ພິເສດ: ຜົນສຳເລັດອັນໃຫຍ່ຫຼວງຂອງປວງຊົນລາວທັງຊາດ ແມ່ນ ສປປ. ລາວເຮົາສາມາດຈັດງານແຂ່ງຂັນມະຫາກຳກິລາ-ກາຍຍະກຳລະດັບອາຊຽນເປັນປະຫວັດສາດ ເຊັ່ນ: ງານມະຫາກຳກິລາຊີເກມຄັ້ງທີ່ 25 ໃນ ປີ 2009 ແລະ ງານມະຫາກຳກິລາມະຫາວິທະຍາໄລອາຊຽນ ຄັ້ງທີ່ 16 ໃນປີ 2012.

## 1.9 ສິ່ງທ້າທາຍໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ

ໃນໄລຍະ 15 ປີຜ່ານມາ ເຖິງວ່າລັດຖະບານກໍ່ຄືຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ລົງທຶນເຂົ້າໃນການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ກິດຈະກຳຕ່າງໆ ໃນຂະແໜງການສຶກສາ ແລະ ກິລາກໍ່ຕາມ ແຕ່ກໍ່ຍັງເຫັນວ່າການພັດທະນາຍັງຊັກຊ້າ ແລະ ຄຸນນະພາບກໍ່ຍັງຕໍ່າທຽບໃສ່ບັນດາປະເທດໃນພາກພື້ນ. ການຈັດລະບົບການຮຽນ-ການສອນ ແລະ ການດັດສົມກະແສເຂົ້າຮຽນຂອງນັກຮຽນ ໂດຍສະເພາະແມ່ນນັກຮຽນທີ່ຮຽນຈົບສາຍສາມັນສຶກສາ ເຂົ້າຮຽນວິຊາຊີບ ແລະ ມະຫາວິທະຍາໄລ ບໍ່ທັນກຳນົດເປັນລະບົບທີ່ຊັດເຈນ, ການແກ້ໄຂສະພາບການຮຽນ-ການສອນ ຕາມຄ່ານິຍົມທີ່ບໍ່ສອດຄ່ອງຂອງສັງຄົມຍັງທັນປ່ຽນຊ້າ. ດ້ານປະລິມານ ແລະ ຄຸນນະພາບຂອງການສຶກສາ ເຖິງວ່າມີຄວາມສອດຄ່ອງກົມກຽວ ແລະ ມີການຫັນປ່ຽນໃໝ່ທີ່ດີຂຶ້ນ ແຕ່ກໍ່ບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ກໍ່ຄືການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ. ການສ້າງບຸກຄະລະກອນປະເພດຕ່າງໆບໍ່ທັນໄປຕາມຂອບຂອງມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ສະແດງອອກໃນເງື່ອນໄຂປະຈຸບັນ ປະເທດຂອງພວກເຮົາມີຄວາມຕ້ອງການກຳມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການ, ຜູ້ຄຸ້ມຄອງ-ບໍລິຫານ, ຜູ້ປະກອບການ, ຜູ້ຈັດການທີ່ມີມືອາຊີບໃນລະດັບທີ່ແນ່ນອນ ແລະ ມີຈຳນວນພຽງພໍເພື່ອຈະພາເຮັດພາສ້າງ ແຕ່ຕົວຈິງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການດັ່ງກ່າວ, ຈຳນວນນັກຮຽນທີ່ຮຽນລະດັບປະລິນຍາຕີຫຼາຍກ່ວາ ຈຳນວນນັກຮຽນທີ່ຮຽນອາຊີວະສຶກສາ-ວິຊາຊີບ, ການປະກາດຮັບເອົາພະນັກງານຂອງອົງການຈັດຕັ້ງພາກລັດ ແລະ ເອກະຊົນ ລ້ວນແຕ່ປະກາດຮັບເອົາແຕ່ຜູ້ທີ່ມີລະດັບປະລິນຍາຕີຂຶ້ນເມືອ, ສ່ວນຜູ້ທີ່ຮຽນຈົບອາຊີວະສຶກສາ ທີ່ມີວຸດທິການສຶກສາຕໍ່າກວ່າລະດັບປະລິນຍາຕີ ບໍ່ມີໂອກາດໄດ້ຮັບສະມັກເຂົ້າເຮັດວຽກ ຊຶ່ງເປັນສາເຫດອັນໜຶ່ງທີ່ພາໃຫ້ຄົນບໍ່ມັກຮຽນລະດັບເຕັກນິກ-ວິຊາຊີບ.

ເຖິງແມ່ນວ່າລັດຖະບານໄດ້ເພີ່ມງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ແຕ່ງົບປະມານສ່ວນໃຫຍ່ (ກວມຫຼາຍກວ່າ 60%) ແມ່ນງົບປະມານທີ່ເປັນເງິນເດືອນຂອງພະນັກງານ ແຕ່ງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນນັ້ນ ແມ່ນມີໜ້ອຍ ປະມານ 7-9% ເທົ່ານັ້ນ ທຽບໃສ່ງົບປະມານທັງໝົດຂອງສຶກສາ ຊຶ່ງເຮັດໃຫ້ການປັບປຸງຄຸນນະພາບການສຶກສາມີຄວາມຫຍຸ້ງຍາກ. ນອກຈາກນັ້ນ ການສະໜອງງົບປະມານບໍລິຫານໂຮງຮຽນຕາມມູນຄ່າຫົວໜ່ວຍທີ່ລັດຖະບານກຳນົດແມ່ນຍັງບໍ່ທັນໄດ້ຕາມຄາດໝາຍ.

ການຈັດຕັ້ງປະຕິບັດ ແນວທາງນະໂຍບາຍ ແລະ ນິຕິກຳຂອງພັກ ແລະ ລັດທີ່ກ່ຽວຂ້ອງກັບການພັດທະນາການສຶກສາ ແລະ ກິລາ ທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຂອງລັດ ບາງອັນບໍ່ທັນສະແດງອອກໃນທາງພຶດຕິກຳຕົວຈິງ ແລະ ບໍ່ທັນໄປຄຽງຄູ່ກັບຄວາມຕ້ອງການພັດທະນາຂົງເຂດເສດຖະກິດ ສະແດງອອກການລົງທຶນຂອງລັດໃສ່ການສຶກສາ ຍັງຢູ່ໃນຂອບຈຳກັດ ໃນພາກປະຕິບັດຕົວຈິງກໍ່ບໍ່ໄປຕາມຂອບທີ່ໄດ້ຮັບອະນຸມັດ, ທັດສະນະແນວຄວາມຄິດ ແລະ ຄວາມເຂົ້າໃຈຂອງພະນັກງານ ນັບທັງພະນັກງານການນຳຈຳນວນໜຶ່ງ ຕໍ່ກັບການພັດທະນາການສຶກສາ ແລະ ກິລາ ກໍ່ຄືການພັດທະນາຊັບພະຍາກອນມະນຸດຍັງບໍ່ທັນແຈ້ງ, ບໍ່ທັນໄປລວງດຽວກັນ, ບໍ່ລວມສູນຕ່າງຝ່າຍຕ່າງເຮັດ ແລະ ເຮັດພໍໃຜພໍມັນຕາມແຕ່ລະຂະແໜງການ.

ເຖິງວ່າວຽກງານພະລະສຶກສາ, ກິລາ-ກາຍຍະກຳ ໃນໄລຍະຜ່ານມາ ໄດ້ຈັດຕັ້ງປະຕິບັດຕາມແຜນຍຸດທະສາດ, ແຜນພັດທະນາພະລະສຶກສາ, ກິລາ-ກາຍຍະກຳ ແຕ່ສູນກາງລົງຮອດທ້ອງຖິ່ນ, ການຄົ້ນຄວ້າສ້າງນິຕິກຳຕ່າງໆ, ການວາງແຜນການ, ແຜນງານ, ແຜນວຽກ ໃນການຈັດຕັ້ງປະຕິບັດບໍ່ໄດ້ຮັບຜົນສຳເລັດຕາມຄາດໝາຍ. ການຕິດຕາມເກັບກຳຂໍ້ມູນ-ສະຖິຕິ, ຂ່າວສານ, ການປະເມີນຜົນວຽກງານພະລະສຶກສາ, ກິລາ-ກາຍຍະກຳຢູ່ບັນດາແຂວງ, ນະຄອນຫຼວງ , ເມືອງ, ບ້ານຍັງບໍ່ທັນໄດ້ເອົາໃຈໃສ່ດີ, ຈຳນວນບຸກຄະລະກອນຂະແໜງພະລະສຶກສາ, ກິລາ-ກາຍຍະກຳໃນຂອບເຂດທົ່ວປະເທດ ຍັງບໍ່ທັນພຽງພໍ. ການສ້າງບຸກຄະລະກອນ, ນັກກິລາສືບທອດຍັງຈຳກັດ, ການສ້າງພື້ນຖານໂຄງລ່າງສວນສາທາລະນະບ່ອນອອກກຳລັງກາຍ, ເດີ່ນຫຼິ້ນກິລາ, ອຸປະກອນຮັບໃຊ້ຈັດກິດຈະກຳຢູ່ບັນດາແຂວງ, ນະຄອນຫຼວງ, ເຂດຫ່າງໄກສອກຫຼີກຍັງບໍ່ທັນຕອບສະໜອງ.

## II. ພາກທີ 2: ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025

### 2.1 ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030

ລັດຖະບານ ສປປ ລາວ ໄດ້ກຳນົດວິໄສທັດໃນການພັດທະນາວັດທະນະທຳ-ສັງຄົມ ຮອດປີ 2030 ດັ່ງນີ້:

***"ຊັບພະຍາກອນມະນຸດໄດ້ຮັບການພັດທະນາໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກວ່າ 75 ປີ".***

ຄຽງຄູ່ກັບວິໄສທັດຮອດປີ 2030 ທີ່ກ່າວມາຂ້າງເທິງນີ້, ລັດຖະບານຍັງໄດ້ກຳນົດທິດທາງລວມຂອງຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຮອດປີ 2025, ຊຶ່ງໜຶ່ງໃນນັ້ນ ລັດຖະບານໄດ້ຖືເອົາການພັດທະນາວັດທະນະທຳ-ສັງຄົມ ເປັນບູລິມະສິດສູງສຸດຂອງຍຸດທະສາດການພັດທະນາ ໂດຍສຸມໃສ່ຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ, ແກ້ໄຂຄວາມທຸກຍາກ, ພັດທະນາຂະແໜງການສຶກສາ, ວັດທະນະທຳ, ພັດທະນາສີມືແຮງງານທາງດ້ານປະລິມານ ແລະ ຄຸນນະພາບໃຫ້ໄດ້ຫຼາຍຂຶ້ນ.

ບົນພື້ນຖານວິໄສທັດ ແລະ ຍຸດທະສາດທີ່ລັດຖະບານກຳນົດ. ກະຊວງສຶກສາທິການ ແລະ ກິລາ ຈຶ່ງກຳນົດວິໄສທັດດັ່ງນີ້:

***"ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ,ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້."***

ເພື່ອໃຫ້ບັນລຸໄດ້ວິໄສທັດດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ຕ້ອງເອົາໃຈໃສ່ 8 ພາລະກິດລຸ່ມນີ້:

1. ສູ້ຊົນເພື່ອບັນລຸການສຶກສາພາກບັງຄັບຊັ້ນປະຖົມສຶກສາ ແລະ ຂະຫຍາຍການສຶກສາພາກບັງຄັບໄປເຖິງຊັ້ນມັດທະຍົມສຶກສາຕອນຕົ້ນໂດຍຮັບປະກັນໃຫ້ທຸກຄົນເຂົ້າເຖິງການສຶກສາ ແລະ ມີຄວາມພ້ອມປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມ.
2. ລຶບລ້າງຄວາມບໍ່ຮູ້ໜັງສືຂອງປະຊາຊົນລາວບັນດາເຜົ່າຢ່າງຊຶ້ງເຊິ່ງ ພ້ອມທັງສົ່ງເສີມການຮຽນຮູ້ຕະຫຼອດຊີວິດເພື່ອປັບປຸງຊີວິການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ.
3. ສົ່ງເສີມການຮຽນ-ການສອນວິຊາຊີບຂັ້ນພື້ນຖານຢູ່ຊັ້ນມັດທະຍົມສຶກສາ, ປັບປຸງລະບົບການສຶກສາສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໂດຍເອົາໃຈໃສ່ປັບປຸງດ້ານຄຸນນະພາບ ພ້ອມທັງຮັບປະກັນໃຫ້ນັກຮຽນ, ນັກສຶກສາມີທັກສະແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຮັບປະກັນໃຫ້ຜູ້ຮຽນຈົບມີຄວາມສາມາດເຂົ້າສູ່ກຳລັງແຮງງານໄດ້.
4. ຝຶກອົບຮົມສີມືແຮງງານ, ນັກວິຊາການ, ພະນັກງານມືອາຊີບ ແລະ ປັນຍາຊົນໃຫ້ມີຄວາມຮູ້, ຄວາມສາມາດໃນການນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານທີ່ທັນສະໄໝເພື່ອຕອບສະໜອງຕໍ່ຄວາມຕ້ອງການດ້ານການພັດທະນາເສດຖະກິດ-ສັງຄົມ.
5. ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ ເພື່ອໃຫ້ຜູ້ຮຽນຮູ້ມີຄວາມຮູ້ທີ່ຈຳເປັນເພື່ອການພັດທະນາເສດຖະກິດ-ສັງຄົມ, ໃນນັ້ນກໍ່ແມ່ນລວມທັງການສະໜອງທັກສະ ແລະ ຄວາມຮູ້ຂັ້ນພື້ນຖານເພື່ອໃຫ້ເຂົາເຈົ້າສາມາດດຳເນີນທຸລະກິດຄອບຄົວຂອງຕົນເອງໄດ້, ໂດຍສະເພາະໃນເຂດຫ່າງໄກສອກຫຼີກ.
6. ນຳໃຊ້ໄອຊີທີເປັນເຄື່ອງມືໃນການຄຸ້ມຄອງ ແລະ ບໍລິຫານການສຶກສາ ແລະ ກິລາ, ການຮຽນ-ການສອນ ແລະ ປັບປຸງຄຸນນະພາບການສຶກສາ.

7. ຂະຫຍາຍວຽກງານການຄົ້ນຄວ້າວິໄຈ ແລະ ປະເມີນຜົນນະໂຍບາຍ ແລະ ຍຸດທະສາດ ໃຫ້ກວ້າງຂວາງແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ນໍາໃຊ້ຜົນຂອງການຄົ້ນຄວ້າວິໄຈ ແລະ ປະເມີນຜົນເຂົ້າໃນການວາງແຜນພັດທະນາການສຶກສາ ແລະ ກິລາ.
8. ຂະຫຍາຍວຽກງານພະລະສຶກສາ, ສິລະປະສຶກສາ ແລະ ກິລາ-ກາຍຍະກຳໃຫ້ກວ້າງຂວາງແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍເນັ້ນໜັກໃສ່ການກໍ່ສ້າງຄູພະລະສຶກສາ, ສິລະປະສຶກສາ ແລະ ກິລາ-ກາຍຍະກຳ, ການພັດທະນາກຳມະການຕັດສິນ, ຄູຝຶກ ແລະ ນັກກິລາ, ສະໜອງອຸປະກອນກິລາໃຫ້ແກ່ທ້ອງຖິ່ນ.

## 2.2 ທິດທາງລວມຂອງວິໄສທັດ

1. ພັດທະນາຊັບພະຍາກອນມະນຸດໃຫ້ໄດ້ຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ພ້ອມທັງຮັບປະກັນໃຫ້ມີທັກສະ ແລະ ຄວາມຮູ້ຄວາມສາມາດນຳໃຊ້ວິທະຍາສາດເຕັກນິກ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການສື່ສານ ແລະ ພາສາຕ່າງປະເທດຢ່າງເປັນຮູບປະທຳ.
2. ພັດທະນາການສຶກສາ ແລະ ກິລາຕ້ອງເປັນວຽກງານໃຈກາງ ຂອງການພັດທະນາຊັບພະຍາກອນມະນຸດໃຫ້ໄດ້ຮັບການຂະຫຍາຍຕົວຮອບດ້ານ, ມີຄຸນນະພາບດີຂຶ້ນ ແລະ ມີໂອກາດຮຽນຮູ້ຕະຫຼອດຊີວິດ ເພື່ອພັດທະນາເສດຖະກິດ- ສັງຄົມ ໃຫ້ຍືນຍົງ.
3. ສຸມໃສ່ເຮັດໃຫ້ການພັດທະນາຊັບພະຍາກອນມະນຸດມີຄຸນນະພາບ, ມີສີມື ແລະ ມີຄວາມຊຳນິຊຳນານ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ປະກອບການໃນແຕ່ລະໄລຍະ ທັງດ້ານປະລິມານ ແລະ ຄຸນນະພາບ.

## 2.3 ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ຮອດປີ 2025

### 2.3.1 ຈຸດປະສົງ

ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງລວມຂອງຍຸດທະສາດການພັດທະນາການສຶກສາ ແລະ ກິລາຮອດປີ 2025 ດັ່ງນີ້:

ພັດທະນາລະບົບການສຶກສາເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສົມທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນໍ້າໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ.

1. ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາສຶກສາທຸກລະດັບ ເພື່ອຮັບປະກັນໃຫ້ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທີ່ມີໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.
2. ພັດທະນານັກກິລາ, ຄູຝຶກ ແລະ ກຳມະການຕັດສິນໃຫ້ມີລະດັບສູງເພື່ອການເປັນມືອາຊີບ ໂດຍມີການຊອກຫາ ແລະ ຄັດເລືອກເອົາເດັກຜູ້ທີ່ມີພອນສະຫວັນ ແລະ ມີຄວາມມັກຮັກໃນກິລາ ເພື່ອມາເຂົ້າຮຽນ ແລະ ຝຶກຊ້ອມໃນໂຮງຮຽນ ແລະ ສູນຝຶກຊ້ອມກິລາ.

### 2.3.2 ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ຮອດປີ 2025

ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ຮອດປີ 2025 ແມ່ນເນັ້ນໜັກ ແລະ ເລັ່ງໃສ່ 5 ໂຂງເຂດວຽກງານດັ່ງນີ້:

1. ປັບປຸງຄຸນນະພາບຂອງສາມັນສຶກສາທັງໃນ ແລະ ນອກໂຮງຮຽນ ເພື່ອໃຫ້ຜູ້ຮຽນທຸກຄົນມີຄຸນສົມບັດ, ມີຄວາມຮູ້ ແລະ ຄວາມສາມາດ ເພື່ອສືບຕໍ່ຮຽນໃນສາຍວິຊາຊີບ ແລະ ສາຍການສຶກສາຊັ້ນສູງ.

2. ປັບປຸງຄຸນນະພາບຂອງການກໍ່ສ້າງ ແລະ ຍົກລະດັບຄູແບບຮອບດ້ານ.
3. ກໍ່ສ້າງ ແລະ ພັດທະນາກຳລັງແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງການຂະຫຍາຍຕົວຂອງເສດຖະກິດ ແລະ ສັງຄົມ.
4. ປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາ ໂດຍເນັ້ນໃສ່ການພັດທະນາຂີດຄວາມສາມາດຂອງຜູ້ບໍລິຫານການສຶກສາ ແລະ ກິລາໃນແຕ່ລະຂັ້ນ.
5. ປັບປຸງ ແລະ ພັດທະນາກິລາ-ກາຍຍະກຳ ເຮັດໃຫ້ພົນລະເມືອງລາວ ມີສຸຂະພາບເຂັ້ມແຂງທາງດ້ານຮ່າງກາຍ ຈິດໃຈ, ມີນໍ້າໃຈກິລາທີ່ຜ່ອງໃສ, ສ້າງສະຕິຊາດ ສາມາດປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ເພີ່ມທະວີຄວາມສາມັກຄີ, ມິດຕະພາບ, ສັນຕິພາບການຮ່ວມມືກັບບັນດາປະເທດຢູ່ພາກພື້ນ ແລະ ສາກົນ ເພື່ອຍົກຖານະບົດບາດຂອງຊາດ.

**2.3.2.1 ຍຸດທະສາດທີ 1: ປັບປຸງຄຸນນະພາບຂອງສາມັນສຶກສາທັງໃນ ແລະ ນອກໂຮງຮຽນ ເພື່ອໃຫ້ຜູ້ຮຽນທຸກຄົນມີຄຸນສົມບັດ, ມີຄວາມຮູ້ ແລະ ຄວາມສາມາດ ເພື່ອສືບຕໍ່ຮຽນໃນສາຍວິຊາຊີບ ແລະ ສາຍການສຶກສາຊັ້ນສູງ**

**1) ຈຸດປະສົງລວມ:**

ເພື່ອສ້າງເງື່ອນໄຂໃຫ້ເດັກທຸກຄົນ ໄດ້ເຂົ້າເຖິງການສຶກສາແຕ່ຊັ້ນອະນຸບານຮອດຊັ້ນມັດທະຍົມ ທີ່ມີຄຸນນະພາບຢ່າງມີຄວາມສະເໝີພາບ ແລະ ເທົ່າທຽມກັນ ແລະ ຮັບປະກັນພັນທະປະຕິບັດການສຶກສາມັດທະຍົມຕອນຕົ້ນພາກບັງຄັບສຳລັບພົນລະເມືອງທຸກຄົນ ເພື່ອໃຫ້ເຂົາເຈົ້າມີຄວາມຮູ້ພື້ນຖານ ແລະ ທັກສະທີ່ສາມາດນຳໄປໃຊ້ປະກອບອາຊີບຕົວຈິງໄດ້ ແລະ ສາມາດທີ່ຈະສືບຕໍ່ຮຽນໃນຊັ້ນສູງຕໍ່ໄປ.

**2) ຈຸດປະສົງສະເພາະ**

- ຂະຫຍາຍການສຶກສາ ແລະ ການດູແລເດັກກ່ອນໄວຮຽນໃຫ້ກວ້າງຂວາງ ແລະ ທົ່ວເຖິງ.
- ສະໜອງການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບໃຫ້ແກ່ເດັກທຸກຄົນຢ່າງເທົ່າທຽມກັນ.
- ປະຕິບັດການສຶກສາຊັ້ນມັດທະຍົມຕົ້ນພາກບັງຄັບ.
- ສົ່ງເສີມການເປັນເຈົ້າຂອງຊຸມຊົນກໍ່ຄືຄະນະພັດທະນາການສຶກສາແຕ່ລະຂັ້ນ ເພື່ອຮັບປະກັນໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການພັດທະນາການສຶກສາ.
- ຕິດຕາມ, ກວດກາ ແລະ ທົບທວນຄືນຫຼັກສູດ ເພື່ອປັບປຸງ ແລະ ພັດທະນາໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.
- ສົ່ງເສີມໃຫ້ນັກຮຽນມີຄວາມຮູ້ດ້ານພາສາຕ່າງປະເທດ, ວິທະຍາສາດ ແລະ ເຕັກໂນໂລຊີ.
- ສົ່ງເສີມຂີດຄວາມສາມາດ ແລະ ທັກສະໃນການເຮັດວຽກຕົວຈິງ ແລະ ການປະກອບອາຊີບ ໃຫ້ແກ່ຊາວໜຸ່ມໃນໂຮງຮຽນ ລວມທັງສົ່ງເສີມການຝຶກອົບຮົມວິຊາຊີບສຳລັບຊາວໜຸ່ມທີ່ອອກຈາກໂຮງຮຽນ.

**3) ບູລິມະສິດ**

- ສົ່ງເສີມໃຫ້ເດັກນ້ອຍໄດ້ເຂົ້າກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມໃຫ້ຫຼາຍຂຶ້ນ.
- ສ້າງເງື່ອນໄຂເພື່ອໃຫ້ເດັກທີ່ອອກໂຮງຮຽນໄດ້ເຂົ້າມາຮຽນຄືນໃນໂຮງຮຽນສາມັນທົ່ວໄປ ແລະ ສ້າງເງື່ອນໄຂໃຫ້ເດັກໃນເຂດຫ່າງໄກສອກຫຼີກໄດ້ເຂົ້າເຖິງການສຶກສາ.
- ປັບປຸງພື້ນຖານໂຄງລ່າງຂອງສະຖານການສຶກສາ ພ້ອມທັງຮັບປະກັນໃຫ້ມີສະພາບແວດລ້ອມທີ່ເປັນມິດ ແລະ ຮັບປະກັນໃຫ້ມີຄວາມສ່ຽງໜ້ອຍຕໍ່ກັບຜົນກະທົບຈາກໄພພິບັດ.
- ປັບປຸງຄຸນນະພາບຂອງການສຶກສາໃນທຸກລະດັບ ເພື່ອເຮັດໃຫ້ອັດຕາຈົບຊັ້ນຂອງນັກຮຽນບັນລຸໄດ້ຕາມຄາດໝາຍທີ່ກຳນົດ ໂດຍສະເພາະແມ່ນເພດຍິງ.
- ເນັ້ນໃສ່ການສິດສອນວິຊາວິທະຍາສາດ, ເຕັກໂນໂລຊີ, ຄະນິດສາດ, ພາສາອັງກິດ ແລະ ໄອຊີທີ.
- ຫຼຸດຜ່ອນອັດຕາການກຶກໜັງສືຂອງຜູ້ໃຫຍ່.

- ສ້າງເງື່ອນໄຂໃຫ້ຊາວໜຸ່ມທີ່ອອກຈາກໂຮງຮຽນ ແລະ ຜູ້ໃຫຍ່ ໄດ້ມີໂອກາດເຂົ້າຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ບຳລຸງຍົກລະດັບການສຶກສາ.

**2.3.2.2 ຍຸດທະສາດທີ 2: ການປັບປຸງຄຸນນະພາບຂອງການກໍ່ສ້າງ ແລະ ຍົກລະດັບຄູແບບຮອບດ້ານ**

**1) ຈຸດປະສົງລວມ:**

- ໃຫ້ຜູ້ຮຽນທຸກຄົນໄດ້ຮັບການສິດສອນຈາກຄູສອນທີ່ມີຄຸນວຸດທິ ແລະ ໄດ້ຕາມມາດຕະຖານທາງດ້ານວິຊາຊີບ, ຄູໄດ້ຮັບການພັດທະນາດ້ານວິຊາຊີບຢ່າງຕໍ່ເນື່ອງ.

**2) ຈຸດປະສົງສະເພາະ**

- ເພື່ອປັບປຸງຄຸນນະພາບການຮຽນ-ການສອນໃນສະຖາບັນສ້າງຄູ.
- ສະໜອງການຝຶກອົບຮົມຄູປະຈຳການເພື່ອເຮັດໃຫ້ຄູໄດ້ມີໂອກາດໄດ້ພັດທະນາວິຊາຊີບຂອງຕົນຢ່າງຕໍ່ເນື່ອງ.
- ຍົກຖານະບົດບາດຂອງຄູໃຫ້ສູງຂຶ້ນໃນສັງຄົມ ໂດຍການສ້າງຄູໃຫ້ມີຄຸນນະພາບ, ມີຈັນຍາບັນ ແລະ ມີຄວາມເປັນມືອາຊີບ.

**3) ບູລິມະສິດ:**

- ປັບປຸງຫຼັກສູດສ້າງຄູໃນແຕ່ລະສາຍໃຫ້ສອດຄ່ອງກັບຫຼັກສູດສາຍສາມັນ ໂດຍເນັ້ນໃສ່ໃຫ້ຄູຜູ້ໜຶ່ງສາມາດສິດສອນໄດ້ຫຼາຍກວ່າໜຶ່ງວິຊາ.
- ຄັດເລືອກເອົານັກຮຽນຜູ້ທີ່ຮຽນເກັ່ງ ແລະ ຮັກອາຊີບຄູຈາກທ້ອງຖິ່ນມາຮຽນຄູຢ່າງມີແຜນການ ໂດຍອີງໃສ່ຄວາມຈຳເປັນ ແລະ ຄວາມຕ້ອງການຂອງໂຮງຮຽນເປັນຫຼັກ ລວມທັງການສະໜອງເບັ້ຍລ້ຽງໃຫ້ນັກຮຽນຄູຕາມທີ່ກຳນົດໄວ້ໃນລະບຽບການ.
- ຍົກລະດັບຄູສອນຢູ່ບັນດາສະຖາບັນສ້າງຄູໃຫ້ໄດ້ມາດຕະຖານຄຸນນະພາບທີ່ກຳນົດໄວ້.
- ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ເຄື່ອງທົດລອງໃຫ້ບັນດາສະຖາບັນສ້າງຄູ ໃຫ້ພຽງພໍຕາມມາດຕະຖານຄຸນນະພາບທີ່ກຳນົດໄວ້.
- ເອົາໃຈໃສ່ບຳລຸງ ແລະ ຍົກລະດັບຄູປະຈຳການໃຫ້ຫຼາຍຂຶ້ນ ພ້ອມທັງປັບປຸງການບຳລຸງ ແລະ ຍົກລະດັບດັ່ງກ່າວ ໃຫ້ເປັນລະບົບ ແລະ ຕໍ່ເນື່ອງ.
- ປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງສະຖາບັນສ້າງຄູໃຫ້ເຂັ້ມແຂງ.

**2.3.2.3 ຍຸດທະສາດທີ 3: ກໍ່ສ້າງ ແລະ ພັດທະນາກຳລັງແຮງງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງການຂະຫຍາຍຕົວຂອງເສດຖະກິດ ແລະ ສັງຄົມ**

**1) ຈຸດປະສົງລວມ:**

- ເພື່ອພັດທະນາແຮງງານທີ່ມີຄຸນນະພາບ, ມີຄວາມຮູ້, ຄຸນສົມບັດ ແລະ ຄວາມສາມາດ ທີ່ຕອບສະໜອງໄດ້ຕາມການຂະຫຍາຍຕົວຂອງເສດຖະກິດ-ສັງຄົມແຫ່ງຊາດ ແລະ ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ

**2) ຈຸດປະສົງສະເພາະ:**

- ເພີ່ມການເຂົ້າຮຽນໃນສາຍວິຊາຊີບໂດຍເອົາໃຈໃສ່ເພດຍິງ ແລະ ຜູ້ທີ່ດ້ອຍໂອກາດ ໂດຍສະເພາະໃນສາຂາວິຊາທີ່ກ່ຽວຂ້ອງ ແລະ ເໝາະສົມກັບກຸ່ມເປົ້າໝາຍດັ່ງກ່າວ.
- ທົບທວນ ແລະ ພັດທະນາຫຼັກສູດ ເພື່ອໃຫ້ສາມາດພັດທະນາແຮງງານໃຫ້ມີສີມື ແລະ ສອດຄ່ອງກັບຄວາມຕ້ອງການຂອງຜູ້ປະກອບການ ແລະ ຕະຫຼາດແຮງງານ.
- ປັບປຸງຄຸນນະພາບຂອງການຮຽນ-ການສອນໃນສະຖາບັນອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.
- ປັບປຸງ ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານ-ຄຸ້ມຄອງສະຖາບັນການສຶກສາ.

- ດັດສົມການເຂົ້າຮຽນໃນສາຍອາຊີວະສຶກສາ ແລະ ສາຍການສຶກສາຊັ້ນສູງ ໂດຍເອົາໃຈໃສ່ຜູ້ຍິງ ແລະ ຜູ້ທີ່ດ້ອຍໂອກາດ.
- ປັບປຸງ ແລະ ພັດທະນາຫຼັກສູດ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

3) **ບູລິມະສິດ:**

- ພັດທະນາ ແລະ ປັບປຸງຫຼັກສູດສໍາລັບສູນ, ສະຖາບັນອາຊີວະສຶກສາ ແລະ ສະຖາບັນການສຶກສາຊັ້ນສູງໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ, ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ (ໂດຍສະເພາະການທຽບໂອນໜ່ວຍກິດ).
- ຍົກລະດັບຄູສອນໃຫ້ມີຄວາມນຊໍານານງານໃນສາຂາວິຊາສອນ.
- ຮັບປະກັນໃຫ້ສະຖາບັນອາຊີວະສຶກສາ ແລະ ສະຖາບັນການສຶກສາຊັ້ນສູງມີຫ້ອງທົດລອງ, ຫ້ອງສະໝຸດ ແລະ ຫ້ອງປະຕິບັດງານທີ່ມີຄຸນນະພາບ ໄດ້ມາດຕະຖານຮັບໃຊ້ການຮຽນ-ການສອນໃນແຕ່ລະສາຂາວິຊາ
- ເພີ່ມການຮ່ວມມືກັບທຸກພາກສ່ວນທີ່ກ່ຽວຂ້ອງໃນສັງຄົມ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດໃນການພັດທະນາສີມືແຮງງານ, ການເປີດສອນຫຼັກສູດສາກົນ (ພາສາອັງກິດ), ການສ້າງຕັ້ງສູນພາສາອາຊຽນ ແລະ ສູນຄົ້ນຄວ້າ ແລະ ພັດທະນາ (Research and Development Center).
- ເນັ້ນໃສ່ການວິໄຈດ້ານແຮງງານ ແລະ ຄວາມຕ້ອງການດ້ານແຮງງານ.
- ເອົາໃຈໃສ່ວຽກງານການຄົ້ນຄວ້າວິທະຍາສາດ ເພື່ອຕໍ່ຍອດຜະລິດຕະພັນ ແລະ ສ້າງນະວັດຕະກໍາໃໝ່.
- ພັດທະນາ ແລະ ປັບປຸງຫຼັກສູດ ສາຍອາຊີວະສຶກສາ ແລະ ສາຍການສຶກສາຊັ້ນສູງ ຕາມຂອບວຸດທິການສຶກສາແຫ່ງຊາດໃຫ້ຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ເພື່ອພັດທະນາເສດຖະກິດ-ສັງຄົມ, ການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.
- ກໍ່ສ້າງ ແລະ ພັດທະນາຄູ ດ້ານວິຊາຄູ ແລະ ວິຊາສະເພາະສາຍອາຊີວະສຶກສາ ແລະ ສາຍການສຶກສາຊັ້ນສູງ.
- ຮັບປະກັນໃຫ້ສະຖານອາຊີວະສຶກສາ ແລະ ການສຶກສາຊັ້ນສູງມີພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກພຽງພໍ ສໍາລັບການຮຽນ-ການສອນ, ການຄົ້ນຄວ້າ-ວິໄຈ, ການທົດລອງ ແລະ ການຝຶກປະຕິບັດ.
- ສົ່ງເສີມການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ, ການບົ່ມເພາະທຸລະກິດ ແລະ ການບໍລິການວິຊາການ.
- ຕິດຕາມ, ປະເມີນຜູ້ຮຽນຈົບ, ຜູ້ນໍາໃຊ້ແຮງງານ ແລະ ວິໄຈຄວາມຕ້ອງການດ້ານແຮງງານ.
- ມີການຮ່ວມມືກັບອົງການຈັດຕັ້ງສັງຄົມ, ຫົວໜ່ວຍແຮງງານ ແລະ ສະຖານການສຶກສາທັງພາຍໃນ ແລະ ຕ່າງປະເທດ ໃນການພັດທະນາກໍາລັງແຮງງານ.

### 2.3.2.4 ຍຸດທະສາດທີ 4: ປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ໂດຍພັດທະນາຂີດຄວາມສາມາດຂອງຜູ້ບໍລິຫານການສຶກສາ ແລະ ກິລາໃນແຕ່ລະຂັ້ນ

1) **ຈຸດປະສົງລວມ:**

- ເພື່ອສ້າງຂີດຄວາມສາມາດໃຫ້ແກ່ຜູ້ບໍລິຫານການສຶກສາ ແລະ ກິລາແຕ່ລະລະດັບໃນການບໍລິຫານ, ຄຸ້ມຄອງການ, ການວາງແຜນການ, ງົບປະມານ, ຄົ້ນຄວ້າວິໄຈ, ການຕິດຕາມ ແລະ ປະເມີນຜົນເພື່ອຮັບປະກັນໃຫ້ແກ່ການນໍາໃຊ້ຊັບພະຍາກອນທີ່ມີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

2) **ຈຸດປະສົງສະເພາະ:**

- ເພື່ອກໍານົດພາລະບົດບາດໃນການບໍລິຫານ ແລະ ຄຸ້ມຄອງແຕ່ລະຂັ້ນໃຫ້ຈະແຈ້ງ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານການສຶກສາ ແລະ ກິລາໃນທຸກລະດັບ.
- ເພື່ອເຮັດໃຫ້ລະບົບການສ້າງແຜນການ ແລະ ແຜນງົບປະມານມີຄວາມສອດຄ່ອງກັນ.

- ເຮັດໃຫ້ການນຳໃຊ້ງົບປະມານມີປະສິດທິພາບ ຮັບປະກັນໃຫ້ການຈັດສັນງົບປະມານ ສອດຄ່ອງກັບນະໂຍບາຍ, ມີຄວາມໂປ່ງໃສ ແລະ ຍຸດຕິທຳ.
- ເຮັດໃຫ້ລະບົບການຄຸ້ມຄອງ, ການນຳໃຊ້ຄູ ແລະ ບຸກຄະລາກອນສຶກສາ ແລະ ກິລາໃນແຕ່ລະລະດັບມີປະສິດທິພາບ ແລະ ປະສິດທິຜົນ.
- ສ້າງຄວາມເຂັ້ມແຂງກ່ຽວກັບການຄົ້ນຄວ້າ-ວິໄຈໃນຂະແໜງການສຶກສາ ແລະ ກິລາ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ ແລະ ປະເມີນຜົນຂອງຂະແໜງການສຶກສາ ແລະ ກິລາ.
- ປັບປຸງ ແລະ ສ້າງຄວາມເຂັ້ມແຂງລະບົບການບໍລິຫານ ແລະ ຄຸ້ມຄອງໂຄງການຊ່ວຍເຫຼືອຈາກຕ່າງປະເທດ.

3) **ບູລິມະສິດ:**

- ສ້າງເຄື່ອງມືໃນການສ້າງແຜນການ ແລະ ແຜນງົບປະມານ ພ້ອມທັງຍົກລະດັບໃຫ້ແກ່ພະນັກງານແຜນການ ແລະ ການເງິນໃນແຕ່ລະ ລະດັບ.
- ປັບປຸງລະບົບການສ້າງແຜນປະຈຳປີເພື່ອໃຫ້ສອດຄ່ອງກັບຮອບວຽນໃນການຂຶ້ນແຜນງົບປະມານປະຈຳປີ.
- ສ້າງ ແລະ ພັດທະນາຜູ້ບໍລິຫານການສຶກສາ ແລະ ກິລາໃນແຕ່ລະລະດັບ ໃຫ້ເປັນຜູ້ບໍລິຫານມືອາຊີບ.
- ປັບປຸງລະບົບການສັບຊ້ອນ ແລະ ບັນຈຸຄູ ພ້ອມທັງສັບຊ້ອນຄູຄືນໃໝ່ ເພື່ອຫຼີກລ້ຽງສະພາບຄູເຫຼືອ.
- ນຳໃຊ້ລະບົບ ICT ທີ່ເປັນເອກະພາບເຂົ້າໃນການຄຸ້ມຄອງພະນັກງານ, ຄູ ແລະ ການຄຸ້ມຄອງການເງິນ.
- ດຳເນີນການສຶກສາ ແລະ ວິໄຈໃນຫົວຂໍ້ທີ່ເປັນບັນຫາໃນການພັດທະນາການສຶກສາ.
- ສ້າງຄວາມເຂັ້ມແຂງໃນການຄົ້ນຄວ້າ-ວິໄຈ ນັບແຕ່ສູນກາງ, ແຂວງ, ເມືອງ ຮອດໂຮງຮຽນ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ ແລະ ປະເມີນຜົນນັບແຕ່ສູນກາງ, ແຂວງ, ເມືອງຮອດໂຮງຮຽນ.
- ປັບປຸງລະບົບການເກັບກຳ, ວິເຄາະ ແລະ ການລາຍງານຂໍ້ມູນ ຢູ່ລະດັບສະຖານການສຶກສາໃຫ້ມີຄວາມຊັດເຈນ.
- ປັບປຸງນິຕິກຳ ສຳລັບສົ່ງເສີມການສຶກສາຂອງເພດຍິງ ແລະ ຜູ້ດ້ອຍໂອກາດ.

### 2.3.2.5 ຍຸດທະສາດທີ 5: ປັບປຸງ ແລະ ພັດທະນາ ກິລາ-ກາຍຍະກຳໃຫ້ກ້າວໜ້າ ແລະ ເຂັ້ມແຂງ ສາມາດຮ່ວມມືເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນ.

1) **ຈຸດປະສົງລວມ:**

- ພັດທະນາກິລາ-ກາຍຍະກຳ ເພື່ອເຮັດໃຫ້ພົນລະເມືອງລາວມີສຸຂະພາບເຂັ້ມແຂງ ທາງດ້ານຮ່າງກາຍ ແລະ ຈິດໃຈ, ມີຄວາມເສຍສະຫຼະ, ອົດທົນ ແລະ ມີນ້ຳໃຈກິລາ-ກາຍຍະກຳ ທີ່ຜ່ອງໃສກຽມພ້ອມປົກປັກຮັກສາ ແລະພັດທະນາປະເທດຊາດ.

2) **ຈຸດປະສົງສະເພາະ:**

- ເພື່ອສົ່ງເສີມວຽກງານ ກິລາ-ກາຍຍະກຳໃນຊຸມຊົນໃຫ້ກວ້າງຂວາງ ແລະ ເຂັ້ມແຂງ.
- ເພື່ອເຮັດໃຫ້ວຽກງານພະລະສຶກສາ, ສິລະປະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນ ແລະ ສະຖານການສຶກສາໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ.
- ສົ່ງເສີມ ກິລາ-ກາຍຍະກຳ ໃນກຳລັງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.
- ປັບປຸງຄຸນນະພາບ ກິລາ-ກາຍຍະກຳ ໃຫ້ມີລະດັບສູງ ແລະ ສົ່ງເສີມກິລາອາຊີບ.

3) **ບູລິມະສິດ:**

- ສ້າງໃຫ້ມີສະຖານທີ່ຫຼິ້ນກິລາ-ກາຍຍະກຳ, ສະໜອງອຸປະກອນອອກກຳລັງກາຍໃນຊຸມຊົນ, ລະດັບບ້ານ, ລະດັບເມືອງ, ແຂວງ ແລະ ນະຄອນຫຼວງ.

- ສະຫງວນ ແລະ ຈັດສັນທີ່ດິນໄວ້ເພື່ອເປັນບ່ອນສ້າງສະໜາມສາທາລະນະ ຫຼື ສ້າງເດີ່ນກິລາ-ກາຍຍະກຳ ປະເພດຕ່າງໆ ໃນການເຄື່ອນໄຫວຮັບໃຊ້ການອອກກຳລັງກາຍຂອງມວນຊົນ ຢູ່ທ້ອງຖິ່ນ
- ສົ່ງເສີມກິລາ-ກາຍຍະກຳພື້ນເມືອງຕາມທ່າແຮງຂອງຊຸມຊົນ, ຂອງບ້ານ, ຂອງເມືອງ, ແຂວງ ແລະ ນະຄອນຫຼວງ ຕາມປະເພນີຈຸດພິເສດຂອງແຕ່ລະທ້ອງຖິ່ນ, ມີການອອກກຳລັງກາຍ, ການຝຶກແອບ ແລະ ການແຂ່ງຂັນໃຫ້ຖືກຕ້ອງຕາມລະບຽບຫຼັກການ.
- ສົ່ງເສີມຊາວໜຸ່ມ, ເພດຍິງ ແລະ ຜູ້ອາຍຸສູງຫັນມາອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍຍະກຳ ໃຫ້ກວ້າງຂວາງສົ່ງເສີມຄົນພິການໃຫ້ມາອອກກຳລັງກາຍ, ຫຼິ້ນກິລາ ປະເພດຕ່າງໆ ເພື່ອເຂົ້າຮ່ວມການແຂ່ງຂັນກິລາຄົນພິການຢູ່ພາຍໃນປະເທດ ແລະ ສາກົນ.
- ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດຫຼັກສູດວິຊາພະລະສຶກສາ ແລະ ສິລະປະສຶກສາໃນໂຮງຮຽນ ແລະ ສະຖາບັນການສຶກສາແຫ່ງຕ່າງໆ ທັງພາກລັດ ແລະ ເອກະຊົນໃຫ້ທົ່ວເຖິງ.
- ສົ່ງເສີມໃຫ້ມີສະໂມສອນ ກິລາ-ກາຍຍະກຳ ແລະ ໃຫ້ມີການແຂ່ງຂັນ ກິລາ-ກາຍຍະກຳ ຕາມຄວາມສາມາດຂອງທ້ອງຖິ່ນ ໂດຍຜັດປ່ຽນກັນເປັນເຈົ້າພາບໃນແຕ່ລະປີ.
- ເພີ່ມທະວີການເອົາໃຈໃສ່ສ້າງ ກິລາ-ກາຍຍະກຳ ຂອງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອເຂົ້າຮ່ວມການແຂ່ງຂັນໃນລະດັບພາຍໃນ ແລະ ຕ່າງປະເທດໃຫ້ມີມາດຕະຖານສູງຂຶ້ນກວ່າເກົ່າ.
- ສ້າງວິທະຍາໄລພອນສະຫວັນກິລາ-ກາຍຍະກຳ ຢູ່ສູນກາງ.
- ສົ່ງເສີມບາງປະເພດ ກິລາ-ກາຍຍະກຳ ທີ່ເປັນທ່າແຮງຂອງລາວ ເພື່ອພັດທະນາໄປເປັນ ກິລາ-ກາຍຍະກຳ ອາຊີບໃນຕໍ່ໜ້າ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ-ປະເມີນຜົນ ວຽກງານພະລະສຶກສາ, ສິລະປະສຶກສາ ແລະ ກິລາ-ກາຍຍະກຳ ແຕ່ສູນກາງລົງຮອດທ້ອງຖິ່ນ.
- ຍົກລະດັບວິທະຍາໄລພະລະສຶກສາ ຂຶ້ນເປັນສະຖາບັນພະລະສຶກສາ.
- ຍົກລະດັບສູນຝຶກກິລາແຫ່ງຊາດ ເປັນສະຖາບັນ ກິລາ-ກາຍຍະກຳ ແຫ່ງຊາດ.
- ເຂົ້າຮ່ວມການແຂ່ງຂັນ ກິລາ-ກາຍຍະກຳ ທັງພາຍໃນ ແລະ ຕ່າງປະເທດ.

## III. ພາກທີ 3: ມາດຕະການໃນການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຂະແໜງການສຶກສາ ແລະ ກິລາ ໄລຍະ 10 ປີ (2016-2025) ໃຫ້ມີຜົນສຳເລັດດີນັ້ນ ແມ່ນໜ້າທີ່ຂອງທຸກພາກສ່ວນພາຍໃນຂະແໜງການສຶກສາ ແລະ ກິລາ ແຕ່ສູນກາງລົງຮອດທ້ອງຖິ່ນ. ມາດຕະການຈັດຕັ້ງປະຕິບັດຍຸດທະສາດນີ້ ໄດ້ກວມເອົາກົນໄກການເຜີຍແຜ່, ຜັນຂະຫຍາຍ, ການປະສານງານ ແລະ ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ.

### 3.1 ກົນໄກການຈັດຕັ້ງປະຕິບັດ:

- ໃຫ້ແຕ່ລະພາກສ່ວນ ໂດຍສະເພາະກົມວິຊາການຕ່າງໆ, ພະແນກສຶກສາທິການ ແລະ ກິລາແຂວງ ເອົາໃຈໃສ່ຈັດຕັ້ງເຜີຍແຜ່ເນື້ອໃນຈິດໃຈຂອງຍຸດທະສາດນີ້ໃຫ້ແກ່ບັນດາຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ສະຖານການສຶກສາຕ່າງໆໃຫ້ທົ່ວເຖິງ.
- ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດນີ້ໃຫ້ເປັນແຜນການ 5 ປີ ແຜນງານ ແລະ ໂຄງການໃນຂະແໜງການຕົນ, ພ້ອມທັງກຳນົດວຽກງານບູລິມະສິດເພື່ອຄາດຄະເນງົບປະມານທີ່ຕ້ອງການ ເພື່ອດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ.
- ມອບໃຫ້ກົມແຜນການ ເປັນໃຈກາງປະສານງານລະຫວ່າງບັນດາຂະແໜງການຍ່ອຍ ແລະ ພາກສ່ວນຕ່າງໆ ອ້ອມຂ້າງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດສະບັບນີ້ໃຫ້ເປັນອັນລະອຽດ, ມີປະສິດທິພາບ ແລະ ມີປະສິດທິຜົນສູງສຸດ.

### 3.2 ມາດຕະການດ້ານການຕິດຕາມຄຸ້ມຄອງການປະຕິບັດຍຸດທະສາດ:

- ສ້າງກົນໄກ ແລະ ແຜນການເພື່ອຕິດຕາມ, ກວດກາ ແລະ ຕີລາຄາສະພາບການຈັດຕັ້ງຜັນຂະຫຍາຍຍຸດທະສາດນີ້ໃຫ້ເປັນປົກກະຕິ. ຫາກມີບັນຫາໃໝ່ເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດຍຸດທະສາດນີ້, ຕ້ອງໄດ້ປັບປຸງໃຫ້ສອດຄ່ອງກັບສະພາບການໃໝ່ພາຍໃຕ້ທິດຊີ້ນຳຂອງຄະນະນຳກະຊວງສຶກສາທິການ ແລະ ກິລາ.
- ປັບປຸງລະບົບ ແລະ ເຄື່ອງມືໃນການຕິດຕາມປະເມີນຜົນການຈັດຕັ້ງຜັນຂະຫຍາຍຍຸດທະສາດ ໃຫ້ເປັນລະບົບຄົບຊຸດ.

# ພາກທີ II

# ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII

# (2016-2020)

# I. ພາກສະເໜີ

## 1.1 ຄວາມສຳຄັນຂອງວຽກງານສຶກສາ

ລັດຖະບານເຮົາໄດ້ຖືເອົາການພັດທະນາການສຶກສາ ແລະ ກິລາ ກໍ່ຄືການພັດທະນາຊັບພະຍາກອນມະນຸດ ເປັນຂໍກຸນແຈສຳຄັນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອນຳເອົາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ຄ່ອຍໆກ້າວໄປສູ່ປະເທດອຸດສາຫະກຳ ແລະ ທັນສະໄໝ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ກໍ່ຄືມະຕິກອງປະຊຸມໃຫຍ່ສູນກາງພັກຄັ້ງທີ IX ໄດ້ເນັ້ນໃຫ້ເຫັນບົດບາດສຳຄັນຂອງວຽກງານສຶກສາ ແລະ ກິລາ ໂດຍໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດບາດກ້າວ 4 ບຸກທະລຸ ເພື່ອບັນລຸນະໂຍບາຍໃໝ່ ແລະ ການພັດທະນາປະເທດຊາດ ຊຶ່ງໃນນັ້ນກໍ່ລວມມີ:

- ຄວາມກ້າວໜ້າທາງດ້ານການເມືອງແນວຄິດ
- ການພັດທະນາຊັບພະຍາກອນມະນຸດ
- ແກ້ໄຂບັນຫາສິ່ງທ້າທາຍຕ່າງໆທີ່ເປັນອຸປະສັກຕໍ່ການດຳເນີນທຸລະກິດ
- ເອົາໃຈໃສ່ຫຼຸດຜ່ອນຄວາມທຸກຍາກ

ຂະແໜງການສຶກສາ ແລະ ກິລາ ຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ຊັບພະຍາກອນມະນຸດ ໂດຍສະເພາະແມ່ນປັບປຸງທັກສະ ແລະ ຄວາມສາມາດຂອງກຳລັງແຮງງານ, ສົ່ງເສີມໃຫ້ເຂົາເຈົ້າມີລະບຽບວິໄນ, ມີຄວາມອົດທົນ; ເພີ່ມຈຳນວນນັກຊ່ຽວຊານ ແລະ ຜູ້ຊຳນານງານ; ປັບປຸງຂີດຄວາມສາມາດທາງດ້ານເຕັກນິກ ແລະ ວິຊາຊີບໃຫ້ແກ່ພະນັກງານຂອງລັດ, ພາກສ່ວນເອກະຊົນ ແລະ ບັນດາຜູ້ປະກອບການເພື່ອໃຫ້ສາມາດແຂ່ງຂັນໄດ້ພາຍໃນປະຊາຄົມເສດຖະກິດອາຊຽນ ແລະ ໃນໂລກ.

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ໄດ້ຕອບສະໜອງຕໍ່ບູລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII ໂດຍສະເພາະແມ່ນ:

- ການສືບຕໍ່ຜັນຂະຫຍາຍຜົນສຳເລັດຂອງການຈັດຕັ້ງປະຕິບັດ ຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ເພື່ອເຮັດໃຫ້ລະບົບການສຶກສາທຸກຂັ້ນມີຄວາມເຂັ້ມແຂງ ແລະ ລະບົບການສຶກສາຫຼັງຂັ້ນພື້ນຖານສາມາດຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກດ້ວຍການປັບປຸງພື້ນຖານໂຄງລ່າງ, ປັບປຸງຫຼັກສູດ ແລະ ຄຸນນະພາບການຮຽນ-ການສອນ.
- ບັນລຸໄດ້ນະໂຍບາຍການສຶກສາພາກບັງຄັບຊັ້ນປະຖົມສຶກສາ ແລະ ດຳເນີນໄປເຖິງຊັ້ນມັດທະຍົມສຶກສາຕອນຕົ້ນເພື່ອໃຫ້ເປັນພື້ນຖານໃນການພັດທະນາ ແລະ ຍົກລະດັບທັກສະຄວາມຮູ້ຄວາມສາມາດ ແລະ ຄຸນນະພາບຂອງກຳລັງແຮງງານ ເພື່ອເປັນສິ່ງຈູງໃຈໃຫ້ນັກຮຽນ ມີຄວາມສົນໃຈເຂົ້າຮຽນໃນສາຍອາຊີວະສຶກສາໃຫ້ຫຼາຍຂຶ້ນ, ໂດຍສະເພາະ ກໍ່ແມ່ນເນັ້ນໃສ່ການສ້າງນັກວິຊາການໃນຂະແໜງປູກຝັງ, ລ້ຽງສັດ, ໄຟຟ້າ, ບໍ່ແຮ່, ການປຸງແຕ່ງ, ຫັດຖະກຳ, ສ້ອມແປງ ແລະ ການບໍລິການ ເພື່ອຮັບປະກັນໃຫ້ມີກຳລັງແຮງງານພຽງພໍໃນຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການ ເພື່ອສະໜັບສະໜູນການພັດທະນາປະເທດຊາດໃນອານາຄົດ ແລະ ປັບປຸງຂີດຄວາມສາມາດ ເພື່ອໃຫ້ເຊື່ອມໂຍງ ແລະ ສາມາດແຂ່ງຂັນກັບບັນດາປະເທດໃນພາກພື້ນ ແລະ ສາກົນໄດ້.
- ພັດທະນາຂີດຄວາມສາມາດຂອງບັນດາ ນັກກິລາ-ກາຍຍະກຳ ເພື່ອໃຫ້ເຂົາເຈົ້າກາຍເປັນນັກກິລາອາຊີບ ແລະ ຄ່ອຍໆກ້າວສູ່ມາດຕະຖານຂອງພາກພື້ນ ແລະ ສາກົນ. ສົ່ງເສີມໃຫ້ປະຊາຊົນລາວທຸກຄົນໄດ້ເຂົ້າຮ່ວມຂະບວນການ ກິລາ-ກາຍຍະກຳ ພ້ອມທັງສົ່ງເສີມກິລາພື້ນເມືອງຕ່າງໆທີ່ມີ.

## 1.2 ພື້ນຖານໃນການພັດທະນາຂະແໜງການສຶກສາ

ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງສູນກາງພັກໃນປີ 2006 ໄດ້ກຳນົດເປົ້າໝາຍໄລຍະຍາວໃນການພັດທະນາປະເທດຊາດ ຄືເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ພ້ອມທັງສ້າງພື້ນຖານໂຄງລ່າງ ແລະ ຊັບພະຍາກອນມະນຸດ ເພື່ອໃຫ້ປະເທດຊາດກາຍເປັນປະເທດອຸດສາຫະກຳ ແລະ ທັນສະໄໝ. ກອງປະຊຸມຍັງໄດ້ຢັ້ງຢືນວ່າ ການສຶກສາເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ, ການປະຕິຮູບລະບົບການສຶກສາແຫ່ງຊາດແມ່ນສິ່ງຈຳເປັນຮີບດ່ວນເພື່ອປັບປຸງຄຸນນະພາບ ແລະ ມາດຕະຖານການສຶກສາ.

ດ້ວຍເຫດຜົນດັ່ງກ່າວ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ຮ່າງຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ (2006-2015). ຫຼັງຈາກນັ້ນ ກໍ່ໄດ້ສ້າງຂອບພັດທະນາຂະແໜງການສຶກສາ (2009-2015) ຊຶ່ງໄດ້ກຳນົດຂອບນະໂຍບາຍໃນການພັດທະນາຂະແໜງການສຶກສາ. ເອກະສານທັງສອງຢ່າງນີ້ໄດ້ກາຍເປັນພື້ນຖານໃຫ້ແກ່ການພັດທະນາແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2011-2015. ຈາກນັ້ນ, ທັງລັດຖະບານ ແລະ ຄູ່ຮ່ວມພັດທະນາກໍ່ໄດ້ຮັບຮອງເອົາເອກະສານດັ່ງກ່າວ ແລະ ໄດ້ນຳໃຊ້ເປັນພື້ນຖານໃຫ້ແກ່ການຄິດໄລ່ງົບປະມານ ແລະ ຂໍການສະໜັບສະໜູນຈາກພາຍນອກ. ໃນກາງປີ 2013 ກະຊວງສຶກສາທິການ ແລະ ກິລາ ໄດ້ດຳເນີນການປະເມີນກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2011-2015, ຊຶ່ງຜົນຂອງການປະເມີນກາງສະໄໝຄັ້ງນີ້ລວມທັງຜົນການທົບທວນການສຶກສາແຫ່ງຊາດເພື່ອໝົດທຸກຄົນໃນປີ 2015 ໄດ້ເປັນບ່ອນອີງໃຫ້ແກ່ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020.

ເລີ່ມແຕ່ປີ 2011 ເປັນຕົ້ນມາ ມີຫຼາຍຂະແໜງການຍ່ອຍໄດ້ສຳເລັດການສ້າງແຜນນະໂຍບາຍ ແລະ ແຜນດຳເນີນງານຂອງຕົນເຊັ່ນ: ນະໂຍບາຍການສຶກສາຮຽນຮ່ວມ, ຍຸດທະສາດການສ້າງຄູ ແລະ ແຜນງານການຈັດຕັ້ງປະຕິບັດ, ນະໂຍບາຍສິ່ງເສີມອາຫານໃນໂຮງຮຽນ, ດຳລັດວ່າດ້ວຍລັດຖະກອນຄູ, ກົດໝາຍວ່າດ້ວຍກິລາ-ກາຍຍະກຳ, ຍຸດທະສາດການພັດທະນາກິລາ-ກາຍຍະກຳຮອດປີ 2020 ແລະ ແຜນແມ່ບົດອາຊີວະສຶກສາ. ກົດໝາຍສຶກສາສະບັບປີ 2007 ກໍ່ໄດ້ຮັບການປັບປຸງ ແລະ ໄດ້ປະກາດໃຊ້ຢ່າງເປັນທາງການໂດຍສະພາແຫ່ງຊາດໃນເດືອນກໍລະກົດ 2015. ເນື້ອໃນຂອງບັນດາເອກະສານທີ່ກ່າວມານີ້ ລ້ວນແຕ່ໄດ້ບັນຈຸຢູ່ໃນແຜນພັດທະນາຂະແໜງການສຶກສາ 2016-2020 ຕາມຄວາມເໝາະສົມ.

## 1.3 ວິທີການສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາປີ 2016-2020

ກ່ອນຈະດຳເນີນການສ້າງແຜນພັດທະນາການສຶກສາ ແລະ ກິລາ 2016-2020, ກະຊວງສຶກສາທິການ ແລະ ກິລາ ໄດ້ນຳໃຊ້ວິທີການທີ່ເອີ້ນວ່າ "ທິດສະດີການປ່ຽນແປງ" ເພື່ອຊ່ວຍໃນການກຳນົດຜົນໄດ້ຮັບ ແລະ ເພື່ອຮັບປະກັນຍຸດທະສາດທີ່ກຳນົດໃນແຜນນັ້ນສອດຄ່ອງກັບເປົ້າໝາຍໃນການພັດທະນາຂອງຂະແໜງການ. ທິດສະດີການປ່ຽນແປງໄດ້ກຳນົດສິ່ງຈຳເປັນພື້ນຖານ ເພື່ອໃຫ້ບັນລຸເປົ້າໝາຍໄລຍະຍາວ ແລະ ສະແດງໃຫ້ເຫັນເຖິງຂະບວນການຂອງການປ່ຽນແປງທີ່ເກີດຂຶ້ນບົນເສັ້ນທາງຂອງການປ່ຽນແປງ. ຢູ່ໃນແຜນພັດທະນາການສຶກສາ ແລະ ກິລາ 2016-2020, ທິດສະດີການປ່ຽນແປງໄດ້ພັນລະນາເຖິງບັນດາກິດຈະກຳຕ່າງໆ ທີ່ຕ້ອງປະຕິບັດ ເພື່ອໃຫ້ບັນລຸຜົນໄດ້ຮັບທີ່ຕ້ອງການໃນປີ 2020.

ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດກອງປະຊຸມປຶກສາຫາລືກັບບັນດາຄະນະຮັບຜິດຊອບປະສານງານ ແລະ ສະໜັບສະໜູນດ້ານວິຊາການທັງ 4 ຄະນະ[2] ເພື່ອກຳນົດເປົ້າໝາຍລວມ, ຈຸດປະສົງ ແລະ ຜົນໄດ້ຮັບຂອງແຜນພັດທະນາການສຶກສາ ແລະ ກິລາ 2016-2020. ຈາກນັ້ນ ກໍ່ໄດ້ຈັດກອງປະຊຸມປຶກສາຫາລືກັບບັນດາສະຖາບັນການສຶກສາຕ່າງໆ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ເພື່ອກຳນົດກິດຈະກຳທີ່ຈຳເປັນ ລວມທັງຜົນໄດ້ຮັບໄລຍະສັ້ນທີ່ອາດເກີດຂຶ້ນ ເພື່ອໃຫ້ບັນລຸຜົນໄດ້ຮັບລວມພາຍໃນປີ 2020. ຜົນຮັບຂອງທິດສະດີການປ່ຽນແປງທີ່ໄດ້ກຳນົດໃນແຜນ 5 ປີ ນີ້ແມ່ນມີຄວາມເຊື່ອມໂຍງກັນກັບເປົ້າໝາຍການພັດທະນາແບບຍືນຍົງ ຂອງອົງການສະຫະປະຊາຊາດ[3]

[2] ໜ່ວຍງານການສຶກສາຂັ້ນພື້ນຖານ; ໜ່ວຍງານການສຶກສາຫຼັງຂັ້ນພື້ນຖານ, ໜ່ວຍງານການບໍລິຫານຄຸ້ມຄອງ ແລະ ໜ່ວຍງານການວິໄຈ

[3] https://sustainabledevelopment.un.org/content/documents/1579SDGs%20Proposal.pdf

ແລະ ອົງການ UNESCO ທີ່ໄດ້ກຳນົດໃນຂໍ້ຕົກລົງ Muscat 2015[4]. ນອກຈາກນີ້, ເປົ້າໝາຍຜົນຮັບຂອງແຜນພັດທະນານີ້ຍັງສອດຄ່ອງກັບຖະແຫຼງການອິນຊອນ[5] ວ່າດ້ວຍການສຶກສາໃນອະນາຄົດທີ່ຊຸກຍູ້ໃຫ້ປະເທດສະມາຊິກຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ ມີຄວາມເທົ່າທຽມ ແລະ ການຮຽນຮູ້ຕະຫຼອດຊີວິດ. ຖະແຫຼງການດັ່ງກ່າວຍັງເປັນປັດໄຈຍູ້ໜູນເປົ້າໝາຍການສຶກສາທີ່ໄດ້ກຳນົດໄວ້ໃນເປົ້າໝາຍການພັດທະນາແບບຍືນຍົງ.

ນອກຈາກວິທີການພັດທະນາແຜນຍຸດທະສາດການພັດທະນາການສຶກສາ ແລະ ກິລາ 2016-2020 ແບບມີສ່ວນຮ່ວມແລ້ວ, ແຕ່ລະກົມ ແລະ ຂະແໜງການຍ່ອຍ ຍັງໄດ້ພັດທະນາແຜນລະອຽດຂອງຕົນຢູ່ໃນພາກທີ່ III ຂອງເອກະສານແຜນການນີ້ ເພື່ອໃຫ້ເຫັນໄດ້ເຖິງລາຍລະອຽດຂອງບັນດາກິດຈະກຳທີ່ຈະສະໜັບສະໜູນຕໍ່ຜົນໄດ້ຮັບລວມດັ່ງທີ່ກຳນົດໄວ້ໃນທິດສະດີການປ່ຽນແປງຂອງແຜນພັດທະນາການສຶກສາ ແລະ ກິລາ 2016-2020.

## II. ຜົນສຳເລັດ ແລະ ສິ່ງທ້າທາຍໃນການພັດທະນາວຽກງານສຶກສາ ແລະ ກິລາ

### 2.1 ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2011-2015

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ແມ່ນໄດ້ອີງໃສ່ຜົນການວິເຄາະ ແລະ ປະເມີນການຈັດຕັ້ງປະຕິບັດແຜນນະໂຍບາຍຂອງແຜນພັດທະນາການສຶກສາ ແລະ ກິລາ 2011-2015, ຊຶ່ງການວິເຄາະນະໂຍບາຍນີ້ ແມ່ນອີງຕາມໂຄງສ້າງຂອງຕາຕະລາງແຜນນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ຊຶ່ງເບື້ອງຕົ້ນນັ້ນແມ່ນໄດ້ມາຈາກຂອບພັດທະນາຂະແໜງການສຶກສາທີ່ເປັນພື້ນຖານຂອງແຜນພັດທະນາຂະແໜງການສຶກສາ.

ຫຼັງຈາກໄດ້ເລີ່ມຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງສູນກາງພັກປະຊາຊົນປະຕິວັດລາວ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII, ຂະແໜງການສຶກສາ ແລະ ກິລາ ໄດ້ບັນລຸຜົນສຳເລັດທີ່ສຳຄັນຫຼາຍດ້ານ. ເພື່ອສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດ ນະໂຍບາຍ 4 ບຸກທະລຸ ທີ່ກຳນົດຢູ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ມີ 5 ໜ້າວຽກໃຫຍ່ທີ່ຂະແໜງການສຶກສາ ແລະ ກິລາ ສາມາດບັນລຸໄດ້ຄື:

1. ຍຸດທະສາດປະຕິຮູບລະບົບການສຶກສາແຫ່ງຊາດສອດຄ່ອງ, ຕອບສະໜອງ ແລະ ສະໜັບສະໜູນໃຫ້ແກ່ແນວຄວາມຄິດບຸກທະລຸດ້ານຈິນຕະນາການປະກົດຜົນເປັນຈິງ.
2. ປະຊາຊົນລາວໄດ້ຮັບຜົນປະໂຫຍດຈາກການປັບປຸງວຽກງານກິລາ-ກາຍຍະກຳ, ຊຶ່ງເປັນວຽກງານທີ່ເຮັດໃຫ້ລາວເຮົາມີບົດບາດສຳຄັນໃນການສ້າງສາຍພົວພັນໃນລະດັບພາກພື້ນ ແລະ ສາກົນ.
3. ວຽກງານ 3 ສ້າງ ແລະ 5 ຫຼັກມູນການສຶກສາເປັນປັດໄຈຊຸກຍູ້ສົ່ງເສີມຄຸນນະພາບ ແລະ ຄວາມສອດຄ່ອງຂອງການພັດທະນາຊັບພະຍາກອນມະນຸດແຫ່ງຊາດ.
4. ການວາງແຜນ ແລະ ການຄຸ້ມຄອງບໍລິຫານການສຶກສາມີຄວາມເຂັ້ມແຂງ ຊຶ່ງບັນຫານີ້ໄດ້ສະແດງໃຫ້ເຫັນໃນຂອດການປັບປຸງບັນດາລະບຽບການ ແລະ ຫຼັກການຕ່າງໆທີ່ກ່ຽວຂ້ອງກັບການສຶກສາ.
5. ຄວາມຮູ້ ແລະ ຄວາມສາມາດຂອງຄູສອນໄດ້ຮັບການພັດທະນາ ແລະ ປັບປຸງດີຂຶ້ນ ແລະ ສາມາດມີບົດບາດສຳຄັນຫຼາຍຂຶ້ນໃນສັງຄົມລາວ.

---

4 http://www.unesco.org/new/fileadmin/MULTIMEDIA/FIELD/Santiago/pdf/Muscat-Agreement-ENG.pdf
5 https://en.unesco.org/world-education-forum-2015/incheon-declaration

## 2.2 ຜົນສຳເລັດໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ ແລະ ເປົ້າໝາຍການສຶກສາເພື່ອທຸກຄົນ

**ເປົ້າໝາຍສະຫັດສະວັດດ້ານການພັດທະນາທີ 2:**

ຢູ່ໃນລະດັບຊາດ, ເຫັນວ່າ ສປປ ລາວ ເຮົາສາມາດບັນລຸອັດຕາເຂົ້າຮຽນສຸດທິໃນຊັ້ນປະຖົມໄດ້ລື່ນຄາດໝາຍພຽງເລັກໜ້ອຍຄື 98.5%. ເຖິງວ່າອັດຕາລອດເຫຼືອຮອດ ປ.5 ບັນລຸໄດ້ພຽງແຕ່ 78.3% ໃນປີ 2014-2015 ທຽບກັບເປົ້າໝາຍ 95% ພາຍໃນປີ 2015, ແຕ່ການສຶກສາໃນຊັ້ນປະຖົມມີການພັດທະນາຂຶ້ນຫຼາຍ ຊຶ່ງເຫັນໄດ້ຈາກຕົວເລກນັກຮຽນທີ່ສາມາດເຂົ້າເຖິງ ແລະ ຈົບການສຶກສາລະດັບປະຖົມເພີ່ມຂຶ້ນ ແລະ ທັງມີຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ ຫຼາຍຂຶ້ນເຊັ່ນ: ໃນປີ 2015 ມີນັກຮຽນຈົບຊັ້ນປະຖົມສຶກສາທັງໝົດຈຳນວນ 141,322 ຄົນ ທຽບໃສ່ປີ 2011 ມີພຽງ 130,871 ຄົນ ແລະ ໃນຂະນະດຽວກັນນັ້ນ ກໍ່ເຫັນວ່າດັດຊະນີຄວາມສະເໝີພາບຍິງ-ຊາຍ ກໍ່ຫຍັບເຂົ້າຫາ 1.00 ຫຼາຍຂຶ້ນຄື 0.99.

**ເປົ້າໝາຍສະຫັດສະວັດດ້ານການພັດທະນາທີ 3:**

ດັດຊະນີຄວາມສະເໝີພາບຍິງ-ຊາຍ ຂອງເດັກອາຍຸ 3-5 ປີ ສຳລັບການສຶກສາກ່ອນໄວຮຽນ ແລະ ການສຶກສາຊັ້ນປະຖົມ ແມ່ນສາມາດບັນລຸໄດ້ພາຍໃນປີ 2015. ແຕ່ວ່າ ຖ້າລະດັບການສຶກສາສູງຂຶ້ນເທົ່າໃດ, ດັດຊະນີຄວາມສະເໝີພາບຍິງ-ຊາຍ ຍິ່ງຕໍ່າເທົ່ານັ້ນ. ຕົວຢ່າງໃນສົກຮຽນ 2014-2015 ດັດຊະນີຄວາມສະເໝີພາບຍິງ-ຊາຍໃນຊັ້ນມັດທະຍົມຕົ້ນແລະ ມັດທະຍົມປາຍແມ່ນ 0.94 ແລະ 0.87 ຕາມລຳດັບ. ດັດຊະນີຄວາມສະເໝີພາບຍິງ-ຊາຍ ໃນອັດຕາ ຈົບຊັ້ນມັດທະຍົມຕົ້ນໃນແຕ່ລະປີແມ່ນໄດ້ຮັບການປັບປຸງດີຂຶ້ນເປັນລຳດັບຄືຈາກ 0.87 ໃນສົກຮຽນ 2012-2013 ເປັນ 0.94 ໃນສົກຮຽນ 2014-15 ແລະ ຄາດວ່າໃນອີກໜຶ່ງຫາສອງປີຂ້າງໜ້າຈະສາມາດບັນລຸຄວາມສະເໝີພາບຍິງ-ຊາຍໄດ້ຄືດັດຊະນີຄວາມສະເໝີພາບຍິງ-ຊາຍຈະບັນລຸໄດ້ໃນລະຫວ່າງ 0.97 ແລະ 1.03. ໃນໄລຍະດຽວກັນນັ້ນ, ດັດຊະນີຄວາມສະເໝີພາບຍິງ-ຊາຍໃນອັດຕາຈົບຊັ້ນມັດທະຍົມຕອນປາຍກໍ່ເຫັນວ່າມີການປັບປຸງດີຂຶ້ນພຽງເລັກໜ້ອຍ ຄືຈາກ 0.83 ເປັນ0.84. ປະຈຸບັນນີ້ ດັດຊະນີຄວາມສະເໝີພາບຍິງ-ຊາຍໃນຂັ້ນແຂວງຍັງມີຄວາມແຕກໂຕນກັນຫຼາຍ ແລະ ບໍ່ມີແຂວງໃດທີ່ສາມາດບັນລຸໄດ້ຊ່ອງຫວ່າງຄວາມແຕກໂຕນດ້ານບົດບາດຍິງ-ຊາຍໃນທຸກຂັ້ນຮຽນ ນັບແຕ່ລະດັບການສຶກສາກ່ອນໄວຮຽນຈົນຮອດລະດັບມັດທະຍົມປາຍ.

**ເປົ້າໝາຍການສຶກສາເພື່ອໝົດທຸກຄົນ**

<u>**ເປົ້າໝາຍ 1: ການດູແລ ແລະ ການສຶກສາເດັກກ່ອນໄວຮຽນ**</u>: ໂດຍລວມແລ້ວເຫັນວ່າເປົ້າໝາຍກ່ຽວກັບການດູແລ ແລະ ການສຶກສາເດັກກ່ອນໄວຮຽນທີ່ໄດ້ກຳນົດໄວ້ໃນຊ່ວງໄລຍະ 2003-2015 ສ່ວນໃຫຍ່ແມ່ນສາມາດບັນລຸໄດ້ຕາມຄາດໝາຍ ໂດຍສະເພາະທາງດ້ານການຂະຫຍາຍໂອກາດ. ສ່ວນຄຸນນະພາບການສຶກສາເດັກກ່ອນໄວຮຽນຍັງເປັນບັນຫາທີ່ຈະຕ້ອງໄດ້ແກ້ໄຂຕໍ່ໄປ. ເຖິງຢ່າງໃດກໍ່ຕາມ, ຄວາມເທົ່າທຽມກັນໃນການເຂົ້າເຖິງການສຶກສາກ່ອນໄວຮຽນໂດຍສະເພາະໃນເຂດຊົນເຜົ່າ, ເດັກໃນເຂດຫ່າງໄກສອກຫຼີກ ແລະ ໃນບາງແຂວງ ຍັງເປັນບັນຫາທີ່ຈະຕ້ອງໄດ້ແກ້ໄຂເຊັ່ນດຽວກັນ.

<u>**ເປົ້າໝາຍ 2: ການສຶກສາຂັ້ນພື້ນຖານຊັ້ນປະຖົມໂດຍທົ່ວໄປ (Universal Primary Education).**</u> ເບິ່ງເປົ້າໝາຍສະຫັດສະວັດດ້ານການພັດທະນາ 2.

<u>**ເປົ້າໝາຍ 3: ທັກສະຊີວິດ ແລະ ການຮຽນຮູ້ຕະຫຼອດຊີວິດ:**</u> ຈຳນວນຜູ້ເຂົ້າຮຽນລະດັບທຽບເທົ່າຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ ໃນການສຶກສານອກໂຮງຮຽນ ແມ່ນໄດ້ເພີ່ມຂຶ້ນໃນແຕ່ລະປີ. ໃນສົກຮຽນ 2014-2015 ສາມາດປະກາດຈົບຊັ້ນປະຖົມບຳລຸງໄດ້ໝົດທຸກແຂວງໃນທົ່ວປະເທດ. ປະກາດຈົບຊັ້ນມັດທະຍົມຕອນຕົ້ນທົ່ວເມືອງໄດ້ 42 ເມືອງ ແລະ ປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວແຂວງ 1 ແຂວງຄື: ແຂວງໄຊຍະບູລີ.

**ເປົ້າໝາຍ 4: ການຮຽນຮູ້ໜັງສື-ອັດຕາຜູ້ໃຫຍ່ຮູ້ໜັງສື:** ໂດຍທົ່ວໄປແລ້ວເຫັນວ່າຂໍ້ມູນກ່ຽວກັບອັດຕາການຮຽນຮູ້ໜັງສືຂອງຜູ້ໃຫຍ່ຍັງມີຈຳກັດ. ແຫຼ່ງຂໍ້ມູນທີ່ມີຢູ່ໃນປະຈຸບັນຊີ້ໃຫ້ເຫັນວ່າການຮຽນຮູ້ໜັງສື ຂອງຜູ້ໃຫຍ່ຍັງມີຄວາມຄືບໜ້າຊ້າ. ຂໍ້ມູນການສຳຫຼວດປະຊາກອນປີ 2005 ແລະ ຂໍ້ມູນການສຳຫຼວດແຮງງານປີ 2010 ຊີ້ໃຫ້ເຫັນວ່າໃນຊ່ວງໄລຍະຜ່ານມາການຮຽນຮູ້ໜັງສືຂອງຜູ້ໃຫຍ່ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ດີຂຶ້ນເທົ່າທີ່ຄວນ ຊຶ່ງໃນນັ້ນ ເຫັນວ່າອັດຕາການຮຽນຮູ້ໜັງສືຜູ້ໃຫຍ່ຈາກຂໍ້ມູນການສຳຫຼວດປະຊາກອນປີ 2005 ແມ່ນກວມເອົາ 73% ແລະ ອັດຕາການຮຽນຮູ້ໜັງສືຂອງຜູ້ໃຫຍ່ ຈາກການສຳຫຼວດແຮງງານໃນປີ 2010 ແມ່ນກວມເອົາ 74%. ເປັນການຍາກທີ່ຈະປະເມີນອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໃນລະດັບຊາດໄດ້ຢ່າງຊັດເຈນ ນອກຈາກວ່າຈະດຳເນີນການສຳຫຼວດດ້ວຍວິທີການສຸ່ມຕົວຢ່າງເທົ່ານັ້ນ. ທັງສອງການການສຳຫຼວດຄື ການສຳຫຼວດກຸ່ມຕົວຊີ້ບອກຫຼາຍຢ່າງ (Multiple Indicator Cluster Survey (MICS)) ໃນປີ 2006 ແລະ ການສຳຫຼວດຕົວຊີ້ບອກທາງດ້ານສັງຄົມຂອງລາວ (Lao Social IndicatorSurvey (LSIS)) ໃນປີ2012 ໄດ້ກວດສອບສະຖານະພາບການຮຽນຮູ້ໜັງສືຂອງແມ່ຍິງໄວໜຸ່ມໃນເກນອາຍຸແຕ່ 15 ຫາ 24 ປີ ໂດຍ ນຳໃຊ້ດັດຊະນີຄວາມຮັ່ງມີ (wealth Index) ທີ່ກຳນົດຂຶ້ນຈາກ MICS ແລະ LSIS ມາເປັນຕົວວັດແທກຊີ້ໃຫ້ເຫັນວ່າອັດຕາການຮຽນຮູ້ໜັງສືຂອງໄວໜຸ່ມເພດຍິງຍັງຄົງຕົວຄືເກົ່າໃນໄລຍະຕະຫຼອດ 5 ປີ ເຖິງວ່າຈະມີອັດຕາເພີ່ມຂຶ້ນພຽງເລັກໜ້ອຍໂດຍສະເພາະຢູ່ໃນຄອບຄົວທີ່ມີລາຍຮັບຕໍ່າ ແລະ ປານກາງ.

**ເປົ້າໝາຍ 5: ຊ່ອງວ່າງຄວາມແຕກໂຕນດ້ານຄວາມສະເໝີພາບຍິງ-ຊາຍ ແລະ ຄວາມເທົ່າທຽມໃນການເຂົ້າເຖິງສຶກສາ:** ກະລຸນາເບິ່ງເປົ້າໝາຍສະຫັດສະວັດ 3 ຂ້າງເທິງ.

**ເປົ້າໝາຍ 6: ການປັບປຸງຄຸນນະພາບການສຶກສາ:** ກະຊວງສຶກສາທິການ ແລະ ກິລາ ເຫັນໄດ້ເຖິງຄວາມສຳຄັນຂອງການຄຸ້ມຄອງບໍລິຫານ ການສະໜອງການສຶກສາທີ່ມີປະສິດທິຜົນ. ສະນັ້ນ, ເພື່ອປັບປຸງກົງຈັກການຈັດຕັ້ງ ແລະ ຂີດຄວາມສາມາດຂອງພະນັກງານດ້ານການຄຸ້ມຄອງບໍລິຫານຕາມສາຍຕັ້ງຂອງຕົນໃຫ້ມີຄວາມເຂັ້ມແຂງ ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງທຸກແຫ່ງ ແລະ ທັງຍັງໄດ້ຈັດຕັ້ງປະຕິບັດໂຄງການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຕາມຂັ້ນຕ່າງໆຫຼາຍໂຄງການ. ນອກຈາກນັ້ນ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ເພີ່ມປີຮຽນໃນຊັ້ນມັດທະຍົມຕົ້ນຕາມລະບົບ 5+4+3 ແລະ ຍັງໄດ້ອະນຸມັດ ແລະ ຮັບຮອງເອົາຂອບມາດຖານຄຸນນະພາບການສຶກສາແຫ່ງຊາດສຳລັບຊັ້ນປະຖົມສຶກສາ. ສ່ວນຂອບມາດຖານຄຸນນະພາບການສຶກສາຊັ້ນມັດທະຍົມນັ້ນ ແມ່ນກຳລັງຢູ່ໃນໄລຍະການພັດທະນາ. ອີງຕາມຜົນການປະເມີນການຮຽນຮູ້ຂອງນັກຮຽນຊີ້ໃຫ້ເຫັນວ່າ ຈຳນວນນັກຮຽນຫຼາຍກວ່າສາມສ່ວນສີ່ຂອງນັກຮຽນ ປ.5 ມີຄວາມສາມາດດ້ານການອ່ານ ແລະ ການຂຽນພາສາລາວ ໃນລະດັບດີ (78.5% ໃນປີ 2006 ແລະ 77.5% ໃນປີ 2009). ສ່ວນຜົນການຮຽນຮູ້ທາງດ້ານຄະນິດສາດຍັງຢູ່ໃນລະດັບຕໍ່າຫຼາຍໃນປີ 2009 (ໃນປີ 2006 ແມ່ນ 49.1%).

- **ມັດທະຍົມສຶກສາ**

ໃນໄລຍະຜ່ານມາເຫັນວ່າອັດຕາເຂົ້າຮຽນລວມໃນຊັ້ນມັດທະຍົມຕົ້ນແມ່ນມີຄວາມຄືບໜ້າໄປເປັນຢ່າງດີ ຄືໃນປີ 2011 ບັນລຸພຽງແຕ່ 62.9% ແລະ ຮອດປີ 2015 ບັນລຸໄດ້ 78.1% (ຄາດໝາຍປີ 2015 ແມ່ນ 75%). ອີກດ້ານໜຶ່ງເຫັນວ່ານັກຮຽນຈົບມັດທະຍົມຕອນຕົ້ນມີຈຳນວນເພີ່ມຫຼາຍຂຶ້ນ ຄືເພີ່ມຈາກ 62,765 ຄົນ ໃນປີ 2011 ເປັນ77,471 ຄົນ ໃນປີ 2015. ພ້ອມດຽວກັນນັ້ນ ກໍ່ເຫັນວ່າດັດຊະນີຄວາມສະເໝີພາບຍິງ-ຊາຍກໍ່ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆມາ ຄືສາມາດບັນລຸໄດ້ເຖິງ 0.9 ໃນປີ 2014. ໃນຂະນະດຽວກັນນັ້ນ, ນັກຮຽນຈົບຊັ້ນມັດທະຍົມປາຍກໍ່ມີຈຳນວນເພີ່ມຂຶ້ນ ໂດຍເພີ່ມຈາກ 40,194 ຄົນ ໃນປີ 2011 ເປັນ 47,967 ຄົນ ໃນປີ 2015, ແຕ່ວ່າດັດຊະນີຄວາມສະເໝີພາບຍິງ-ຊາຍ ໃນຊັ້ນມັດທະຍົມປາຍແມ່ນເພີ່ມຂຶ້ນພຽງເລັກໜ້ອຍເທົ່ານັ້ນຄື ເພີ່ມຈາກ 0.83 ເປັນ0.84.

- **ອາຊີວະສຶກສາ ແລະ ອິບຮົມວິຊາຊີບ**

ໃນໄລຍະຜ່ານມາເຫັນວ່າ ຈຳນວນນັກຮຽນເຂົ້າຮຽນໃນສາຍເຕັກນິກວິຊາຊີບ ຍັງສືບຕໍ່ເພີ່ມຂຶ້ນເລື້ອຍໆມາຄື: ເພີ່ມຈາກ 20,886 ຄົນ (ເພດຍິງ: 7,717 ຄົນ) ໃນສົກຮຽນ 2012-2013 ເປັນ 23,248 ຄົນ (ຍິງ: 8,848 ຄົນ) ໃນສົກຮຽນ 2013-2014. ຈຳນວນນັກຮຽນເຂົ້າຮຽນໃນລະບົບຫຼັກສູດ 9+3[6] ກໍ່ເພີ່ມຂຶ້ນຈາກ 2,029 ຄົນ (ຍິງ: 600ຄົນ) ໃນສົກຮຽນ 2012-2013 ເປັນ 3,114 ຄົນ (ຍິງ: 886 ຄົນ) ໃນສົກຮຽນ 2013-2014, ແຕ່ຕົວເລກນີ້ ກວມເອົາພຽງແຕ່ 13% ຂອງຈຳນວນຜູ່ເຂົ້າຮຽນໃນສາຍເຕັກນິກວິຊາຊີບທັງໝົດ ຊຶ່ງຊີ້ໃຫ້ເຫັນວ່ານັກຮຽນ ສ່ວນໃຫຍ່ ແມ່ນຮຽນໃນລະດັບປະຣິນຍາ ຫຼື ສູງກວ່າ. ຂໍ້ມູນເບື້ອງຕົ້ນຊີ້ໃຫ້ເຫັນວ່າ ການເຂົ້າຮຽນດ້ານວິຊາຊີບໃນສົກຮຽນ 2014-2015 ເພີ່ມຂຶ້ນຫຼາຍກວ່າສົກຮຽນ 2013-2014 ຍ້ອນປັດໄຈຫຼາຍປະການຄື: (i) ຈຳນວນນັກຮຽນທີ່ຮຽນຕໍ່ໃນມະຫາວິທະຍາໄລຫຼຸດລົງ; (ii) ການຢຸດເຊົາໂຄງການສິດສອນລະດັບປະລິນຍາຕຣີໃນວິທະຍາໄລເອກະຊົນ; (iii) ການປັບປຸງພື້ນຖານໂຄງລ່າງ, ອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ຫໍພັກນັກຮຽນໃນສະຖາບັນການສຶກສາເຕັກນິກວິຊາຊີບ; ແລະ (iv) ການສະໜອງທຶນການສຶກສາເຕັກນິກວິຊາຊີບ. ການປັບປຸງອຸປະກອນຮັບໃຊ້ການສິດສອນ, ລວມທັງຫໍພັກນັກຮຽນ ແລະ ທຶນການສຶກສາຕ່າງໆ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການຕ່າງໆ ທີ່ໄດ້ຮັບທຶນຈາກຄູ່ຮ່ວມພັດທະນາ.

- **ການສຶກສາຊັ້ນສູງ**

ລະບົບຄຸ້ມຄອງບໍລິຫານ ແລະ ການເງິນຂອງການສຶກສາຊັ້ນສູງແມ່ນໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງຂຶ້ນໂດຍການສະໜັບສະໜູນຈາກຄູ່ຮ່ວມພັດທະນາ. ໄປຄຽງຄູ່ກັນນັ້ນ, ການຂະຫຍາຍໂອກາດ, ຄວາມສະເໝີພາບ ແລະ ຄວາມເທົ່າທຽມໃນການເຂົ້າຮຽນລະດັບການສຶກສາຊັ້ນສູງ ພ້ອມດ້ວຍຄວາມສອດຄ່ອງ ແລະ ຄຸນນະພາບການສຶກສາຊັ້ນສູງກໍ່ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆມາ. ສະເພາະມະຫາວິທະຍາໄລຈຳປາສັກ ແມ່ນໄດ້ຮັບການພັດທະນາຂຶ້ນຫຼາຍ ເປັນຕົ້ນດ້ານການຈັດສັນລະບົບໃຫ້ທຶນການສຶກສາ, ລະບົບການຈັດສັນອາຈານຮັບເຊີນ, ການພັດທະນາລະບົບເຄືອຂ່າຍໄອຊີທີ, ການຍົກລະດັບຊັບພະຍາກອນມະນຸດ ແລະ ການປັບປຸງເງື່ອນໄຂມາດຖານການຄັດເລືອກນັກສຶກສາເພື່ອຮັບທຶນການສຶກສາເຂົ້າຮຽນໃນມະຫາວິທະຍາໄລ.

## 2.3 ບັນຫາສິ່ງທ້າທາຍ ແລະ ບາດກ້າວໃນໄລຍະຕໍ່ໜ້າ

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ມີເປົ້າໝາຍແນ່ໃສ່ເພື່ອສານຕໍ່ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ໃນໄລຍະ 5 ປີຜ່ານມາ (2011-2015) ເພື່ອແກ້ໄຂບັນຫາສິ່ງທ້າທາຍຕ່າງໆທີ່ຍັງມີຄື:

- ລັດຖະບານເຮົາສືບຕໍ່ປັບປຸງການວາງແຜນນະໂຍບາຍທີ່ເປັນຍຸດທະສາດ, ການສ້າງແຜນງົບປະມານ ແລະ ປັບປຸງຂີດຄວາມສາມາດດ້ານການຕິດຕາມກວດກາ ແລະ ປະເມີນຜົນ. ນະໂຍບາຍແບ່ງຂັ້ນຄຸ້ມຄອງທີ່ປະກາດໃຊ້ໃນປີ 2002 ແລະ ການຈັດຕັ້ງປະຕິບັດທິດສາມສ້າງ ໃນປີ 2012 ຊຶ່ງໄດ້ຊີ້ໃຫ້ເຫັນລາຍລະອຽດດ້ານພາລະບົດບາດ ແລະ ຄວາມຮັບຜິດຊອບຂອງກະຊວງສຶກສາທິການ ແລະ ກິລາ ແລະ ບັນດາຂະແໜງການຍ່ອຍອ້ອມຂ້າງກະຊວງ ແມ່ນກຳລັງຈະເລີ່ມຈັດຕັ້ງປະຕິບັດໃຫ້ປະກົດເປັນຈິງໃນຂັ້ນທ້ອງຖິ່ນ. ສະນັ້ນ, ເພື່ອປັບປຸງການຈັດຕັ້ງປະຕິບັດນະໂຍບາຍການແບ່ງຂັ້ນຄຸ້ມຄອງໃຫ້ປະສົບຜົນສຳເລັດໄດ້ ຈະຕ້ອງໄດ້ສືບຕໍ່ປັບປຸງຄວາມສອດຄ່ອງໃນຂັ້ນທ້ອງຖິ່ນຕໍ່ກັບທິດທາງນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ ແລະ ພ້ອມກັນນັ້ນ ກໍ່ຈຳເປັນຕ້ອງສືບຕໍ່ຍົກສູງ ແລະ ສ້າງຄວາມເຂັ້ມແຂງດ້ານທັກສະໃຫ້ແກ່ພະນັກງານຕໍ່ໄປ.
- ອັດຕາການເຂົ້າຮຽນຂອງເດັກອາຍຸ 3-5 ປີ ໄດ້ເພີ່ມຂຶ້ນຈາກ 23% ເຖິງ 43% ໃນໄລຍະຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ແຕ່ປີ 2011-2015. ເຖິງຢ່າງໃດກໍ່ດີ, ຈາກການປຶກສາຫາລືກັບແຂວງ ແລະ

---

[6] 9+3 ໝາຍເຖິງການຝຶກອົບຮົມດ້ານທັກສະຕາມຫຼັກສູດສາມປີສຳລັບນັກຮຽນຜູ້ທີ່ໄດ້ຜ່ານການສຶກສາຂັ້ນພື້ນຖານມາແລ້ວ ຕາມປົກກະຕິ ຜູ່ທີ່ຜ່ານປະຖົມ 5 ປີ ແລະ ມັດທະຍົມຕົ້ນ 4 ປີ.

ເມືອງ ຊີ້ໃຫ້ເຫັນວ່າການສຶກສາກ່ອນໄວຮຽນໃນລະດັບແຂວງ ແລະ ເມືອງຍັງຈຳເປັນຕ້ອງໄດ້ສືບຕໍ່ຂະຫຍາຍເພື່ອຕອບສະໜອງກັບຄວາມຕ້ອງການຂອງສັງຄົມ. ການຈັດຕັ້ງປະຕິບັດແຜນງານການກຽມຄວາມພ້ອມໃຫ້ແກ່ເດັກເພື່ອເຂົ້າໂຮງຮຽນຊັ້ນປະຖົມ ໂດຍອາໄສຊຸມຊົນເປັນຫຼັກນັ້ນກໍ່ຍັງປະສົບກັບບັນຫາສິ່ງທ້າທາຍຕ່າງໆຍ້ອນວ່າຍັງມີຫ້ອງກຽມປະຖົມຫຼາຍຫ້ອງຍັງບັນຈຸເອົາເດັກນ້ອຍໃນເກນອາຍຸ 3-5 ປີເຂົ້າລວມກັນຢູ່. ສະນັ້ນ, ການສຶກສາເດັກກ່ອນໄວຮຽນມີຄວາມຈຳເປັນຕ້ອງເລັ່ງໃສ່ການກຽມຄຸນນະພາບ ໃຫ້ແກ່ເດັກຜູ້ທີ່ຈະເຂົ້າຮຽນສະເພາະໃນຊັ້ນປະຖົມເປັນຫຼັກ.

- ບາດກ້າວໃນຕໍ່ໜ້າ, ບັນຫາທ້າທາຍສຳຄັນຂອງຂະແໜງການສຶກສາ ກໍ່ຄືການຫຼຸດຜ່ອນອັດຕາປະລະການຮຽນ ແລະ ອັດຕາຄ້າງຫ້ອງ ຊັ້ນ ປ.1 ທີ່ຍັງມີສູງຢູ່ຕະຫຼອດໄລຍະ 5 ປີທີ່ຜ່ານມາຈາກບາງສາຍເຫດຕົ້ນຕໍດັ່ງນີ້: ບ່ອນທຳການຜະລິດກະສິກຳ ແລະ ໂຮງຮຽນແມ່ນຢູ່ຫ່າງໄກກັນ, ຂາດໂອກາດໃນການເຂົ້າເຖິງການສຶກສາກ່ອນໄວຮຽນ, ໂຮງຮຽນມູນລະປະຖົມຍັງມີຫຼາຍ ແລະ ຍັງມີການສິດສອນຫ້ອງຄວບ. ອີງຕາມຂໍ້ຄິດເຫັນຂອງຂັ້ນເມືອງ, ເພື່ອຫຼຸດຜ່ອນບັນຫາການປະລະ ແລະ ການຄ້າງຫ້ອງລົງ ມັນມີຄວາມຈຳເປັນຕ້ອງປະຕິບັດໂຄງການອາຫານໃນໂຮງຮຽນ, ການສະໜັບສະໜູນການຝຶກອົບຮົມຄູ ແລະ ປະສິດທິພາບຂອງຫ້ອງຮຽນ, ການສ້າງຂີດຄວາມສາມາດໃຫ້ແກ່ຜູ້ອຳນວຍການດ້ານການຄຸ້ມຄອງບໍລິຫານໂຮງຮຽນ, ການຝຶກອົບຮົມຄະນະພັດທະນາການສຶກສາຂັ້ນບ້ານ ແລະ ການນຳໃຊ້ຄູສຶກສານິເທດໃຫ້ມີປະສິດທິຜົນ.
- ຜົນການປະເມີນການຮຽນຮູ້ນັກຮຽນ ປ.5 ກ່ຽວກັບວິຊາພາສາລາວ, ຄະນິດສາດ ແລະ ໂລກອ້ອມຕົວ (ASLO 2009) ຊີ້ໃຫ້ເຫັນວ່າອັດຕານັກຮຽນທີ່ສາມາດບັນລຸລະດັບພາສາລາວ ທີ່ຈະສາມາດສືບຕໍ່ການຮຽນໃນຊັ້ນມັດທະຍົມຕົ້ນໄດ້ມີພຽງແຕ່ 20% ເທົ່ານັ້ນ ຊຶ່ງມີຄວາມແຕກໂຕນກັນຫຼາຍກັບລະດັບພູມີພາກ. ສຳລັບຜົນການຮຽນຮູ້ດ້ານຄະນິດສາດຂອງນັກຮຽນ ປ.5 ກໍ່ຍັງບັນລຸໄດ້ໃນລະດັບຕ່ຳຫຼາຍ, ຊຶ່ງບັນຫານີ້ສ່ວນໜຶ່ງກໍ່ແມ່ນມາຈາກບັນຫາທັກສະຄວາມຮູ້ພາສາລາວຕ່ຳ, ນັກຮຽນຂາດຄວາມຮູ້ກ່ຽວກັບຄຳສັບພື້ນຖານທີ່ຈຳເປັນສຳລັບວິຊາຄະນິດສາດ ແລະ ວິຊາໂລກອ້ອມຕົວກໍ່ເຊັ່ນດຽວກັນ. ສ່ວນຄູສອນກໍ່ມີຄວາມຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອເພື່ອໃຫ້ສາມາດຊ່ວຍເຫຼືອນັກຮຽນຜູ້ທີ່ບໍ່ເວົ້າພາສາລາວ ເພື່ອໃຫ້ເຂົາສາມາດຮຽນຮູ້ພາສາລາວໄດ້ດີໂດຍສະເພາະກໍ່ແມ່ນໃນການສອນຫ້ອງຄວບ.
- ນະໂຍບາຍເລື່ອນຂັ້ນແບບຕໍ່ເນື່ອງໄດ້ຮັບການພັດທະນາຂຶ້ນເພື່ອແກ້ໄຂບັນຫານັກຮຽນອ່ອນ ໂດຍສະເພາະ ກໍ່ແມ່ນເພື່ອຫຼຸດຜ່ອນການຄ້າງຫ້ອງ. ເພື່ອຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວໃຫ້ບັນລຸຜົນໄດ້ ຈຶ່ງມີຄວາມຈຳເປັນທີ່ໂຮງຮຽນຈະຕ້ອງຈັດຕັ້ງການສອນເພີ່ມໃນໄລຍະພັກຮຽນ. ອັດຕາຄ້າງຫ້ອງນັກຮຽນ ປ. 1 ຍັງມີສູງ ຊຶ່ງໃນນັ້ນມີ 40 ເມືອງທີ່ຍັງມີອັດຕາຄ້າງຫ້ອງ ປ. 1 ສູງກວ່າ 20% ໃນສົກຮຽນ 2014-2015.
- ຜົນຂອງການວິໄຈຂໍ້ມູນໂຮງຮຽນໃນສົກຮຽນ 2013-2014 ໂດຍສູນສະຖິຕິ (EMIS) ຊີ້ໃຫ້ເຫັນວ່າການສັບຊ້ອນ ແລະ ບັນຈຸຄູໃຫ້ມີປະສິດທິຜົນເປັນສິ່ງທີ່ຈຳເປັນຕ້ອງໄດ້ປັບປຸງໃນບັນດາແຂວງຕ່າງໆ ໂດຍສະເພາະການສັບຊ້ອນ ແລະ ບັນຈຸຄູໃນເຂດຊົນນະບົດ ຫ່າງໄກສອກຫຼີກ ໂດຍອີງຕາມດຳລັດຂອງນາຍົກລັດຖະມົນຕີເລກທີ 177/ລບ ວ່າດ້ວຍອັດຕາສ່ວນນັກຮຽນຕໍ່ຄູ.
- ການປັບປຸງຄວາມແຕກໂຕນດ້ານຄວາມສະເໝີພາບຍິງ-ຊາຍ (ເປົ້າໝາຍສະຫະສະວັດ 3) ຍັງປະສົບຂໍ້ຫຍຸ້ງຍາກຍ້ອນບັນຫາຄວາມຈຳກັດດ້ານຈິດສຳນຶກ ແລະ ການຍອມຮັບຄື (i) ບັນຫາຄວາມສະເໝີພາບ ຍິງ-ຊາຍ ແລະ ການສະໜັບສະໜູນໃນການເພີ່ມໂອກາດ ແລະ ປະຕິບັດສິດທິແມ່ຍິງຍັງເປັນປະເດັນສຳຄັນທີ່ຈະຕ້ອງໄດ້ແກ້ ໄຂ; ແລະ (ii) ສິດທິເດັກ, ໄວໜຸ່ມເຍົາວະຊົນ ແລະ ຊາວໜຸ່ມໃນການເຂົ້າເຖິງການສຶກສາ. ສິ່ງຈຳເປັນຈະຕ້ອງເອົາໃຈໃສ່ຢ່າງເປັນລະບົບຕໍ່ຄວາມຕ້ອງການຂອງເດັກນອກໂຮງຮຽນ, ເຍົາວະຊົນ, ແລະ ຊາວໜຸ່ມ ໃນນັ້ນກໍ່ແມ່ນລວມທັງຜູ້ພິການ, ເດັກໃຊ້ແຮງງານ ແລະ ອື່ນໆ ທີ່ບໍ່ໄດ້ເຂົ້າໂຮງຮຽນໃນປະຈຸບັນ ໃຫ້ສາມາດເຂົ້າເຖິງການສຶກສາໄດ້.

- ການປັບປຸງການເຂົ້າຮຽນໃນລະດັບມັດທະຍົມສຶກສາ ແມ່ນມີຄວາມຈຳເປັນຕ້ອງເພີ່ມອັດຕາຈົບຊັ້ນປະຖົມສຶກສາ ຍ້ອນວ່າອັດຕາການເລື່ອນຊັ້ນມີສູງຢູ່ແລ້ວ.
- ການປັບປຸງຄຸນນະພາບຂອງອາຊີວະສຶກສາ ແລະ ອົບຮົມວິຊາຊີບເປັນສິ່ງຈຳເປັນເພື່ອເພີ່ມຈຳນວນຜູ້ເຂົ້າຮຽນໃນສາຍວິຊາຊີບໃຫ້ຫຼາຍຂຶ້ນ.
- ເພີ່ມກິດຈະກຳການສຳຫຼວດໃນມະຫາວິທະຍາໄລ ແລະ ການເຂົ້າຮຽນໃນມະຫາວິທະຍາໄລໃຫ້ມີຄວາມສອດຄ່ອງກັບເປົ້າໝາຍການພັດທະນາແຫ່ງຊາດຫຼາຍຂຶ້ນ.
- ກະຊວງສຶກສາທິການ ແລະ ກິລາ ເປັນແກນນຳໃນການພັດທະນາຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໂດຍການອອກແບບເພື່ອຮັບປະກັນໃຫ້ທຸກຂະແໜງການ ພັດທະນາພະນັກງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ຕາມມະຕິກອງປະຊຸມ ພັກປະຊາຊົນປະຕິວັດລາວຄັ້ງທີ IX.
- ໂອກາດການເຂົ້າເຖິງກິລາ-ກາຍຍະກຳ ໃນແຕ່ລະພາກ ຫຼື ໃນແຕ່ລະກຸ່ມຄົນໃນທົ່ວປະເທດຍັງບໍ່ເທົ່າທຽມກັນ. ກິລາ-ກາຍຍະກຳ ຂອງລາວມີຄວາມຈຳເປັນຕ້ອງໄດ້ຮັບການພັດທະນາເພື່ອໃຫ້ສາມາດເຂົ້າຮ່ວມການແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນໄດ້.

## III. ເປົ້າໝາຍ, ຈຸດປະສົງ ແລະ ຜົນໄດ້ຮັບສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020

### 3.1 ເປົ້າໝາຍລວມ

ໃນໄລຍະແຕ່ປີ 2016-2020, ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດເປົ້າໝາຍລວມຂອງແຜນພັດທະນາການສຶກສາ ແລະ ກິລາດັ່ງນີ້:

***"ພາຍໃນປີ 2020, ຂະແໜງການສຶກສາ ແລະ ກິລາ ຢູ່ ສປປ ລາວ ມີໂຄງສ້າງ ແລະ ມີຊັບພະຍາກອນທີ່ເໝາະສົມ ເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນເຂົ້າເຖິງການສຶກສາ ແລະ ກິລາ-ກາຍຍະກຳ ທີ່ມີຄຸນນະພາບ ເພື່ອໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ".***

ໃນໄລຍະ 5 ປີຜ່ານມາ ເສດຖະກິດຂອງ ສປປ ລາວ ມີການເຕີບໂຕຢ່າງໄວວາ ໂດຍການສະໜັບສະໜູນຈາກຄູ່ຮ່ວມພັດທະນາ ໂດຍສະເພາະພາຍໃຕ້ແຜນປະຕິບັດການສະໜັບສະໜູນການລຶບລ້າງຄວາມທຸກຍາກ (PRSO1-9) ຊຶ່ງຈຸດປະສົງຂອງແຜນປະຕິບັດງານດັ່ງກ່າວແມ່ນເພື່ອປະຕິຮູບບັນຍາກາດທາງດ້ານການຄ້າ ແລະ ການລົງທຶນ ພ້ອມທັງການປັບປຸງການໃຫ້ບໍລິການແກ່ສັງຄົມ ເພື່ອຮັບປະກັນໃຫ້ແກ່ການນຳໃຊ້ຊັບພະຍາກອນທຳມະຊາດມີຜົນປະໂຫຍດສູງສຸດຕໍ່ສຸຂະພາບ ແລະ ການສຶກສາຂອງພົນລະເມືອງລາວ.

ໂດຍການປັບປຸງການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແບບຮອບດ້ານ ຈຶ່ງຈະເຮັດໃຫ້ພົນລະເມືອງລາວສາມາດປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ, ປັບປຸງສະພາບເສດຖະກິດ-ສັງຄົມ ຊຶ່ງຈະເຮັດໃຫ້ເສດຖະກິດແຫ່ງຊາດມີການເຕີບໃຫຍ່ຂະຫຍາຍໂຕ. ເພື່ອຍາກບັນລຸຈຸດປະສົງດັ່ງກ່າວ ຕ້ອງໄດ້ປັບປຸງໂຄງສ້າງລະບົບການສຶກສາໃຫ້ເໝາະສົມ ພ້ອມທັງຈັດສັນແຫຼ່ງຊັບພະຍາກອນໃຫ້ສອດຄ່ອງ ແລະ ພຽງພໍ. ໂຄງສ້າງທີ່ເໝາະສົມ ໝາຍເຖິງໂຄງສ້າງທີ່ເຮັດໃຫ້ປະຊາກອນໃນເກນອາຍຸສາມາດເຂົ້າເຖິງການສຶກສາຊັ້ນປະຖົມສຶກສາຄົບ 5 ຂັ້ນ ພ້ອມທັງຮັບປະກັນໃຫ້ພວກເຂົາສາມາດເຂົ້າເຖິງ ແລະ ຈົບການສຶກສາຊັ້ນມັດທະຍົມຕົ້ນ. ໂຄງສ້າງການສຶກສານີ້ຍັງຈະຮັບປະກັນໃຫ້ເດັກທຸກຄົນສາມາດເຂົ້າຮຽນໃນໂຄງການສຶກສາເດັກກ່ອນໄວຮຽນໂດຍຊຸມຊົນ ເພື່ອສ້າງຄວາມກຽມພ້ອມດ້ານການສຶກສາໃຫ້ແກ່ເຂົາເຈົ້າ ແລະ ເພື່ອເຮັດໃຫ້ເດັກນ້ອຍ ແລະ ຊາວໜຸ່ມມີທັກສະ ແລະ ຄວາມຮູ້ທີ່ຈຳເປັນເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພ້ອມທັງໄດ້ຮັບຜົນປະໂຫຍດຈາກການພັດທະນາດັ່ງກ່າວ.

ພ້ອມກັນນັ້ນ, ກໍ່ຈະຮັບປະກັນດ້ານຄຸນນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດການສຶກສາ ເພື່ອເຮັດໃຫ້ຜູ້ຮຽນສາມາດໄດ້ຮັບຄວາມຮູ້ ແລະ ທັກສະທີ່ຈຳເປັນ ເພື່ອເຊື່ອມໂຍງເຂົ້າກັບເສດຖະກິດປະຊາຄົມອາຊຽນ. ໄປຄຽງຄູ່ກັນນັ້ນ, ການຕອບສະໜອງອຸປກອນການຮຽນການສອນທີ່ມີຄຸນນະພາບຖືເປັນປັດໄຈຈຳເປັນ.

ຮອດປີ 2020 ໃຫ້ເດັກສ່ວນໃຫຍ່ທີ່ຈະເຂົ້າຮຽນໃນຊັ້ນປະຖົມຕ້ອງໄດ້ຜ່ານການກຽມຄວາມພ້ອມໃນການສຶກສາກ່ອນໄວຮຽນ. ຫຼັກສູດການສຶກສາຕ້ອງຮັບປະກັນທາງດ້ານຄຸນນະພາບ ແລະ ຄວາມສອດຄ່ອງ ເພື່ອເຮັດໃຫ້ຜູ້ຮຽນມີຄວາມຮູ້ ແລະ ທັກສະທີ່ຈຳເປັນ ໃນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ ໃນໄລຍະກຽມພ້ອມເຂົ້າເປັນປະຊາຄົມອາຊຽນ ໂດຍການສະໜອງອຸປະກອນການຮຽນ-ການສອນ ທີ່ເໝາະສົມເພື່ອເຮັດໃຫ້ການສິດສອນມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ. ໂຄງສ້າງຂອງລະບົບການສຶກສາຕ້ອງໃຫ້ມີຄວາມສົມດູນກັນ ເພື່ອເຮັດໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານໃນປັດຈຸບັນ ແລະ ສາມາດພັດທະນາສີມືແຮງງານ ແລະ ຊັບພະຍາກອນມະນຸດຂອງຊາດ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ ແລະ ສັງຄົມໃນແຕ່ລະໄລຍະ.

ການເຂົ້າຮ່ວມການແຂ່ງຂັນກິລາໃນແຕ່ລະລະດັບ ຈະມີບົດບາດສຳຄັນໃນການປະກອບສ່ວນໃຫ້ແກ່ເປົ້າໝາຍການພັດທະນາການສຶກສາ ແລະ ກິລາ ແລະ ເປົ້າໝາຍລວມຂອງການພັດທະນາປະເທດຊາດ. ການປະກອບສ່ວນຂອງຂະແໜງກະສິກຳ, ອຸດສາຫະກຳ ແລະ ບໍລິການຕໍ່ການເຕີບຂອງເສດຖະກິດມີການປ່ຽນແປງໄປໃນແຕ່ລະໄລຍະ. ດັ່ງນັ້ນ, ໂຄງສ້າງຂອງລະບົບການສຶກສາຕ້ອງການການປັບປຸງເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

ໂຄງສ້າງການສຶກສາທີ່ເໝາະສົມ ຮຽກຮ້ອງໃຫ້ມີການສະໜອງຊັບພະຍາກອນທີ່ເໝາະສົມ ລວມທັງຊັບພະຍາກອນດ້ານບຸກຄົນ ແລະ ດ້ານການເງິນ ຊຶ່ງການສະໜອງຊັບພະຍາກອນດັ່ງກ່າວນີ້ ຕ້ອງໃຫ້ມີຄວາມຢືດຢຸ່ນ ແລະ ເໝາະສົມກັບການປ່ຽນແປງໃນໄລຍະ 5 ປີ ຂອງແຜນພັດທະນາການສຶກສາ ແລະ ກິລາ ຮອດປີ 2020. ເພື່ອຢາກປັບປຸງຄຸນນະພາບການສຶກສາ ມັນຮຽກຮ້ອງໃຫ້ທັງລັດຖະບານ ແລະ ຄູ່ຮ່ວມພັດທະນາຕ້ອງໄດ້ເພີ່ມການສະໜອງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນໃຫ້ແກ່ຂະແໜງການສຶກສາ ແລະ ກິລາ. ຄຽງຄູ່ກັບການເພີ່ມການສະໜອງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນແລ້ວ, ຕ້ອງຮັບປະກັນເຮັດໃຫ້ການໃຊ້ຈ່າຍງົບປະມານເງິນເດືອນ ແລະ ຄ່າຈ້າງຕ່າງໆມີປະສິດທິຜົນສູງສຸດ. ງົບປະມານການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ຕ້ອງໃຫ້ສອດຄ່ອງກັບນະໂຍບາຍບູລິມະສິດທີ່ກຳນົດໃນແຜນພັດທະນາການສຶກສາ 2016-2020.

ການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ແມ່ນໄປຄຽງຄູ່ກັນກັບການຫຼຸດຜ່ອນຄວາມທຸກຍາກ. ຂະແໜງການສຶກສາຈະປະກອບສ່ວນເຮັດໃຫ້ດັດຊະນີຊັບສິນມະນຸດດີຂຶ້ນ ໂດຍການປັບປຸງອັດຕາການຮູ້ໜັງສືຂອງປະຊາກອນໃນເກນອາຍຸ ແລະ ເພີ່ມອັດຕາການເຂົ້າຮຽນໃນຊັ້ນມັດທະຍົມ.

## 3.2 ຜົນໄດ້ຮັບລວມ

ນັກຮຽນທຸກຄົນມີຄວາມຮູ້ຄວາມສາມາດຕາມ 5 ຫຼັກມູນຂອງການສຶກສາແຫ່ງຊາດ ແລະ ມີທັກສະ ລວມທັງທັກສະໃນການຮຽນຮູ້ ແລະ ທັກສະໃນການເຮັດວຽກເພື່ອພັດທະນາຕົນເອງ ແລະ ປະເທດຊາດ ເພື່ອເຮັດໃຫ້ປະເທດຫຼຸດພົ້ນອອກສະຖານະພາບປະເທດດ້ອຍພັດທະນາໃນປີ 2020.

## 3.3 ຈຸດປະສົງ ແລະ ຄາດໝາຍ

### 3.3.1 ຈຸດປະສົງທີ 1: ນັກຮຽນທຸກຄົນມີຄວາມຮູ້ ແລະ ຄວາມສາມາດຂັ້ນພື້ນຖານທີ່ຈຳເປັນ ພ້ອມທັງມີສຸຂະພາບແຂງແຮງເພື່ອໃຫ້ສາມາດເຂົ້າເຮັດວຽກຕາມຕະຫຼາດແຮງງານ ຫຼື ສືບຕໍ່ຮຽນໃນການສຶກສາຫຼັງຂັ້ນພື້ນຖານ.

1) ເພີ່ມອັດຕາເຂົ້າຮຽນລວມຂອງເດັກອາຍຸ 5 ປີ ຈາກ 66% ໃນປີ 2015 ໃຫ້ບັນລຸ 80%.
2) ຫຼຸດຜ່ອນອັດຕາຄ້າງຫ້ອງ ປ.1 ຈາກ 13.5% ໃນປີ 2015 ໃຫ້ເຫຼືອໜ້ອຍກວ່າ 5%.
3) ຫຼຸດຜ່ອນອັດຕາປະລະ ປ.1 ຈາກ 8.5% ໃນປີ 2015 ໃຫ້ເຫຼືອໜ້ອຍກວ່າ 5%.
4) ເພີ່ມອັດຕາຫຼອດເຫຼືອຊັ້ນປະຖົມສຶກສາ ຈາກ 78.3% ໃນປີ 2015 ໃຫ້ບັນລຸ 90%.
5) ເພີ່ມອັດຕາຈົບຊັ້ນປະຖົມສຶກສາຕາມກະແສນັກຮຽນ ເພີ່ມຈາກ 76% ໃນປີ 2015 ໃຫ້ບັນລຸ 89%.

6) ຜົນການປະເມີນການຮຽນຂອງນັກຮຽນໃຫ້ໄດ້ດີກວ່າ ຜົນການປະເມີນໃນປີ 2009.
7) ເພີ່ມອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ. 5 ຂຶ້ນ ມ.1 ຈາກ 91.7% ໃນປີ 2015 ໃຫ້ໄດ້ 100%.
8) ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນຈາກ 78.1% ໃນປີ 2015 ໃຫ້ບັນລຸ 85%.

**3.3.2 ຈຸດປະສົງທີ 2: ເພື່ອສະໜອງການສຶກສາຫຼັງຂັ້ນພື້ນຖານ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ ພ້ອມທັງສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບກຳລັງແຮງງານໃນບັນປະເທດອາຊີຕາເວັນອອກສ່ຽງໃຕ້ ຫຼື ASEAN.**

1) ສູ້ຊົນເຮັດໃຫ້ອັດຕາເລື່ອນຊັ້ນຂອງນັກຮຽນຈົບຈາກມັດທະຍົມຕົ້ນຂຶ້ນສາຍວິຊາຊີບໃຫ້ໄດ້ 5% ແລະ ເຂົ້າຮຽນໃນຊັ້ນມັດທະຍົມຕອນປາຍ ໃຫ້ໄດ້ 90%[7].
2) ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ ຈາກ 45.8% ໃນປີ 2015 ໃຫ້ບັນລຸ 60%.
3) ນັກຮຽນທີ່ຮຽນຈົບ ມ 7 ໃຫ້ໄດ້ເຂົ້າຮຽນຕໍ່ໃນສະຖາບັນອາຊີວະສຶກສາໃຫ້ໄດ້ 60%, ເຂົ້າຮຽນຕໍ່ໃນສະຖາບັນການສຶກສາຊັ້ນສູງ[8] ໃຫ້ໄດ້ 20%[9].

**3.3.3 ຈຸດປະສົງທີ 3: ບັນລຸໄດ້ຄາດໝາຍດັດຊະນີຊັບສິນມະນຸດເພື່ອໃຫ້ປະເທດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ໂດຍຫຼຸດຜ່ອນຄວາມແຕກໂຕນລະຫວ່າງຍິງ-ຊາຍ, ຄົນພິການ, ຄົນທຸກຍາກ, ຊົນເຜົ່າ ແລະ ອື່ນໆ**

1) ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາ ຈາກ 60% ໃນປີ 2015 ໃຫ້ບັນລຸ 75%
2) ອັດຕາການຮູ້ໜັງສືໃຫ້ປະຊາຊົນ ກຸ່ມເປົ້າໝາຍອາຍຸ 15-24 ປີ ໃຫ້ບັນລຸ 99%
3) ອັດຕາການຮູ້ໜັງສືໃຫ້ປະຊາຊົນ ກຸ່ມເປົ້າໝາຍອາຍຸ 15 ປີຂຶ້ນໄປໃຫ້ບັນລຸ 95%

**3.3.4 ຈຸດປະສົງທີ 4: ຂະແໜງການມີແຜນການ, ງົບປະມານ ແລະ ມີການຕິດຕາມເພື່ອນຳໃຊ້ແຫຼ່ງທຶນຢ່າງມີປະສິດທິພາບ**

1) ໃນແຕ່ລະປີ 20% ຂອງຜູ້ບໍລິຫານການສຶກສາທຸກຂັ້ນ ໃຫ້ໄດ້ຮັບການຍົກລະດັບຜ່ານຫຼັກສູດການບໍລິຫານ ແລະ ຄຸ້ມຄອງການສຶກສາ.
2) ສ່ວນແບ່ງລາຍຈ່າຍລັດຖະບານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ບັນລຸ 17% ຂຶ້ນໄປ.

**3.3.5 ຈຸດປະສົງທີ 5: ກິລາ-ກາຍຍະກຳລາວ ຄ່ອຍເຊື່ອມໂຍງກັບມາດຕະຖານຂອງພາກພື້ນ ແລະ ສາກົນ**

1) ສົ່ງເສີມມວນຊົນທຸກເພດ, ທຸກໄວໃນສັງຄົມເຂົ້າຮ່ວມການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍຍະກຳປົກກະຕິໃຫ້ໄດ້ 30% ຂອງປະຊາກອນ ໃນປີ 2020.

## 3.4 ບັນດາຜົນໄດ້ຮັບ:

**3.4.1 ຜົນຮັບທີ 1: ຈຳນວນນັກຮຽນ ແຕ່ການສຶກສາກ່ອນໄວຮຽນຈົນຮອດ ມ.4 ເຂົ້າເຖິງການສຶກສາທີ່ມີຄຸນນະພາບທີ່ດີເພີ່ມຂຶ້ນ ໂດຍເອົາໃຈໃສ່ຜູ້ທີ່ດ້ອຍໂອກາດ ພ້ອມຮັບປະກັນຄວາມສະເໝີພາບຍິງ-ຊາຍ**

ເຫດຜົນອ້າງອີງ:

ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດບູລິມະສິດອັນຈຳເປັນເພື່ອແກ້ໄຂບັນຫາກ່ຽວກັບອັດຕາເຂົ້າຮຽນໃນທຸກຊັ້ນຮຽນພາຍໃນປີ 2020. ປັດຈຸບັນນີ້ອັດຕາເຂົ້າຮຽນສຳລັບເດັກ 3-5 ປີ ບັນລຸ 43% ແລະ ເດັກ 5 ປີ ບັນລຸ 66%, ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາບັນລຸຫຼາຍກວ່າ 98%, ແຕ່ອັດຕາລອດເຫຼືອຮອດ ປ.5 ຕ່ຳກວ່າ 80%.

---

[7] ອີກ 5% ຄາດວ່າຈະອອກໄປປະກອບການ ຫຼື ເຂົ້າຮຽນຕໍ່ໃນສະຖານການສຶກສາເອກະຊົນ ແລະ ອື່ນໆ

[8] ການສຶກສາຊັ້ນສູງໃນທີ່ນີ້ໝາຍເຖິງ ມະຫາວິທະຍາໄລ 4 ແຫ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ

[9] ອີກ 20% ຄາດວ່າຈະອອກໄປປະກອບການ ຫຼື ເຂົ້າຮຽນຕໍ່ໃນສະຖານການສຶກສາເອກະຊົນ ແລະ ໄປຮຽນຕໍ່ຕ່າງປະເທດ

ອັດຕາເຂົ້າຮຽນລວມມັດທະຍົມຕົ້ນແມ່ນ 78%. ເພື່ອໃຫ້ບັນລຸຄາດໝາຍດັດຊະນີຊັບສິນມະນຸດເພື່ອນຳເອົາປະເທດຊາດໃຫ້ຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ພວກເຮົາຈຳເປັນຕ້ອງໄດ້ເພີ່ມອັດຕາການຮຽນນີ້ໃຫ້ສູງຂຶ້ນ.

ເຖິງວ່າອັດຕາເລື່ອນຊັ້ນຈາກ ປ.5 ຂຶ້ນມັດທະຍົມຕົ້ນບັນລຸ 91.7% ແລ້ວກໍ່ຕາມ, ແຕ່ເພື່ອຢາກໃຫ້ອັດຕາເຂົ້າຮຽນໃນຊັ້ນມັດທະຍົມຕົ້ນສູງຂຶ້ນ ຈຳເປັນຕ້ອງໄດ້ເພີ່ມອັດຕາການຈົບຊັ້ນປະຖົມໃຫ້ສູງຂຶ້ນ ໂດຍການປັບປຸງອັດຕາລອດເຫຼືອຮອດ ປ. 5. ເປັນທີ່ຈະແຈ້ງວ່າ ຖ້າຢາກເພີ່ມອັດຕາເຂົ້າຮຽນ ແລະ ອັດຕາຈົບຊັ້ນໃຫ້ສູງຂຶ້ນ ຈະຕ້ອງແກ້ໄຂຫຼາຍບັນຫາສຳຄັນຕ່າງໆຫຼາຍຢ່າງ ຊຶ່ງໃນນັ້ນກໍ່ລວມມີ: (i) ບັນຫາຜູ້ບໍລິຫານການສຶກສາ ນັບແຕ່ຂັ້ນສູນກາງໄປເຖິງຂັ້ນໂຮງຮຽນຍັງບໍ່ທັນສາມາດປະຕິບັດນະໂຍບາຍການເລື່ອນຊັ້ນແບບຕໍ່ເນື່ອງໄດ້ຢ່າງຄົບຖ້ວນ (ii) ບັນຫາອັດຕາປະລະຂັ້ນ ປ.1 ຍັງສູງ ແລະ ມີເດັກນ້ອຍຫຼາຍຄົນໂຍກຍ້າຍທີ່ຢູ່ໄປຕາມຄອບຄົວພວກເຂົາ ຫຼື ຍ້ອນບັນຫາໃນດ້ານບ່ອນຢູ່ອາໄສຫ່າງໄກຈາກໂຮງຮຽນ (iii) ບັນຫາໄລຍະເວລາ ຂອງສົກຮຽນສັ້ນຖ້າທຽບກັບບັນດາປະເທດອາຊຽນ (iv) ໄລຍະເວລາສົກຮຽນ ແລະ ຄວາມຕ້ອງການຂອງຮອບວຽນການຜະລິດກະສິກຳບໍ່ສອດຄ່ອງກັນ (v) ຄຸນນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດ ແລະ ອຸປະກອນການຮຽນມີຄວາມຈຳເປັນຕ້ອງໄດ້ປັບປຸງ (vi) ຄູສອນໃນບັນດາໂຮງຮຽນຂະໜາດນ້ອຍຫຼາຍແຫ່ງຍັງຕ້ອງການປັບປຸງວິຊາຊີບຄູ ເພື່ອຮັບປະກັນການສອນໃຫ້ຈົບຫຼັກສູດຢ່າງມີປະສິດທິຜົນ ໃນໂຮງຮຽນທີ່ສອນຫ້ອງຄວບ; (vii) ຍັງມີບັນຫາໃນການເຂົ້າເຖິງການສຶກສາຂອງເດັກນ້ອຍທຸກຍາກໂດຍສະເພາະກໍ່ແມ່ນເດັກຊົນເຜົ່າທີ່ມີຄວາມພິການ ແລະ ເດັກໃນເຂດຫ່າງໄກສອກຫຼີກ, (viii) ການເຂົ້າເຖິງການສຶກສາກ່ອນໄວຮຽນຂອງເດັກ ໂດຍສະເພາະໃນເຂດຊົນນະບົດ ຫ່າງໄກສອກຫຼີກຍັງມີຄວາມຈຳກັດ, (ix) ກົນໄກສະໜັບສະໜູນດ້ານຄຸນນະພາບສຳລັບຄູໂດຍສະເພາະກໍ່ແມ່ນຄູນິເທດຍັງບໍ່ພຽງພໍ, ແລະ (x) ຍັງຂາດການຈັດຕັ້ງປະຕິບັດນະໂຍບາຍການສຶກສາຮຽນຮ່ວມຢ່າງເປັນລະບົບ.

- **ພາກສ່ວນຮັບຜິດຊອບ:**

ເພື່ອໃຫ້ສາມາດບັນລຸໄດ້ຜົນຮັບດັ່ງກ່າວນີ້ ມີຫຼາຍພາກສ່ວນຕ້ອງເຮັດວຽກຮ່ວມກັນ ເຊັ່ນ: ກົມອະນຸບານ-ປະຖົມສຶກສາ, ກົມການສຶກສານອກໂຮງຮຽນ, ກົມມັດທະຍົມສຶກສາ, ກົມສ້າງຄູ, ສູນວິໄຈການສຶກສາ ແລະ ກິລາ, ສູນປະກັນຄຸນນະພາບການສຶກສາ, ສູນການສຶກສາຮຽນຮ່ວມ, ສູນພັດທະນາຄູ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

- **ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 5 ຜົນຮັບໄລຍະກາງເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ການສຶກສາເດັກກ່ອນໄວຮຽນທີ່ມີຄຸນນະພາບໄດ້ຮັບການຂະຫຍາຍຕົວກວ້າງຂວາງ ບົນພື້ນຖານຂອບການພັດທະນາເດັກກ່ອນໄວຮຽນ.
2) ຄ່ອຍໆເພີ່ມໄລຍະເວລາຮຽນອອກເປັນແຕ່ລະໄລຍະຕາມຄວາມເໝາະສົມເພື່ອໃຫ້ສອດຄ່ອງກັບມາດຖານຂອງບັນດາປະເທດອາຊຽນ.
3) ຫຼັກສູດ ແລະ ເຄື່ອງມືສິດສອນນັບແຕ່ປະຖົມປີທີ 1 ຈົນຮອດຊັ້ນມັດທະຍົມສຶກສາ ໄດ້ຮັບການປັບປຸງ.
4) ການຈັດຕັ້ງປະຕິບັດນະໂຍບາຍເລື່ອນຂັ້ນແບບຕໍ່ເນື່ອງໃນຊັ້ນປະຖົມສຶກສາ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຫຼາຍຂຶ້ນ ໂດຍຜ່ານລະບົບກົນໄກສະໜັບສະໜູນເພີ່ມເຕີມຈາກຄູນິເທດ.
5) ເພີ່ມໂອກາດໃນການເຂົ້າເຖິງການບໍລິການ ດ້ານການສຶກສາທີ່ມີຄຸນນະພາບຂອງເດັກດ້ອຍໂອກາດ (ເດັກຊົນເຜົ່າ, ເດັກພິການ, ເດັກນ້ອຍຊົນນະບົດຫ່າງໄກສອກຫຼີກ ແລະ ທຸກຍາກ) ຫຼາຍຂຶ້ນ.

- **ຍຸດທະສາດ:**

1) ຂະຫຍາຍໂອກາດການເຂົ້າຮຽນຫ້ອງກຽມປະຖົມສະເພາະເດັກທີ່ມີອາຍຸ 5 ປີ ໃນເຂດຊົນນະບົດແມ່ນວຽກງານບູລິມະສິດເພື່ອປັບປຸງຄຸນນະພາບການຮຽນ.

2) ທົບທວນການຈັດຕັ້ງປະຕິບັດ ນະໂຍບາຍການເລື່ອນຂັ້ນແບບຕໍ່ເນື່ອງ ສໍາລັບເດັກນັກຮຽນລວມທັງເດັກນັກຮຽນທີ່ບໍ່ເວົ້າພາສາລາວເປັນພາສາແມ່ ເພື່ອກໍານົດກົນໄກເພີ່ມເຕີມ ທີ່ຕ້ອງການເພື່ອປະຕິບັດນະໂຍບາຍເລື່ອນຂັ້ນແບບຕໍ່ເນື່ອງໃຫ້ປະສົບຜົນສໍາເລັດ.

3) ຈັດຕັ້ງປະຕິບັດແຜນງານອາຫານໃນໂຮງຮຽນ, ນໍ້າສະອາດ ແລະ ສຸຂະອະນາໄມ ແລະ ສິ່ງອໍານວຍຄວາມສະດວກທີ່ປອດໄພໃຫ້ແກ່ເດັກນັກຮຽນຜູ້ດ້ອຍໂອກາດ ໂດຍສະເພາະແມ່ຍິງໜຸ່ມ ທີ່ອາໄສຢູ່ໃນເມືອງທີ່ບໍ່ຮັບປະກັນດ້ານສະບຽງອາຫານເພື່ອເພີ່ມການເຂົ້າຮຽນ ແລະ ການລອດເຫຼືອ.

4) ຫຼັກສູດການສຶກສານອກໂຮງຮຽນຍັງສືບຕໍ່ໃຫ້ການສະໜັບສະໜູນເດັກທີ່ມີອາຍຸເກີນບໍ່ໄດ້ເຂົ້າໂຮງຮຽນ.

5) ສ້າງຂີດຄວາມສາມາດໃນການສອນຫ້ອງຄວບ ແລະ ການສອນເດັກຊົນເຜົ່າ, ເດັກທີ່ມີຄວາມຕ້ອງການພິເສດໃຫ້ແກ່ຄູສອນ ແລະ ຄູສຶກສານິເທດ ເພື່ອສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ດໍາເນີນວຽກງານຢ່າງມີປະສິດທິຜົນ.

6) ຍົກລະດັບໂຮງຮຽນມູນລະປະຖົມໃຫ້ເປັນໂຮງຮຽນປະຖົມສົມບູນ.

7) ພັດທະນາເຄື່ອງມືເພື່ອກໍານົດປະເພດເດັກພິການຢູ່ໃນໂຮງຮຽນ ແລະ ນອກໂຮງຮຽນ.

8) ຈັດຕັ້ງການປະເມີນຜົນການຮຽນຮູ້ຂອງນັກຮຽນສອງປີຕໍ່ຄັ້ງ.

9) ເມື່ອການຂະຫຍາຍໄລຍະເວລາຮຽນໄດ້ຜ່ານການຮັບຮອງເປັນທາງການແລ້ວ ກໍ່ຈະໄດ້ດໍາເນີນການທົດລອງຈັດຕັ້ງປະຕິບັດໃນເມືອງຈໍານວນໜຶ່ງ ໂດຍໃຫ້ມີຄວາມຍືດຍຸ່ນທາງດ້ານຕາຕະລາງເວລາການຮຽນ ຂອງໂຮງຮຽນທີ່ສອດຄ່ອງກັບຄວາມຕ້ອງການດ້ານເສດຖະກິດຂອງຊຸມຊົນ ແລະ ຈະໄດ້ປະເມີນຜົນກະທົບຕໍ່ການເຂົ້າໂຮງຮຽນ, ການມາໂຮງຮຽນ, ຜົນການຮຽນຮູ້ຂອງນັກຮຽນ ແລະ ການຈົບຊັ້ນຂອງນັກຮຽນ. ຖ້າຜົນຮັບອອກມາໃນທາງບວກ ກໍ່ຈະອອກຂໍ້ກໍານົດເພື່ອເພີ່ມບົດບາດໃຫ້ແກ່ເມືອງ ໃນການອະນຸຍາດປະຕິບັດຕາຕະລາງການສອນການຮຽນປະຈໍາປີໂດຍຖືເອົາໂຮງຮຽນເປັນຫຼັກ ແລະ ອີງໃສ່ລະບຽບການທີ່ທາງກະຊວງໄດ້ວາງອອກ.

10) ທົບທວນ ແລະ ປັບປຸງຫຼັກສູດແຫ່ງຊາດຂອງທຸກຂັ້ນຮຽນໃນຊັ້ນປະຖົມສຶກສາ. ຄຽງຄູ່ກັນນັ້ນ ກໍ່ຈະໄດ້ປັບປຸງອຸປະກອນການສິດສອນທຸກວິຊາຮຽນ ແລະ ທຸກຂັ້ນຮຽນໃຫ້ມີຄຸນນະພາບ ອີງຕາມວິທີການປັບປຸງຫຼັກສູດແລະບົດຮຽນອັນດີຂອງສາກົນໃນດ້ານການອອກແບບເຄື່ອງມືສິດສອນ. ນອກນັ້ນກໍ່ຈະໄດ້ທົບທວນ ແລະ ປັບປຸງຫຼັກສູດ ແລະ ວິທີການສິດສອນສໍາລັບການສ້າງຄູປະຖົມ.

**ນິຕິກາທີ່ຕ້ອງການ**

1) ໂດຍສົມທົບກັບກະຊວງສາທາລະນະສຸກ ພັດທະນາຂອບການສຶກສາເດັກກ່ອນໄວຮຽນ ທີ່ສອດຄ່ອງກັນກັບສະພາບຂອງທ້ອງຖິ່ນ.

2) ເພື່ອບັນລຸຜົນຮັບ ແລະ ເປົ້າໝາຍເຫຼົ່ານີ້, ສິ່ງຈໍາເປັນກໍ່ຄືຕ້ອງໄດ້ທົບທວນຄືນບົດບາດ ແລະ ໜ້າທີ່ຂອງກົມຮັບຜິດຊອບເພື່ອໃຫ້ສອດຄ່ອງກັບໜ້າວຽກ ແລະ ຖ້າຫາກຈໍາເປັນກໍ່ຈະໄດ້ປັບປຸງກົນໄກປະສານງານລະຫວ່າງກົມຕ່າງໆເຫຼົ່ານີ້ໃຫ້ມີຄວາມຄ່ອງຕົວ ແລະ ເຂັ້ມແຂງຂຶ້ນ.

3) ມີນະໂຍບາຍ, ນິຕິກໍາຕ່າງໆ ແລະ ລະບຽບການກ່ຽວກັບການເຂົ້າຮຽນໃນລະບົບພາກບັງຄັບ, ການຂະຫຍາຍເວລາຂອງສົກສຶກສາ, ການເລື່ອນຊັ້ນແບບຕໍ່ເນື່ອງ, ຫຼັກສູດການສຶກສານອກໂຮງຮຽນຊັ້ນປະຖົມ ແລະ ມັດທະຍົມຕົ້ນເພື່ອຮັບປະກັນຂອບການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ ແລະ ສາມາດຍູ້ໜູນຍຸດທະສາດທີ່ໄດ້ພັດທະນາຂຶ້ນມາ.

### 3.4.2 ຜົນຮັບທີ 2: ຈຳນວນນັກຮຽນປະຖົມທີ່ມີຄວາມສາມາດເພິ່ງພາຕົນເອງໃນການອ່ານ, ການຂຽນ ແລະ ການຄຳນວນເລກເພີ່ມຂຶ້ນ

**ເຫດຜົນອ້າງອີງ**

ຜົນການສຶກສາວິໄຈຈາກການປະເມີນການຮຽນໃນຊັ້ນປະຖົມຕົ້ນ ແລະ ການປະເມີນຜົນການຮຽນຂອງນັກຮຽນ ປ 3 ແລະ ປ 5 (EGRA ແລະ ASLO) ຊີ້ໃຫ້ເຫັນວ່າທັກສະຂອງນັກຮຽນປະຖົມຂັ້ນຕົ້ນໃນດ້ານການອ່ານ, ການຂຽນພາສາລາວ ແລະ ການຄິດໄລ່ເລກຂັ້ນພື້ນຖານຍັງບໍ່ພຽງພໍ ທີ່ຈະຊ່ວຍໃຫ້ເຂົາເຈົ້າສາມາດຮຽນໄດ້ຢ່າງມີຄຸນນະພາບໃນຂັ້ນທີ່ສູງກວ່າຂອງຊັ້ນປະຖົມ ແລະ ມັດທະຍົມຕົ້ນ. ຄູສອນຫ້ອງ ປ.1 ຍັງມີຂໍ້ຫຍຸ້ງຍາກໃນການສອນໃຫ້ຈົບຫຼັກສູດ, ຫຍຸ້ງຍາກໃນສອນພາສາລາວ ແລະ ເລກຂັ້ນພື້ນຖານເພື່ອໃຫ້ຈົບຕາມຫຼັກສູດໄດ້ໃນສົກຮຽນໜຶ່ງ. ການປະເມີນຜົນການຮຽນຈາກ ASLO ສະແດງໃຫ້ເຫັນວ່າ ທັກສະດ້ານການອ່ານ ແລະ ຂຽນພາສາລາວຂອງນັກຮຽນ ປ.3 ຫາ ປ.5 ຍັງອ່ອນ, ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງທົບທວນຫຼັກສູດຊັ້ນປະຖົມສຶກສາຂອງທຸກຂັ້ນຮຽນ. ບັນຫາທີ່ຕິດພັນກັບທັກສະການອ່ານ, ການຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານ ລວມມີ: (i) ເວລາສຳລັບການຮຽນ-ການສອນເພື່ອໃຫ້ຈົບຫຼັກສູດປະຖົມສຶກສາໃນທຸກຂັ້ນຮຽນບໍ່ພຽງພໍ ຫຼື ບໍ່ດຸ່ນດ່ຽງກັນໃນແຕ່ລະຂັ້ນຮຽນ, (ii) ການສະໜັບສະໜູນໂຮງຮຽນ ແລະ ຄູສອນຈາກຄູສຶກສານິເທດບໍ່ມີປະສິດທິຜົນພຽງພໍ, (iii) ການຈັດສັນເວລາຂອງໂຮງຮຽນເພື່ອສອນເພີ່ມໃຫ້ແກ່ນັກຮຽນອ່ອນ ຫຼື ຜູ້ຮຽນຊ້າບໍ່ພຽງພໍ, (iv) ຫຼັກການ ແລະ ວິທີການສິດສອນພາສາລາວເປັນພາສາທີສອງໃຫ້ແກ່ເດັກຊົນເຜົ່າ ຢູ່ໂຮງຮຽນສາມັນ ແລະ ໃນຫຼັກສູດສ້າງຄູບໍ່ພຽງພໍ (v) ຊັບພະຍາກອນຮັບໃຊ້ການຮຽນເພື່ອປັບປຸງການຮຽນພາສາລາວຂອງເດັກຊົນເຜົ່າຍັງບໍ່ມີທົ່ວເຖິງ ຫຼື ບໍ່ໄດ້ນຳໃຊ້ຢ່າງທົ່ວເຖິງ; ແລະ (vi) ຄູສອນ ປ.1 ສ່ວນໃຫຍ່ເປັນຄູໃໝ່ຂາດປະສົບການ.

**ພາກສ່ວນຮັບຜິດຊອບ:**

ຜົນສຳເລັດຂອງຜົນຮັບທີ່ເປັນຍຸດທະສາດນີ້ແມ່ນໜ້າທີ່ຮ່ວມກັນຂອງກົມອະນຸບານ-ປະຖົມສຶກສາ, ກົມສ້າງຄູ, ສູນວິໄຈການສຶກສາ ແລະ ກິລາ, ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 4 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ຫຼັກສູດສຳລັບການອ່ານ, ການຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານຂອງທຸກຂັ້ນຮຽນຊັ້ນປະຖົມສຶກສາໄດ້ຮັບການພັດທະນາຂຶ້ນມາເພື່ອຮັບໃຊ້ການຮຽນ-ການສອນ.
2) ການສະໜອງການບໍລິການຂອງຄູນິເທດໃຫ້ແກ່ໂຮງຮຽນໄດ້ຮັບການປັບປຸງດີຂຶ້ນ ແລະ ເພີ່ມຫຼາຍຂຶ້ນ.
3) ການສອນພາສາລາວໃຫ້ແກ່ນັກຮຽນຊົນເຜົ່າທີ່ບໍ່ເວົ້າພາສາລາວ ໄດ້ຮັບການປັບປຸງດີຂຶ້ນໂດຍວິທີການຮຽນຮູ້ແບບໃໝ່ ແລະ ຊັບພະຍາກອນຮັບໃຊ້ການສອນການຮຽນໃໝ່.
4) ຍຸດທະສາດໃໝ່ກ່ຽວກັບການພັດທະນາການຮຽນອ່ານ, ຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານສຳລັບການສຶກສາຊັ້ນປະຖົມໄດ້ນຳໄປຈັດຕັ້ງປະຕິບັດ.

**ຍຸດທະສາດ:**

1) ໂຄງສ້າງ ແລະ ເນື້ອໃນຫຼັກສູດຊັ້ນປະຖົມໄດ້ຮັບການປັບປຸງໃຫ້ເປັນຫຼັກສູດທີ່ເນັ້ນທັກສະການອ່ານ, ການຂຽນ ແລະ ການຄິດໄລ່ເລກເປັນພື້ນຖານຂອງທຸກຂັ້ນຮຽນໃນຊັ້ນປະຖົມສຶກສາ ແລະ ປະສົມປະສານເຂົ້າໃນຫຼັກສູດຂອງທຸກວິຊາຮຽນ.

2) ຄູສຶກສານິເທດໄດ້ຮັບການສະໜັບສະໜູນດ້ານການເງິນເພື່ອໃຫ້ການນິເທດແກ່ຄູ ແລະ ຕິດຕາມກວດກາການສອນໃນໂຮງຮຽນທຸກແຫ່ງ ແລະ ການສອນຫ້ອງ ປ.1 ເພື່ອຮັບປະກັນວ່າຫ້ອງ ປ.1 ເປັນຫ້ອງດ່ຽວ ແລະ ສອນດ້ວຍຄູທີ່ມີປະສົບການສູງໃນໂຮງຮຽນ.
3) ດຳເນີນການສຶກສາຄົ້ນຄວ້າບົດຮຽນອັນດີຂອງທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການສອນເພີ່ມນັກຮຽນອ່ອນເພື່ອປັບປຸງທັກສະການອ່ານ, ການຂຽນ, ການຄິດໄລ່ເລກ ແລະ ອີງໃສ່ຜົນການຄົ້ນຄວ້ານີ້ຈະໄດ້ສ້າງຄູ່ມືແນະນຳສຳລັບຜູ້ບໍລິຫານໂຮງຮຽນກ່ຽວກັບການຈັດແບ່ງເວລາປະຈຳອາທິດ ເພື່ອປັບປຸງຜົນການຮຽນດັ່ງທີ່ກ່າວມາ.
4) ສ້າງແຜນຍຸດທະສາດກ່ຽວກັບການປັບປຸງການຮຽນອ່ານ, ການຂຽນ ແລະ ຄິດໄລ່ເລກຂັ້ນພື້ນຖານ ແລະ ນຳເອົາແນວຄວາມຄິດນີ້ເຂົ້າໃນຫຼັກສູດພັດທະນາອາຊີບ ເພື່ອເປັນການປັບປຸງຍົກລະດັບໃຫ້ແກ່ຄູສຶກສານິເທດ ຫຼື ຜູ້ຊ່ຽວຊານດ້ານສຶກສານິເທດຂອງເມືອງ ແລະ ຈະໄດ້ທົບທວນຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູປະຈຳການ
5) ພັດທະນາຫຼັກການ, ວິທີການສອນ ແລະ ຫຼັກສູດສຳລັບການສອນພາສາລາວໃຫ້ເດັກທີ່ບໍ່ເວົ້າພາສາລາວ ເພື່ອບັນຈຸເຂົ້າໃນຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູປະຈຳການ.
6) ຈັດສັນເອົາຄູທີ່ມີປະສົບການ ແລະ ມີຄວາມຮັບຜິດຊອບສູງດ້ານສິດສອນໃຫ້ໄປສອນຫ້ອງ ປ. 1 ແລະ ປ. 2.
7) ພັດທະນາ ແລະ ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ເຄື່ອງມືທີ່ເໝາະສົມສຳລັບສອນພາສາລາວ ໃຫ້ແກ່ນັກຮຽນຊົນເຜົ່າ ແລະ ນັກຮຽນພິການ.
8) ປະເມີນຜົນການຮຽນຮູ້ດ້ານການອ່ານ, ການຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານຂອງນັກຮຽນ 2 ປີຕໍ່ຄັ້ງ.

**ນິຕິກຳທີ່ຕ້ອງການ**

1) ນະໂຍບາຍ ແລະ ລະບຽບການຕ່າງໆກ່ຽວກັບໂຄງຮ່າງຫຼັກສູດແມ່ນຈະໄດ້ທຳການທົບທວນ ແລະ ປັບປຸງໃໝ່ເພື່ອໃຫ້ສາມາດບັນລຸຜົນຮັບ 2.
2) ຄວາມຕ້ອງການດ້ານທັກສະ ແລະ ໜ້າທີ່ຂອງຜູ້ບໍລິຫານການສຶກສາຂັ້ນເມືອງ, ພະນັກງານເຮັດວຽກສະໜັບສະໜູນການສຶກສານິເທດ ແລະ ຄະນະຄຸ້ມຄອງບໍລິຫານໂຮງຮຽນ ແມ່ນຈະໄດ້ນຳມາທົບທວນ ແລະ ປັບປຸງເພື່ອຮັບປະກັນຄຸນນະພາບ ຂອງການສະໜັບສະໜູນ/ການຊ່ອຍເຫຼືອຄູສອນຊັ້ນປະຖົມຕອນຕົ້ນ ເພື່ອປັບປຸງຜົນການຮຽນອ່ານ, ຂຽນ ແລະ ຄິດໄລ່ເລກຂັ້ນພື້ນຖານໃນໂຮງຮຽນທຸກແຫ່ງໃຫ້ໄດ້ດີຂຶ້ນ.

### 3.4.3 ຜົນຮັບທີ 3: ຈຳນວນຄູທີ່ມີວຸດທິການສຶກສາ ແລະ ສະມັດຖະພາບເໝາະສົມກັບວິຊາສິດສອນເພີ່ມຂຶ້ນ ເພື່ອຮັບປະກັນໃຫ້ນັກຮຽນໃນໂຮງຮຽນແຕ່ອະນຸບານຮອດມັດທະຍົມ ໄດ້ຮຽນຮູ້ຕາມຈຸດປະສົງທີ່ກຳນົດໄວ້ໃນຫຼັກສູດ.

**ເຫດຜົນອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາໄດ້ກຳນົດບູລິມະສິດຄວາມຈຳເປັນເພື່ອປັບປຸງຜົນການຮຽນດ້ວຍການປັບປຸງການສອນຂອງຄູຕາມຫຼັກສູດການຮຽນ-ການສອນແຕ່ລະຂັ້ນ ແລະ ຊັ້ນຮຽນ. ບັນຫາບູລິມະສິດທີ່ຈະຕ້ອງໄດ້ແກ້ໄຂກ່ຽວກັບວຽກງານນີ້ລວມມີ: (i) ຄູສອນຊັ້ນມັດທະຍົມບໍ່ພຽງພໍເພື່ອສອນທຸກວິຊາຮຽນຕາມຫຼັກສູດ; (ii) ຫຼັກສູດສ້າງຄູ ແລະ ບຳລຸງຄູປະຈຳການສຳລັບໂຮງຮຽນທຸກຊັ້ນໃນປະຈຸບັນບໍ່ສອດຄ່ອງກັບຄວາມຕ້ອງການຂອງຫຼັກສູດໂຮງຮຽນທີ່ມີໃນປະຈຸບັນ, (iii) ໂຮງຮຽນປະຖົມຫຼາຍແຫ່ງ ຍັງບໍ່ສາມາດສອນໃຫ້ຈົບຫຼັກສູດໄດ້ ຍ້ອນມີເວລາຈຳກັດ, (iv) ພະນັກງານທີ່ມີສ່ວນຮ່ວມໃນຫຼັກສູດສ້າງຄູ ແລະ ຝຶກອົບຮົມຄູປະຈຳການຍັງຂາດຄວາມຮູ້, ປະສົບການສອນ ແລະ ທັກສະດ້ານວິຊາຄູ ກໍ່ຄືຄວາມຮູ້ທາງດ້ານທິດສະດີ ແລະ ວິທີການສິດສອນທີ່ຕ້ອງການເພື່ອສອນຕາມຫຼັກສູດໃຫ້ມີປະສິດທິຜົນ; ແລະ (v) ການຝຶກງານຂອງຄູຝຶກຫັດຍັງບໍ່ພຽງພໍ.

**ພາກສ່ວນຮັບຜິດຊອບ:**

ຜົນສຳເລັດຂອງຜົນຮັບທີ່ເປັນຍຸດທະສາດນີ້ ແມ່ນໜ້າທີ່ຮັບຜິດຊອບຮ່ວມກັນຂອງກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ກົມສ້າງຄູ ແລະ ສູນວິໄຈການສຶກສາ ແລະ ກິລາ, ສູນປະກັນຄຸນນະພາບການສຶກສາ, ສູນພັດທະນາຄູ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 6 ຜົນຮັບໄລຍະກາງເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ຫຼັກສູດສ້າງຄູມີຄວາມສອດຄ່ອງກັບຫຼັກສູດແຫ່ງຊາດຂອງເດັກກ່ອນໄວຮຽນ, ປະຖົມສຶກສາ ແລະ ມັດທະຍົມສຶກສາ ແລະ ເພີ່ມເວລາໃນການຝຶກຫັດວິຊາຊີບຄູໃຫ້ຫຼາຍຂຶ້ນ.
2) ສື່ການຮຽນ-ການສອນ/ໂມດູນ/ແຫຼ່ງການຮຽນຮູ້ຂອງການກໍ່ສ້າງ ແລະ ບຳລຸງຄູໄດ້ຮັບການປັບປຸງ ແລະ ພັດທະນາຂຶ້ນໃນທຸກຊັ້ນທຸກສາຍ. ສາລັບຫຼັກສູດສ້າງຄູປະຖົມສຶກສາໃຫ້ເລັ່ງໃສ່ປັບປຸງການອ່ານ, ການຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານ.
3) ມາດຖານຄູທີ່ເນັ້ນໃສ່ສະມັດຖະພາບຄູແຫ່ງຊາດໄດ້ຮັບການປັບປຸງ, ພັດທະນາ ແລະ ທົດລອງ.
4) ສະຖາບັນສ້າງຄູທຸກແຫ່ງມີໂຮງຮຽນສາທິດ ຢ່າງນ້ອຍ 01 ແຫ່ງ ທີ່ຂຶ້ນກັບຕົນເພື່ອສ້າງຕົວແບບການສອນທີ່ມີຄຸນນະພາບ ແລະ ສ້າງໂອກາດພຽງພໍໃຫ້ນັກສຶກສາຄູໃນການຝຶກປະສົບການ ແລະ ຝຶກຫັດວິຊາຊີບ.
5) ຄວາມຮູ້ດ້ານເນື້ອໃນຫຼັກສູດ ແລະ ຄວາມຮູ້ດ້ານວິຊາຄູຂອງອາຈານສອນໃນສະຖາບັນສ້າງຄູໄດ້ຮັບການປັບປຸງດີຂຶ້ນຕາມມາດຖານຂອງຄູສອນສະຖາບັນສ້າງຄູ.
6) ລະບົບການຝຶກອົບຮົມຄູປະຈຳການຄົບຊຸດທີ່ອອກແບບຂຶ້ນມາ ເພື່ອແກ້ໄຂບັນຫາຄວາມຕ້ອງການທີ່ແຕກຕ່າງກັນຂອງຄູໃນແຕ່ລະໄລຍະຕາມສະມັດຖະພາບຄູທີ່ໄດ້ກຳນົດໄວ້.

**ຍຸດທະສາດ:**

1) ຮັບປະກັນການປະສານງານຢ່າງເປັນລະບົບລະຫວ່າງສະຖາບັນສ້າງຄູ ແລະ ພາກສ່ວນທີ່ກ່ຽວຂ້ອງ ສຳລັບການຈັດຕັ້ງການລົງຝຶກປະສົບການ ແລະ ຝຶກຫັດວິຊາຊີບຄູ.
2) ຮັບປະກັນການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງໃນທຸກລະດັບເພື່ອປັບປຸງ ແລະ ພັດທະນາສື່ການຮຽນ-ການສອນ/ໂມດູນ/ແຫຼ່ງການຮຽນຮູ້ສຳລັບການກໍ່ສ້າງຄູ ແລະ ບຳລຸງຄູ.
3) ພັດທະນາມາດຕະຖານຄູທີ່ເນັ້ນໃສ່ສະມັດຖະພາບຄູແຫ່ງຊາດ ແລະ ໃຫ້ເຊື່ອມໂຍງກັບບັນດາປະເທດອາຊຽນ. ນຳໃຊ້ມາດຖານນີ້ເພື່ອຮັບປະກັນໃຫ້ນັກຮຽນທຸກຄົນທີ່ຮຽນຈົບຫຼັກສູດສ້າງຄູ ສາມາດບັນລຸສະມັດຖະພາບຂັ້ນຕ່ຳສຸດທີ່ຕ້ອງການເພື່ອໄປສອນໃນລະດັບການສຶກສາກ່ອນໄວຮຽນ, ຊັ້ນປະຖົມ ແລະ ມັດທະຍົມສຶກສາ.
4) ປັບປຸງການນຳໃຊ້ໂຮງຮຽນສາທິດເພື່ອໃຫ້ເປັນສະຖານສ້າງຕົວແບບການສອນ, ທົດລອງ ແລະ ກວດສອບຄວາມຖືກຕ້ອງຂອງການສອນແບບໃໝ່; ທົດລອງຫຼັກສູດ ແລະ ປຶ້ມແບບຮຽນໃໝ່ກ່ອນທີ່ຈະນຳໄປໃຊ້ໃນລະດັບຊາດ.
5) ສະໜອງການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ແກ່ຄູສອນໃນສະຖາບັນສ້າງຄູ ເພື່ອປັບປຸງຄວາມຮູ້ດ້ານເນື້ອໃນຫຼັກສູດ ແລະ ຄວາມຮູ້ດ້ານວິຊາຄູ.
6) ນຳໃຊ້ການຝຶກອົບຮົມຄູປະຈຳການ ໂດຍຖືເອົາການຝຶກອົບຮົມໃນຂັ້ນໂຮງຮຽນ ຫຼື ກຸ່ມໂຮງຮຽນເປັນຫຼັກໃຫ້ຫຼາຍຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການສະເພາະດ້ານຂອງໂຮງຮຽນ ແລະ ເພື່ອນຳສະເໜີຍຸດທະສາດການຈັດການຮຽນ-ການສອນອັນໃໝ່ໃຫ້ແກ່ຄູ.

- **ນິຕິກຳທີ່ຈຳເປັນ**

1) ຄູຈົບໃໝ່ໃນສາຍຄູມັດທະຍົມທີ່ຈະໄປສອນມັດທະຍົມຕອນຕົ້ນສາມາດສອນໄດ້ສອງວິຊາ
2) ຫຼັກສູດໃໝ່ ແລະ ຮູບແບບວິທີສອນ ສຳລັບສາຍຄູອະນຸບານ, ປະຖົມ ແລະ ມັດທະຍົມໄດ້ຜ່ານການຮັບຮອງອະນຸມັດເພື່ອນຳໄປຈັດຕັ້ງປະຕິບັດ
3) ທຸກສະຖາບັນສ້າງຄູມີໂຮງຮຽນສາທິດທີ່ຂຶ້ນນຳຕົນ, ມີພາລະບົດບາດໃນການສ້າງຕົວແບບການສອນທີ່ມີຄຸນນະພາບ ແລະ ໃຫ້ນຳໃຊ້ເປັນບ່ອນຝຶກປະສົບການ ແລະ ຝຶກຫັດວິຊາຊີບຄູ.

### 3.4.4 ຜົນຮັບທີ 4: ໂຮງຮຽນທຸກແຫ່ງມີແຫຼ່ງທຶນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອປັບປຸງຜົນການຮຽນຂອງນັກຮຽນ.

- **ເຫດຜົນອ້າງອີງ:**

ໃນສະພາບທີ່ມີຄວາມຈຳກັດດ້ານການເງິນ ແລະ ເພື່ອປັບປຸງຜົນການຮຽນໃຫ້ໄດ້ດີ ຈຳເປັນຕ້ອງໄດ້ສະໜອງສິ່ງອຳນວຍຄວາມສະດວກທາງດ້ານພື້ນຖານໂຄງລ່າງ ແລະ ຊັບພະຍາກອນມະນຸດ ໃຫ້ບັນດາໂຮງຮຽນຢ່າງສະເໝີພາບ ແລະ ເປັນທຳ. ບັນຫາບູລິມະສິດທີ່ກ່ຽວພັນກັບດ້ານນີ້ລວມມີ (i) ຄວາມສອດຄ່ອງຂອງໂຮງຮຽນກັບຂອບມາດຖານຄຸນນະພາບການສຶກສາແຫ່ງຊາດ ໂດຍສະເພາະໂຮງຮຽນຂະໜາດນ້ອຍຢູ່ເຂດຊົນນະບົດຫ່າງໄກສອກຫຼີກ (ii) ການບັນຈຸ ແລະ ສັບຊ້ອນຄູໃຫ້ແກ່ໂຮງຮຽນຍັງບໍ່ຍຸດຕິທຳ ແລະ ຂາດປະສິດທິຜົນ; (iii) ຜູ້ອຳນວຍການໂຮງຮຽນຍັງບໍ່ສາມາດບໍລິຫານຄຸ້ມຄອງຊັບພະຍາກອນຂອງໂຮງຮຽນໄດ້ດີເທົ່າທີ່ຄວນ ເພື່ອຍົກລະດັບຜົນການຮຽນໃຫ້ໄດ້ໃນລະດັບສູງສຸດ; (iv) ການສະໜອງຄູຍັງບໍ່ສອດຄ່ອງ ແລະ ແທດເໝາະກັບຄວາມຕ້ອງ ການຂອງໂຮງຮຽນ (v) ເງິນບໍລິຫານປົກກະຕິຂອງໂຮງຮຽນ (SBG) ຍັງປະຕິບັດບໍ່ໄດ້ຕາມອັດຕາທີ່ກຳນົດໄວ້ ແລະ ການສະໜອງມີຄວາມຊັກຊ້າເຮັດໃຫ້ມີປະສິດທິຜົນຕ່ຳ;(vi) ບົດບາດຂອງຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອຮັບປະກັນການນຳໃຊ້ເງິນບໍລິຫານປົກກະຕິໂຮງຮຽນໃຫ້ມີປະສິດທິຜົນ ເພື່ອປະຕິບັດແຜນປັບປຸງຄຸນນະພາບຂອງໂຮງຮຽນ ມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງ.

- **ພາກສ່ວນຮັບຜິດຊອບ:**

ຜົນສຳເລັດຂອງຜົນຮັບທີ່ເປັນຍຸດທະສາດນີ້ ແມ່ນໜ້າທີ່ຮ່ວມກັນຂອງກົມຈັດຕັ້ງ ແລະ ພະນັກງານ, ກົມກວດກາ, ກົມການເງິນ, ກົມແຜນການ, ກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ, ສູນປະກັນຄຸນນະພາບການສຶກສາ ແລະ ສະຖາບັນພັດທະນາການບໍລິຫານການສຶກສາ.

- **ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 4 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ການບັນຈຸ ແລະ ສັບຊ້ອນຄູມີຄວາມສອດຄ່ອງ ແລະ ມີປະສິດທິຜົນຫຼາຍຂຶ້ນ ໂດຍໃຫ້ບູລິມະສິດແກ່ເຂດທີ່ຂາດເຂີນຄູ.
2) ການຈັດສັນ ແລະ ການສະໜອງເງິນບໍລິຫານປົກກະຕິຂອງໂຮງຮຽນ (SBG) ເພີ່ມຂຶ້ນ, ເປັນປົກກະຕິ ແລະ ທັນກັບເວລາ ແລະ ການໂອນບາດກຽວໃຫ້ແກ່ໂຮງຮຽນຂະໜາດນ້ອຍທັງນີ້ກໍ່ເພື່ອສະໜັບສະໜູນການປັບປຸງຄຸນນະພາບການຮຽນ-ການສອນໃຫ້ດີຂຶ້ນ.
3) ເນື້ອໃນດ້ານການຕິດຕາມກວດກາຜົນການຮຽນຂອງຄູໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງຂຶ້ນ ໂດຍການທົບທວນ ແລະ ປັບປຸງຫຼັກສູດ ແລະ ໂມດູນການສ້າງຄູທີ່ໄດ້ນຳໃຊ້ໃນຫຼັກສູດຝຶກອົບ ຮົມຄູປະຈຳການ.
4) ການຄຸ້ມຄອງບໍລິຫານໂຮງຮຽນເປັນໄປຕາມຫຼັກການ ແລະ ທິດສະດີການຄຸ້ມຄອງບໍລິຫານໂຮງຮຽນໂດຍອີງໃສ່ໂຮງຮຽນເປັນຫຼັກ. ບົດບາດຂອງຄະນະພັດທະນາການສຶກສາຂັ້ນບ້ານໃນການນຳໃຊ້ເງິນບໍລິຫານປົກກະຕິຂອງໂຮງຮຽນ ເຂົ້າໃນການພັດທະນາການສຶກສາໃນບ້ານເພີ່ມຂຶ້ນ.

✚ ຍຸດທະສາດ:

1) ສ້າງ ແລະ ປັບປຸງມາດຖານຄຸນນະພາບການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມສຶກສາສະບັບສົມບູນ ແລະ ສໍາເລັດການສ້າງຄູ່ມືແນະນໍາການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ.
2) ກົມຈັດຕັ້ງພະນັກງານເປັນຫຼັກ ແກ້ໄຂບັນຫາຄວາມບໍ່ເປັນທໍາໃນການບັນຈຸຄູໃໝ່ ແລະ ສັບຊ້ອນຄູປະຈໍາການ ໂດຍອີງໃສ່ລະບຽບການ ແລະ ແນວທາງທີ່ມີຢູ່ ພ້ອມທັງທົບທວນ ແລະ ປັບປຸງລະບຽບການຕ່າງໆໃຫ້ສອດຄ່ອງສົມບູນດີ ເພື່ອເຮັດໃຫ້ການບຸນຈຸ ແລະ ສັບຊ້ອນຄູມີຄວາມເປັນທໍາ ແລະ ມີປະສິດທິຜົນ.
3) ກົມສ້າງຄູ ສົມທົບກັບກັບຈັດຕັ້ງ-ພະນັກງານ ຈະແຈ້ງຕົວເລກຄາດຄະເນການສະໜອງຄູ ແລະ ຄວາມຕ້ອງການຄູໃຫ້ແກ່ການສຶກສາກ່ອນໄວຮຽນ, ປະຖົມສຶກສາ ແລະ ມັດທະຍົມສຶກສາເປັນປະຈໍາປີ ໂດຍອີງຕາມຍຸດທະສາດ ແລະ ແຜນດໍາເນີນງານການສ້າງຄູ ແລະ ຕົວເລກຄາດຄະເນນີ້ແມ່ນຈະໄດ້ທົບທວນໃນແຕ່ລະປີ.
4) ທົບທວນ ແລະ ປັບປຸງນະໂຍບາຍ ແລະ ຄູ່ມືແນະນໍາກ່ຽວກັບເງິນບໍລິຫານປົກກະຕິຂອງໂຮງຮຽນເພື່ອຮັບປະກັນການສະໜອງເງິນທຶນໃຫ້ມີຄວາມເປັນທໍາ (ໂດຍສະເພາະການສະໜອງເງິນທຶນບໍລິຫານໃຫ້ແກ່ໂຮງຮຽນຂະໜາດນ້ອຍ ເພື່ອປັບປຸງປະສິດທິຜົນຂອງການສະໜອງເງິນທຶນຈາກຂັ້ນເມືອງໄປຫາຂັ້ນໂຮງຮຽນ).
5) ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ສະມາຄົມພໍ່ແມ່ນັກຮຽນຂອງໂຮງຮຽນມັດທະຍົມໄດ້ຮັບການຝຶກອົບຮົມກ່ຽວກັບການຄຸ້ມຄອງບໍລິຫານໂດຍອີງໃສ່ໂຮງຮຽນເປັນຫຼັກ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາການນໍາໃຊ້ເງິນບໍລິຫານປົກກະຕິຂອງໂຮງຮຽນໂດຍສອດຄ່ອງກັບມາດຖານຄຸນນະພາບແຫ່ງຊາດ.

✚ **ນິຕິກໍາທີ່ຈໍາເປັນ**

1) ເພື່ອບັນລຸຜົນຮັບ ແລະ ເປົ້າໝາຍທີ່ໄດ້ຕົກລົງກັນໄວ້, ບົດບາດ ແລະ ໜ້າທີ່ຂອງຫ້ອງການສຶກສາ ແລະ ກິລາເມືອງ ໃນດ້ານການຕິດຕາມກວດກາການຈັດຕັ້ງປະຕິບັດ ຂອບມາດຖານຄຸນນະພາບການສຶກສາແຫ່ງຊາດ, ການຄຸ້ມຄອງການຈັດສັນຊັບພະຍາກອນ (ລວມທັງບຸກຄະລາກອນ ແລະ ອຸປະກອນຕ່າງໆ) ແລະ ການຕິດຕາມກວດກາໂຮງຮຽນໃນການນໍາໃຊ້ເງິນບໍລິຫານປົກກະຕິຂອງໂຮງຮຽນ ແມ່ນຈະໄດ້ທົບທວນເພື່ອປັບປຸງໃຫ້ມີຄວາມເຂັ້ມແຂງກວ່າເກົ່າ ດ້ວຍການທົບທວນ ແລະ ປັບປຸງລະບຽບການ ຫຼື ຂໍ້ແນະນໍາຕ່າງໆ.
2) ນະໂຍບາຍກ່ຽວກັບການຄຸ້ມຄອງບໍລິຫານໂດຍອີງໃສ່ໂຮງຮຽນເປັນຫຼັກ ແລະ ບົດບາດຂອງຄະນະພັດທະນາການສຶກສາຂັ້ນບ້ານແມ່ນເປັນສິ່ງຈໍາເປັນທີ່ຕ້ອງມີ.
3) ຄວາມຕ້ອງການ ແລະ ຂອບລະບຽບການເພື່ອແຕ່ງຕັ້ງ, ບັນຈຸ ແລະ ສັບຊ້ອນພະນັກງານຄູແມ່ນຈະໄດ້ນໍາມາທົບທວນ ແລະ ປັບປຸງ ເພື່ອຮັບປະກັນດ້ານປະສິດທິຜົນ.

**3.4.5 ຜົນຮັບທີ 5: ຈໍານວນນັກຮຽນຜູ່ທີ່ຮຽນຈົບການສຶກສາຂັ້ນພື້ນຖານ ຜູ່ທີ່ມີຄວາມສາມາດຂັ້ນພື້ນຖານ ແລະ ຄວາມຮູ້ຕາມຄວາມຕ້ອງການ ເພື່ອສາມາດເຂົ້າເຮັດວຽກຕາມຕະຫຼາດແຮງງານ ຫຼື ເພື່ອສືບຕໍ່ຮຽນໃນການສຶກສາຫຼັງຂັ້ນພື້ນຖານເພີ່ມຂຶ້ນ ຫຼື ກາຍເປັນຜູ່ປະກອບການ.**

✚ ເຫດຜົນອ້າງອີງ:

ກະຊວງສຶກສາທິການ ແລະ ກິລາ ໄດ້ກໍານົດບູລິມະສິດຄວາມຈໍາເປັນເພື່ອແກ້ໄຂບັນຫາພາຍໃນປີ 2020 ກ່ຽວກັບຄວາມຮູ້ ແລະ ທັກສະຂອງນັກຮຽນຈົບຊັ້ນມັດທະຍົມທີ່ຈະຕ້ອງໃຫ້ມີພາຍຫຼັງຈົບຊັ້ນ. ກະຊວງໄດ້ເຫັນເປັນເອກະພາບກັນວ່າ ບັນຫາບູລິມະສິດທີ່ກ່ຽວຂ້ອງດ້ານນີ້ທີ່ຈະຕ້ອງແກ້ໄຂລວມມີ: (i) ທັກສະ ແລະ ຜົນການຮຽນດ້ານອື່ນໆທີ່ມີຄວາມຈໍາເປັນຕ້ອງໃຫ້ມີ ໂດຍສະເພາະດ້ານການອ່ານ, ການຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານຂອງຜູ່ຮຽນຈົບຊັ້ນປະຖົມ ແລະ ມັດທະຍົມສຶກສາຍັງບໍ່ເຂັ້ມແຂງ ແລະ ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານໃນປະຈຸບັນ; (ii) ໂຮງຮຽນຍັງຂາດເຄື່ອງມືເໝາະສົມເພື່ອຕິດຕາມກວດກາຂະບວນການຮຽນຮູ້ ແລະ ການພັດທະນາຜົນການຮຽນຂັ້ນພື້ນຖານຂອງນັກຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາ; (iii) ຈໍານວນນັກຮຽນຈົບມັດທະຍົມຕົ້ນຮຽນຕໍ່ມັດທະຍົມປາຍຫຼາຍເກີນຄວາມຕ້ອງ ແຕ່ມີຈໍານວນໜ້ອຍດຽວທີ່ໄປຮຽນສາຍເຕັກນິກວິຊາຊີບ ຍ້ອນບັນຫາ

ການໂຄສະນາສົ່ງເສີມຜູ້ດ້ອຍໂອກາດ ເພື່ອໃຫ້ໄປຮຽນຕໍ່ສາຍເຕັກນິກວິຊາຊີບຍັງບໍ່ພຽງພໍ, (iv) ຄູທີ່ຮຽນຈົບຫຼັກສູດສ້າງຄູ ແລະ ຜູ້ທີ່ຜ່ານຫຼັກສູດຝຶກອົບຮົມໄລຍະປະຈໍາການຍັງຂາດທັກສະ ແລະ ຄວາມຮູ້ທີ່ຈໍາເປັນ (ລວມທັງທັກສະໃນການແກ້ໄຂບັນຫາ), ແລະ (v) ການບັນຈຸວິຊາຮຽນດ້ານທຸລະກິດ ແລະ ໄອຊີທີ ເຂົ້າໃນໂຄງການຫຼັກສູດການສອນການຮຽນໃນໂຮງຮຽນມັດທະຍົມຕົ້ນຍັງບໍ່ພຽງພໍ.

- **ພາກສ່ວນຮັບຜິດຊອບ:**

ຜົນສໍາເລັດຂອງຜົນຮັບທີ່ເປັນຍຸດທະສາດດ້ານນີ້ ແມ່ນຄວາມຮັບຜິດຊອບຮ່ວມກັນຂອງກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ກົມອາຊີວະສຶກສາ, ກົມສ້າງຄູ, ສະຖາບັນພັດທະນາການບໍລິຫານການສຶກສາ, ສູນໄອຊີທີ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

- **ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກໍານົດ 3 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ທັກສະ ແລະ ຜົນການຮຽນຮູ້ຂອງນັກຮຽນ ມ 1-ມ 4 ມີຄວາມເຊື່ອມໂຍງ ແລະ ສອດຄ່ອງກັບຄວາມຕ້ອງການດ້ານການພັດທະນາປະເທດຊາດ, ຕະຫຼາດແຮງງານ ແລະ ເຊື່ອມຕໍ່ເຂົ້າກັບຫຼັກສູດການສຶກສາຫຼັງຂັ້ນພື້ນຖານໄດ້ດີ.
2) ຄ່ອຍໆເພີ່ມອັດການເລື່ອນຊັ້ນຈາກມັດທະຍົມຕົ້ນ ເຂົ້າຮຽນໃນສາຍເຕັກນິກວິຊາຊີບໃຫ້ຫຼາຍຂຶ້ນ ໂດຍຜ່ານຂະບວນການໂຄສະນາປຸກລະດົມ ແລະ ແນະແນວວິຊາຊີບ.
3) ຫຼັກສູດມັດທະຍົມຕົ້ນໄດ້ຮັບການທົບທວນ ແລະ ປັບປຸງເພື່ອຮັບປະກັນໃຫ້ມີເນື້ອໃນພຽງພໍກ່ຽວກັບວິຊາຊີບຂັ້ນພື້ນຖານ, ການຮຽນຮູ້ກ່ຽວກັບທຸລະກິດ ແລະ ໄອຊີທີ ຊຶ່ງໃນນັ້ນກໍ່ແມ່ນລວມທັງການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນສາຂາວິຊາດັ່ງກ່າວ.

- **ຍຸດທະສາດ:**

1) ກະຊວງສຶກສາທິການ ແລະ ກິລາ ຈະກໍານົດບັນຫາທີ່ເປັນຊ່ອງວ່າງສໍາຄັນໃນດ້ານການພັດທະນາທັກສະ ແລະ ຜົນການຮຽນ ລວມທັງລະດັບທັກສະການອ່ານ, ຂຽນ ແລະ ການຄິດໄລ່ເລກຂັ້ນພື້ນຖານຂອງນັກຮຽນ ມ.1, ນັກຮຽນຈົບຊັ້ນມັດທະຍົມຕົ້ນ ອີງຕາມຫຼັກສູດປະຈຸບັນ, ຜົນການປະເມີນ ແລະ ຄວາມສາມາດໃນການປະກອບອາຊີບ ແລະ ຄວາມຕ້ອງການດ້ານການສຶກສາເພີ່ມເຕີມ. ເຄື່ອງມືປະເມີນຜົນການຮຽນຊັ້ນມັດທະຍົມຕົ້ນຂອງ ASLO ຈະໄດ້ພັດທະນາຂຶ້ນມາ ແລະ ນໍາໄປໃຊ້ໃນການປະເມີນຜົນການຮຽນ ແລະ ຜົນການປະເມີນຈະເປັນຕົວກໍານົດໃຫ້ແກ່ການທົບທວນ ແລະ ປັບປຸງຫຼັກສູດການສຶກສາຊັ້ນປະຖົມ ແລະ ມັດທະຍົມຕົ້ນ. ຫຼັກສູດປັບປຸງໃໝ່ ແລະ ຄວາມຕ້ອງການດ້ານການປະເມີນຜົນການຮຽນ ແມ່ນຈະໄດ້ນໍາມາໃຊ້ໃນໂຮງຮຽນຕາມຂັ້ນຕອນ.
2) ສະຖາບັນສ້າງຄູປັບປຸງຫຼັກສູດສ້າງຄູຂອງສະຖາບັນສ້າງຄູໃຫ້ມີຄວາມເຂັ້ມແຂງ ແລະ ແທດເໝາະກັບຄວາມຕ້ອງການໃໝ່, ຫຼັກວິຊາຄູ ແລະ ການຝຶກຫັດວິຊາຊີບ ໂດຍຈະເລັ່ງໃສ່ ຄວາມຮູ້ ແລະ ທັກສະດ້ານການປະເມີນຜົນການຮຽນໃຫ້ແກ່ນັກຮຽນຄູທີ່ຮຽນຈົບ ຮວມທັງວິທີການປະເມີນຜົນການຮຽນແບບຕໍ່ເນື່ອງໃນໄລຍະເວລາຮຽນ ແລະ ການປະເມີນດ້ວຍວິທີການສອບເສັງທ້າຍປີຮຽນ (ກະລຸນາເບິ່ງຜົນຮັບ 3).
3) ສ້າງຂະບວນໂຄສະນາປຸກລະດົມ ແລະ ແນະແນວວິຊີບ ເພື່ອສົ່ງເສີມໃຫ້ອັດຕາການເລື່ອນຊັ້ນຂອງນັກຮຽນຈົບມັດທະຍົມຕອນຕົ້ນ ເຂົ້າຮຽນໃນສາຍວິຊາຊີບເພີ່ມຂຶ້ນເຖິງ 5% ແລະ ຂຶ້ນມັດທະຍົມປາຍໃຫ້ຢູ່ລະດັບ 90%.
4) ຄຽງຄູ່ກັບວຸດທິການສຶກສາດ້ານການສ້າງຄູແລ້ວ, ຄູທີ່ຈະໄປສອນໃນສະຖາບັນສ້າງຄູຢ່າງໜ້ອຍສຸດຈະຕ້ອງມີປະ ສົບການສອນສາມປີ.
5) ທົບທວນ ແລະ ປັບປຸງຫຼັກສູດມັດທະຍົມຕົ້ນໂດຍເນັ້ນໃສ່ແກ້ໄຂ ເນື້ອໃນຫຼັກສູດເພື່ອບັນຈຸເອົາເນື້ອໃນການຮຽນກ່ຽວກັບທຸລະກິດ ແລະ ໄອຊີທີເຂົ້າໃນຫຼັກສູດລວມ.

- **ນິຕິກຳທີ່ຈຳເປັນ**

1) ຄະນະຮັບຜິດຊອບປະສານງານ ແລະ ສະໜັບສະໜູນການສຶກສາຂັ້ນພື້ນຖານຈະເຮັດໜ້າທີ່ການຕິດຕາມ, ກວດກາ ແລະ ປະເມີນຜົນການຮຽນໃນລະດັບການສຶກສາຂັ້ນພື້ນຖານ ແລະ ການກໍ່ສ້າງຄູຕາມການມອບໝາຍ .
2) ຄູທຸກຄົນຕ້ອງນຳໃຊ້ຊຸດມາດຖານສະມັດຖະພາບ ເພື່ອປະເມີນຄວາມສາມາດຂອງຕົນໃນທຸກໆສາມປີ ແລະ ສະເໜີຄວາມຕ້ອງການດ້ານການຝຶກອົບຮົມຕໍ່ຫົວໜ້າໂຮງຮຽນໂດຍອີງໃສ່ຜົນການປະເມີນດັ່ງກ່າວ
3) ມີນິຕິກຳກ່ຽວກັບການສົ່ງເສີມນັກຮຽນຈົບ ມ.4 ໄປເຂົ້າຮຽນໃນສາຍອາຊີວະສຶກສາ ຊຶ່ງລວມມີນິຕິກຳກ່ຽວກັບນະໂຍບາຍດ້ານການສະໜອງເບ້ຍລ້ຽງ, ນິຕິກຳກ່ຽວກັບປະກາສະນີຍະບັດ, ນິຕິກຳກ່ຽວກັບບ່ອນຮອງຮັບຫຼັງຈາກຮຽນຈົບ ແລະ ນິຕິກຳກ່ຽວກັບເງື່ອນໄຂຜູ້ທີ່ຈະເຂົ້າຮຽນໃນລະບົບດັ່ງກ່າວ.
4) ເງື່ອນໄຂການບັນຈຸຄູເພື່ອໄປສອນໃນສະຖາບັນສ້າງຄູ ຈະໄດ້ທຳການທົບທວນ ແລະ ປັບປຸງຄືນໃໝ່ ແລະ ໃຫ້ເອົາໃຈໃສ່ພິເສດດ້ານປະສົບການສອນຕົວຈິງ ມາເປັນເງື່ອນໄຂສຳຄັນ ບວກກັບຄຸນວຸດທິການສຶກສາທີ່ມີແລ້ວ.

### 3.4.6 ຜົນຮັບທີ 6: ອັດຕາການຮຽນຮູ້ໜັງສືຂອງຜູ້ໃຫຍ່ໄດ້ຮັບການປັບປຸງດີຂຶ້ນ ພ້ອມທັງຮັບປະກັນຄວາມສະເໝີພາບຍິງ-ຊາຍ.

- **ເຫດຜົນອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດບູລິມະສິດຄວາມຈຳເປັນ ເພື່ອແກ້ໄຂບັນຫາກະທົບຕໍ່ຄວາມພະຍາຍາມໃນການປັບປຸງຕົວຊີ້ບອກດ້ານການຮູ້ໜັງສືຂອງຜູ້ໃຫຍ່ພາຍໃນປີ 2020. ການຮູ້ໜັງສືຂອງຜູ້ໃຫຍ່ແມ່ນຕົວຊີ້ບອກໜຶ່ງໃນຈຳນວນຫຼາຍຕົວຊີ້ບອກຂອງດັດຊະນີຊັບສິນມະນຸດ (HAI) ຍ້ອນວ່າ ການຮູ້ໜັງສືຂອງພົນລະເມືອງເປັນສິ່ງຈຳເປັນເພື່ອນຳເອົາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ບັນຫາຫຼັກລວມມີ: (i) ຂໍ້ມູນການສຳຫຼວດດ້ານການຮູ້ໜັງສືຂອງຜູ້ໃຫຍ່ຍັງບໍ່ຊັດເຈນ ຍ້ອນວ່າການສຳຫຼວດແຕ່ລະເທື່ອນຳໃຊ້ຄຳຖາມບໍ່ຄືກັນ. ນອກຈາກນັ້ນ ກໍ່ຍັງຂາດການທົດສອບທັກສະດ້ານການອ່ານ, ການຂຽນ ແລະ ການຄຳນວນເລກ; (ii) ບໍ່ມີກຳນົດເວລາອັນແນ່ນອນ ໃນການເຂົ້າເຖິງຂໍ້ມູນການຮູ້ໜັງສືຂອງຜູ້ໃຫຍ່. ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໃນປະຈຸບັນຈະສາມາດຮູ້ໄດ້ກໍ່ຕໍ່ເມື່ອມີການເຜີຍແຜ່ຜົນສຳຫຼວດພົນລະເມືອງແຫ່ງຊາດປີ 2015 ໃນຕົ້ນປີ 2016 ເທົ່ານັ້ນ, (iii) ອຸປະກອນຮັບໃຊ້ການຮຽນຮູ້ໜັງສືຂອງຜູ້ໃຫຍ່ຍັງມີບໍ່ພຽງພໍ ແລະ ບໍ່ສອດຄ່ອງກັບສະພາບ ແລະ ຄວາມຕ້ອງການຕົວຈິງຂອງຜູ້ຮຽນໂດຍສະເພາະອຸປະກອນຮັບໃຊ້ການຮຽນໃຫ້ແກ່ຊົນເຜົ່າທີ່ອາໄສໃນຊົນນະບົດຫ່າງໄກສອກຫຼີກ, (iv) ໂຄງການຫຼັກສູດການສຶກສາຜູ້ໃຫຍ່ບໍ່ໄດ້ປະສົມປະສານເຂົ້າກັບວິທີການຮຽນຮູ້ຕະຫຼອດຊີວິດ, (v) ຂາດຄູສອນທີ່ຜ່ານການຝຶກອົບຮົມກ່ຽວກັບວິທີການສິດສອນການຮຽນຮູ້ຕະຫຼອດຊີວິດ.

- **ພາກສ່ວນຮັບຜິດຊອບ:**

ຜົນສຳເລັດຂອງຜົນຮັບທີ່ມີລັກສະນະຍຸດທະສາດນີ້ ແມ່ນໜ້າທີ່ຮັບຜິດຊອບຮ່ວມກັນຂອງກົມການສຶກສານອກໂຮງຮຽນ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ສູນວິໄຈການສຶກສາ ແລະ ກິລາ, ແລະ ສູນປະກັນຄຸນນະພາບການສຶກສາ.

- **ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 4 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ມາດຖານຄຸນນະພາບຂອງການສຶກສານອກໂຮງຮຽນ ເພື່ອປັບປຸງມາດຖານການຮຽນຮູ້ໜັງສືຂອງຜູ້ໃຫຍ່ໄດ້ຮັບການພັດທະນາຂຶ້ນ ແລະ ນຳໄປຈັດຕັ້ງປະຕິບັດ.
2) ການປະເມີນອັດຕາຜູ້ໃຫຍ່ທີ່ອ່ານອອກ, ຂຽນເປັນ ແລະ ສາມາດຄິດໄລ່ເລກຂັ້ນພື້ນຖານ ໂດຍນຳໃຊ້ວິທີການສຸ່ມຕົວຢ່າງທີ່ມີຄວາມຊັດເຈນ ແລະ ສອດຄ່ອງກັບໂຄງການຫຼັກສູດໄດ້ ຮັບການຈັດຕັ້ງປະຕິບັດສອງປີຕໍ່ໜຶ່ງ

ຄັ້ງ. ຜົນການປະເມີນນີ້ຈະນຳໄປເປັນບ່ອນອີງໃຫ້ແກ່ການພັດທະນາຫຼັກສູດ ໃຫ້ແທດເໝາະກັບພື້ນທີ່ເປົ້າໝາຍທີ່ມີອັດຕາການຮູ້ໜັງສືຂອງຜູ້ໃຫຍ່ຕ່ຳ.

3) ການປ່ຽນແປງຕ່າງໆດ້ານການຮຽນຮູ້ໜັງສືຂອງຜູ້ໃຫຍ່ໄດ້ຮັບການຕິດຕາມກວດກາ, ວິໄຈ ແລະ ແຍກຕາມເພດຂອງກຸ່ມເປົ້າໝາຍໃນແຕ່ລະທ້ອງຖິ່ນໃນເຂດທີ່ການຮຽນຮູ້ໜັງສືຫຼ້າຫຼັງໝູ່.
4) ຂອບການຮຽນຮູ້ຕະຫຼອດຊີວິດທີ່ລວມເອົາວິທີການຮຽນຮູ້ໜັງສືຂອງຜູ້ໃຫຍ່ໄດ້ຮັບການພັດທະນາຂຶ້ນ.

**ຍຸດທະສາດ:**

1) ພັດທະນາເຄື່ອງມືເພື່ອທົດສອບການຮຽນຮູ້ໜັງສືຂອງຜູ້ໃຫຍ່ໃຫ້ມີຄວາມຊັດເຈນ ແລະ ນຳເອົາເຄື່ອງມືດັ່ງກ່າວໄປທົດລອງນຳໃຊ້.
2) ສູນວິໄຈການສຶກສາ ແລະ ກິລາ ສົມທົບກັບກົມການສຶກສານອກໂຮງຮຽນ ຕິດຕາມກວດກາການປ່ຽນແປງ (ຄວາມຄືບໜ້າ) ປະຈຳປີການຮຽນຮູ້ໜັງສືຂອງຜູ້ໃຫຍ່ ໂດຍແຍກຕາມເພດ ແລະ ຊົນເຜົ່າ ແລະ ລາຍງານໃຫ້ແກ່ຄະນະຮັບຜິດຊອບປະສານງານ ແລະ ສະໜັບສະໜູນການສຶກສາຂັ້ນພື້ນຖານ. ເປົ້າໝາຍເພື່ອບັນລຸສຳລັບປີ 2020 ລວມມີ: (i) ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໃນເກນອາຍຸ 15-24 ປີ ບັນລຸໄດ້ 99%, ແລະ (ii) ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ໃນເກນອາຍຸ 15 ປີ ຂຶ້ນເມືອບັນລຸໄດ້ 95%.
3) ພັດທະນາຫຼັກສູດ ແລະ ອຸປະກອນຮັບໃຊ້ການຮຽນ ການສອນໃຫ້ສອດຄ່ອງກັບຊີວິດຕົວຈິງຂອງກຸ່ມເປົ້າໝາຍຢູ່ແຕ່ລະທ້ອງຖິ່ນ.
4) ສ້າງຂີດຄວາມສາມາດຂອງພະນັກງານ ທີ່ໄດ້ຮັບການມອບໝາຍໃຫ້ເຮັດໜ້າທີ່ການສຶກສາຜູ້ໃຫຍ່ໃຫ້ມີຄວາມເຂັ້ມແຂງ.

**ນິຕິກຳທີ່ຈຳເປັນ**

1) ມີຂໍ້ຕົກລົງຮັບຮອງເອົາເຄື່ອງມືໃນການສຳຫຼວດການຮູ້ໜັງສືຂອງຜູ້ໃຫຍ່ ພ້ອມທັງມອບໃຫ້ສູນສະຖິຕິການສຶກສາ ເປັນຜູ້ດຳເນີນການເກັບກຳ ແລະ ສຳຫຼວດຂໍ້ມູນການຮຽນຮູ້ໜັງສືຂອງຜູ້ໃຫຍ່.
2) ມີນິຕິກຳຮັບຮອງ ແລະ ອະນຸມັດນຳໃຊ້ຫຼັກສູດ ແລະ ອຸປະກອນຮັບໃຊ້ການຮຽນໜັງສືຂອງຜູ້ໃຫຍ່ທີ່ແທດເໝາະກັບຄວາມຕ້ອງການຂອງທ້ອງຖິ່ນ.
3) ມີນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂອບການຮຽນຮູ້ໜັງສືຕະຫຼອດຊີວິດ.
4) ສ້າງມາດຖານຄຸນນະພາບການສຶກສານອກໂຮງຮຽນໂດຍລວມເອົາມາດຖານການຮຽນຮູ້ໜັງສືຂອງຜູ້ໃຫຍ່.

### 3.4.7 ຜົນຮັບທີ 7: ຄຸນນະພາບ ແລະ ຈຳນວນຜູ້ຮຽນຈົບ ການສຶກສາຫຼັງຂັ້ນພື້ນຖານທັງພາກລັດ ແລະ ເອກະຊົນສອດຄ່ອງກັບເປົ້າ ໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະໄໝທີ VIII.

**ເຫດຜົນອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາໄດ້ກຳນົດບູລິມະສິດຄວາມຈຳເປັນ ເພື່ອແກ້ໄຂບັນຫາຜົນກະທົບຕໍ່ຄວາມສອດຄ່ອງ ແລະ ຜົນຜະລິດຂອງການສຶກສາຫຼັງຂັ້ນພື້ນຖານ ພາຍໃນປີ 2020 ຊຶ່ງລວມມີ:

1) ການພັດທະນາຊັບພະຍາກອນໃນໄລຍະຜ່ານມາຍັງບໍ່ທັນ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານທາງດ້ານປະລິມານ ແລະ ຄຸນນະພາບ ເນື່ອງຈາກວ່າຍຸດທະສາດການພັດທະນາຊັບພະຍາກອນມະນຸດປັບປຸງຍັງບໍ່ທັນສຳເລັດ, ຂາດການສຶກສາກ່ຽວກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຂາດການຕິດຕາມຜົນງານຂອງນັກສຶກສາທີ່ຮຽນຈົບຢ່າງເປັນລະບົບ, ຂາດລະບົບປະກັນຄຸນນະພາບສຳລັບສາຍການສຶກສາເຕັກນິກວິຊາຊີບ.
2) ການລົງທຶນໃນການສຶກສາຫຼັງຂັ້ນພື້ນຖານຍັງບໍ່ທັນພຽງພໍກັບ ຄວາມຕ້ອງການເພື່ອຮັບປະກັນຄຸນນະພາບຂອງການຮຽນ-ການສອນ ແລະ ຄຸນນະພາບການຮຽນພາຍໃນສະຖາບັນ ຫຼື ຄຸນນະພາບຂອງຜູ້ຮຽນຈົບ.

3) ລະບົບຄຸ້ມຄອງຂໍ້ມູນຂ່າວສານຍັງບໍ່ທັນສອດຄ່ອງ ເພື່ອເປັນ ບ່ອນອີງໃຫ້ແກ່ການວາງແຜນ ແລະ ການບໍລິການການສຶກສາ ຫຼັງຂັ້ນພື້ນຖານ.

**ພາກສ່ວນຮັບຜິດຊອບ:**

ຜົນສຳເລັດຂອງຜົນຮັບທີ່ມີລັກສະນະຍຸດທະສາດນີ້ ແມ່ນໜ້າທີ່ຮັບຜິດຊອບຮ່ວມກັນຂອງກົມມັດທະຍົມສຶກສາ, ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ, ກົມແຜນການ, ກົມສ້າງຄູ, ກົມກິດຈະການນັກສຶກສາ, ສູນວິໄຈການສຶກສາ ແລະ ກິລາ, ສູນປະກັນຄຸນນະພາບການສຶກສາ, ຫ້ອງການສະພາທີ່ປຶກສາການສຶກສາພາກເອກະຊົນ ແລະ ສະຖາບັນການສຶກສາທີ່ກ່ຽວຂ້ອງ.

**ຜົນຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 4 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ການສຶກສາຫຼັງຂັ້ນພື້ນຖານ ລວມທັງການສຶກສາໃນຊັ້ນມັດທະຍົມສຶກສາຕອນປາຍ, ການສຶກສາໃນສາຍອາຊີວະສຶກສາ, ສາຍການສຶກສາຊັ້ນສູງ ແລະ ສາຍສ້າງຄູມີຄຸນນະພາບ ແລະ ມີຄວາມສອດຄ່ອງກັບແຜນພັດທະນາຊັບພະຍາກອນມະນຸດ ແລະ ເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ.
2) ສະຖາບັນອາຊີວະສຶກສາ ແລະ ສະຖາບັນການສຶກສາຊັ້ນສູງຈັດຕັ້ງການຮຽນ-ການສອນ ຕາມແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.
3) ການລົງທຶນເຂົ້າໃນການສຶກສາຫຼັງຂັ້ນພື້ນຖານເພີ່ມຂຶ້ນ ເພື່ອຮັບປະກັນຄຸນນະພາບ ຂອງການຈັດຕັ້ງການຮຽນ-ການສອນ ແລະ ຄຸນນະພາບຂອງຜູ້ຮຽນຈົບ.
4) ການຄຸ້ມຄອງບໍລິຫານການສຶກສາຫຼັງຂັ້ນພື້ນຖານມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນ. ຂີດຄວາມສາມາດໃນການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຢີ ແລະ ການບໍລິການດ້ານເຕັກນິກເພີ່ມຂຶ້ນ.

**ຍຸດທະສາດ:**

1) ສ້າງແຜນພັດທະນາຊັບພະຍາກອນມະນຸດ ເພື່ອຕອບສະໜອງກັບຄວາມຕ້ອງການຂອງທຸກຂະແໜງການ ທັງພາກລັດ ແລະ ເອກະຊົນ.
2) ສຳຫຼວດຕະຫຼາດແຮງງານ ແລະ ຕິດຕາມຜູ້ຈົບການສຶກສາຫຼັງຂັ້ນພື້ນຖານຢ່າງເປັນປົກກະຕິ.
3) ສະໜອງສິ່ງຈູງໃຈແກ່ນັກຮຽນທີ່ເລືອກຮຽນວິຊາ ທີ່ສອດຄ່ອງກັບເປົ້າໝາຍການພັດທະນາປະເທດຊາດ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8 ແລະ ຈັດຕັ້ງການໃຫ້ຄຳປຶກສາດ້ານການປະກອບອາຊີບ.
4) ປັບປຸງຄຸນນະພາບຂອງການສຶກສາຫຼັງຂັ້ນພື້ນຖານ ຊຶ່ງລວມການປັບປຸງເນື້ອໃນຫຼັກສູດ ການສຶກສາຫຼັງຂັ້ນພື້ນຖານ, ອຸປະກອນການຮຽນ, ພື້ນຖານໂຄງລ່າງ ແລະ ວິທີການສອນ ເພື່ອໃຫ້ສອດຄ່ອງກັບຂອບວຸດທິການສຶກສາແຫ່ງຊາດ.
5) ສ້າງນະໂຍບາຍດ້ານການເງິນຂອງການສຶກສາຫຼັງຂັ້ນພື້ນຖານໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ.
6) ຂະຫຍາຍການເຂົ້າຮຽນໃນການສຶກສາຫຼັງຂັ້ນພື້ນຖານ ໂດຍສະເພາະໃນລະດັບການສຶກສາ ແລະ ຂະແໜງວິຊາຮຽນ ທີ່ມີຄວາມຕ້ອງການຕາມຍຸດທະສາດການພັດທະນາຊັບພະຍາກອນມະນຸດ ໂດຍມີການລົງທຶນໃສ່ການກໍ່ສ້າງ, ປັບປຸງ ແລະ ຂະຫຍາຍໂຮງຮຽນ/ສະຖາບັນການສຶກສາ ຫຼື ສ້າງຄະນະວິຊາ/ຂະແໜງວິຊາໃໝ່ທີ່ມີຄວາມຕ້ອງການ.
7) ສ້າງເຄື່ອງມືປະກັນຄຸນນະພາບໃຫ້ຄົບຊຸດ ແລະ ຈັດຕັ້ງການປະເມີນພາຍໃນ ແລະ ພາຍນອກຢູ່ສະຖານການສຶກສາທັງພາກລັດ ແລະ ເອກະຊົນ.
8) ພັດທະນາລະບົບກົນໄກ ແລະ ການຮ່ວມມືເພື່ອສະໜັບສະໜູນການຄົ້ນຄວ້າທີ່ມີຄຸນນະພາບສູງ, ການພັດທະນາເຕັກໂນໂລຊີ ແລະ ການບໍລິການວິຊາການ.

9) ປັບປຸງລະບົບຄຸ້ມຄອງຂໍ້ມູນຂ່າວສານໃນແຕ່ລະສາຍການສຶກສາ ເພື່ອເກັບກຳຂໍ້ມູນທີ່ຕ້ອງການສຳລັບການວາງແຜນ ແລະ ການບໍລິຫານການສຶກສາຫຼັງຂັ້ນພື້ນຖານ.

10) ສົ່ງເສີມການລົງທຶນຂອງພາກສ່ວນເອກະຊົນເຂົ້າໃນການສຶກສາ ຫຼັງການສຶກສາຂັ້ນພື້ນຖານ.

- **ນິຕິກຳທີ່ຈຳເປັນ**

1) ຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄດ້ຮັບການອະນຸມັດ ເພື່ອເປັນທິດນຳໃຫ້ແກ່ການກຳນົດເປົ້າໝາຍ ແລະ ການພັດທະນາຍຸດທະສາດ ໃຫ້ແກ່ຂະແໜງການຍ່ອຍ ຫຼື ໜ່ວຍງານການສຶກສາຫຼັງການສຶກສາຂັ້ນພື້ນຖານ.

2) ນະໂຍບາຍດ້ານການກຳນົດຂັ້ນເງິນເດືອນ ແລະ ສະຫວັດດີການສັງຄົມ ຈະຕ້ອງໄດ້ຮັບການປັບປຸງ ແລະ ການສະໜັບສະໜູນ ເພື່ອຮັບປະກັນໃຫ້ຜູ່ຮຽນຈົບວິຊາຊີບໄດ້ຮັບຄ່າຕອບແທນຕາມຄວາມສາມາດ, ຕາມລະດັບສີມື ແລະ ປະລິມານການອອກແຮງງານ.

3) ນະໂຍບາຍດ້ານການເງິນຂອງການສຶກສາຫຼັງຂັ້ນພື້ນຖານຕ້ອງໄດ້ຮັບການພັດທະນາ ລວມທັງນະໂຍບາຍການລົງທຶນ, ນະໂຍບາຍການກູ້ຢືມເງິນເພື່ອເປັນທຶນການຮຽນຂອງນັກສຶກສາ, ນະໂຍບາຍການຮ່ວມມືພາກລັດ ແລະ ເອກະຊົນ ແລະ ນະໂຍບາຍການໃຫ້ສິດເປັນເຈົ້າຕົນເອງແກ່ສະຖາບັນການສຶກສາຊັ້ນສູງ.

4) ຂອບວຸດທິການສຶກສາແຫ່ງຊາດໄດ້ຮັບການພັດທະນາຂຶ້ນ ແລະ ມີຄວາມກົມກືນກັບຂອບວຸດທິການສຶກສາຂອງບັນດາປະເທດໃນເຂດພາກພື້ນ.

5) ນະໂຍບາຍສົ່ງເສີມການຄົ້ນຄວ້າ ແລະ ຄຸ້ມຄອງການຄົ້ນຄວ້າວິທະຍາສາດ ໄດ້ຮັບການພັດທະນາ ແລະ ອະນຸມັດ.

### 3.4.8 ຜົນຮັບທີ 8: ຂະແໜງການສຶກສາ ແລະ ກິລາ ມີໂຄງສ້າງ ແລະ ມີຊັບພະຍາກອນ ແລະ ການຕິດຕາມທີ່ເໝາະສົມ ໂດຍການນຳໃຊ້ແຜນປະຈຳປີຂອງຂະແໜງການທີ່ມີການຄິດໄລ່ມູນຄ່າ ແລະ ເຊື່ອມໂຍງກັບແຜນພັດທະນາການສຶກສາ ແລະ ກິລາ 5 ປີ

- **ເຫດຜົນອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດບູລິມະສິດຄວາມຈຳເປັນເພື່ອແກ້ໄຂພາຍໃນປີ 2020 ບັນຫາກ່ຽວກັບການວາງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ບັນຫາງົບປະມານ ແລະ ການຕິດຕາມກວດກາຜົນການດຳເນີນງານຂອງຂະແໜງການ. ບັນຫາຫຼັກລວມມີ (i) ຂໍ້ຈຳກັດດ້ານການຈັດຕັ້ງໃນລະດັບສູນກາງ, ແຂວງ ແລະ ເມືອງເຮັດໃຫ້ປະສິດທິຜົນຂອງວຽກງານພັດທະນາການສຶກສາຫຼຸດລົງ. ຕົວຢ່າງ: ການຈັດສັນພະນັກງານໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຕ່ລະແຂວງ ແລະ ເມືອງແມ່ນຄືກັນໂດຍບໍ່ໄດ້ພິຈາລະນາເຖິງຈຳນວນເມືອງ ແລະ ໂຮງຮຽນທີ່ຂຶ້ນກັບ, (ii) ການວິເຄາະ ແລະ ການກຳນົດຕຳແໜ່ງງານຂອງພະນັກງານໃນຫຼາຍພາກສ່ວນຍັງບໍ່ຈະແຈ້ງ ຈຶ່ງເຮັດໃຫ້ມີຂໍ້ຫຍຸ້ງຍາກໃນການຕິດຕາມກວດກາການເຮັດວຽກງານຂອງພະນັກງານ; (iii) ລະບົບການຕິດຕາມກວດກາ ແລະ ປະເມີນຜົນທີ່ເປັນເອກະພາບລະບົບດຽວຂອງຂະແໜງການ ຍັງບໍ່ໄດ້ຮັບການຈັດຕັ້ງຢ່າງມີປະສິດທິຜົນ; ແລະ (iv) ຄວາມສອດຄ່ອງລະຫວ່າງການວາງແຜນ ແລະ ການຂຶ້ນແຜນງົບປະມານຍັງບໍ່ເຊື່ອມໂຍງກັນເທົ່າທີ່ຄວນ ຊຶ່ງສ່ວນໜຶ່ງແມ່ນມາຈາກລະບົບການແບ່ງຂັ້ນຄຸ້ມຄອງພາຍໃນຂະແໜງການ.

- **ພາກສ່ວນຮັບຜິດຊອບ:**

ຜົນສຳເລັດຂອງຜົນຮັບທີ່ມີລັກສະນະຍຸດທະສາດນີ້ແມ່ນໜ້າທີ່ຮັບຜິດຊອບຮ່ວມກັນຂອງທຸກໆກົມ ແລະ ສະຖາບັນການສຶກສາອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ ໂດຍແມ່ນຫ້ອງການກະຊວງ, ກົມຈັດຕັ້ງ ແລະ ພະນັກງານ, ກົມກວດກາ, ກົມແຜນການ, ສູນ ICT, ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ກົມການເງິນມີບົດບາດໃນການນຳພາ.

## ຜົນຮັບໄລຍະກາງ:

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 7 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ຂີດຄວາມສາມາດຂອງກະຊວງສຶກສາ ໄດ້ຮັບການປັບປຸງດີຂຶ້ນເພື່ອຄຸ້ມຄອງບໍລິຫານຂະແໜງການສຶກສາຢ່າງມີປະສິດທິຜົນ.
2) ໂຄງຮ່າງການຈັດຕັ້ງຂອງຂະແໜງການສຶກສາ ແລະ ກິລາໃນຂັ້ນສູນກາງ, ແຂວງ ແລະ ເມືອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ ເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດທັງໝົດຂອງແຜນພັດທະນາຂະແໜງການ.
3) ການບັນຈຸ ແລະ ສັບຊ້ອນພະນັກງານໃຫ້ແກ່ໜ່ວຍງານຕ່າງໆໃນຂັ້ນສູນກາງ ແລະ ທ້ອງຖິ່ນໄດ້ຮັບການທົບທວນປັບປຸງຄືນໃໝ່ໂດຍສອດຄ່ອງກັບນະໂຍບາຍການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນມະນຸດສະບັບໃໝ່.
4) ຂີດຄວາມສາມາດດ້ານການວາງແຜນການຂອງທຸກໜ່ວຍງານອ້ອມຂ້າງກະຊວງສຶກສາທິການ ແລະ ກິລາໄດ້ຮັບການປັບປຸງດີຂຶ້ນ ໂດຍການເພີ່ມຈຳນວນພະນັກງານທີ່ຜ່ານການຝຶກອົບຮົມກ່ຽວກັບ ແນວຄວາມຄິດດ້ານການວາງແຜນການ.
5) ລາຍລະອຽດໜ້າວຽກຮັບຜິດຊອບ ແລະ ຄຸນວຸດທິທີ່ຕ້ອງການສຳລັບພະນັກງານທຸກຂັ້ນໃນຂະແໜງການສຶກສາ ແລະ ກິລາ ພ້ອມດ້ວຍບົດລາຍງານຜົນງານ ອີງຕາມໜ້າທີ່ວຽກຮັບຜິດຊອບຂອງພະນັກງານໄດ້ຈັດຕັ້ງປະຕິບັດໃນຂັ້ນສູນກາງ ແລະ ທ້ອງຖິ່ນ.
6) ມີຂອບປະເມີນຜົນງານຂອງຂະແໜງການ ລວມທັງບົດບາດຂອງ EMIS, JSRM, ເຄືອຂ່າຍຄົ້ນຄວ້າ ແລະ ວິໄຈການສຶກສາ ແລະ ການຕິດຕາມກວດກາ ແລະ ປະເມີນຜົນ ທີ່ສະຫຼຸບສັງລວມໃຫ້ເຫັນໃນບົດສະເໜີລາຍງານຜົນງານຂອງຂະແໜງການໃນວາລະກອງປະຊຸມຜູ້ບໍລິຫານການສຶກສາປະຈຳປີ.
7) ການປະສານງານໃນດ້ານການວາງແຜນ ແລະ ການສ້າງແຜນງົບປະມານໂດຍການເຊື່ອມໂຍງລະຫວ່າງລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ (EMIS), ລະບົບຄຸ້ມຄອງຂໍ້ມູນພະນັກງານ (PMIS), ລະບົບຄຸ້ມຄອງຂໍ້ມູນການເງິນ (FMIS) ແລະ ລະບົບຄຸ້ມຄອງຂໍ້ມູນຄູ (TMIS) ແລະ ການຄຸ້ມຄອງບໍລິຫານໂດຍຖືເອົາໂຮງຮຽນເປັນຫຼັກ ໄດ້ຮັບການປັບປຸງ ແລະ ມີຄວາມເຂັ້ມແຂງຂຶ້ນ.

## ຍຸດທະສາດ:

1) ເພື່ອຕອບສະໜອງຕໍ່ຜົນຮັບທີ່ມີລັກສະນະຍຸດທະສາດ ແລະ ເປົ້າໝາຍແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປີ 2016-2020, ກະຊວງສຶກສາທິການ ແລະ ກິລາຈະທົບທວນ ແລະ ປັບປຸງກົງຈັກການຈັດຕັ້ງໃນຂັ້ນສູນກາງ, ແຂວງ ແລະ ເມືອງຕາມລຳດັບ. ອີງໃສ່ຜົນການທົບທວນນີ້, ກົງຈັກການຈັດຕັ້ງແຕ່ລະຂັ້ນຈະໄດ້ມີການປັບປຸງຄືນ ແລະ ອາດມີການດັດແກ້ອີກໃນປີ 2020 ຕາມຄວາມຈຳເປັນ. ການທົບທວນກົງຈັກການຈັດຕັ້ງແມ່ນຈະໄດ້ເອົາໃຈໃສ່ພິເສດຕໍ່ການແບ່ງຂັ້ນຄວາມຮັບຜິດຊອບໃຫ້ແກ່ຂັ້ນສູນກາງ, ຂັ້ນແຂວງ, ເມືອງ ແລະ ໂຮງຮຽນໃນໄລຍະ 5 ປີຄືນຫຼັງ ແລະ 5 ປີຕໍ່ໜ້າ ເພື່ອຮັບປະກັນໃຫ້ຕຳແໜ່ງງານ ແລະ ໜ້າວຽກສອດຄ່ອງກັບບົດບາດການແບ່ງຂັ້ນຄຸ້ມຄອງໃນການພັດທະນາຂະແໜງການ. ກົງຈັກການຈັດຕັ້ງປັບປຸງໃໝ່ຈະເອື້ອອຳນວຍໃຫ້ແກ່ການວາງແຜນ ແລະ ການຂຶ້ນແຜນງົບປະມານໃຫ້ມີຄວາມສອດຄ່ອງກັນ ແລະ ຄ່ອງຕົວຫຼາຍຂຶ້ນ.
2) ນະໂຍບາຍການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນມະນຸດສຳລັບກະຊວງສຶກສາທິການ ແລະ ກິລາ ທີ່ຈະໄດ້ສ້າງຂຶ້ນ ເພື່ອເປັນບັນທັດຖານໃຫ້ແກ່ການຕັດສິນໃຈກ່ຽວກັບຊັບພະຍາກອນມະນຸດຂອງຂະແໜງການແມ່ນຈະໄດ້ອີງໃສ່ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ຄວາມຕ້ອງການທີ່ຈຳເປັນຂອງວຽກປົກກະຕິປະຈຳວັນຂອງການຈັດຕັ້ງ ເພື່ອຮັບປະກັນໃຫ້ພະນັກງານແຕ່ລະຄົນມີຄວາມຮັບຜິດຊອບ ຕໍ່ການປະຕິບັດຕາມລະບົບ ແລະ ບົດບາດການພັດທະນາຂະແໜງການ ຕາມຕຳແໜ່ງງານຮັບຜິດຊອບ.

3) ຈັດຕັ້ງການທົບທວນການບັນຈຸ ແລະ ສັບຊ້ອນພະນັກງານໃຫ້ແຕ່ລະພາກສ່ວນໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອປັບປຸງປະສິດທິພາບ ແລະ ເພື່ອໃຫ້ສອດຄ່ອງກັບກົງຈັກການຈັດຕັ້ງທີ່ໄດ້ປັບປຸງໃໝ່.
4) ພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການພັດທະນາບຸກຄະລາກອນ ທີ່ມີການຮັບຮອງມາດຖານວຸດທິ ໂດຍສະເພາະແມ່ນຕຳແໜ່ງງານທີ່ເປັນບູລິມະສິດ ໃຫ້ໄດ້ຮັບການຝຶກອົບຮົມທາງດ້ານການນຳພາ, ການຄຸ້ມຄອງບໍລິຫານ ການສ້າງແຜນງົບປະມານ ແລະ ການຕິດຕາມປະເມີນຜົນການປະຕິບັດແຜນງານ ທີ່ແທດເໝາະກັບຄວາມຕ້ອງການຂອງແຜນພັດທະນາຂະແໜງການສຶກສາ.
5) ພັດທະນາແຜນການ/ໂຄງການຝຶກອົບຮົມກ່ຽວກັບການວາງແຜນ ແລະ ການສ້າງງົບປະມານ ແລະ ໃຫ້ການຝຶກອົບຮົມແກ່ພະນັກງານທຸກຄົນທີ່ຮັບຜິດຊອບວຽກງານວາງແຜນ ແລະ ງົບປະມານ
6) ສ້າງຕັ້ງຄະນະກຳມະການວາງແຜນ ແລະ ງົບປະມານເພື່ອໃຫ້ການດູແລຄວບຄຸມແຜນວຽກ ແລະ ງົບປະມານ ແລະ ເພື່ອຮັບປະກັນຄວາມກົມກືນກັນຂອງແຜນປະຈຳປີ ແລະ ການຈັດສັນງົບປະມານ ແລະ ການໃຊ້ຈ່າຍສຳລັບແຜນ.

**ນິຕິກຳທີ່ຈຳເປັນ**

1) ຜົນຮັບນີ້ມີສ່ວນພົວພັນສຳຄັນຫຼາຍຕໍ່ການປັບປຸງກົງຈັກການຈັດຕັ້ງ ເພື່ອຊ່ວຍເຮັດໃຫ້ສາມາດບັນລຸ 10 ຜົນຮັບຂອງແຜນພັດທະນາການສຶກສາ ແລະ ກິລາຢ່າງມີປະສິດທິຜົນ ແລະ ຍັງເປັນໃຈກາງທີ່ຈະນຳໄປສູ່ການບັນລຸເປົ້າໝາຍ ແລະ ຜົນຮັບທັງໝົດຂອງແຜນພັດທະນາຂອງຂະແໜງການ.
2) ມີນິຕິກຳເພື່ອຍູ້ໝູນການປະຕິບັດກົງຈັກການຈັດຕັ້ງປັບປຸງໃໝ່ ແລະ ການບັນຈຸສັບຊ້ອນພະນັກງານໃໝ່.
3) ການປ່ຽນແປງຕໍ່ນະໂຍບາຍ ແລະ ລະບຽບການກ່ຽວກັບການແຕ່ງຕັ້ງພະນັກງານ ແລະ ປະເມີນຜົນງານພະນັກງານຈະຊ່ວຍປັບປຸງໃຫ້ພະນັກງານແຕ່ລະຄົນມີຄວາມຮັບຜິດຊອບໜ້າວຽກຂອງຕົນສູງຂຶ້ນ ເພື່ອໃຫ້ເກີດຜົນຮັບອັນດີ.

### 3.4.9 ຜົນຮັບທີ 9: ແຜນການເງິນສຳລັບແຜນພັດທະນາການສຶກສາ ແລະ ກິລາ ເນັ້ນໃສ່ຫຼຸດຜ່ອນຄວາມແຕກໂຕນລະຫວ່າງບົດບາດຍິງ-ຊາຍ, ຊົນເຜົ່າ, ຄວາມທຸກຍາກ ແລະ ທ້ອງຖິ່ນ.

**ເຫດຜົນອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາໄດ້ວາງບູລິມະສິດຄວາມຕ້ອງການເພື່ອຫຼຸດຜ່ອນຄວາມແຕກໂຕນກັນທາງດ້ານໂອກາດການເຂົ້າເຖິງການສຶກສາທີ່ມີຄຸນນະພາບ ຍ້ອນຫຼາຍປັດໄຈເຊັ່ນ: ບົດບາດຍິງ-ຊາຍ, ຊົນເຜົ່າ, ຄົນພິການ, ທີ່ຕັ້ງພູມສັນຖານ ແລະ ອື່ນໆ. ແຜນທາງດ້ານການເງິນຂອງແຜນພັດທະນາການສຶກສາ 2011-15 ແມ່ນເລັ່ງໃສ່ຊ່ວຍເຫຼືອ "ຜູ້ທຸກຍາກ" ແລະ ໄດ້ກຳນົດເອົາເມືອງທີ່ດ້ອຍໂອກາດ ທາງດ້ານການສຶກສາທີ່ສຸດທັງໝົດ 56 ເມືອງເປັນເມືອງບູລິມະສິດແຕ່ມີຜົນສຳເລັດໜ້ອຍໃນການຫຼຸດຜ່ອນຄວາມແຕກໂຕນ ຕາມແນວທາງຫຼຸດຜ່ອນຄວາມທຸກຍາກ. ບັນຫາຫຼັກໆປະກອບມີຄື: (i) ການພັດທະນາການສຶກສາປະຖົມມີການປັບປຸງດີຂຶ້ນໃນທົ່ວ 56 ເມືອງທີ່ດ້ອຍໂອກາດທາງດ້ານການສຶກສາ (ສ່ວນຫຼາຍແມ່ນປະຊາຊົນບັນດາເຜົ່າ) ແຕ່ຊ່ອງຫວ່າງຕ່າງໆຍັງມີຢູ່ ແລະ ຍັງມີຄວາມຕ້ອງການຫຼາຍໆດ້ານທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ, ໃນນັ້ນ ແມ່ນຈະໄດ້ເອົາໃຈໃສ່ເປັນພິເສດທາງດ້ານບັນຫາກ່ຽວກັບພາສາທີ່ເປັນອຸປະສັກໃນການສຶກສາຂອງຊົນເຜົ່າ, (ii) ໃນຂະນະທີ່ຄວາມສະເໝີພາບບົດບາດຍິງ-ຊາຍ ສາມາດບັນລຸໄດ້ຫຼາຍສົມຄວນຢູ່ໃນການສຶກສາກ່ອນໄວຮຽນ ແລະ ການສຶກສາຊັ້ນປະຖົມ, ແຕ່ຊ່ອງຫວ່າງໃນລະດັບການສຶກສາຫຼັງປະຖົມສຶກສາຍັງມີຢູ່ ແລະ ຍັງເພີ່ມຂຶ້ນໄປເລື້ອຍໆຕາມລະດັບຂອງການສຶກສາ, (iii) ຂໍ້ມູນສະຖິຕິເດັກພິການ ຍັງບໍ່ໄດ້ບັນຈຸເຂົ້າໃນລະບົບການຄຸ້ມຄອງຂອງຂໍ້ມູນຂ່າວສານການສຶກສາ (EMIS) ຈຶ່ງບໍ່ຮູ້ຈຳນວນທີ່ແນ່ນອນ ໂດຍສະເພາະແມ່ນຢູ່ໃນຈຳນວນເດັກທີ່ບໍ່ມີໂອກາດໄດ້ເຂົ້າຮຽນ ແລະ ປະເພດຂອງເດັກພິການ, (iv) ຍັງມີການຂາດເຂີນຄູສອນປະຖົມຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ, ບ່ອນທີ່ມີຊົນເຜົ່າ ແລະ ປະຊາຊົນຜູ້ທຸກຍາກອາໃສຢູ່ ແລະ (v) ເນື່ອງຈາກງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນຂອງລັດຖະບານມີໜ້ອຍ ຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດສັນງົບປະ

ມານເພີ່ມເຕີມ ສໍາລັບກິດຈະກໍາຕ່າງໆທີ່ສະໜັບສະໜູນການຫຼຸດຜ່ອນຄວາມແຕກໂຕນ, ດັ່ງນັ້ນ ສ່ວນຫຼາຍຈຶ່ງອີງໃສ່ການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາເພື່ອສະໜັບສະໜູນກິດຈະກໍາດັ່ງກ່າວ.

**ພາກສ່ວນຮັບຜິດຊອບ:**

ການບັນລຸຜົນໄດ້ຮັບທີ່ເປັນຍຸດທະສາດດັ່ງກ່າວນີ້ ແມ່ນຄວາມຮັບຜິດຊອບຮ່ວມກັນທຸກພາກສ່ວນທັງສູນກາງ, ທ້ອງຖິ່ນ ແລະ ຊຸມຊົນ.

**ຜົນໄດ້ຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກໍານົດ 4 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ໃຫ້ງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນເພີ່ມຂຶ້ນ ໂດຍການເພີ່ມປະສິດທິພາບໃນການສັບຊ້ອນ ແລະ ນໍາໃຊ້ຄູ.
2) ການຈັດສັນ ແລະ ການສະໜອງງົບປະມານໃຫ້ບັນດາແຂວງ ແລະ ເມືອງ ເພີ່ມຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ, ຄວາມທຸກຍາກ, ບົດບາດຍິງ-ຊາຍ, ຊົນເຜົ່າ ແລະ ຄົນພິການ.
3) ທຸກໂຄງການແມ່ນມີຄາດໝາຍສະເພາະ ໃນການຫຼຸດຜ່ອນຄວາມແຕກໂຕນກັນທາງດ້ານບົດບາດຍິງ-ຊາຍ.
4) ມີບັນຊີບູລິມະສິດຮ່ວງງົບປະມານສະເພາະ (ໂດຍສະເພາະກໍ່ແມ່ນຮ່ວງເງິນບໍລິຫານທີ່ບໍ່ແມ່ນເງິນເດືອນ) ເພື່ອພິຈາລະນາຈັດສັນງົບປະມານ, ການຊໍາລະຄ່າໃຊ້ຈ່າຍຕ່າງໆ ແລະ ການຕັດງົບປະມານໃນກໍລະນີຈໍາເປັນ.

**ຍຸດທະສາດ**

1) ສູນສະຖິຕິການສຶກສາ ຈະທົບທວນ ແລະ ສະຫຼຸບລາຍຊື່ເມືອງທີ່ດ້ອຍໂອກາດທີ່ສຸດທາງດ້ານການສຶກສາ ແລະລາຍງານຜົນໄດ້ຮັບໃຫ້ແກ່ໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ພ້ອມດ້ວຍຄໍາຄິດຄໍາເຫັນຕ່າງໆທີ່ໂຄງການຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາຕ້ອງໄດ້ວາງບູລິມະສິດໃສ່ເມືອງດັ່ງກ່າວ.
2) ສູນສະຖິຕິການສຶກສາ ຕິດຕາມຄວາມຄືບໜ້າດ້ານຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ລາຍງານຢ່າງເປັນປົກກະຕິໃຫ້ຄະນະຮັບຜິດຊອບການປະສານງານ ແລະ ສະໜັບສະໜູນການຄຸ້ມຄອງ, ບໍລິຫານ, ແຜນການ, ການເງິນ ແລະ ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດວຽກງານການສຶກສາ ແລະ ກິລາກ່ຽວກັບຜົນຂອງຄວາມຄືບໜ້າດັ່ງກ່າວ. ການຕິດຕາມຄວາມສະເໝີພາບບົດບາດຍິງ-ຊາຍ ແມ່ນມີຄວາມຕ້ອງການສໍາລັບທຸກໂຄງການຢູ່ໃນຂະແໜງການ.
3) ວາງແຜນເກັບກໍາສະຖິຕິປະເພດເດັກພິການໃນທົ່ວປະເທດ ເພື່ອເປັນບ່ອນອີງໃຫ້ແກ່ການວາງເປົ້າໝາຍຂອງການລົງທຶນໃນການສະໜອງການສຶກສາ. ສະຖິຕິເດັກນັກຮຽນທີ່ເປັນຄົນພິການຈະໄດ້ຮັບການລາຍງານຢູ່ໃນລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ. ຫຼັກການ ແລະ ທັກສະຄວາມສາມາດທີ່ກ່ຽວຂ້ອງກັບເດັກທີ່ເປັນອຸປະສັກທາງດ້ານຮ່າງກາຍຈະໄດ້ນໍາເຂົ້າໃນແຜນພັດທະນາຄູກ່ອນໄປປະຈໍາການ ແລະ ຄູປະຈໍາການ.
4) ພະແນກສຶກສາທິການ ແລະ ກິລາແຂວງຈະລາຍງານປະຈໍາປີໃຫ້ກົມຈັດຕັ້ງພະນັກງານກ່ຽວກັບການບັນຈຸ ແລະສັບຊ້ອນຄູໃໝ່ໄດ້ຊ່ວຍແກ້ໄຂບັນຫາການຂາດຄູໃນເຂດຫ່າງໄກສອກຫຼີກໄດ້ດີຄືແນວໃດ.
5) ກະຊວງສຶກສາທິການ ແລະ ກິລາຈະປຶກສາຫາລື ກັບກະຊວງພາຍໃນ ແລະ ກະຊວງການເງິນ ເພື່ອຂໍເພີ່ມສ່ວນແບ່ງເງິນບໍລິຫານປົກກະຕິຂອງຂະແໜງການສຶກສາ ທີ່ບໍ່ແມ່ນເງິນເດືອນໃຫ້ສູງຂຶ້ນກວ່າເກົ່າ.
6) ການນໍາໃຊ້ງົບປະມານໃນຂັ້ນສູນກາງ, ແຂວງ ແລະ ເມືອງມີຄວາມໂປ່ງໃສ ແລະ ມີປະສິດທິຜົນ.

**ນິຕິກໍາທີ່ຈໍາເປັນ**

1) ນະໂຍບາຍເພື່ອສືບຕໍ່ໃຫ້ບູລິສິດສໍາລັບການສຶກສາເດັກກ່ອນໄວຮຽນ ແລະ ການພັດທະນາການສຶກສາຊັ້ນປະຖົມຢູ່ໃນບັນດາ ເມືອງທີ່ດ້ອຍໂອກາດທີ່ສຸດທາງດ້ານການສຶກສາ.
2) ສ້າງຍຸດທະສາດ, ຄູ່ມື ຕ່າງໆທີ່ ກ່ຽວກັບຄວາມຕ້ອງການເພື່ອແກ້ໄຂຄວາມສະເໝີພາບຍິງ-ຊາຍ ໃນທຸກໂຄງການເພື່ອສະໜອງໃຫ້ຄູ່ຮ່ວມພັດທະນາ.

3) ມີຄວາມເປັນເອກະພາບກັນກ່ຽວກັບນິຍາມ ແລະ ມາດຕະຖານຂອງຄວາມພິການຂອງເດັກເພື່ອຮວມເອົາຂໍ້ມູນ ກຸ່ມເດັກພິການເຂົ້າໃນການລາຍງານຂອງລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ ແລະ ກິລາ.
4) ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງລັດຖະກອນຄືນໃໝ່.

### 3.4.10 ຜົນຮັບທີ 10: ການສ້າງນະໂຍບາຍແມ່ນອີງໃສ່ຂໍ້ມູນ ແລະ ສະພາບຄວາມເປັນຈິງ

**ເຫດຜົນອ້າງອີງ:**

ກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ບູລິມະສິດຄວາມຕ້ອງການສ້າງຄວາມເຂັ້ມແຂງທາງດ້ານການນຳໃຊ້ຫຼັກຖານໃນການສ້າງນະໂຍບາຍ ແລະ ການຕັດສິນໃຈກ່ຽວກັບການນຳໃຊ້ແຫຼ່ງທຶນຂອງຂະແໜງການທີ່ມີຈຳກັດ ຢ່າງມີປະສິດທິຜົນ. ຕາມການຄາດຄະເນຄວາມຕ້ອງການທາງດ້ານການເງິນໃນລະຫວ່າງປີ 2016-2020 ດັ່ງນັ້ນ, ຄວນມີການປັບປຸງການ ຈັດສັນ ແລະ ນຳໃຊ້ແຫຼ່ງຊັບພະຍາກອນມະນຸດ ແລະ ພື້ນຖານໂຄງລ່າງຂອງຂະແໜງການສຶກສາຢ່າງມີປະສິດທິພາບ. ບັນຫາສຳຄັນທີ່ຈະໄດ້ແກ້ໄຂລວມມີ: (i) ລະບົບການຄຸ້ມຄອງຂໍ້ມູນການສຶກສາ, ການເງິນ ແລະ ບຸກຄະລາກອນທີ່ມີໃນປະຈຸບັນຍັງບໍ່ສາມາດຕອບສະໜອງໃຫ້ແກ່ການວາງແຜນໄດ້ ຍ້ອນວ່າການສະໜອງຂໍ້ມູນບໍ່ໄດ້ຕາມກຳນົດເວລາທີ່ຕ້ອງການ. (ii) ເຖິງແມ່ນວ່າລັດຖະບານ ແລະ ຄູ່ຮ່ວມພັດທະນາໄດ້ມີຫົວຂໍ້ການຄົ້ນຄວ້າວິໄຈຈຳນວນຫຼວງຫຼາຍ, ແຕ່ການວິເຄາະ, ສັງເຄາະ ແລະ ເຜີຍແຜ່ ຍັງຢູ່ໃນລະດັບຈຳກັດຫຼາຍເພື່ອນຳໃຊ້ເປັນບ່ອນອີງໃຫ້ແກ່ການວາງແຜນ.(iii)ຕົວຊີ້ບອກທີ່ສຳຄັນ ກ່ຽວກັບຜົນການປະຕິບັດວຽກງານເພື່ອໃຫ້ເປັນບ່ອນອີງໃນການຕິດຕາມຜົນງານຂອງຂະແໜງການຢ່າງເປັນປົກກະຕິຍັງບໍ່ທັນໄດ້ຮັບການພັດທະນາເທື່ອ. (iv) ຜົນຂອງການທົບທວນ ແລະ ຕິດຕາມ-ປະເມີນຮ່ວມຍັງເປັນບ່ອນອີງບໍ່ພຽງພໍຕໍ່ການວາງແຜນ, (v) ການຕັດສິນໃຈດ້ານການຈັດສັນງົບປະມານປະຈຳປີຍັງບໍ່ໄດ້ຮັບຂໍ້ມູນພຽງພໍຈາກການທົບທວນການຈັດຕັ້ງປະຕິບັດໂດຍທຽບກັບຜົນຮັບທີ່ໄດ້ຄາດຄະເນໄວ້ (vi) ການສ້າງແຜນພັດທະນາການສຶກສາ ແລະ ກິ ລາ ຍັງບໍ່ໄດ້ອີງໃສ່ຫຼັກຖານຜົນງານຂອງຂະແໜງການຍ່ອຍຢ່າງເປັນລະບົບ.

**ພາກສ່ວນຮັບຜິດຊອບ:**

ການບັນລຸຜົນໄດ້ຮັບທີ່ເປັນຍຸດທະສາດດັ່ງກ່າວນີ້ ແມ່ນຄວາມຮັບຜິດຊອບຮ່ວມລະຫວ່າງກົມກວດກາ, ກົມແຜນການ (ສູນສະຖິຕິ), ສູນ ICT, ກົມການເງິນ, ກົມຈັດຕັ້ງ ແລະ ພະນັກງານ ແລະ ສູນວິໄຈການສຶກສາ ແລະ ກິລາ.

**ຜົນໄດ້ຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 5 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ຖານຂໍ້ມູນລະບົບຄຸ້ມຄອງຂ່າວສານການສຶກສາ (EMIS), ລະບົບຄຸ້ມຄອງຂໍ້ມູນບຸກຄະລາກອນ (PMIS) ແລະ ລະບົບຄຸ້ມຄອງຂໍ້ມູນການເງິນ (FMIS) ແລະ (ອາດລວມທັງລະບົບຄຸ້ມຄອງຂໍ້ມູນຄູ) ໄດ້ຮັບການເຊື່ອມໂຍງເຂົ້າກັນເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນໄລຍະກາງ, ວາງແຜນຍຸດທະສາດ ແລະ ການຈັດສັນງົບປະມານປະຈຳປີດ້ວຍວິທີການລາຍງານຂໍ້ມູນໃຫ້ທັນເວລາ.
5) ຂະບວນການທົບທວນ ແລະ ຕິດຕາມ-ປະເມີນຜົນ ຮ່ວມສະໜອງຫຼັກຖານຂໍ້ມູນເພື່ອເປັນບ່ອນອີງໃຫ້ແກ່ການຕັດສິນໃຈຫຼາຍຂຶ້ນ.
6) ແຜນງົບປະມານປະຈຳປີຂອງຂະແໜງການສຶກສາ ແລະ ກິລາ ແມ່ນອີງໃສ່ບົດລາຍງານຜົນສຳເລັດຂອງຂະແໜງການສຶກສາ ແລະ ກິລາ.
7) ມີບົດສັງລວມການທົບທວນ, ບົດລາຍງານການວິໄຈ ແລະ ບົດວິໄຈຜົນງານປະຈຳປີຂອງຂະແໜງການ ເພື່ອເປັນບ່ອນອີງໃຫ້ແກ່ການທົບທວນກາງສະໄໝຂອງແຜນພັດທະນາການສຶກສາ ແລະ ກິລາ 2016-2020 ແລະ ແຜນຂອງຂະແໜງການສຳລັບ 2020-2025.

8) ມີບົດລາຍງານການປະເມີນນະໂຍບາຍ ແລະ ຍຸດທະສາດຂອງການພັດທະນາການສຶກສາ ແລະ ກິລາໃນແຕ່ລະໄລຍະ.

**ຍຸດທະສາດ**

1) ເຮັດໃຫ້ລະບົບສະຖິຕິຂໍ້ມູນການສຶກສາ, ຂໍ້ມູນການເງິນ ແລະ ຂໍ້ມູນບຸກຄະລະກອນມີຄວາມເຊື່ອມໂຍງກັນ ແລະ ຖືກນຳໃຊ້ເພື່ອຜົນປະໂຫຍດສູງສຸດໃນການວາງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.
2) ສູນວິໄຈການສຶກສາ ແລະ ກິລາ ດຳເນີນການວິໄຈໃນປະເດັນທີ່ເປັນບັນຫາກ່ຽວກັບການພັດທະນາການສຶກສາ ແລະ ກິລາ ແລະ ສັງເຄາະຜົນການຄົ້ນຄວ້າ ແລະ ວິໄຈຕ່າງໆທີ່ໄດ້ປະຕິບັດໃນປີຜ່ານມາ ເພື່ອສະເໜີແນະໃຫ້ແກ່ການປ່ຽນແປງທາງດ້ານນະໂຍບາຍ ແລະ ກຳນົດບູລິມະສິດຕ່າງໆ.
3) ສູນວິໄຈການສຶກສາ ແລະ ກິລາ ດຳເນີນການປະເມີນນະໂຍບາຍ ແລະ ຍຸດທະສາດຂອງການພັດທະນາການສຶກສາ ແລະ ກິລາໃນແຕ່ລະໄລຍະ.
4) ກົມກວດກາຮ່ວມກັບສູນສະຖິຕິກຳນົດ ແລະ ນິຍາມຊຸດຕົວຊີ້ບອກຕົ້ນຕໍ ກ່ຽວກັບການປະຕິບັດງານ ເພື່ອຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາປະຈຳປີ ແລະ ຜົນການຈັດຕັ້ງປະຕິບັດຕົວຊີ້ບອກແມ່ນຈະໄດ້ລາຍງານເປັນປະຈຳປີໃນບົດລາຍງານຜົນງານຂອງຂະແໜງການ.
5) ການທົບທວນ ແລະ ຕິດຕາມ-ປະເມີນຜົນຮ່ວມຈະພິຈາລະນາຮອບຮອມເອົາຂໍ້ມູນຈາກບົດລາຍງານກ່ຽວກັບຕົວຊີ້ບອກຕົ້ນຕໍ ຂອງການປະຕິບັດງານ ແລະ ຈາກການສຶກສາຄົ້ນຄວ້າຕາມຫົວຂໍ້ທີ່ໄດ້ຮັບການມອບໝາຍ.
6) ກົມແຜນການຮ່ວມກັບກົມການເງິນ ສ້າງແຜນງົບປະມານປະຈຳປີຂອງຂະແໜງການສຶກສາ ແລະ ກິລາ ໂດຍອີງໃສ່ແຜນຂອງແຂວງ.
7) ກົມແຜນການເປັນຜູ້ຮອບຮອມ ແລະ ເກັບຮັກສາບົດລາຍງານການປະຕິບັດວຽກງານປະຈຳປີຂອງຂະແໜງການ ແລະ ບົດລາຍງານການວິໄຈປະຈຳປີ ທີ່ສ້າງຂຶ້ນໂດຍສູນວິໄຈການສຶກສາ ແລະ ກິລາ ເພື່ອເປັນບ່ອນອີງໃຫ້ແກ່ການທົບທວນກາງສະໄໝຂອງແຜນ 2016-2020 ແລະ ການວາງແຜນຂອງຂະແໜງການສຶກສາ ແລະ ກິລາແຕ່ປີ 2020-2025.

**ນິຕິກຳທີ່ຈຳເປັນ**

1) ສ້າງລະບຽບຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ໃນລະບົບການຄຸ້ມຄອງຂໍ້ມູນຂ່າວສານຕ່າງໆ (ລະບົບຄຸ້ມຄອງຂ່າວສານການສຶກສາ (EMIS), ລະບົບຄຸ້ມຄອງຂໍ້ມູນຂ່າວສານບຸກຄະລາກອນ (PMIS) ແລະ ລະບົບຄຸ້ມຄອງຂ່າວສານການເງິນ (FMIS).
2) ມີການພົວພັນຢ່າງໃກ້ສິດກັບກະຊວງແຜນການ ແລະ ການລົງທຶນເພື່ອຮັບປະກັນວ່າ ຕ້ອງມີຂໍ້ມູນການສຳຫຼວດ ແລະ ຂໍ້ມູນປະຊາກອນທັນເວລາໃນທ້າຍປີແຕ່ລະປີ ເພື່ອການຄິດໄລ່ຕົວຊີ້ບອກການປະຕິບັດວຽກງານຂອງກະຊວງສຶກສາທິການ ແລະ ກິລາ ລວມທັງຊີ້ບອກການປະຕິບັດວຽກງານທີ່ເປັນຕົ້ນຕໍ ແລະ ການສ້າງນະໂຍບາຍລວມ.
3) ສ້າງລະບຽບການ, ນິຕິກຳ ເພື່ອຮັບປະກັນການວາງແຜນປະຈຳປີຂອງຂະແໜງການທີ່ມີການຄິດໄລ່ມູນຄ່າຈາກຂະແໜງການຍ່ອຍ ແລະ ແຂວງ.
4) ສ້າງລະບຽບການກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງເຫັນດີ ຈາກຜົນການທົບທວນ ແລະ ຕິດຕາມ-ປະເມີນຜົນຮ່ວມປະຈຳປີ.

### 3.4.11 ຜົນຮັບທີ 11: ພົນລະເມືອງລາວທຸກຄົນ ມີສຸຂະພາບເຂັ້ມແຂງ, ມີນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບທີ່ມີຄຸນນະພາບເຊື່ອມໂຍງກັບກິລາ-ກາຍຍະກຳພາກພື້ນ ແລະ ສາກົນ ແລະ ຮູ້ຮັກສາສິລະປະວັດທະນະທຳຂອງຊາດ

- **ເຫດຜົນອ້າງອີງ:**

ນັບຕັ້ງແຕ່ໄດ້ມີການຮວມຕົວເຂົ້າກັນລະຫວ່າງ ຄະນະກຳມະການກິລາແຫ່ງຊາດ ແລະ ກະຊວງສຶກສາທິການ, ຂະແໜງການຈຶ່ງມີຄວາມຮັບຜິດຊອບກວ້າງຂຶ້ນ ນັບທັງການສົ່ງເສີມປັບປຸງສຸຂະພາບທາງດ້ານຮ່າງກາຍຂອງພົນລະເມືອງດ້ວຍການອອກກຳລັງກາຍ ແລະ ເພີ່ມຄວາມສາມາດທາງດ້ານການແຂ່ງຂັນຂອງນັກກິລາລາວ ໂດຍສະເພາະການແຂ່ງຂັນປະຈຳພາກພື້ນ. ບັນຫາຫຼັກກ່ຽວກັບກິລາ-ກາຍຍະກຳປະກອບມີຄື: (i) ການສະໜັບສະໜູນທາງດ້ານສິ່ງອຳນວຍຄວາມສະດວກສຳລັບກິລາກາຍຍະກຳໃນລະດັບແຂວງ, ເມືອງ ແລະ ຢູ່ໃນອົງການຈັດຕັ້ງ, ໂຮງງານ ແລະ ຊຸມຊົນຍັງຈຳກັດ, (ii) ເຖິງວ່າພາລະສຶກສາ ແລະ ສິລະປະສຶກສາແມ່ນຫຼັກສູດໜຶ່ງຂອງຫຼັກສູດແຫ່ງຊາດ ທີ່ໄດ້ຈັດຕັ້ງປະຕິບັດໃນໂຮງຮຽນ ແລະ ສະຖາບັນການສຶກສາ ແຕ່ການຈັດຕັ້ງປະຕິບັດຫຼັກສູດຍັງບໍ່ທັນໄປຕາມຈຸດໝາຍທີ່ວາງໄວ້, ການເຄື່ອນໄຫວແຂ່ງຂັນກິລາ-ກາຍຍະກຳ, ສິລະປະວັນນະຄະດີ ຍັງບໍ່ເປັນຂະບວນການທີ່ກວ້າງຂວາງ ແລະ ຂາດສະໂມສອນກິລາໃນຂັ້ນໂຮງຮຽນ; (iii) ການນຳໃຊ້ສະໂມສອນກິລາເພື່ອແກ້ໄຂບັນຫາສິ່ງເສບຕິດ ແລະ ປະກົດການຫຍໍ້ທໍ້ທາງສັງຄົມຍັງບໍ່ພຽງພໍ, (iv) ຈຳນວນນັກກິລາທີ່ມີພອນສະຫວັນ ແລະ ນັກກິລາຊາຍ-ຍິງ, ມາດຕະຖານທາງດ້ານການແຂ່ງຂັນໃນລະດັບພາກພື້ນຍັງຕ່ຳຖ້າປຽບທຽບໃສ່ຈຳນວນພົນລະເມືອງ ແລະ (v) ມາດຕະຖານຂອງກິລາລະດັບສູງຍັງຢູ່ໃນລະດັບຕ່ຳກວ່າຄວາມຕ້ອງການ ເພື່ອເປັນສະມາຊິກຂອງຄະນະກຳມາທິການໂອລິມປິກອາຊີ ແລະ ສະໜອງກຳມະການຕັດສິນເຂົ້າໃນການແຂ່ງຂັນກິລາອາຊີເກມ ແລະ ອາຊຽນເກມ.

- **ພາກສ່ວນຮັບຜິດຊອບ:**

ການບັນລຸຜົນໄດ້ຮັບທີ່ເປັນຍຸດທະສາດດັ່ງກ່າວນີ້ແມ່ນຄວາມຮັບຜິດຊອບຮ່ວມກັນຂອງກົມກິລາລະດັບສູງ, ກົມກິລາມວນຊົນ, ກົມພາລະ ແລະ ສິລະປະສຶກສາ, ຫ້ອງການປະສານງານຄະນະກຳມະການໂອລິມປິກແຫ່ງຊາດ, ສູນຂໍ້ມູນຂ່າວສານການສຶກສາ ແລະ ກິລາ ແລະ ສະຫະພັນກິລາແຫ່ງຊາດ.

- **ຜົນໄດ້ຮັບໄລຍະກາງ:**

ຢາກບັນລຸໄດ້ຜົນຮັບຂ້າງເທິງນີ້ ກະຊວງສຶກສາທິການ ແລະ ກິລາກຳນົດ 4 ຜົນຮັບໄລຍະກາງ ເພື່ອເປັນບ່ອນອີງໃນການພັດທະນາການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ຊຶ່ງມີລາຍລະອຽດລຸ່ມນີ້:

1) ຂະບວນການເຄື່ອນໄຫວກິລາ-ກາຍຍະກຳ ໃນຂັ້ນແຂວງ ແລະ ເມືອງ ແລະ ໃນອົງການຈັດຕັ້ງຕ່າງໆ ຮວມທັງຢູ່ໃນໂຮງຈັກໂຮງງານ ແລະ ຊຸມຊົນໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມແຂງ.
2) ມີການຈັດຕັ້ງປະຕິບັດສະໂມສອນກິລາ ແລະ ການແຂ່ງຂັນກິລາທີ່ສາມາດ ຊ່ວຍໃນການຄັດເລືອກນັກຮຽນທີ່ມີພອນສະຫວັນເພື່ອ ເຂົ້າຮ່ວມໃນການແຂ່ງຂັນກິລານັກສຶກສາໃນອາຊຽນ.
3) ຈຳນວນນັກກິລາທີ່ມີພອນສະຫວັນ ແລະ ທີມກິລາແຫ່ງຊາດທີ່ມີມາດຕະຖານໃນລະດັບພາກພື້ນເພີ່ມຂຶ້ນ.
4) ຄູຝຶກ ແລະ ກຳມະການຕັດສິນກິລາຂອງລາວໄດ້ຜ່ານການຝຶກອົບຮົມ ແລະ ມີເງື່ອນໄຂຄຸນສົມບັດແທດເໝາະຕາມມາດຖານຂອງຄະນະກຳມາທິການໂອລິມປິກອາຊີ.
5) ການຮຽນ-ການສອນວິຊາພະລະສຶກສາ ແລະ ສິລະປະສຶກສາໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ມີຄູພະລະສຶກສາ ແລະ ສິລະປະສຶກສາເພີ່ມຂຶ້ນ, ນັກຮຽນ-ນັກສຶກສາເຂົ້າຮ່ວມການແຂ່ງຂັນທາງພາຍໃນ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ.

- **ຍຸດທະສາດ**

1) ແຜນປະຕິບັດງານຂອງກິລາ ຈະໄດ້ຮັບການທົບທວນໃນສະພາວະຄວາມເປັນຈິງຂອງການຈັດສັນງົບປະມານ ແລະ ບູລິມະສິດສຳລັບການຈັດຕັ້ງປະຕິບັດທີ່ໄດ້ກຳນົດ. ຂອບວຽກງານສຳລັບການກຳນົດນັກຮຽນທີ່ມີພອນສະ

ຫວັນຈະໄດ້ຮັບການພັດທະນາ ແລະ ສະໜັບສະໜູນ ໂດຍການສ້າງໂຮງຮຽນນັກກິລາທີ່ມີພອນສະຫວັນ ແລະ ສູນກິລາ-ກາຍຍະກໍາປະຈໍາພາກ 3 ແຫ່ງ.

2) ສູນຝຶກອົບຮົມກິລາ-ກາຍຍະກໍາແຫ່ງຊາດຈະໄດ້ຮັບການຍົກລະດັບໃຫ້ກາຍເປັນສະຖາບັນ.
3) ແຜນປະຕິບັດງານທີ່ເນັ້ນໜັກໃສ່ ມາດຕະການໃນການເຂົ້າຮ່ວມຄະນະກໍາມາທິການໂອລິມປິກອາຊີ ໄດ້ຮັບການພັດທະນາ ແລະ ຈັດຕັ້ງປະຕິບັດ.
4) ຈັດການແຂ່ງຂັນສີລະປະວັນນະຄະດີຂັບ ແລະ ກິລາ-ກາຍຍະກໍາທັງໃນໂຮງຮຽນ ແລະ ນອກໂຮງຮຽນ ລະຫວ່າງເມືອງຕໍ່ເມືອງ, ແຂວງຕໍ່ແຂວງ ເປັນປະຈໍາ.

- **ນິຕິກໍາທີ່ຈໍາເປັນ**

1) ນິຕິກໍາເພື່ອສ້າງໂຮງຮຽນນັກກິລາ ທີ່ມີພອນສະຫວັນໃນລະດັບສູນກາງພ້ອມສູນກິລາ-ກາຍຍະກໍາປະຈໍາພາກ 3 ແຫ່ງ.
2) ນິຕິກໍາເພື່ອນໍາໃຊ້ສະໂມສອນກິລາ ແລະ ການແຂ່ງຂັນກິລາເຂົ້າໃນຫຼັກສູດການຮຽນໃນໂຮງຮຽນ.
3) ນະໂຍບາຍເພື່ອສະໜັບສະໜູນຜູ່ທີ່ມີພອນສະຫວັນທາງດ້ານກິລາໃນທຸກລະດັບ.

# IV. ຊັບພະຍາກອນ ແລະ ຄວາມຕ້ອງການດ້ານການເງິນ

## 4.1 ພາກສະເໜີ

ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2011-2015 ຮຽກຮ້ອງໃຫ້ມີການຂະຫຍາຍລະບົບການສຶກສາໄປຄຽງຄູ່ກັບການປັບປຸງຄຸນນະພາບການສຶກສາ. ສະນັ້ນ, ເພື່ອຕອບສະໜອງການເງິນໃຫ້ແກ່ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ມີຄວາມຮຽກຮ້ອງໃຫ້ເພີ່ມສ່ວນແບ່ງງົບປະມານແຫ່ງລັດຈາກລະດັບ 13% ຫາ 18% ພ້ອມທັງເພີ່ມການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ເພື່ອປິດຊ່ອງວ່າງດ້ານການເງິນ. ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຍັງໄດ້ສະແດງໃຫ້ເຫັນວ່າສ່ວນແບ່ງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນທີ່ໄດ້ຮັບໃນແຕ່ລະປີຕໍ່າ ໄດ້ສົ່ງຜົນກະທົບຕໍ່ການປັບປຸງຄຸນນະພາບການຮຽນ-ການສອນ ແລະ ການປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາ. ສະນັ້ນ, ຢູ່ໃນແຜນດັ່ງກ່າວ ຈຶ່ງໄດ້ສະເໜີໃຫ້ເພີ່ມສ່ວນແບ່ງຄ່າໃຊ້ຈ່າຍທີ່ບໍ່ແມ່ນເງິນເດືອນຂຶ້ນເຖິງ 25%ຂອງງົບປະມານຂະແໜງການສຶກສາທັງໝົດ ພາຍໃນປີ 2015, ເຊິ່ງການເພີ່ມຂຶ້ນນີ້ ແມ່ນເຫັນໄດ້ຊັດເຈນຈາກການປະຕິບັດນະໂຍບາຍການສະໜອງເງິນບໍລິຫານໂຮງຮຽນ. ເຖິງຢ່າງໃດກໍ່ດີ, ໃນຊ່ວງໄລຍະ 5 ປີຜ່ານມາ, ການພັດທະນາຂະແໜງການສຶກສາໄດ້ຖືເອົາການຂະຫຍາຍລະບົບການສຶກສາ (ການກໍ່ສ້າງໂຮງຮຽນ ແລະ ການບັນຈຸຄູ) ແລະ ການເພີ່ມເງິນເດືອນຄູເປັນບູລິມະສິດສໍາຄັນ ເຊິ່ງເຮັດໃຫ້ງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ຢູ່ໃນລະດັບ 10% ເທົ່ານັ້ນທຽບໃສ່ງົບປະມານທັງໝົດຂອງສຶກສາ.

**ຮູບສະແດງ ທີ 1 – ງົບປະມານສຳລັບການສຶກສາ[10] ໃນແຜນພັດທະນາຂະແໜງການສຶກສາປີ 2011-2015**

(ເປັນເງິນກີບ, ລາຄາປະຈຸບັນ)




ຮູບສະແດງ 1 ຂ້າງເທິງຊີ້ໃຫ້ເຫັນວ່າໃນຊ່ວງໄລຍະປີ 2011-2014 ງົບປະມານສຳລັບຂະແໜງການສຶກສາ ເຊິ່ງລວມທັງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໄດ້ເພີ່ມຂຶ້ນຈາກ 1,370 ຕື້ກີບ (216 ລ້ານ ໂດລາ) ມາເປັນ 3,942 ຕື້ກີບ (493 ລ້ານ ໂດລາ) ແຕ່ຕົກມາຮອດປີ 2015 ຂະແໜງການສຶກສາໄດ້ຮັບງົບປະມານພຽງແຕ່ 3,714 ຕື້ກີບ (464 ລ້ານ ໂດລາ) ທັງນີ້ກໍ່ຍ້ອນວ່າລັດຖະບານໄດ້ເລີ່ມປະຕິບັດການລວມແຜນງານການເງິນ ມາເປັນແຜນງານອັນດຽວກັນເພື່ອຫຼຸດຜ່ອນງົບປະມານຂາດດຸນ ດ້ວຍການຫຼຸດຜ່ອນຄ່າໃຊ້ຈ່າຍລົງ ໂດຍຮັກສາດັດຊະນີເງິນເດືອນໃຫ້ຢູ່ຄືເດີມ ແລະ ຕັດການລົງທຶນລົງ.

ໃນຕາຕະລາງຂ້າງລຸ່ມນີ້ ໄດ້ສະແດງໃຫ້ເຫັນວ່າ ໃນສົກປີ 2012-2013 ງົບປະມານລວມຂອງຂະແໜງສຶກສາ ແລະ ກິລາ ທີ່ໄດ້ຮັບ ເຫັນວ່າລື່ນຕົວເລກທີ່ກຳນົດໃນແຜນ 5 ປີ, ທັງນີ້ກໍ່ຍ້ອນວ່າການເພີ່ມຂຶ້ນຂອງງົບປະມານເງິນເດືອນ. ແຕ່ໃນຕົວຈິງ ຂະແໜງການສຶກສາ ແລະ ກິລາ ບໍ່ໄດ້ຮັບສ່ວນແບ່ງງົບປະມານຈາກລັດຖະບານຕາມທີ່ກຳນົດໄວ້ໃນແຜນ 5 ປີ (2011-2015). ໃນສົກປີ 2014-2015 ສ່ວນແບ່ງງົບປະມານທີ່ລັດຖະບານສະໜອງໃຫ້ຂະແໜງການສຶກສາ ແລະ ກິລາ ມີພຽງແຕ່ 14.6% ເທົ່ານັ້ນ ຊຶ່ງໃນແຜນໄດ້ກຳນົດໄວ້ 18%.

**ຕາຕະລາງ 5: ຄາດໝາຍຄວາມຕ້ອງການດ້ານການເງິນ ໃນແຜນ 5 ປີ (2011-2015) ທຽບໃສ່ງົບປະມານທີ່ໄດ້ຮັບຕົວຈິງ**

| | 2010/11 | 2011/12 | 2012/13 | 2013/14 | 2014/15 |
|---|---|---|---|---|---|
| ຄາດຄະເນສັດສ່ວນງົບປະມານສຶກສາ ໃນແຜນ 5 ປີ (2011-2015) ທຽບໃສ່ລາຍຈ່າຍລັດຖະບານ (*) | 13.2% | 14.4% | 15.6% | 16.8% | 18.0% |
| ຄວາມຕ້ອງການດ້ານການເງິນ ໃນແຜນ 5 ປີ (2011-2015) (ລ້ານກີບ) (*) | 2,430 | 2,525 | 2,678 | 2,742 | 2,903 |
| ງົບປະມານທີ່ໄດ້ຮັບຕົວຈິງ (ລ້ານກີບ) (**) | 1,730 | 2,009 | 3,302 | 3,942 | 3,714 |
| ສ່ວນແບ່ງຕົວຈິງ (**) | 13.2% | 13.0% | 14.5% | 15.5% | 14.6% |

ແຫຼ່ງຂໍ້ມູນ: (*) ຂໍ້ມູນຈາກ ແຜນພັດທະນາຂະແໜງການສຶກສາ (ESDP). (**) ຂໍ້ມູນຈາກກະຊວງການເງິນ

10 ງົບປະມານທີ່ໄດ້ຮັບການອະນຸມັດຈາກສະພາແຫ່ງຊາດ.

## 4.2 ຄວາມຕ້ອງການດ້ານການເງິນ ສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2016-2020) ໄດ້ເນັ້ນໃສ່ການຂະຫຍາຍການສຶກສາກ່ອນໄວຮຽນ, ການສຶກສາຊັ້ນປະຖົມ, ມັດທະຍົມຕອນຕົ້ນ, ອາຊີວະສຶກສາ ແລະ ການຍົກລະດັບຄຸນນະພາບການສຶກສາໃຫ້ສູງຂຶ້ນ. ເພາະສະນັ້ນ, ໃນແຜນພັດທະນາການສຶກສາ ແລະ ກິລາ ຈຶ່ງຮຽກຮ້ອງໃຫ້ເພີ່ມການລົງທຶນເຂົ້າໃສ່ຂະແໜງການຍ່ອຍດັ່ງກ່າວ ລວມທັງງົບປະມານເພື່ອໃຊ້ຈ່າຍເຂົ້າໃນການປະຕິບັດງານ ແລະ ບໍລິຫານການສຶກສາ ເຊັ່ນ: ເງິນບໍລິຫານໂຮງຮຽນ, ເງິນສຳລັບການບຳລຸງຄູ, ການບຳລຸງຮັກສາປຶ້ມແບບຮຽນ, ເງິນສຳລັບການລົງຕິດຕາມຂອງຄູສຶກສານິເທດ ແລະ ອື່ນໆ.

ເພື່ອຈະບັນລຸວຽກງານໃນຊ່ວງໄລຍະການສະໄໝນີ້, ມີຄວາມຈຳເປັນຕ້ອງເພີ່ມງົບປະມານໃຊ້ຈ່າຍບໍລິຫານ ແລະ ງົບປະມານການລົງທຶນຂຶ້ນໃຫ້ສູງ ເມື່ອທຽບໃສ່ງົບປະມານຂອງສົກ 2014/15. ຄ່າໃຊ້ຈ່າຍເງິນເດືອນ (ລວມທັງເບ້ຍລ້ຽງ/ນະໂຍບາຍອື່ນໆ) ທາງດ້ານຈຳນວນຄວນຈະເພີ່ມຂຶ້ນພຽງເລັກໜ້ອຍເທົ່ານັ້ນ ແຕ່ສ່ວນແບ່ງຄວນຫຼຸດລົງ ເມື່ອທຽບໃສ່ງົບປະມານທັງໝົດຂອງຂະແໜງການສຶກສາ ແລະ ກິລາ ດັ່ງທີ່ໄດ້ສະແດງໃຫ້ເຫັນໃນຕາຕະລາງ 2 ແລະ 3 ຂ້າງລຸ່ມນີ້

ຄວາມຕ້ອງການຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນຄິດໄລ່ບົນພື້ນຖານການຈັດຕັ້ງປະຕິບັດທຸກເປົ້າໝາຍ ແລະ ນະໂຍບາຍຂອງແຜນງານພັດທະນາຂະແໜງການສຶກສາ ແລະ ກິລາ ໃນລະດັບຊາດ. ກົມແຜນການໄດ້ພັດທະນາເຄື່ອງມືທີ່ເຮັດການວິໄຈ ແລະ ການຄາດຄະເນໂດຍ ນຳໃຊ້ໂປຣແກັມເອັກແຊວ (Excel) ທີ່ຄາດຄະເນການໃຊ້ຈ່າຍຕ່າງໆເພື່ອຮັບໃຊ້ນະໂຍບາຍການພັດທະນາການສຶກສາ ຊຶ່ງອີງຕາມຂໍ້ມູນພື້ນຖານຈາກລະບົບຄຸ້ມຄອງຂໍ້ມູນການສຶກສາ (EMIS), ມູນຄ່າຫົວໜ່ວຍ ແລະ ບັນດາຈຸດປະສົງທີ່ໄດ້ກຳນົດໄວ້ ກໍ່ຄືຜົນຜະລິດ ແລະ ຜົນຮັບທີ່ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາ. ຕົວຢ່າງ: ເຄື່ອງມືຄາດຄະເນນີ້ ໄດ້ຮວມເອົາການຄາດຄະເນເງິນບໍລິຫານໂຮງຮຽນ (SBG), ຄ່າໃຊ້ຈ່າຍເຂົ້າໃນການຊື້ ປຶ້ມແບບຮຽນທົດແທນ, ການກໍ່ສ້າງໂຮງຮຽນ ແລະ ອື່ນໆ ເປັນຕົ້ນ . ເຄື່ອງມືການວາງແຜນນີ້ ຍັງປະເມີນຜົນກະທົບດ້ານການເງິນຕໍ່ແຜນພັດທະນາການສຶກສາ ໂດຍທຽບກັບຂໍ້ຈຳກັດດ້ານງົບປະມານໃນໄລຍະ 5 ປີຕໍ່ໜ້າ ແລະ ເຄື່ອງມືດັ່ງກ່າວຍັງຊ່ວຍປະເມີນ ຫຼື ຄາດຄະເນຊ່ອງວ່າງດ້ານການເງິນເພື່ອນຳມາຈັດຕັ້ງປະຕິບັດຈຸດປະສົງນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

ຕາຕະລາງ 6 ແລະ 7 ຂ້າງລຸ່ມນີ້ສະແດງໃຫ້ເຫັນຄາດຄະເນຄວາມຕ້ອງການດ້ານການເງິນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດທຸກເປົ້າໝາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາໃນໄລຍະ 2016-2020.

**ຕາຕະລາງ 6: ຄວາມຕ້ອງການດ້ານການເງິນເພື່ອຈັດຕັ້ງປະຕິບັດແຜນງານ (ລ້ານກີບ)**

| | ***2014/15 (ງົບປະມານຕົວຈິງ)*** | **2015/16 (ຄາດຄະເນ)** | **2016/17 (ຄາດຄະເນ)** | **2017/18 (ຄາດຄະເນ)** | **2018/19 (ຄາດຄະເນ)** | **2019/20 (ຄາດຄະເນ)** |
|---|---|---|---|---|---|---|
| ງົບປະມານທັງໝົດສຳລັບຂະແໜງການສຶກສາ ແລະ ກິລາ | **3,714,502** | **4,416,806** | **4,898,126** | **4,969,860** | **5,322,760** | **5,517,092** |
| ເງິນເດືອນ ແລະ ເງິນອຸດໜູນ | 2,559,651 | 2,682,429 | 2,747,936 | 2,810,165 | 2,984,690 | 3,116,871 |
| ເງິນບໍລິຫານທີ່ບໍ່ແມ່ນເງິນເດືອນ | 437,566 | 940,681 | 1,064,420 | 1,057,159 | 1,083,845 | 1,141,598 |
| ການລົງທຶນ (**ບໍ່ລວມ** ODA) | 717,285(*) | 793,696 | 1,085,770 | 1,102,537 | 1,254,225 | 1,258,623 |

*(*) ລວມ ODA*

ແຫຼ່ງຂໍ້ມູນ: ກົມແຜນການ ກະຊວງສຶກສາທິການ ແລະ ກິລາ

**ຕາຕະລາງ 7: ສັດສ່ວນຂອງງົບປະມານທີ່ຕ້ອງການສຳລັບຂະແໜງການສຶກສາ ແລະ ກິລາ (ຄິດເປັນ %)**

| | 2014/15 (ງົບປະມານຕົວຈິງ) | 2015/16 (ຄາດຄະເນ) | 2016/17 (ຄາດຄະເນ) | 2017/18 (ຄາດຄະເນ) | 2018/19 (ຄາດຄະເນ) | 2019/20 (ຄາດຄະເນ) |
|---|---|---|---|---|---|---|
| ເງິນເດືອນ ແລະ ເງິນອຸດໜູນ | 69 | 61 | 56 | 57 | 56 | 56 |
| ເງິນບໍລິຫານທີ່ບໍ່ແມ່ນເງິນເດືອນ | 10 | 21 | 22 | 21 | 20 | 21 |
| ການລົງທຶນ | 19 | 18 | 22 | 22 | 24 | 23 |

*ແຫຼ່ງຂໍ້ມູນ: ກົມແຜນການ ກະຊວງສຶກສາທິການ ແລະ ກິລາ*

ຕາຕະລາງ 6 ແລະ 7 ສະແດງໃຫ້ເຫັນວ່າ ຄວາມຕ້ອງການດ້ານການເງິນສຳລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຮຽກຮ້ອງໃຫ້ຫຼຸດສັດສ່ວນງົບປະມານບ້ວງເງິນເດືອນ ແລະ ເງິນອຸດໜູນລົງຈຳນວນໜຶ່ງ ເພື່ອເຮັດໃຫ້ສັດສ່ວນງົບປະມານທີ່ບໍ່ແມ່ນເງິນເດືອນເພີ່ມຂຶ້ນ ເພື່ອນຳໄປສະໜັບສະໜູນການຈັດຕັ້ງປະຕິບັດບັນດານະໂຍບາຍຕ່າງໆ. ໄປຄຽງຄູ່ກັນນັ້ນ ກໍ່ຍັງມີຄວາມຈຳເປັນຕ້ອງເພີ່ມງົບປະມານລົງທຶນ ໃນອັດຕາສ່ວນເທົ່າທຽມກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໃນຊ່ວງໄລຍະ 2016-2020.

ຕາຕະລາງ 8 ຂ້າງລຸ່ມນີ້ສະແດງໃຫ້ເຫັນອັດຕາສ່ວນແບ່ງຄວາມຕ້ອງການດ້ານງົບປະມານ ສຳລັບຂະແໜງການຍ່ອຍຕ່າງໆ ໃນໄລຍະແຕ່ 2016-2020. ເມື່ອພິຈາລະນາເຖິງການຄາດຄະເນທາງດ້ານປະຊາກອນ ແລະ ການຂະຫຍາຍລະບົບການສຶກສານັ້ນ ມາຮອດເວລານີ້ຈະເຫັນໄດ້ວ່າການຈັດສັນສ່ວນແບ່ງງົບປະມານໃຫ້ແກ່ວຽກງານສຶກສາໃນລະດັບຊັ້ນປະຖົມຄວນຈະຫຼຸດລົງ ເພື່ອຫັນໄປສະໜັບສະໜູນວຽກງານການສຶກສາເດັກກ່ອນໄວຮຽນ, ການສຶກສາຊັ້ນມັດທະຍົມຕອນປາຍ ແລະ ອາຊີວະສຶກສາ, ສ່ວນຂະແໜງການຍ່ອຍອື່ນໆ ແມ່ນຢູ່ໃນລະດັບເດີມທຽບໃສ່ງົບປະມານທັງໝົດຂອງສຶກສາ.

**ຕາຕະລາງ 8: ອັດຕາສ່ວນແບ່ງຄວາມຕ້ອງການດ້ານການເງິນຂອງຂະແໜງການຍ່ອຍ (ຄິດເປັນ%)**

| ການສຶກສາກ່ອນໄວຮຽນ | 2015/16 | 2016/17 | 2017/18 | 2018/19 | 2019/20 |
|---|---|---|---|---|---|
| ການສຶກສາກ່ອນໄວຮຽນ | 8.5 | 8.6 | 9.6 | 10.1 | 11.0 |
| ປະຖົມສຶກສາ | 36.2 | 33.2 | 32.7 | 30.8 | 30.4 |
| ມັດທະຍົມຕົ້ນ | 21.5 | 22.0 | 21.7 | 22.0 | 21.6 |
| ມັດທະຍົມປາຍ | 10.6 | 11.7 | 12.1 | 12.6 | 12.2 |
| ອາຊີວະສຶກສາ | 3.6 | 3.9 | 4.0 | 4.2 | 4.2 |
| ສ້າງຄູ | 2.5 | 2.1 | 2.0 | 1.9 | 1.9 |
| ການສຶກສາຊັ້ນສູງ | 5.1 | 6.1 | 5.8 | 5.8 | 5.7 |
| ການສຶກສານອກໂຮງຮຽນ | 1.1 | 1.0 | 0.9 | 1.0 | 1.0 |
| ບໍລິຫານ | 9.9 | 9.6 | 9.7 | 10.3 | 10.2 |
| ກິລາ- ກາຍຍະກາ | 1.0 | 1.9 | 1.4 | 1.3 | 1.8 |

*ແຫຼ່ງຂໍ້ມູນ: ກົມແຜນການ ກະຊວງສຶກສາທິການ ແລະ ກິລາ*

## 4.3 ຄາດຄະເນງົບປະມານພາຍໃນ

ງົບປະມານພາຍໃນທີ່ຈະຈັດສັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາແຕ່ປີ 2016-2020 ແມ່ນຂຶ້ນກັບການເຕີບໂຕຂອງເສດຖະກິດ ແລະ ນະໂຍບາຍດ້ານການເງິນຂອງລັດຖະບານເປັນປັດໄຈສຳຄັນ. ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII, ລັດຖະບານຕັ້ງຄວາມຫວັງວ່າ ການເຕີບໂຕທາງດ້ານເສດຖະກິດໃນໄລຍະ 5 ປີຈະສະໝໍ່າສະເໝີຢູ່ໃນລະດັບສະເລ່ຍ 7.5%. ໃນຂະນະດຽວກັນນັ້ນ, ກໍ່ມີຈຸດມຸ່ງໝາຍດຳເນີນນະໂຍບາຍສ້າງຄວາມເຂັ້ມແຂງດ້ານການເງິນຂອງລັດຖະບານ ແນ່ໃສ່ເຮັດໃຫ້ການເງິນແຫ່ງລັດມີຄວາມຍືນຍົງ ແລະ ຄ່າໃຊ້ຈ່າຍຂອງລັດທຽບໃສ່ຂອງລວມຍອດຜະລິດຕະພັນພາຍໃນ ຈະຄ່ອຍໆຫຼຸດລົງໃນແຕ່ລະປີ.

ໃນໄລຍະຜ່ານມາ ສະພາແຫ່ງຊາດໄດ້ກຳນົດເປົ້າໝາຍໄວ້ໃນແຜນວ່າ ງົບປະມານສຳລັບຂະແໜງການສຶກສາ ແລະ ກິລາ ຄວນຢູ່ໃນລະດັບອັດຕາສ່ວນ 17% ຂອງງົບປະມານແຫ່ງລັດ[11]. ເຖິງຢ່າງໃດກໍ່ດີ, ເປົ້າໝາຍດັ່ງກ່າວນີ້ກໍ່ຍັງບໍ່ສາມາດປະຕິບັດໃຫ້ບັນລຸໄດ້ ຍ້ອນບັນຫາການຂາດດູນດ້ານການເງິນຂອງລັດຖະບານ. ໃນສົກປີ 2014/15 ສ່ວນແບ່ງງົບປະມານທີ່ຂະແໜງການສຶກສາໄດ້ຮັບອະນຸມັດ ແມ່ນຢູ່ໃນລະດັບປະມານ 14.6% ຂອງງົບປະມານແຫ່ງລັດ.

ແຕ່ເພື່ອຈຸດປະສົງສຳລັບການວາງແຜນ, ການຄິດໄລ່ສ່ວນແບ່ງງົບປະມານຂອງສຶກສາ ແມ່ນຄິດໄລ່ໂດຍອີງໃສ່ງົບປະມານພາຍໃນຂອງລັດຖະບານ (ບໍ່ໄດ້ລວມເອົາງົບປະມານການກູ້ຢືມ ແລະ ຊ່ວຍເຫຼືອລ້າ), ດັ່ງນັ້ນ ພວກເຮົາຈຶ່ງສາມາດສົມທຽບໄດ້ລະຫວ່າງຊ່ອງຫວ່າງດ້ານການເງິນ ແລະ ຄາດຄະເນງົບປະມານຊ່ວຍເຫຼືອທາງການເພື່ອການພັດທະນາ.ພາຍໃຕ້ວິທີການດັ່ງກ່າວນີ້ ໃນສົກປີ 2015-2016 ສ່ວນແບ່ງງົບປະມານຂອງຂະແໜງການສຶກສາ ແມ່ນບັນລຸໄດ້ 17%[12].

ອີງຕາມການຄາດຄະເນຄວາມຕ້ອງການດ້ານການເງິນ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄລຍະ 2016-2020 ທີ່ໄດ້ນຳສະເໜີໃນມະໂນພາບລວມຂ້າງເທິງນັ້ນ, ບັນຫາສຳຄັນກໍ່ຄືຕ້ອງໄດ້ຄາດຄະເນຄວາມຕ້ອງການເຖິງວ່າຈະມີຊັບພະຍາກອນຮອງຮັບແຜນຄາດຄະເນນັ້ນໄດ້ ຫຼື ບໍ່ກໍ່ຕາມ. ຊ່ອງວ່າງດ້ານການເງິນ ຫຼື ງົບສ່ວນເກີນແມ່ນໝາຍເຖິງຄວາມແຕກຕ່າງລະຫວ່າງຄວາມຕ້ອງການທັງໝົດ ຂອງແຜນງານພັດທະນາຂະແໜງການສຶກສາ ແລະ ກິລາ ທີ່ໄດ້ນຳສະເໜີມາຂ້າງເທິງນັ້ນ ແລະ ຄາດຄະເນຊັບພະຍາກອນພາຍໃນທີ່ມີ. ຕາຕະລາງ 5 ລຸ່ມນີ້ ສະແດງງົບປະມານຂອງຂະແໜງການສຶກສາ ແລະ ກິລາ ຖ້າຫາກລັດຖະບານສະໜອງງົບປະມານໃຫ້ສຶກສາຢູ່ໃນລະດັບ 17% ໃນແຕ່ລະປີ.

ແຕ່ສຳຄັນຕ້ອງເຂົ້າໃຈວ່າ ລັດຖະບານອາດມີການດັດປັບຄາດຄະເນລາຍຈ່າຍໄລຍະກາງລົງ ແລະ ການຄາດຄະເນການຊ່ວຍເຫຼືອທາງການເພື່ອການພັດທະນາ ແມ່ນລວມເອົາທັງການຊ່ວຍເຫຼືອໃນຮູບແບບການຊ່ວຍເຫຼືອທາງວິຊາການ ແລະ ການຮ່ວມມືດ້ານວິຊາການ, ນັ້ນກໍ່ໝາຍຄວາມວ່າ ງົບປະມານດັ່ງກ່າວຈະບໍ່ໄດ້ໃຊ້ຈ່າຍເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາໂດຍກົງ. ດັ່ງນັ້ນ, ຊ່ອງຫວ່າງດ້ານການເງິນອາດມີຫຼາຍກວ່ານັ້ນ ຫຼື ສ່ວນເກີນອາດບໍ່ມີເລີຍ.

---

[11] ສ່ວນແບ່ງງົບປະມານຂອງສຶກສາທຽບໃສ່ລາຍຈ່າຍລັດຖະບານ ປົກກະຕິແລ້ວຈະຄິດໄລ່ໂດຍອີງໃສ່ລາຍຈ່າຍຂັ້ນຕົ້ນຂອງລັດຖະບານເຊັ່ນ: ງົບປະມານລັດຖະບານທັງໝົດລົບໃຫ້ໜີ້ສິນລັດຖະບານ ແລະ ຄັງສະສົມ.

[12] ນີ້ໄດ້ສະແດງໃຫ້ເຫັນວ່າ ຂະແໜງການສຶກສາໄດ້ຮັບທຶນ ODA ຕ່ຳກວ່າ 17% ຂອງ ທຶນ ODA ທັງໝົດພາຍໃນປະເທດ. ໃນສົກປີ 2015-2016 ນີ້ ສຶກສາໄດ້ຮັບ ທຶນ ODA ພຽງແຕ່ 10.7% ຂອງ ທຶນ ODA ທັງໝົດພາຍໃນປະເທດ.

**ຕາຕະລາງ 9: ຂໍ້ຈຳກັດດ້ານການເງິນ ແລະ ຊ່ອງຫວ່າງ/ສ່ວນເກີນດ້ານການເງິນ (ລ້ານກີບ)**

| | 2015/16 (ອະນຸມັດ) | 2016/17 (ຄາດຄະເນ) | 2017/18 (ຄາດຄະເນ) | 2018/19 (ຄາດຄະເນ) | 2019/20 (ຄາດຄະເນ) |
|---|---|---|---|---|---|
| ຄ່າໃຊ້ຈ່າຍຂັ້ນຕົ້ນຂອງລັດຖະບານ (ບໍ່ລວມ ODA) | 19,777,000 | 21,989,000 | 24,655,000 | 27,603,000 | 30,866,000 |
| ການຈັດສັນສ່ວນແບ່ງສຳລັບຂະແໜງການສຶກສາ ແລະ ກິລາ (%)(ບໍ່ລວມ ODA) | 17.0 | 17.0 | 17.0 | 17.0 | 17.0 |
| ການຈັດສັນສ່ວນແບ່ງສຳລັບຂະແໜງການສຶກສາ ແລະ ກິລາ (ບໍ່ລວມ ODA) | 3,383,825 | 3,738,130 | 4,191,350 | 4,692,510 | 5,247,220 |
| ຄວາມຕ້ອງການດ້ານການເງິນ | 4,416,806 | 4,898,126 | 4,969,860 | 5,322,760 | 5,517,092 |
| ຊ່ອງວ່າງດ້ານການເງິນ/ງົບປະມານສ່ວນເກີນ (ບໍ່ລວມ ODA) | -1,032,981 | -1,159,996 | -778,510 | -630,250 | -269,872 |
| ງົບທີ່ ODA ໄດ້ຈັດສັນແກ່ຂະແໜງການສຶກສາ ແລະ ກິລາ | 656,000 | 619,000 | 625,000 | 705,000 | 625,000 |
| ຊ່ອງວ່າງດ້ານການເງິນ/ງົບປະມານສ່ວນເກີນ (ລວມ ODA) | -376,981 | -540,996 | -153,510 | 74,750 | 355,128 |
| ຊ່ອງວ່າງດ້ານການເງິນ/ງົບປະມານສ່ວນເກີນທີ່ສະສົມໃນແຕ່ລະປີ | -376,981 | -917,977 | -1,071,487 | -966,737 | -641,609 |

ແຫຼ່ງຂໍ້ມູນ: ສຳລັບຄ່າໃຊ້ຈ່າຍຂອງລັດຖະບານ: ກະຊວງການເງິນ; ສຳລັບ ODA, ກົມແຜນການ ກະຊວງສຶກສາທິການ ແລະ ກິລາ

ໂດຍອີງໃສ່ການຄາດຄະເນລາຍຮັບຂອງລັດຖະບານ, ຄາດວ່າລັດຖະບານຈະສາມາດເພີ່ມງົບປະມານໃຫ້ແກ່ຂະແໜງການສຶກສາໃນໄລຍະການຈັດຕັ້ງແຜນພັດທະນາການສຶກສາ ແລະ ກິລາ 5 ປີ ແຕ່ 2016-2020 ເມື່ອທຽບໃສ່ແຜນ 5 ປີ 2011-2015.

ຕາຕະລາງການຄາດຄະເນຄວາມຕ້ອງການດ້ານງົບປະມານ ສຳລັບແຜນພັດທະນາຂະແໜງການສຶກສາ ໄດ້ສະແດງໃຫ້ເຫັນວ່າ ຖ້າບໍ່ລວມເອົາ ODA ຊ່ອງຫວ່າງດ້ານການເງິນຈະຄ່ອຍໆຫຼຸດລົງໃນໄລຍະແຕ່ປີ 2016-2020, ແຕ່ຖ້າຫາກວ່າລວມເອົາງົບປະມານ ODA ເຂົ້າໃສ່ຈະເຫັນໄດ້ວ່າຊ່ອງຫວ່າງດ້ານການເງິນໃນ 3 ປີທຳອິດກາຍເປັນງົບປະມານສ່ວນເກີນໃນສົກປີ 2018-2019 ເນື່ອງຈາກວ່າແຫຼ່ງງົບປະມານຈະມີຫຼາຍຂຶ້ນ ແລະ ຄວາມຕ້ອງການດ້ານການເງິນກໍ່ຄ່ອຍໆຫຼຸດລົງ. ແຕ່ເຖິງຢ່າງໃດກໍ່ດີ ສ່ວນເກີນດ້ານການເງິນທີ່ໃນສອງປີສຸດທ້າຍ ຈະບໍ່ສາມາດຖົມຊ່ອງຫວ່າງທີ່ມີໃນສາມປີທຳອິດຂອງແຜນ. ໃນຊ່ວງໄລຍະ 5 ປີຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈະມີຊ່ອງຫວ່າງດ້ານການເງິນປະມານ 641 ຕື້ກີບ ຊຶ່ງເທົ່າກັບປະມານ 79 ລ້ານ ໂດລາສະຫາລັດ.

ຖ້າຫາກລັດຖະບານຫຼຸດລາຍຈ່າຍລົງ ຫຼື ຄາດຄະເນງົບປະມານ ODA ຫາກຫຼຸດລົງ ແລະ ຊ່ອງຫວ່າງດ້ານການເງິນຍັງບໍ່ທັນມີແຫຼ່ງທຶນມາຮອງຮັບ, ຄວາມສ່ຽງມີຢູ່ວ່າ ຈະຕ້ອງຫຼຸດງົບປະມານລາຍຈ່າຍບ້ວງບໍລິຫານ ທີ່ບໍ່ແມ່ນເງິນເດືອນ ແລະ ການລົງທຶນລົງ, ບໍ່ດັ່ງນັ້ນ ກໍ່ຕ້ອງຈຳກັດການບັນຈຸຕຳແໜ່ງຄູໃໝ່ ໂດຍຫັນໄປປັບປຸງການບັນຈຸຄູ ຫຼື ການສັບຊ້ອນຄູຄືນໃໝ່ໃຫ້ມີປະສິດທິຜົນສູງຂຶ້ນ. ການຈຳກັດຄ່າໃຊ້ຈ່າຍດ້ານບໍລິຫານທີ່ບໍ່ແມ່ນເງິນເດືອນ ຈະເປັນບັນຫາກະທົບຕໍ່ຄ່າໃຊ້ຈ່າຍທີ່ຕິດພັນກັບການປັບປຸງຄຸນນະພາບການສຶກສາ ເຊັ່ນ: ເງິນບໍລິຫານໂຮງຮຽນ, ທຶນການສຶກສາ, ທຶນຝຶກອົບຮົມຄູປະຈຳການ, ທຶນສຳຮອງເພື່ອບຳລຸງຮັກສາ ແລະ ທົດແທນປຶ້ມແບບຮຽນ, ອຸປະກອນການຮຽນ-ການສອນ, ການບຳລຸງຮັກສາໂຮງຮຽນ. ການຂະຫຍາຍເຄືອຂ່າຍການສຶກສາກໍ່ຕ້ອງໄດ້ຢູ່ໃນຂອບເຂດຈຳກັດ ຍ້ອນວ່າງົບປະມານການກໍ່ສ້າງກໍ່ຈະໄດ້ຮັບການດັດປັບລົງ. ໃນໄລຍະເວລາການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາຕົວຈິງ, ກະຊວງສຶກສາທິການ ແລະ ກິລາ ແລະ ໜ່ວຍງານວິຊາການຂະແໜງການສຶກສາ ຫຼື ESWG ຈະເຮັດວຽກຮ່ວມກັນຕື່ມເພື່ອຄົ້ນຄວ້າ ແລະ ທົບທວນແຜນຄືນໃໝ່ ຕາມຄວາມຈຳເປັນ ໂດຍອີງໃສ່ສະພາບຄວາມເປັນຈິງທາງດ້ານການເງິນ.

## 4.4 ຊັບພະຍາກອນຈາກພາຍນອກ

ຕາຕະລາງ 10 ຂ້າງລຸ່ມນີ້ ສະແດງໃຫ້ເຫັນທຶນຊ່ວຍເຫຼືອໂດຍລວມຈາກຜູ້ໃຫ້ທຶນເພື່ອຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໃນຊ່ວງໄລຍະປີ 2016-2020 ທີ່ຄູ່ຮ່ວມພັດທະນາໄດ້ຕົກລົງໃຫ້ການສະໜັບສະໜູນ. ດັ່ງທີ່ໄດ້ກ່າວໄວ້ຢູ່ຂ້າງເທິງນັ້ນ ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແມ່ນລວມເອົາທັງການຊ່ວຍເຫຼືອດ້ານການບໍລິຫານໂຄງການ ແລະ ການຊ່ວຍເຫຼືອດ້ານວິຊາການ ນັ້ນກໍ່ໝາຍຄວາມວ່າງົບປະມານດັ່ງກ່າວ ຈະບໍ່ໄດ້ໃຊ້ຈ່າຍເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາໂດຍກົງ.

**ຕາຕະລາງ 10: ທຶນຊ່ວຍເຫຼືອທີ່ ODA ໄດ້ຕົກລົງໃຫ້ການສະໜັບສະໜູນ (ລ້ານກີບ)**

| | 2015/16 (ຄາດຄະເນ) | 2016/17 (ຄາດຄະເນ) | 2017/18 (ຄາດຄະເນ) | 2018/19 (ຄາດຄະເນ) | 2019/20 (ຄາດຄະເນ) |
|---|---|---|---|---|---|
| ODA (ຫົວໜ່ວຍລ້ານກີບ) | 656,000 | 619,000 | 625,000 | 705,000 | 625,000 |

ແຫຼ່ງຂໍ້ມູນ: ກົມແຜນການ ກະຊວງສຶກສາທິການ ແລະ ກິລາ

**ຕາຕະລາງ 11: ການຊ່ວຍເຫຼືອຈາກພາຍນອກ (ຄູ່ຮ່ວມພັດທະນາຫຼັກ) ໃຫ້ແກ່ແຕ່ລະຂະແໜງການຍ່ອຍ**

| ຂະແໜງການຍ່ອຍ | ຄູ່ຮ່ວມພັດທະນາຫຼັກ ທີ່ໃຫ້ການຊ່ວຍເຫຼືອ ສໍາລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ **2011-2015** | ຄູ່ຮ່ວມພັດທະນາຫຼັກ ທີ່ຈະໃຫ້ການຊ່ວຍເຫຼືອ ສໍາລັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ **2016-2020** |
|---|---|---|
| ການສຶກສາກ່ອນໄວຮຽນ | UNICEF, EFA-FTI, Plan Intl. World Vision, CRS, other INGOs | UNICEF, WB, Plan Intl., World Vision, CRS, other INGOs |
| ປະຖົມສຶກສາ | EFA-FTI, Australia, JICA, WFP, WB, UNICEF, SCF, LuxDevelopment, RoomtoRead, CRS, Plan Intl., other INGOs | Australia, EU, GPE II, WFP, WB, UNICEF, SCF, RoomtoRead, LuxDevelopment, CRS, JICA, UNFPA, Pencils of promise, Plan Intl., Childfund, other INGOs |
| ມັດທະຍົມຕອນຕົ້ນ | ADB, KOICA, JICA, UNESCO, UNFPA, RoomtoRead, Some other INGOs | ADB, JICA, KOICA, UNESCO, UNFPA, RoomtoRead |
| ມັດທະຍົມຕອນປາຍ | China, KOICA | KOICA, ADB |
| ອາຊີວະສຶກສາ ແລະ ອົບຮົມວິຊາຊີບ | ADB, GIZ, Luxembourg, UNFPA | ADB, GIZ, KfW, Switzerland, Luxembourg, China, JICA, UNFPA |
| ການສຶກສາຄູ | UNESCO, JICA, ADB, UNFPA | Australia, GPE II, WFP, WB, UNICEF, LuxDevelopment, Room to Read, CRS, JICA, UNFPA, other INGOs. |
| ການສຶກສາຊັ້ນສູງ (ມະຫາວິທະຍາໄລ) | ADB, China, France, Australia, Japan, USA, China and Vietnam through scholarships | ADB, China, France, Australia, Japan, USA, China and Vietnam through scholarships |
| ການສຶກສານອກໂຮງຮຽນ | UNESCO, EFA-FTI, UNFPA, DVV | UNESCO, UNFPA, DVV |
| ການບໍລິຫານ ແລະ ຄຸ້ມຄອງ | EU through PRSO, Australia, JICA, USA, China and Vietnam through scholarships | EU & Japan through PRSO |

# V. ການຈັດຕັ້ງປະຕິບັດ, ຂອບການຕິດຕາມກວດກາ ແລະ ປະເມີນຜົນ

## 5.1 ການແບ່ງຂັ້ນໃນການບໍລິຫານ, ຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດແຜນ

ເນື່ອງຈາກວ່າແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2016-2020) ເປັນແຜນຂອງທົ່ວຂະແໜງ ດັ່ງນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ບັນລຸໄດ້ຕາມຄາດໝາຍທີ່ກຳນົດ, ທຸກພາກສ່ວນລວມທັງອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາ ຕ້ອງຮ່ວມມືກັນນຳເອົາບັນດານະໂຍບາຍ ແລະ ຍຸດທະສາດໄປຜັນຂະຫຍາຍເປັນແຜນປະຕິບັດຕົວຈິງໃນແຕ່ລະປີ. ກະຊວງສຶກສາທິການ ແລະ ກິລາໄດ້ກຳນົດກົນໄກການຈັດຕັ້ງປະຕິບັດໂດຍອີງໃສ່ນະໂຍບາຍ 3 ສ້າງຂອງລັດຖະບານ ກໍ່ຄືນະໂຍບາຍໃນການແບ່ງຂັ້ນຄຸ້ມຄອງຂອງກະຊວງສຶກສາທິການ ແລະ ກິລາ ພ້ອມທັງອີງໃສ່ໂຄງສ້າງຂອງອົງກອນ ແລະ ກົນໄກການປະສານງານທີ່ມີຢູ່ໃນປັດຈຸບັນ ດັ່ງມີລາຍລະອຽດລຸ່ມນີ້:

1) **ກະຊວງສຶກສາທິການ ແລະ ກິລາ** ໂດຍສະເພາະຄະນະປະສານງານ ແລະ ສະໜັບສະໜູນການບໍລິຫານ ແລະ ຄຸ້ມຄອງການສຶກສາ ໂດຍພາຍໃຕ້ການຊີ້ນຳຂອງຄະນະນຳກະຊວງ ມີໜ້າທີ່ໃນການຊີ້ນຳລວມ ໃຫ້ແກ່ພາກສ່ວນຕ່າງໆເພື່ອນຳເອົາແຜນດັ່ງກ່າວໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ. ພ້ອມດຽວກັນນັ້ນ ຄະນະປະສານງານດັ່ງກ່າວ ມີໜ້າທີ່ຮັບຜິດຊອບການຕິດຕາມ ແລະ ປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ເພື່ອລາຍງານການນຳໃນກອງປະຊຸມຜູ້ບໍລິຫານການສຶກສາໃນແຕ່ລະປີ.
2) **ຄະນະປະສານງານ ແລະ ສະໜັບສະໜູນວິຊາການ**: ຄະນະປະສານງານ ແລະ ສະໜັບສະໜູນວຽກການສຶກສາຂັ້ນພື້ນຖານ, ການສຶກສາຫຼັງຂັ້ນພື້ນຖານ, ການວິໄຈການສຶກສາ, ການວາງແຜນ, ງົບປະມານ ແລະ ຕິດຕາມກວດກາມີໜ້າທີ່ປະສານງານກັບບັນດາກົມ, ຫ້ອງການ, ສູນ ແລະ ສະຖາບັນພາຍໃນກະຊວງສຶກສາທິການ ແລະ ກິລາໃນການຕິດຕາມຄວາມຄືບໜ້າ, ສິ່ງທ້າທາຍ ແລະ ບັນຫາໃນການຈັດຕັ້ງປະຕິບັດນະໂຍບາຍ ພ້ອມທັງໃຫ້ຄຳປຶກສາຫາລື ແລະ ແນະນຳການແກ້ໄຂບັນຫາ ແລະ ສິ່ງທ້າທາຍຕ່າງໆທີ່ອາດເປັນອຸປະສັກໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ.
3) **ໜ່ວຍງານວິຊາການຂະແໜງການສຶກສາ (ESWG)** ມີໜ້າທີ່ປະສານງານກັບບັນດາຄູ່ຮ່ວມພັດທະນາ ເພື່ອນຳເອົານະໂຍບາຍທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2016-2020) ນີ້ ໄປສອດແຊກເຂົ້າໃນແຜນການຊ່ວຍເຫຼືອແກ່ກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະກົມວິຊາການທີ່ກ່ຽວຂ້ອງ.
4) **ບັນດາກົມວິຊາການຕ່າງໆ** ມີໜ້າທີ່ຊີ້ນຳບັນດາແຂວງ ແລະ ສະຖາບັນການສຶກສາທີ່ຂຶ້ນກັບ ໃນການນຳເອົາບັນດານະໂຍບາຍ ແລະ ຍຸດທະສາດທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ເຂົ້າໃນແຜນດຳເນີນງານປະຈຳປີຂອງຕົນໂດຍສອດຄ່ອງກັບແຜນພັດທະນາການສຶກສາ 5 ປີ.
5) **ພະແນກສຶກສາທິການ ແລະ ກິລາແຂວງ** ມີໜ້າທີ່ນຳເອົານະໂຍບາຍ ແລະ ຍຸດທະສາດທີ່ກຳນົດໃນແຜນ ໄປຜັນຂະຫຍາຍເປັນແຜນ 5 ປີ ແລະ ແຜນປະຈຳປີຂອງແຂວງ ເພື່ອໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ.
6) **ຫ້ອງການສຶກສາທິການ ແລະ ກິລາເມືອງ** ຕ້ອງນຳເອົາແຜນພັດທະນາຂອງພະແນກສຶກສາທິການ ແລະ ກິລາແຂວງໄປຜັນຂະຫຍາຍເປັນແຜນປະຕິບັດປະຈຳປີຂອງຕົນ ລວມທັງເຜີຍແຜ່ນະໂຍບາຍຕ່າງໆທີ່ກຳນົດໃນແຜນໃຫ້ບັນດາຜູ້ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອໃຫ້ເຂົາເຈົ້ານຳໄປຜັນຂະຫຍາຍເປັນແຜນພັດທະນາໂຮງຮຽນ ແລະ ແຜນພັດທະນາການສຶກສາປະຈຳບ້ານ ທີ່ສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020.

## 5.2 ຂະບວນການວາງແຜນງົບປະມານເພື່ອຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ

ກະຊວງສຶກສາທິການ ແລະ ກິລາໄດ້ດຳເນີນງານເພື່ອກ້າວໄປສູ່ການເຊື່ອມໂຍງເອົາການວາງແຜນໄລຍະກາງ ແລະ ແຜນປະຈຳປີ ໃຫ້ສອດຄ່ອງກັບຂະບວນການວາງແຜນງົບປະມານ ໂດຍຜ່ານການສ້າງແຜນປະຈຳປີທີ່ມີການຄິດໄລ່ມູນຄ່າ (Annaul Costed Sector Plan (ACSEP) ທີ່ມີຂະບວນການວາງແຜນທີ່ເປັນລະບົບ. ຈຸດປະສົງກໍ່ແມ່ນເພື່ອແນໃສ່ເຮັດໃຫ້ການສ້າງແຜນງົບປະມານປະຈຳປີ ສອດຄ່ອງກັບນະໂຍບາຍຂອງຂະແໜງການ ໂດຍປັບປຸງການປະສານງານລະຫວ່າງພາກສ່ວນແຜນການ ແລະ ການເງິນໃນຂັ້ນສູນກາງ ແລະ ຂັ້ນແຂວງໃຫ້ດີຂຶ້ນກວ່າເກົ່າ.

ແຜນປະຈຳປີທີ່ມີການຄິດໄລ່ມູນຄ່າ ໄດ້ຄິດໄລ່ມູນຄ່າໃຊ້ຈ່າຍທີ່ຈຳເປັນສຳລັບການຈັດຕັ້ງປະຕິບັດນະໂຍບາຍຂອງຂະແໜງການ ແມ່ນອີງໃສ່ຄາດໝາຍ, ຜົນຜະລິດ ແລະ ຜົນໄດ້ຮັບທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ແຜນດັ່ງກ່າວໄດ້ຄາດຄະເນຜົນກະທົບດ້ານການເງິນ ທຽບກັບຂໍ້ຈຳກັດຂອງງົບປະມານໃນຊຸມປີຕໍ່ໜ້າ ແລະ ແຜນນີ້ ຍັງຊ່ວຍປະເມີນຊ່ອງວ່າງການເງິນເພື່ອຈັດຕັ້ງປະຕິບັດ ຈຸດປະສົງນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.

ຂະບວນການນີ້ມັນແມ່ນເຄື່ອງມືທີ່ນຳມາໃຊ້ເພື່ອສ້າງຄວາມເຂົ້າໃຈເຖິງ 'ຂໍ້ຈຳກັດດ້ານງົບປະມານ' ເພື່ອການວາງແຜນ ແລະ ຂຶ້ນງົບປະມານຂະແໜງການສຶກສາ. ໃນທາງປະຕິບັດແລ້ວ, ຈຸດປະສົງຂອງເຄື່ອງມືນີ້ແມ່ນເພື່ອຮັບໃຊ້ໃນການສົນທະນາກ່ຽວກັບການຈັດສັນເງິນໃຫ້ແກ່ແຂວງ ແລະ ກົມກ່ຽວຂ້ອງຂອງກະຊວງສຶກສາທິການ ແລະ ກິລາ ເຊິ່ງເຄື່ອງມືດັ່ງກ່າວຈະກາຍມາເປັນພື້ນຖານໃຫ້ແກ່ຂະບວນການຂຶ້ນງົບປະມານຂອງປີຕໍ່ໄປ.

➢ **ຂະບວນການວາງແຜນແມ່ນໄດ້ຈັດແບ່ງອອກເປັນ 4 ບາດກ້າວ:**

ບາດກ້າວທີ 1: ໃນເດືອນສິງຫາ ຂອງແຕ່ລະປີ ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ກະກຽມວາງຄາດໝາຍຕົວຊີ້ບອກຕ່າງໆຂອງແຕ່ລະແຂວງ ແລະ ກົມຕ່າງໆ ພາຍໃນກະຊວງສຶກສາທິການ ແລະ ກິລາ ພ້ອມດ້ວຍແຜນງົບປະມານທີ່ຕ້ອງການສຳລັບປີຕໍ່ໄປ ໂດຍປະສານສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ກົມຕ່າງໆ.

ບາດກ້າວທີ 2: ເດືອນກັນຍາ ກົມແຜນການ ດຳເນີນກອງປະຊຸມຄັ້ງທຳອິດ ຮ່ວມກັບພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ ແລະ ກົມຕ່າງໆ ເພື່ອປຶກສາຫາລືກ່ຽວກັບຄາດໝາຍຂອງແຜນການ ແລະ ຄວາມຕ້ອງການດ້ານງົບປະມານປະຈຳປີຂອງແຕ່ລະພາກສ່ວນ.

ບາດກ້າວທີ 3: ເດືອນຕຸລາ - ພະຈິກ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ກົມຕ່າງໆ ພາຍໃນກະຊວງສຶກສາທິການ ແລະ ກິລາ ທົບທວນຜົນກອງປະຊຸມການປຶກສາຫາລືໃນເດືອນກັນຍາ ແລະ ປະກອບຂໍ້ຄິດເຫັນ/ສະເໜີແນະການແກ້ໄຂ ພ້ອມດ້ວຍຂໍ້ສະເໜີແນະເພີ່ມເຕີມ ຫຼື ຄຳຊີ້ແຈງຕ່າງໆ ເພື່ອດຳເນີນການທາງດ້ານນະໂຍບາຍ ແລະ ເພື່ອສະເໜີງົບປະມານທີ່ຕ້ອງການຄືນ.

ບາດກ້າວທີ 4: ເດືອນພະຈິກ ກົມແຜນການ ດຳເນີນກອງປະຊຸມປຶກສາຫາລືຄັ້ງທີ 2 ເພື່ອສະຫຼຸບສັງລວມຄາດໝາຍຂອງແຜນການ ແລະ ງົບປະມານທີ່ຕ້ອງການຂອງແຂວງ, ນະຄອນຫຼວງ ແລະ ກົມຕ່າງໆ ພາຍໃນກະຊວງສຶກສາທິການ ແລະ ກິລາ ແລະ ຈາກນັ້ນ, ກໍ່ນຳເຂົ້າສູ່ຂະບວນການຂຶ້ນງົບປະມານສຳລັບປີຕໍ່ໄປ ພ້ອມແຈ້ງການຈັດຕັ້ງປະຕິບັດແຜນງານພັດທະນາຂະແໜງການສຶກສາ ແລະ ກິລາປະຈຳປີ ໃຫ້ແກ່ພາກສ່ວນກ່ຽວຂ້ອງຮັບຊາບ.

ແຜນປະຈຳປີທີ່ຂອງຂະແໜງການທີ່ມີການຄິດໄລ່ມູນຄ່ານີ້ ເປັນເຄື່ອງມືທີ່ສົ່ງເສີມໃຫ້ມີການເຮັດວຽກງານຮ່ວມກັນລະຫວ່າງການສ້າງແຜນການ ແລະ ແຜນງົບປະມານ. ຖ້າຢາກໃຫ້ການນຳໃຊ້ເຄື່ອງມືນີ້ມີປະສິດທິພາບ ແລະ ປະສິດທິຜົນ ຕ້ອງໄດ້ສ້າງກົນໄກໃນການປະສານງານລະຫວ່າງພາກສ່ວນແຜນການ ແລະ ພາກສ່ວນການເງິນ ທັງລະດັບສູນກາງ ແລະ ທ້ອງຖິ່ນ.

### 5.3 ຂອບການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນ

ຂອບການຕິດຕາມກວດກາ ແລະ ປະເມີນຜົນ (M&E) ແຜນພັດທະນາຂະແໜງການສຶກສາ ປີ 2016-2020 ໄດ້ຈັດແບ່ງເປັນຫຼາຍລະດັບ ແລະ ນໍາໃຊ້ໃນຫຼາຍຈຸດປະສົງ ຊຶ່ງປະກອບດ້ວຍລະດັບການຕິດຕາມກວດກາຜົນການດໍາເນີນງານ ແລະ ຜົນກະທົບ, ການຕິດຕາມກວດກາການນໍາໃຊ້ແຫຼ່ງຊັບພະຍາກອນໃຫ້ມີປະສິດທິຜົນ ແລະ ຄວາມໂປ່ງໃສ ແລະ ຄວາມສອດຄ່ອງໃນການຈັດສັນຊັບພະຍາກອນ, ຕິດຕາມກວດກາຂະບວນການ ແລະ ຄວາມຖືກຕ້ອງຂອງການດໍາເນີນງານ ໂດຍທຽບໃສ່ແຜນພັດທະນາຂະແໜງການ. ອົງປະກອບສໍາຄັນຂອງຂອບການຕິດຕາມກວດກາ ແລະ ປະເມີນຜົນແຜນພັດທະນາຂະແໜງການສຶກສາມີດັ່ງນີ້:

#### 5.3.1 ການຕິດຕາມກວດກາ ແລະ ປະເມີນຜົນກະທົບແຜນພັດທະນາຂະແໜງການສຶກສາ ແລະ ກິລາ:

**ການທົບທວນແຜນໄລຍະສຸດທ້າຍ ແລະ ກາງສະໄໝ:** ການທົບທວນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ (2016-2020) ໄລຍະສຸດທ້າຍຈະໄດ້ຈັດຂຶ້ນໃນປີ 2020 ເພື່ອປະເມີນຜົນກະທົບລວມຂອງແຜນການ ແລະ ເພື່ອທົບທວນເຖິງປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດແຜນ ໂດຍທຽບກັບຄາດຄະເນຜົນຮັບທີ່ໄດ້ກໍານົດເອົາໄວ້ ແລະ ເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020). ຜົນການທົບທວນນີ້ຈະໄດ້ນໍາໄປໃຊ້ເປັນບ່ອນອີງ ແລະ ຈະສະໜອງບົດຮຽນສໍາຄັນທີ່ຖອດຖອນໄດ້ ໃຫ້ແກ່ການສ້າງແຜນພັດທະນາຂະແໜງການສຶກສາປີ 2021-2025 ໃນຂັ້ນຕໍ່ໄປ. ການທົບທວນແຜນພັດທະນາຂະແໜງການສຶກສາ ແລະ ກິລາ ກາງສະໄໝ ຈະໄດ້ຈັດຂຶ້ນໃນປີ 2018 ເພື່ອປະເມີນຜົນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນ ແລະ ເພື່ອແກ້ໄຂບັນຫາທີ່ມີໃນໄລຍະການຈັດຕັ້ງປະຕິບັດແຜນໃຫ້ຖືກຕ້ອງ ແລະ ແທດເໝາະກັບສະພາບທ້ອງຖິ່ນ ໂດຍແມ່ນຄະນະບໍລິຫານງານຂອງກະຊວງສຶກສາທິການ ແລະ ກິລາເປັນຜູ້ນໍາພາ ແລະ ປະສານວຽກງານທົບທວນກັບຝ່າຍກ່ຽວຂ້ອງ.

#### 5.3.2 ການຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ:

ການທົບທວນ, ຕິດຕາມ ແລະ ປະເມີນຜົນຮ່ວມກັບຄູ່ຮ່ວມພັດທະນາໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ (Join Sector Review Mission: JSRM) ການທົບທວນ, ຕິດຕາມ ແລະ ປະເມີນຜົນຮ່ວມ ເພື່ອຕິດຕາມ ແລະ ທົບທວນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາແລະ ກິລາ ຮ່ວມກັບຄູ່ຮ່ວມພັດທະນາ ແລະ ຕິດຕາມຄວາມສອດຄ່ອງໃນການຈັດສັນການລົງທຶນໃສ່ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຈາກທັງລັດຖະບານ ແລະ ຄູ່ຮ່ວມພັດທະນາ; ກົມກວດກາ ເປັນເຈົ້າການໃນການທົບທວນຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໂດຍຮ່ວມກັບບັນດາກົມທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາປະຈໍາປີ ຊຶ່ງການທົບທວນນີ້ຈະໄດ້ປະເມີນຜົນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໂດຍທຽບກັບຜົນໄດ້ຮັບ (Outcomes), ຜົນຜະລິດ (Outputs) ທີ່ໄດ້ຕົກລົງ ແລະ ກໍານົດໄວ້ໃນແຜນ. ນອກນັ້ນ, ກໍ່ຍັງຈະເປັນໂອກາດປະເມີນເຖິງແນວໂນ້ມຂອງຜົນການປະຕິບັດວຽກງານຂອງຂະແໜງການ. ການທົບທວນແຜນຮ່ວມກັບຄູ່ຮ່ວມພັດທະນານີ້ ຈະໄດ້ພິຈາລະນາ ແລະ ຕົກລົງກັນບົນພື້ນຖານແຜນງານຫຼັກ ແລະ ບູລິມະສິດດ້ານງົບປະມານ, ການປະຕິຮູບ, ການປັບປຸງແຜນ ແລະ ວິທີການແກ້ໄຂບັນຫາດ້ານການຈັດຕັ້ງປະຕິບັດໃນປີຕໍ່ໄປ ແລະ ທັງຈະໄດ້ຕົກລົງຮ່ວມກັນກ່ຽວກັບວຽກງານທີ່ຈໍາເປັນເພື່ອຮັບປະກັນຜົນສໍາເລັດ. ນອກນັ້ນການທົບທວນຮ່ວມນີ້ຍັງຈະໄດ້ກໍານົດໜ້າວຽກສໍາຄັນທີ່ຍັງມີຄວາມຕ້ອງການນໍາໄປຄົ້ນຄວ້າ ແລະ ວິໄຈຕື່ມພ້ອມດ້ວຍໜ້າວຽກຈຸດສຸມສະເພາະ ເພື່ອຈະໄດ້ທົບທວນຮ່ວມກັບຄູ່ຮ່ວມພັດທະນາໃນປີຕໍ່ໄປ.

ເພື່ອໃຫ້ສອດຄ່ອງກັບວົງຈອນການວາງແຜນ ແລະ ການຂຶ້ນແຜນງົບປະມານປະຈໍາປີ, ການທົບທວນຮ່ວມກັບຄູ່ຮ່ວມພັດທະນາ ຈະໄດ້ຈັດຕັ້ງຂຶ້ນໃນລະຫວ່າງເດືອນພຶດສະພາ-ມິຖຸນາ ຂອງແຕ່ລະປີ. ພາຍໃຕ້ຄວາມເປັນເຈົ້າການຂອງກົມກວດກາ ຊຶ່ງຜູ້ເຂົ້າຮ່ວມໃນການທົບທວນຈະມີພະນັກງານຂັ້ນນໍາ ແລະ ຂັ້ນວິຊາການຈາກສູນກາງ ແລະ ທ້ອງຖິ່ນ, ຜູ້ຕາງໜ້າຄູ່ຮ່ວມພັດທະນາ ແລະ ອົງການທີ່ບໍ່ແມ່ນລັດຖະບານ, ພະນັກງານໃນລະດັບການນໍາຈາກກະຊວງ

ແລະອົງການຈັດຕັ້ງອື່ນໆ. ຂະບວນການທົບທວນ, ຕິດຕາມ ແລະ ປະເມີນຜົນຮ່ວມກັບຄູ່ຮ່ວມພັດທະນາ ແລະ ຜົນຂອງການທົບທວນຫົວຂໍ້ການສຶກສາວິໄຈປະຈໍາປີ ຈະເປັນບ່ອນອີງໃຫ້ແກ່ບົດລາຍງານປະຈໍາປີກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາ (ASPR).

ບົດລາຍງານປະຈໍາປີກ່ຽວກັບຜົນການປະຕິບັດງານຂອງຂະແໜງການ: (Annual Sector Performance Report): ບົດລາຍງານປະຈໍາປີກ່ຽວກັບຜົນການປະຕິບັດງານຂອງຂະແໜງການ ຈະສະເໜີໃຫ້ຮູ້ຜົນການວິໄຈຕົວຊີ້ບອກຫຼັກຂອງຂະແໜງການ. ມັນທົບທວນຜົນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນ ແລະ ເພື່ອລາຍງານໃຫ້ຮູ້ເຖິງແນວໂນ້ມ ຫຼື ການປ່ຽນແປງໂດຍທຽບກັບຄາດໝາຍ ແລະ ຂີດໝາຍ (benchmarks) ຂອງແຜນພັດທະນາຂະແໜງການສຶກສາ ແລະ ສະເໜີແນະຂໍ້ຄິດເຫັນໃຫ້ແກ່ໜ່ວຍງານວິຊາການຂະແໜງການສຶກສາ. ກົມແຜນການ ເປັນຜູ້ຮັບຜິດຊອບໃນການກະກຽມບົດລາຍງານປະຈໍາປີກ່ຽວກັບ ຜົນການປະຕິບັດງານຂອງຂະແໜງການດັ່ງກ່າວນີ້. ບົດລາຍງານປະຈໍາປີ ກ່ຽວກັບຜົນການປະຕິບັດງານຂອງຂະແໜງການສ້າງຂຶ້ນບົນພື້ນຖານ ແລະ ອີງໃສ່ຂໍ້ມູນຈາກລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ (EMIS) ແລະ ຂໍ້ມູນຈາກບົດລາຍງານຜົນຄວາມຄືບໜ້າປະຈໍາປີຈາກບັນດາຂະແໜງການຍ່ອຍລວມທັງຈາກພະແນກສຶກສາທິການ ແລະ ກິລາແຂວງ ແລະ ນະຄອນຫຼວງ. ບົດລາຍງານຂອງຂະແໜງການຍ່ອຍເປັນບົດສັງລວມຜົນຄວາມຄືບໜ້າການນໍາເອົານະໂຍບາຍ ແລະ ຍຸດທະສາດໄປຜັນຂະຫຍາຍໂດຍທຽບກັບຄາດໝາຍທີ່ໄດ້ຕົກລົງ ແລະ ກໍານົດໄວ້ໃນແຜນນະໂຍບາຍ ແລະ ແຜນກິດຈະກໍາຂອງແຜນພັດທະນາຂະແໜງການສຶກສາ. ບົດລາຍງານຂອງຂະແໜງການຍ່ອຍແມ່ນກົມ, ພະແນກການ ແລະ ສະຖາບັນການສຶກສາທີ່ກ່ຽວຂ້ອງເປັນຜູ້ລາຍງານຕາມແບບຟອມການລາຍງານທີ່ເປັນເອກະພາບກັນ ແລະ ຈາກນັ້ນກໍ່ສົ່ງບົດລາຍງານໃຫ້ກົມແຜນ ການໃນທ້າຍເດືອນເມສາຂອງທຸກໆປີ.

ບົດລາຍງານຜົນການວິໄຈປະຈໍາປີ (Annual Thematic Report): ບົດລາຍງານນີ້ຈະສະໜອງຂໍ້ມູນ ແລະ ຂໍ້ສະເໜີແນະຕ່າງໆ ກ່ຽວຂ້ອງກັບປະເດັນບັນຫາສະເພາະໃດໜຶ່ງ ຫຼື ຫົວຂໍ້ສຶກສາວິໄຈສະເພາະ ພາຍໃນຂະແໜງການສຶກສາ ແລະ ກິລາ. ສໍາລັບວຽກງານຈຸດສຸມສໍາລັບປີຕໍ່ໄປກໍ່ຈະໄດ້ຕົກລົງເຫັນດີນໍາກັນໃນວາລະການທົບທວນແຜນພັດທະນາຂະແໜງການປະຈໍາປີຮ່ວມກັບຄູຮ່ວມພັດທະນາໃນແຕ່ລະປີ. ກົມກວດກາການສຶກສາຈະເປັນຜູ້ນໍາໃນການສ້າງບົດລາຍງານຜົນການວິໄຈປະຈໍາປີ ໂດຍຈະໄດ້ນໍາໃຊ້ຜົນການທົບທວນຫົວຂໍ້ສຶກສາວິໄຈປະຈໍາປີ ເພື່ອເປັນການປະເມີນຜົນ ແລະ ໃຫ້ຂໍ້ສະເໜີແນະຕ່າງໆ ເພື່ອນໍາໄປພິຈາລະນາໃນວາລະການທົບທວນແຜນພັດທະນາຂະແໜງການປະຈໍາປີຮ່ວມກັບຄູ່ຮ່ວມພັດທະນາ.

### 5.3.3 ການລາຍງານຜົນຄວາມຄືບໜ້າແຜນພັດທະນາຂະແໜງການສຶກສາ:

**ຂັ້ນເມືອງ:** ການຕິດຕາມກວດກາປົກກະຕິການຈັດຕັ້ງປະຕິບັດຍຸດທະສາດ ແລະ ນະໂຍບາຍການສຶກສາ, ກິດຈະກໍາແຜນງານ ແລະ ການບໍລິການວຽກງານສຶກສາແມ່ນຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຜູ້ດໍາເນີນການໂດຍປະສານສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານ. ການຕິດຕາມກວດກາ ແລະ ການສະໜັບສະໜູນການດໍາເນີນງານຂອງໂຮງຮຽນແມ່ນໜ້າທີ່ບູລິມະສິດຂອງຂັ້ນເມືອງກໍ່ຄືຫ້ອງການສຶກສາທິການ ແລະ ກິລາເມືອງ ໂດຍເລັ່ງໃສ່ບັນດາໂຮງຮຽນທີ່ຍັງມີຜົນງານອ່ອນໃນດ້ານຕ່າງໆ ເຊັ່ນ: ໂຮງຮຽນທີ່ມີອັດຕາຄ້າງຫ້ອງ, ອັດຕາປະລະສູງ ແລະ ຍັງອ່ອນໃນດ້ານການວາງແຜນພັດທະນາໂຮງຮຽນຂອງຕົນ.

**ຂັ້ນໂຮງຮຽນ**: ໃນອາທິດທີ 1 ຂອງເດືອນຕຸລາ ໂຮງຮຽນແຕ່ລະແຫ່ງຈະສໍາເລັດການເກັບກໍາສະຖິຕິຂໍ້ມູນໂຮງຮຽນປະຈໍາປີຂອງຕົນ ເພື່ອສົ່ງໃຫ້ໜ່ວຍງານຄຸ້ມຄອງສະຖິຕິຂອງສຶກສາເມືອງທີ່ຕົນຂຶ້ນກັບ. ນອກນັ້ນ, ໂຮງຮຽນແຕ່ລະແຫ່ງຍັງຕ້ອງສົ່ງບົດລາຍງານການເງິນປະຈໍາໄຕມາດ (ລາຍຮັບ-ລາຍຈ່າຍ) ໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງຂອງຕົນ.

**ການປະເມີນຕົນເອງຂອງໂຮງຮຽນ:** ໂຮງຮຽນແຕ່ລະແຫ່ງ ໂດຍສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານ ຈະດໍາເນີນການປະເມີນຕົນເອງ ແລະ ສ້າງແຜນພັດທະນາໂຮງຮຽນປະຈໍາປີ. ການປະເມີນຕົນເອງຂອງໂຮງຮຽນ

ແມ່ນອີງໃສ່ບູລິມະສິດມາດຖານຄຸນນະພາບການສຶກສາ ເພື່ອຊ່ວຍໃຫ້ໂຮງຮຽນສາມາດກໍານົດໜ້າວຽກ ຫຼື ກິດຈະກໍາບູລິມະສິດຂອງຕົນເຂົ້າໃນແຜນພັດທະນາໂຮງຮຽນປະຈໍາປີ.

## 5.4 ໂຄງປະກອບສະໜັບສະໜູນການຕິດຕາມກວດກາ ແລະ ປະເມີນຜົນ

**ມາດຖານຄຸນນະພາບການສຶກສາ**: ເປັນອົງປະກອບສໍາຄັນຂອງຂອບການຕິດຕາມກວດກາ ແລະ ປະເມີນຜົນ ຍ້ອນວ່າມາດຖານຄຸນນະພາບການສຶກສານີ້ໄດ້ກໍານົດຂີດໝາຍ (benchmarks) ດ້ານການບໍລິການການສຶກສາ. ເປັນທີ່ຮູ້ກັນດີແລ້ວວ່າ ມາດຖານຄຸນນະພາບການສຶກສາທີ່ມີຢູ່ໃນປະຈຸບັນມີລາຍລະອຽດຫຼາຍ ແລະ ແນ່ນອນວ່າຈະເຮັດໃຫ້ໂຮງຮຽນຈໍານວນໜຶ່ງ ໂດຍສະເພາະໂຮງຮຽນທີ່ຍັງບໍ່ສາມາດບັນລຸມາດຖານຫຼາຍດ້ານ ໄດ້ຮັບຄວາມຫຍຸ້ງຍາກໃນການກໍານົດໜ້າວຽກບູລິມະສິດເຂົ້າໃສ່ແຜນພັດທະນາໂຮງຮຽນຂອງຕົນ. ກົມກວດກາ ແລະ ສູນປະກັນຄຸນນະພາບການສຶກສາ ຕ້ອງໄດ້ຮ່ວມມືກັນເພື່ອທົບທວນ ຫຼື ຈັດລຽງບູລິມະສິດຕົ້ນຕໍ ຈາກມາດຖານຄຸນນະພາບການສຶກສາແລ້ວເຜີຍແຜ່ໃຫ້ໂຮງຮຽນຮັບຊາບ ແລະ ເຂົ້າໃຈເພື່ອຊ່ວຍເຫຼືອເຂົາເຈົ້າມີຂໍ້ສະດວກໃນຂະບວນການສ້າງແຜນພັດທະນາໂຮງຮຽນໃຫ້ມີຈຸດສຸມບູລິມະສິດຫຼາຍຂຶ້ນ.

ໜ້າວຽກສະເພາະດ້ານຂອງບູລິມະສິດມາດຖານຄຸນນະພາບການສຶກສາເຊັ່ນ: ຈໍານວນໂຮງຮຽນທີ່ສາມາດຮັບໄດ້ສັດສ່ວນຄູ-ນັກຮຽນ, ສັດສ່ວນປຶ້ມແບບຮຽນ-ນັກຮຽນ ແລະ ລະດັບການສະໜອງເງິນທຶນບໍລິຫານໂຮງຮຽນເປັນຕົ້ນເຫຼົ່ານີ້ ຈະຕ້ອງໄດ້ສະແດງໃຫ້ເຫັນຢູ່ໃນຕົວຊີ້ບອກສໍາຄັນຂອງການປະຕິບັດງານທີ່ນໍາໃຊ້ເພື່ອຕິດຕາມກວດກາການດໍາເນີນງານຂອງຂະແໜງການ.

ຄຽງຄູ່ກັນນັ້ນ, ກົມກວດກາ ແລະ ສູນປະກັນມາດຖານຄຸນນະພາບການສຶກສາ ຕ້ອງເປັນເອກະພາບກັນທາງດ້ານແບບຟອມການກວດກາ ແລະ ການຕິດຕາມເພື່ອໃຫ້ເປັນມາດຖານການປະເມີນໂຮງຮຽນໂດຍທຽບກັບບູລິມະສິດມາດຖານຄຸນນະພາບການສຶກສາ.

**ການສໍາຫຼວດສະຖິຕິຂັ້ນໂຮງຮຽນປະຈໍາປີ:** ສໍາລັບແບບຟອມສໍາຫຼວດສະຖິຕິໂຮງຮຽນ ແລະ ເນື້ອໃນຂອງແບບຟອມສະບັບປະຈຸບັນ ຈໍາເປັນຈະຕ້ອງໄດ້ທົບທວນຄືນໃໝ່ເພື່ອຮັບປະກັນໃຫ້ມີຂໍ້ມູນສໍາຄັນທີ່ຕ້ອງ ການເພື່ອມາກໍານົດຕົວຊີ້ບອກຫຼັກ ແລະ ເພື່ອຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດ ເພື່ອບັນລຸມາດຖານທີ່ໄດ້ກໍານົດໄວ້ໃນບູລິມະສິດມາດຖານການສຶກສາຂັ້ນປະຖົມ (P-EQS). ບູລິມະສິດຕົ້ນຕໍທີ່ຈະຕ້ອງເອົາໃຈໃສ່ກໍ່ຄືການປັບປຸງແບບຟອມສໍາຫຼວດສະຖິຕິໂຮງຮຽນເພື່ອໃຫ້ມີປະສິດທິພາບສູງຂຶ້ນ ແລະ ຫຼຸດຜ່ອນຂະໜາດເນື້ອໃນຂອງແບບສໍາຫຼວດໃຫ້ສັ້ນ ແລະ ສາມາດເຂົ້າໃຈໄດ້ງ່າຍຂຶ້ນຕາມຄວາມເໝາະສົມ.

**ລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາ (EMIS):** ສູນສະຖິຕິການສຶກສາ ທີ່ຂຶ້ນກັບກົມແຜນການ ເປັນສູນເກັບກໍາ, ສັງລວມ ແລະ ສະໜອງຖານຂໍ້ມູນວິຊາການຂອງຂະແໜງການສຶກສາ. ສູນດັ່ງກ່າວຍັງເຮັດໜ້າທີ່ຮວບຮວມແບບຂໍ້ມູນວິຊາການຈາກສະຖາບັນການສຶກສາທຸກແຫ່ງ ແຕ່ການສຶກສາເດັກກ່ອນໄວຮຽນໄປຈົນເຖິງການສຶກສາຊັ້ນສູງ ແລະ ນອກນັ້ນ ກໍ່ຍັງສັງລວມຜົນການວິໄຈຂໍ້ມູນສໍາຄັນຂອງຂະແໜງການສຶກສາ. ບົດລາຍງານຂໍ້ມູນຂ່າວສານການສຶກສາສະບັບລວມ ຈະພິມອອກລາຍງານເປັນປົກກະຕິ ໃນເດືອນມິຖຸນາ ຂອງແຕ່ລະປີ. ສ່ວນຂະບວນການ ແລະ ຜົນການວິໄຈຂໍ້ມູນກ່ຽວກັບຕົວຊີ້ບອກຫຼັກ ຕ້ອງໃຫ້ສໍາເລັດພາຍໃນກາງເດືອນເມສາຂອງທຸກປີ ເພື່ອເປັນຂໍ້ມູນອ້າງອີງໃຫ້ແກ່ກົມແຜນການ ໃນການສ້າງບົດລາຍງານປະຈໍາປີກ່ຽວກັບ ຜົນການປະຕິບັດງານຂອງຂະແໜງການ (ASPR).

**ລະບົບຄຸ້ມຄອງຂໍ້ມູນການເງິນ (Financial Management Information System)**: ລະບົບຄຸ້ມຄອງຂໍ້ມູນການເງິນ ຊຶ່ງແມ່ນກົມການເງິນເປັນຜູ້ເກັບກໍາ, ສັງລວມ ແລະ ສະໜອງຖານຂໍ້ມູນກ່ຽວກັບການເງິນ ແລະ ງົບປະມານທົ່ວຂະແໜງການສຶກສາ. ລະບົບດັ່ງກ່າວນີ້ໄດ້ສັງລວມ ແລະ ຄຸ້ມຄອງຂໍ້ມູນການເງິນກ່ຽວກັບ: ການຈັດສັນງົບປະມານ, ການໂອນງົບປະມານ ແລະ ການຊໍາລະສະສາງງົບປະມານ ອີງຕາມເລກລະຫັດງົບປະມານຂອງບັນຊີ ຈາກທຸກຫ້ອງການສຶກສາ ແລະ ສະຖາບັນການສຶກສາຂອງລັດ. ຂໍ້ມູນເຫຼົ່ານີ້ຈະໄດ້ນໍາໃຊ້ເຂົ້າໃນບົດລາຍງານປະຈໍາໄຕມາດ

ແລະ ເພື່ອສະ ເໜີຂໍອະນຸມັດງົບປະມານຈາກກະຊວງການເງິນ. ນອກນັ້ນ ກໍ່ຍັງເປັນຖານຂໍ້ມູນສໍາລັບການລາຍງານການເງິນປະຈໍາປີແລະ ການແຈ້ງລາຍຮັບ-ລາຍຈ່າຍຕໍ່ກະຊວງການເງິນ.

**ລະບົບຄຸ້ມຄອງຂໍ້ມູນພະນັກງານ (Personnel Management Information System):** ກົມຈັດຕັ້ງ ແລະ ພະນັກງານມີຄວາມຈໍາເປັນຕ້ອງໄດ້ພັດທະນາ ແລະ ປັບປຸງລະບົບຄຸ້ມຄອງຂໍ້ມູນພະນັກງານຂອງຂະແໜງສຶກສາລວມທັງພະນັກງານຄູ. ລະບົບນີ້ ຈະເປັນບ່ອນສັງລວມທຸກໆຂໍ້ມູນກ່ຽວກັບລັດຖະກອນສຶກສາເຊັ່ນ: ປະຫວັດຫຍໍ້, ອາຍຸການ, ຄຸນວຸດທິ, ວິຊາສະເພາະ, ໜ້າທີ່, ຕໍາແໜ່ງ ແລະ ອື່ນໆ. ຂໍ້ມູນເຫຼົ່ານີ້ ຈະເປັນບ່ອນອີງໃນການຕິດຕາມ, ປະເມີນປະສິດທິພາບໃນການເຮັດວຽກລວມທັງການສັບຊ້ອນ ແລະ ນໍາໃຊ້ເພື່ອໃຫ້ຖືກກັບຄວາມຮູ້ຄວາມສາມາດ. ນອກຈາກນັ້ນລະບົບຄຸ້ມຄອງພະນັກງານນີ້ ຍັງຈະຊ່ວຍເປັນບ່ອນອີງໃຫ້ແກ່ການກໍ່ສ້າງ ແລະ ບັນຈຸສັບຊ້ອນພະນັກງານ ແລະ ຄູເພື່ອໃຫ້ສອດຄ່ອງກັບແຜນພັດທະນາຂະແໜງການສຶກສາອີກດ້ວຍ.

## 5.5 ຕົວຊີ້ບອກຫຼັກ ສໍາລັບການຕິດຕາມ ແລະ ປະເມີນຜົນ

ການກໍານົດວິທີການຕິດຕາມ ແລະ ການກໍານົດຕົວຊີ້ບອກໃນການຈັດຕັ້ງປະຕິບັດ ເປັນອົງປະກອບທີ່ສໍາຄັນຂອງຂະບວນການຕິດຕາມ ແລະ ປະເມີນນຜົນ. ການເກັບກໍາຂໍ້ມູນດ້ານປະລິມານ ແລະ ຂໍ້ມູນດ້ານຄຸນນະພາບທີ່ມີຄວາມຊັດເຈນ, ຖືກຕ້ອງ ແລະ ທັນເວລາ ຈະສະແດງໃຫ້ເຫັນເຖິງສະພາບ ແລະ ຜົນການຈັດຕັ້ງປະຕິບັດແຜນ ຊຶ່ງຈະເປັນບ່ອນອີງໃຫ້ແກ່ການຕັດສິນໃຈ ຫຼື ການປັບປຸງກົນໄກ ແລະ ມາດຕະການໃນການຈັດຕັ້ງປະຕິບັດແຜນ. ຈຸດປະສົງຫຼັກຂອງລະບົບການຕິດຕາມດັ່ງກ່າວນີ້ ແມ່ນເພື່ອຮັບປະກັນໃຫ້ຂອບການຕິດຕາມ ແລະ ປະເມີນຜົນມີຄວາມຮັດກຸມ, ທັນເວລາ, ສອດຄ່ອງ ແລະ ມີຂໍ້ມູນທີ່ຖືກຕ້ອງກັບຄວາມເປັນຈິງ ເພື່ອເປັນບ່ອນອີງໃຫ້ແກ່ການຕັດສິນໃຈ.

ການກໍານົດຕົວຊີ້ບອກຫຼັກ (KPIs) ສໍາລັບແຜນພັດທະນາຂະແໜງການສຶກສາປີ 2016-2020 ຈະຊ່ວຍໃຫ້ກະຊວງສຶກສາທິການ ແລະ ກິລາ ເລັ່ງເປົ້າໃສ່ໜ້າວຽກສໍາຄັນຂອງການສະໜອງການສຶກສາ ໂດຍສະເພາະ ກໍ່ແມ່ນເລັ່ງໃສ່ຜົນຜະລິດ (Outputs) ຂອງແຕ່ລະກົມກອງ ຫຼື ຂະແໜງການຍ່ອຍເປັນຕົ້ນຕໍ.

ການກໍານົດຕົວຊີ້ບອກ ແລະ ພັດທະນາລະບົບການຕິດຕາມ ແລະ ປະເມີນຜົນ ແມ່ນເພື່ອຈຸດປະສົງດັ່ງນີ້:

1. ສຶກສາສະພາບຄວາມຄືບໜ້າການຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ: ບັນດາຜູ່ກໍານົດນະໂຍບາຍ ແລະ ບໍລິຫານທີ່ມີໜ້າທີ່ຕັດສິນໃຈ ໃນທຸກລະດັບແຕ່ສູນກາງຮອດທ້ອງຖິ່ນ ລວມທັງຄູ່ຮ່ວມພັດທະນາ ແລະ ຜູ່ມີສ່ວນຮ່ວມອື່ນໆ ຈະໄດ້ຮັບຮູ້ກ່ຽວກັບປະເດັນບັນຫາ, ສິ່ງທ້າທາຍ, ຜົນສໍາເລັດ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຄາດໝາຍໃນຂະແໜງການເພື່ອທີ່ຈະສາມາດວິໄຈ ຊຶ່ງຈະເຮັດໃຫ້ທຸກພາກສ່ວນທີ່ກ່າວມານີ້ໄດ້ເຮັດການສຶກສາວິໄຈ ແລະ ຕັດສິນໃຈໂດຍອີງໃສ່ສະພາບຄວາມເປັນຈິງ ເພື່ອແກ້ໄຂບັນຫາ ແລະ ພັດທະນານະໂຍບາຍໃນອານາຄົດ.
2. ສະແດງໃຫ້ເຫັນເຖິງຄວາມຈໍາເປັນເພື່ອເນັ້ນໃສ່ແກ້ໄຂບັນຫາຫຼັກ ແລະ ບູລິມະສິດຂອງຂະແໜງການ: ຄຽງຄູ່ກັບການຕິດຕາມບັນດາຜົນໄດ້ຮັບທີ່ໄດ້ກໍານົດໃນແຜນແລ້ວ, ອາດມີຕົວຊີ້ບອກສະເພາະຂອງບາງນະໂຍບາຍທີ່ຈໍາເປັນຕ້ອງໄດ້ຮັບການຕິດຕາມ ເພື່ອໃຫ້ເຫັນໄດ້ບັນຫາທີ່ອາດເກີດຂຶ້ນ ກັບການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ.
3. ບົ່ງບອກໃຫ້ເຫັນເຖິງຄວາມຈໍາເປັນໃນການກໍານົດຍຸດທະສາດໃໝ່ຂຶ້ນມາ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ: ມີບາງນະໂຍບາຍ ຫຼັງຈາກການຈັດຕັ້ງປະຕິບັດໄປໄລຍະໜຶ່ງ ຈະເຫັນໄດ້ວ່າບໍ່ເໝາະສົມ ແລະ ຈໍາເປັນຕ້ອງໄດ້ກໍານົດບາງຍຸດທະສາດຂຶ້ນມາໃໝ່ ເພື່ອຈັດຕັ້ງປະຕິບັດໃຫ້ບັນລຸນະໂຍບາຍດັ່ງກ່າວ. ບາງຄັ້ງອາດມີຄວາມຈໍາເປັນຕ້ອງໄດ້ປັບປ່ຽນຄາດໝາຍ ແລະ ນະໂຍບາຍ.
4. ເພື່ອໃຫ້ຂໍ້ແນະນໍາ ແກ່ທຸກພາກສ່ວນ: ຜົນຈາກການຕິດຕາມ ແລະ ການປະເມີນ ຈະຊ່ວຍສະໜອງຂໍ້ມູນຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ໂດຍຜ່ານການລາຍງານໃນແຕ່ລະໄລຍະ.

ເພື່ອເຮັດໃຫ້ມີຄວາມຕໍ່ເນື່ອງກັບແຜນພັດທະນາຂະແໜງງານສຶກສາປີ 2011-2015 ແລະ ຄວາມສອດຄ່ອງກັບເຄື່ອງມືວາງແຜນຂະແໜງການໃນປະຈຸບັນ, ຕາຕະລາງຕົວຊີ້ບອກລຸ່ມນີ້ ແມ່ນກໍານົດຂຶ້ນເພື່ອຈະໄດ້ຕິດຕາມກວດກາ ແລະ ປະເມີນໃນແຕ່ລະປີ:

**ຕາຕະລາງ 12: ຕົວຊີ້ບອກຫຼັກສໍາລັບການຕິດຕາມ ແລະ ປະເມີນຜົນ**

| ການສຶກສາກ່ອນໄວຮຽນ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ | 69% | 72% | 74% | 77% | 80% |
| ອັດຕາເຂົ້າຮຽນຂອງເດັກອາຍຸ 3-5 ປີ | 46% | 48% | 50% | 53% | 55% |
| ສັດສ່ວນການເຂົ້າຮຽນ ຮຣ ເອກະຊົນ | 20% | 21% | 23% | 24% | 25% |
| ອັດຕານັກຮຽນຕໍ່ຫ້ອງ | 18 | 17 | 17 | 16 | 15 |
| ອັດຕານັກຮຽນຕໍ່ຄູ | 21 | 20 | 18 | 17 | 15 |
| **ປະຖົມສຶກສາ** | **2016** | **2017** | **2018** | **2019** | **2020** |
| ອັດຕາເຂົ້າຮຽນໃໝ່ສຸດທິ | 98% | 98% | 98% | 99% | 99% |
| ອັດຕາເຂົ້າຮຽນສຸດທິ | 99% | 99% | 99% | 99% | 99% |
| ອັດຕາການປະລະ ປ 1 | 7.7% | 7.0% | 6.4% | 5.7% | 5.0% |
| ອັດຕາການຄ້າງຫ້ອງ ປ 1 | 11.8% | 10.1% | 8.4% | 6.7% | 5.0% |
| ອັດຕາປະລະຊັ້ນປະຖົມ | 4.3% | 3.8% | 3.3% | 2.7% | 2% |
| ອັດຕາຄ້າງຫ້ອງຊັ້ນປະຖົມ | 4.6% | 3.9% | 3.3% | 2.6% | 2.0% |
| ອັດຕາລອດເຫຼືອ | 80.4% | 82.8% | 85.2% | 87.6% | 90.0% |
| ອັດຕານັກຮຽນຕໍ່ຫ້ອງ | 25.1 | 25.1 | 25.0 | 25.0 | 25.0 |
| ອັດຕານັກຮຽນຕໍ່ຄູ | 24.2 | 24.4 | 24.6 | 24.8 | 25.0 |
| **ມັດທະຍົມຕົ້ນ** | **2016** | **2017** | **2018** | **2019** | **2020** |
| ອັດຕາເລື່ອນຊັ້ນ ປ5-ມ1 | 93.4% | 95.0% | 96.7% | 98.3% | 100.0% |
| ອັດຕາເຂົ້າຮຽນລວມ | 79% | 81% | 82% | 84% | 85% |
| ອັດຕານັກຮຽນຕໍ່ຄູ | 20 | 21 | 23 | 24 | 25 |
| ອັດຕານັກຮຽນຕໍ່ຫ້ອງ | 39 | 39 | 39 | 40 | 40 |
| **ມັດທະຍົມປາຍ** | **2016** | **2017** | **2018** | **2019** | **2020** |
| ອັດຕາເລື່ອນຊັ້ນ ມ4-ມ5 | 92.6% | 92.0% | 91.3% | 90.7% | 90.0% |
| ອັດຕາເຂົ້າຮຽນລວມ | 48% | 51% | 54% | 57% | 60% |
| ອັດຕານັກຮຽນຕໍ່ຄູ | 21 | 22 | 23 | 24 | 25 |
| ອັດຕານັກຮຽນຕໍ່ຫ້ອງ | 43 | 43 | 42 | 41 | 40 |
| **ອາຊີວະສຶກສາ** | **2016** | **2017** | **2018** | **2019** | **2020** |
| ອັດຕາເຂົ້າຮຽນທຽບໃສ່ນັກຮຽນຈົບ ມ 4 | 2.8% | 3.3% | 3.9% | 4.4% | 5.0% |
| ຈໍານວນນັກຮຽນເຂົ້າຮຽນໃໝ່ຫຼັກສູດ 9+3 | 2,000 | 2,500 | 3,000 | 4,000 | 5,000 |
| ອັດຕາເຂົ້າຮຽນທຽບໃສ່ນັກຮຽນຈົບ ມ 7 | 26.6% | 26.2% | 25.8% | 25.4% | 25.0% |
| ຈໍານວນນັກຮຽນເຂົ້າຮຽນໃໝ່ຫຼັກສູດ 12+2 ແລະ 12+3 | 12,000 | 13,000 | 14,000 | 15,000 | 16,000 |
| **ສ້າງຄູ** | **2016** | **2017** | **2018** | **2019** | **2020** |
| ຈໍານວນນັກຮຽນໃໝ່ໃນແຜນ | 1,200 | 1,200 | 1,200 | 1,200 | 1,200 |
| ຈໍານວນນອກແຜນ | 2,800 | 2,800 | 2,800 | 2,800 | 2,800 |
| **ການສຶກສາຊັ້ນສູງ (ມະຫາວິທະຍາໄລ)** | **2016** | **2017** | **2018** | **2019** | **2020** |
| ອັດຕາເຂົ້າຮຽນທຽບໃສ່ນັກຮຽນຈົບ ມ 7 | 19% | 19% | 19% | 20% | 20% |
| ຈໍານວນນັກຮຽນເຂົ້າຮຽນໃໝ່ | 9,000 | 10,000 | 11,000 | 12,000 | 12,500 |

| ການບໍລິຫານ ແລະ ຄຸ້ມຄອງ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ອັດຕາສ່ວນຮ້ອຍ (%) ຂອງງົບປະມານໃຊ້ຈ່າຍປົກກະຕິແຫ່ງຊາດທີ່ໄດ້ຈັດສັນໃຫ້ແກ່ກະຊວງສຶກສາ ແລະ ກິລາ | | | | | |
| ອັດຕາສ່ວນຮ້ອຍ (%) ຂອງງົບປະມານສໍາລັບການບໍລິຫານ ແລະ ນະໂຍບາຍອື່ນໆ | | | | | |
| ອັດຕາສ່ວນຮ້ອຍ (%) ຂອງງົບປະມານທີ່ຈັດສັນໃຫ້ແກ່ການສຶກສາຂັ້ນພື້ນຖານ | | | | | |
| ອັດຕາສ່ວນຮ້ອຍ (%) ຂອງງົບປະມານກະຊວງສຶກສາທິການ ແລະ ກິລາທັງໝົດທີ່ສະໜອງໃຫ້ແກ່ໂຮງຮຽນໂດຍກົງ (ເງິນບໍລິຫານໂຮງຮຽນ) | | | | | |
| ອັດຕາສ່ວນຮ້ອຍ (%) ຂອງພະນັກງານທີ່ມີລາຍລະອຽດໜ້າວຽກທີ່ຕົນເອງຮັບຜິດຊອບ ແລະ ມາດຖານຄຸນສົມບັດຂອງພະນັກງານເພື່ອທີ່ຈະປະຕິບັດໜ້າວຽກ | | | | | |
| ບົດລາຍງານປະຈໍາປີກ່ຽວກັບການຈັດຕັ້ງປະຕິບັດໜ້າວຽກຂອງຂະແໜງການໂດຍອີງໃສ່ຕົວຊີ້ບອກອອກເຜີຍແຜ່ ໃນເດືອນ ມິຖຸນາຂອງແຕ່ລະປີ | | | | | |

ຄຽງຄູ່ກັນນັ້ນ, ໃນສອງປີທໍາອິດຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020 ກົມແຜນການຈະກໍານົດບູລິມະສິດເພື່ອທົບທວນ ແລະ ດັດແກ້ຄາດໝາຍ ຫຼື ຕົວຊີ້ບອກຫຼັກທີ່ໃຊ້ເພື່ອປະເມີນຜົນສໍາເລັດຂອງຂະແໜງການ ຊຶ່ງຈຸດເລັ່ງຂອງການທົບທວນນີ້ແມ່ນຈະໄດ້ເອົາໃຈໃສ່ຕໍ່ການພັດທະນາຂອບຕິດຕາມກວດກາອີງໃສ່ຜົນໄດ້ຮັບເປັນຫຼັກ ແລະ ການພັດທະນາຕົວຊີ້ບອກຜົນການປະຕິບັດງານ (KPI) ທີ່ເນັ້ນໃສ່ໜ້າວຽກຫຼັກໃນການສະໜອງການບໍລິການ, ໂດຍສະເພາະ ກໍ່ແມ່ນເນັ້ນໃສ່ຜົນຜະລິດ (Outputs) ຂອງແຕ່ລະຂະແໜງການຍ່ອຍເປັນຫຼັກ. ຂອບຕົວຊີ້ບອກນີ້ແມ່ນຈະລວມມີ:

- ຕົວຊີ້ບອກທີ່ອີງໃສ່ຜົນຜະລິດເປັນຕົ້ນຕໍ ໂດຍຍົກໃຫ້ເຫັນລະດັບປະຊາກອນທີ່ໄດ້ຮັບການບໍລິການດ້ານການສຶກສາ
- ຕົວຊີ້ບອກທີ່ເນັ້ນໃສ່ລະດັບທ້ອງຖິ່ນ ກໍ່ຄືແຂວງໂດຍອີງຕາມໜ້າວຽກຮັບຜິດຊອບຂອງໂຄງຮ່າງການຈັດຕັ້ງ.
- ຕົວຊີ້ບອກສະເພາະທີ່ເຊື່ອມໂຍງເຖິງມາດຖານການບໍລິການໃນລະດັບໂຮງຮຽນ.

# ພາກທີ III
# ແຜນພັດທະນາ 5 ປີ (2016-2020)
# ສໍາລັບຂະແໜງການຍ່ອຍ

# 1. ການສຶກສາກ່ອນໄວຮຽນ

## 1.1 ສະພາບລວມ:

ໃນໄລຍະ 5 ປີຜ່ານມາ ວຽກງານການສຶກສາກ່ອນໄວຮຽນ ໄດ້ຮັບການພັດທະນາດີຂຶ້ນ: ຈຳນວນນັກຮຽນ, ຈຳນວນຄູ ແລະ ຈຳນວນຫ້ອງຮຽນກໍ່ເພີ່ມຂຶ້ນຕາມລຳດັບ. ພາຍໃຕ້ນະໂຍບາຍຂະຫຍາຍໂອກາດທາງດ້ານການສຶກສາ ໂດຍຜ່ານຫ້ອງກຽມປະຖົມ, ກຸ່ມຮຽນຜ່ານການຫຼິ້ນໃນຊຸມຊົນ ແລະ ດ້ວຍການສະໜັບສະໜູນການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ ໄດ້ເຮັດໃຫ້ອັດຕາເຂົ້າຮຽນຂອງເດັກ 5 ປີ ບັນລຸໄດ້ເຖິງ 66%. ສ່ວນເດັກກຸ່ມອາຍຸ 3-5 ປີ ບັນລຸ 43.2%. ຄຽງຄູ່ກັບການຂະຫຍາຍຕາໜ່າງໂຮງຮຽນແລ້ວ ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ເອົາໃຈໃສ່ພັດທະນາຫຼັກສູດຊັ້ນອະນຸບານສຶກສາ ແລະ ໄດ້ສະໜອງສື່ການຮຽນ-ການສອນຕ່າງໆ. ຕາຕະລາງທີ 1 ຂ້າງລຸ່ມນີ້ ໄດ້ສະແດງໃຫ້ເຫັນວ່າການສຶກສາເດັກກ່ອນໄວຮຽນໄດ້ມີການຂະຫຍາຍຕົວໃນຈັງຫວະທີ່ດີ ໃນຊ່ວງ 5 ປີ ຜ່ານມາໂດຍລວມ ອັດຕາເຂົ້າຮຽນຂອງເດັກອາຍຸ 3-5 ປີ ແລະ ອາຍຸ5 ປີ ເພີ່ມຂຶ້ນສະເລ່ຍປະມານ 5% ຕໍ່ປີ.

**ຕາຕະລາງ 13: ສົມທຽບບາງຕົວຊີ້ບອກຂອງການສຶກສາກ່ອນໄວຮຽນ ແຕ່ 2010-2015**

| ຕົວຊີ້ບອກ | 2009-10 | 2010-11 | 2011-12 | 2012-13 | 2013-14 | 2014-15 |
|---|---|---|---|---|---|---|
| ຈຳນວນໂຮງຮຽນທັງໝົດ | 1,284 | 1,358 | 1,577 | 1,802 | 2,125 | 2,403 |
| ຈຳນວນນັກຮຽນລ້ຽງເດັກ ແລະ ອະນຸບານ ທັງໝົດ | 95,974<br>ຍິງ: 47,835 | 103,200<br>ຍິງ: 51,884 | 119,929<br>ຍິງ: 59,914 | 137,359<br>ຍິງ: 68,398 | 159,491<br>ຍິງ: 79,494 | 175,492<br>ຍິງ: 87,707 |
| ຈຳນວນພະນັກງານ ແລະ ຄູສອນຄູ (ສະເພາະຄູລັດ) | 5,048 | 6,499 | 5,090 | 5,748 | 6,919 | 7,385 |
| ອັດຕາເຂົ້າຮຽນ ຂອງເດັກ 3-4 ປີ | 14.6% | 16.4% | 19.3% | 22.3% | 27.3% | 31.5% |
| ອັດຕາເຂົ້າຮຽນ ຂອງເດັກ 3-5 ປີ | 22.1% | 24.5% | 28.6% | 33% | 39.1% | 43.2% |
| ອັດຕາເຂົ້າຮຽນ ຂອງເດັກ 5 ປີ | 36.6% | 40.2% | 46.6% | 52.9% | 61.4% | 66% |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເຖິງແມ່ນວ່າ ອັດຕາການເຂົ້າຮຽນຂອງເດັກໃນເກນອາຍຸ 3-5 ປີ ສະເລ່ຍໃນທົ່ວປະເທດໄດ້ບັນລຸຄາດໝາຍ ປີ 2015 ແລ້ວກໍ່ຕາມ, ແຕ່ວ່າປະເດັນບັນຫາດ້ານຄຸນນະພາບການຮຽນ-ການສອນຍັງບໍ່ໄດ້ເອົາໃຈໃສ່ແກ້ໄຂ ແລະ ຍັງເປັນບັນຫາທ້າທາຍ ໂດຍສະເພາະແມ່ນການສອນເດັກຊົນເຜົ່າ ແລະ ເດັກໃນເຂດຫ່າງໄກສອກຫຼີກຢູ່ບາງແຂວງ ແລະ ຍັງມີຫຼາຍແຂວງ ທີ່ຍັງບໍ່ທັນສາມາດຂະຫຍາຍໂຮງຮຽນອະນຸບານໄປສູ່ຊຸມຊົນໄດ້. ມີຫຼາຍສາຍເຫດທີ່ເຮັດໃຫ້ການຂະຫຍາຍຕົວຂອງການສຶກສາກ່ອນໄວຮຽນຊັກຊ້າໃນບາງເຂດ ເຊັ່ນ: ຫ້ອງຮຽນບໍ່ເອື້ອອຳນວຍຄວາມສະດວກຕໍ່ການຈັດກິດຈະກຳສຳລັບເດັກ; ການສ້າງຄູອະນຸບານມີຈຳນວນຫຼາຍ ແລະ ພຽງພໍ ແຕ່ຄວາມສາມາດໃນການບັນຈຸຄູມີຈຳກັດ ແລະ ຈຳນວນຫ້ອງຮຽນເພື່ອຮອງຮັບກໍ່ຍັງຈຳກັດ ແລະ ການປະກອບສ່ວນຂອງຊຸມຊົນ ຫຼື ພາກສ່ວນຕ່າງໆ ຕໍ່ການສຶກສາກ່ອນໄວຮຽນຍັງບໍ່ມີຫຼາຍ.

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບການສຶກສາກ່ອນໄວຮຽນ, ໃນໄລຍະ 5 ປີຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 1.2 ຈຸດປະສົງ ແລະ ຄາດໝາຍ

- **ຈຸດປະສົງ:**

ເພື່ອໃຫ້ເດັກທຸກຄົນມີໂອກາດໄດ້ກຽມພາສາລາວ ແລະ ມີຄວາມພ້ອມກ່ອນເຂົ້າຮຽນໃນຊັ້ນປະຖົມສຶກສາ ແນໃສ່ ຫຼຸດຜ່ອນການປະລະການຮຽນ ແລະ ການຄ້າງຫ້ອງໃນຊັ້ນປະຖົມສຶກສາ.

- **ຄາດໝາຍຮອດປີ 2020**

1) ເພີ່ມອັດຕາເຂົ້າຮຽນຂອງເດັກອາຍຸ 3-4 ປີ ຈາກ 31.5% ໃນປີ 2015 ໃຫ້ໄດ້ 40%.
2) ເພີ່ມອັດຕາເຂົ້າຮຽນຂອງເດັກອາຍຸ 3-5 ປີ ຈາກ 43.2% ໃນປີ 2015 ໃຫ້ໄດ້ 55%.
3) ເພີ່ມອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ຈາກ 66% ໃນປີ 2015 ໃຫ້ໄດ້ 80%.
4) ໃຫ້ໂຮງຮຽນອະນຸບານທຸກແຫ່ງມີສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມ.

## 1.3 ຍຸດທະສາດ

ມີ 5 ຍຸດທະສາດ ທີ່ຈະໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸໄດ້ຈຸດປະສົງ ແລະ ຄາດໝາຍດັ່ງກ່າວຂ້າງເທິງນີ້:

### 1.3.1 ຍຸດທະສາດທີ 1: ສົ່ງເສີມການສຶກສາໄປສູ່ເຂດຫ່າງໄກສອກຫຼີກ ແລະ ສ້າງເງື່ອນໄຂໃຫ້ແກ່ເດັກຜູ້ດ້ອຍໂອກາດ ແລະ ທຸກຍາກ, ເພດຍິງ, ຊົນເຜົ່າ ແລະ ພິການໄດ້ຮັບການດູແລ ແລະ ກຽມຄວາມພ້ອມດ້ານການຮຽນຮູ້ຕາມເກນອາຍຸເຂົ້າຮຽນ.

- **ຈຸດປະສົງ:**

- ເພື່ອໃຫ້ເດັກໃນເຂດຫ່າງໄກສອກຫຼີກ ແລະ ຜູ້ດ້ອຍໂອກາດ ໄດ້ກຽມພາສາ ແລະ ມີຄວາມພ້ອມກ່ອນເຂົ້າຮຽນໃນຊັ້ນປະຖົມສຶກສາ.

- **ວຽກຈຸດສຸມ:**

1. ສ້າງມາດຕະຖານແບບປຸກສ້າງສະຖານການສຶກສາກ່ອນໄວຮຽນ ທີ່ເອື້ອອໍານວຍໃຫ້ເດັກທຸກຄົນໄດ້ເຂົ້າເຖິງ.
2. ປຸກສ້າງ ແລະ ສ້ອມແປງສະຖານການສຶກສາກ່ອນໄວຮຽນໃຫ້ໄດ້ມາດຖານ.
3. ໂຄສະນາປູກຈິດສໍານຶກໃຫ້ແກ່ຊຸມຊົນ ເພື່ອໃຫ້ເຂົາເຈົ້າເຂົ້າໃຈເຖິງຄວາມສໍາຄັນຂອງການສຶກສາກ່ອນໄວຮຽນ ແລະ ສົ່ງເສີມໃຫ້ພໍ່, ແມ່, ຜູ້ປົກຄອງຊຸກຍູ້ໃນວຽກງານການຮຽນຮູ້ຂອງເດັກເພື່ອກຽມຄວາມພ້ອມໃນການຮຽນ.
4. ສົ່ງເສີມໃຫ້ມີອາຫານທ່ຽງໃຫ້ແກ່ເດັກໃນສະຖານການສຶກສາກ່ອນໄວຮຽນ.
5. ສົ່ງເສີມການສຶກສາກ່ອນໄວຮຽນໃຫ້ເດັກດ້ວຍຮູບແບບຕ່າງໆທີ່ເໝາະສົມ.

### 1.3.2 ຍຸດທະສາດທີ 2: ປັບປຸງຄຸນນະພາບການບໍລິການການສຶກສາແກ່ເດັກກ່ອນໄວຮຽນໃຫ້ໄດ້ມາດຕະຖານ ແລະ ພຽງພໍ.

- **ຈຸດປະສົງ:**

- ເພື່ອເຮັດໃຫ້ຄຸນນະພາບການດູແລ ແລະ ການສອນເດັກດີຂຶ້ນ.

- **ວຽກຈຸດສຸມ:**

1. ທົບທວນ ແລະ ປັບປຸງຫຼັກສູດການສຶກສາກ່ອນໄວຮຽນ ໃຫ້ຕໍ່ເນື່ອງກັບຫຼັກສູດຂອງຊັ້ນປະຖົມສຶກສາ.
2. ສະໜອງສະຖານທີ່ ທີ່ເອື້ອອໍານວຍ, ສື່ການຮຽນ-ການສອນ, ອຸປະກອນ ແລະ ເຄື່ອງຫຼິ້ນໃຫ້ແກ່ສະຖານການສຶກສາກ່ອນໄວຮຽນລວມທັງເດັກທີ່ມີຄວາມຕ້ອງການພິເສດ.
3. ສ້າງ ແລະ ປັບປຸງການນິເທດການສຶກສາກ່ອນໄວຮຽນ.
4. ສະໜອງຄູສອນທີ່ມີຄຸນນະພາບ ລວມທັງຍົກລະດັບຂີດຄວາມສາມາດ ດ້ານການຈັດການຮຽນ-ການສອນໃຫ້ຄູ ແລະ ຜູ້ດູແລເດັກ.
5. ຊຸກຍູ້ໃຫ້ພໍ່, ແມ່ເດັກມີສ່ວນຮ່ວມໃນການພັດທະນາການຮຽນຂອງເດັກ.

### 1.3.3 ຍຸດທະສາດທີ 3: ສົ່ງເສີມວຽກງານສຸຂະພາບ ແລະ ສຸຂະອະນາໄມ ໂພຊະນາການສຶກສາໃນສະຖານການສຶກສາກ່ອນໄວຮຽນ.

- **ຈຸດປະສົງ:**
  - ເພື່ອປັບປຸງໂພຊະນາການຂອງເດັກ, ເຮັດໃຫ້ເດັກມີສຸຂະພາບແຂງແຮງ, ມີພັດທະນາການທາງດ້ານຮ່າງກາຍ ແລະ ມັນສະໝອງທີ່ດີ ເພື່ອປັບປຸງຄຸນນະພາບຂອງການຮຽນ ໂດຍເນັ້ນໃສ່ເດັກທຸກຍາກ ແລະ ເດັກໃນເຂດຫ່າງໄກສອກຫຼີກ.
- **ວຽກຈຸດສຸມ:**
  1. ປຸກລະດົມຊຸມຊົນໃຫ້ປະກອບສ່ວນຕໍ່ວຽກງານອະນາໄມ, ສຸຂະພາບ ແລະ ໂພຊະນາການ.
  2. ສ້າງຂີດຄວາມສາມາດ ໃຫ້ແກ່ຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບວຽກງານສົ່ງເສີມສຸຂະພາບ ແລະ ໂພຊະນາການສຶກສາ.
  3. ສ້າງ ແລະ ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍຕໍ່ສຸຂະພາບໃນຫ້ອງຮຽນ ແລະ ນອກຫ້ອງຮຽນໃຫ້ສະອາດ ແລະ ປອດໄພ ເປັນຕົ້ນສ້າງ ແລະ ປັບປຸງນໍ້າ, ວິດຖ່າຍ ແລະ ບ່ອນລ້າງມືໃນໂຮງຮຽນ.
  4. ສົ່ງເສີມການກວດສຸຂະພາບຂັ້ນພື້ນຖານ, ການປອດຢາ, ສັກຢາໃຫ້ຄົບ ແລະ ກິນຢາຂ້າແມ່ທ້ອງ.
  5. ສົ່ງເສີມຂະບວນການເຮັດກິດຈະກໍາສຸຂະອະນາໄມສ່ວນບຸກຄົນ, ສະພາບແວດລ້ອມ ແລະ ສະເຫຼີມສະຫຼອງໃນວັນສໍາຄັນຕ່າງໆ.

### 1.3.4 ຍຸດທະສາດທີ 4: ພັດທະນາມາດຕະຖານ ແລະ ລະບົບປະກັນຄຸນນະພາບການສຶກສາກ່ອນໄວຮຽນ.

- **ຈຸດປະສົງ:**
  - ເພື່ອເຮັດໃຫ້ມີເຄື່ອງມືໃນການປະເມີນມາດຖານຄຸນນະພາບການສຶກສາສໍາລັບການສຶກສາກ່ອນໄວຮຽນ.
- **ວຽກຈຸດສຸມ:**
  1. ສ້າງມາດຕະຖານຄຸນນະພາບການສຶກສາກ່ອນໄວຮຽນ.
  2. ສ້າງເຄື່ອງມືຕິດຕາມ ແລະ ວັດຜົນການຮຽນຂອງເດັກ ຕາມມາດຕະຖານຄຸນນະພາບການສຶກສາ.

### 1.3.5 ຍຸດທະສາດທີ 5: ສົ່ງເສີມຄວາມສາມາດໃນການບໍລິຫານ-ຄຸ້ມຄອງ ໃນສະຖານການສຶກສາກ່ອນໄວຮຽນ.

- **ຈຸດປະສົງ:**
  - ເພື່ອເຮັດໃຫ້ ລະບົບການບໍລິຫານ-ຄຸ້ມຄອງໃນສະຖານການສຶກສາກ່ອນໄວຮຽນ ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ.
- **ວຽກຈຸດສຸມ:**
  1. ສ້າງຄວາມເຂັ້ມແຂງດ້ານການບໍລິຫານ-ຄຸ້ມຄອງໂຮງຮຽນໃຫ້ຜູ້ອໍານວຍການ.
  2. ຊຸກຍູ້ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານໃນການບໍລິຫານ-ຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ.

## 1.4 ຄາດຄະເນການເຂົ້າຮຽນ ແລະ ຊັບພະຍາກອນທີ່ຕ້ອງການ

ໂດຍອີງໃສ່ນະໂຍບາຍ ແລະ ຄາດໝາຍ, ແຕ່ນີ້ຮອດປີ 2020 ຄາດວ່າຈະມີເດັກເຂົ້າຮຽນໃນໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ, ມີຈໍານວນຄູ, ຈໍານວນຫ້ອງຮຽນ ແລະ ງົບປະມານທີ່ຕ້ອງການຮັບໃຊ້ວຽກງານການສຶກສາກ່ອນໄວຮຽນດັ່ງນີ້:

**ຕາຕະລາງ 14: ຄາດຄະເນການເຂົ້າຮຽນສໍາລັບການສຶກສາກ່ອນໄວຮຽນ**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ອັດຕາເຂົ້າຮຽນເດັກ 3-5 ປີ | 46% | 48% | 50% | 53% | 55% |
| ອັດຕາເຂົ້າຮຽນເດັກ 5 ປີ | 69% | 72% | 74% | 77% | 80% |
| ຈໍານວນນັກຮຽນລວມ | 175,004 | 185,704 | 196,601 | 207,697 | 218,996 |
| ຈໍານວນຄູລວມ (ສະເພາະລັດ) | 7,688 | 8,401 | 9,176 | 10,022 | 10,950 |
| ຈໍານວນຄູທີ່ຕ້ອງການບັນຈຸໃໝ່ (ສະເພາະລັດ) | 834 | 905 | 985 | 1,075 | 1,179 |
| ຈໍານວນຫ້ອງຮຽນ (ສະເພາະລັດ) | 6,617 | 7,454 | 8,427 | 9,575 | 10,950 |
| ຈໍານວນຫ້ອງຮຽນທີ່ຕ້ອງການໃໝ່ (ສະເພາະລັດ) | 729 | 837 | 974 | 1,148 | 1,375 |

**ຕາຕະລາງ 15: ຄາດຄະເນຊັບພະຍາກອນທີ່ຕ້ອງການສໍາລັບການສຶກສາກ່ອນໄວຮຽນ (ລ້ານກີບ)**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 7,221 | 15,534 | 16,646 | 17,780 | 18,933 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 19,029 | 20,793 | 22,710 | 24,804 | 27,101 |
| ງົບປະມານສໍາລັບອຸປະກອນຮັບໃຊ້ການຮຽນ-ການສອນ | 3,727 | 4,214 | 4,787 | 5,475 | 5,530 |
| **ລວມບໍລິຫານ** | **29,977** | **40,541** | **44,144** | **48,058** | **51,564** |
| ການກໍ່ສ້າງ ແລະ ສ້ອມແປງຫ້ອງຮຽນ | 112,549 | 123,976 | 142,861 | 166,463 | 196,619 |
| ກໍ່ສ້າງສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມ | 5,555 | 5,555 | 5,555 | 5,555 | 5,555 |
| **ລວມລົງທຶນ** | **118,104** | **129,531** | **148,416** | **172,017** | **202,174** |
| **ລວມ** | **148,080** | **170,071** | **192,560** | **220,076** | **253,738** |

## 2. ການສຶກສາຊັ້ນປະຖົມ

### 2.1 ສະພາບລວມ:

ໂດຍປະຕິບັດຕາມນະໂຍບາຍໃນການຂະຫຍາຍໂອກາດການເຂົ້າຮຽນຢ່າງສະເໝີພາບ ແລະ ທົ່ວເຖິງ, ມາຮອດສົກຮຽນ 2014-2015, ອັດຕາເຂົ້າຮຽນໃນຊັ້ນປະຖົມສຶກສາໄດ້ເພີ່ມຂຶ້ນເປັນທີ່ເພິ່ງພໍໃຈທຽບໃສ່ 5 ປີຜ່ານມາ. ພາຍໃຕ້ການລົງທຶນຂອງລັດຖະບານ, ອານາດການປົກຄອງທ້ອງຖິ່ນ, ຊຸມຊົນ ແລະ ພາກສ່ວນເອກະຊົນ ສົມທົບກັບການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ, ໄດ້ມີຫຼາຍໂຄງການທີ່ໄດ້ຮັບການຈັດຕັ້ງປະຕິບັດ ເພື່ອປັບປຸງວຽກງານການສຶກສາຊັ້ນປະຖົມ, ດັ່ງນັ້ນ ຈຶ່ງເຮັດໃຫ້ ການສຶກສາຊັ້ນປະຖົມ ຢູ່ ສປປ ລາວ ໄດ້ຮັບການພັດທະນາດີຂຶ້ນທັງດ້ານປະລິມານ ແລະ ຄຸນນະພາບ, ລາຍລະອຽດດັ່ງລຸ່ມນີ້.

**ຕາຕະລາງ 16: ສັງລວມບາງຕົວຊີ້ບອກສຳລັບການສຶກສາຊັ້ນປະຖົມແຕ່ປີ 2010-2015**

| **ຕົວຊີ້ບອກ** | 2009-10 | **2010-11** | 2011-12 | 2012-13 | 2013-14 | 2014-15 |
|---|---|---|---|---|---|---|
| ຈຳນວນໂຮງຮຽນ (ລັດ ແລະ ເອກະຊົນ) | 8,968 | 8,902 | 8,912 | 8,927 | 8,884 | 8,887 |
| ຈຳນວນຫ້ອງຮຽນ (ລັດ ແລະ ເອກະຊົນ) | 31,648 | 31,057 | 31,957 | 32,745 | 33,173 | 33,666 |
| ຈຳນວນນັກຮຽນທັງໝົດ (ລັດ ແລະ ເອກະຊົນ) | 916,341 | 900,123 | 883,938 | 878,283 | 870,893 | 850,466 |
| | ຍິງ: 432,349 | ຍິງ: 427,050 | ຍິງ: 420,877 | ຍິງ: 419,231 | ຍິງ: 416,627 | ຍິງ: 408,251 |
| ຈຳນວນນັກຮຽນໃນໂຮງຮຽນຂອງລັດ | 884,632 | 865,878 | 847,439 | *839,556* | 831,419 | *808,529* |
| ສະເລ່ຍອັດຕານັກຮຽນຕໍ່ຄູ (ໂຮງຮຽນລັດ) | 30 | 28 | 27 | 25 | 25 | 24 |
| ສະເລ່ຍ ອັດຕານັກຮຽນຕໍ່ຫ້ອງ | 29 | 28 | 28 | 27 | 26 | 25 |
| ຈຳນວນພະນັກງານ ແລະ ຄູສອນທັງໝົດ (ສະເພາະລັດ) | 30.541 | 32,265 | 33,029 | 32,242 | 35,289 | 33,439 |
| ອັດຕາເຂົ້າຮຽນໃໝ່ສຸດທິ | 84.2% | 85.3% | 89.9% | 93.9% | 96.3% | 97.2% |
| ອັດຕາເຂົ້າຮຽນສຸດທິ | 92.7% | 94.1% | 95.2% | 96.8% | 98.0% | 98.5% |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເຖິງວ່າລັດຖະບານ ແລະ ຄູ່ຮ່ວມພັດທະນາໄດ້ເອົາໃຈໃສ່ລົງທຶນເຂົ້າໃນການປັບປຸງວຽກງານປະຖົມສຶກສາ ແຕ່ປະສິດທິພາບພາຍໃນຍັງຕໍ່າ: ອັດຕາຄ້າງຫ້ອງ, ອັດຕາປະລະໂດຍສະເພາະໃນຂັ້ນ ປ.1 ແລະ ປ.2 ຍັງສູງ. ພາບລວມອັດຕາການຄ້າງຫ້ອງ ປ.1 ແມ່ນຫຼຸດລົງປະມານປີລະ 2-3% ແຕ່ຍັງບໍ່ທັນເປັນທີ່ເພິ່ງພໍໃຈທຽບໃສ່ແຜນທີ່ກຳນົດໄວ້ ສ່ວນອັດຕາການປະລະການຮຽນຂອງນັກຮຽນ ປ.1 ແມ່ນບໍ່ມີການປັບປຸງໃຫ້ດີຂຶ້ນ.

**ຕາຕະລາງ 17: ສັງລວມປະສິດທິພາບພາຍໃນສຳລັບການສຶກສາຊັ້ນປະຖົມແຕ່ປີ 2010-2015**

| ຕົວຊີ້ບອກ | 2009-10 | 2010-11 | 2011-12 | 2012-13 | 2013-14 | 2014-15 | ຄາດໝາຍປີ 2015 |
|---|---|---|---|---|---|---|---|
| *ອັດຕາການປະລະ ປ 1* | *10.5%* | *12.1%* | *11.7%* | *11.0%* | *9.9%* | *8.5%* | *3%* |
| *ອັດຕາການຄ້າງຫ້ອງປ 1* | *28.4%* | *25.7%* | *22.8%* | *20.1%* | *15.3%* | *13.5%* | *3%* |
| *ອັດຕາປະລະຊັ້ນປະຖົມ* | *6.8%* | *7.8%* | *7.1%* | *6.3%* | *5.4%* | *5.2%* | *1%* |
| *ອັດຕາຄ້າງຫ້ອງຊັ້ນປະຖົມ* | *14.2%* | *12.2%* | *10.5%* | *9%* | *6.9%* | *5.8%* | *1%* |
| *ອັດຕາລອດເຫຼືອ* | *71.1%* | *67.7%* | *69.9%* | *73.3%* | *75.7%* | *78.3%* | *95%* |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບການສຶກສາຊັ້ນປະຖົມ, ໃນໄລຍະ 5 ປີ ຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 2.2 ຈຸດປະສົງ ແລະ ຄາດໝາຍ

➢ **ຈຸດປະສົງ**

- ເພື່ອຮັບປະກັນໃຫ້ເດັກໃນເກນອາຍຸເຂົ້າຮຽນຊັ້ນປະຖົມສຶກສາໄດ້ເຂົ້າຮຽນໝົດທຸກຄົນ ແລະ ສືບຕໍ່ຮຽນຈົນຈົບຊັ້ນປະຖົມ.

- ຮັບປະກັນໃຫ້ເດັກທີ່ຮຽນຈົບຊັ້ນປະຖົມມີຄວາມຮູ້, ຄວາມສາມາດໃນການອ່ານ, ການຂຽນພາສາລາວ ແລະ ການຄິດໄລ່ເລກຂັ້ນພື້ນຖານໄດ້ໃນລະດັບດີ.
- ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງໂດຍເນັ້ນໃສ່ໂຮງຮຽນເປັນຫຼັກ.

➢ **ຄາດໝາຍຮອດປີ 2020**

- ເພີ່ມອັດຕາເຂົ້າຮຽນສຸດທິຈາກ 98.5% ໃນປີ 2015 ເປັນ 99%.
- ເພີ່ມອັດຕາເຂົ້າຮຽນໃໝ່ສຸດທິຈາກ 97.2% ເປັນ 99%.
- ເພີ່ມອັດຕາລອດເຫຼືອຈາກ 78.3% ໃນປີ 2015 ເປັນ 90%.
- ເພີ່ມອັດຕາຈົບຊັ້ນ ປ 5 ຕາມກະແສນັກຮຽນຈາກ 76% ເປັນ 89%.
- ຫຼຸດອັດຕາຄ້ອງຫ້ອງ ປ 1 ຈາກ 13.5% ໃຫ້ຍັງເຫຼືອໜ້ອຍກວ່າ 5%.
- ຫຼຸດອັດຕາປະລະ ປ.1 ຈາກ 8.5% ໃຫ້ຍັງເຫຼືອໜ້ອຍກວ່າ 5%.
- ດັດຊະນີຄວາມສະເໝີພາບຍິງ-ຊາຍ ໃຫ້ໄດ້ລະຫວ່າງ 0.97-1.03.
- ຈັດຕັ້ງການຮຽນ-ການສອນວິຊາພະລະສຶກສາໃຫ້ໄດ້ 75% ແລະ ວິຊາສິລະປະສຶກສາໃຫ້ໄດ້ 55% ຂອງໂຮງຮຽນທັງໝົດທົ່ວປະເທດ.
- ໂຮງຮຽນປະຖົມທີ່ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມເພີ່ມຈາກ 64% ເປັນ 85%.

## 2.3 ຍຸດທະສາດ

ມີ 5 ຍຸດທະສາດ ທີ່ຈະຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍຂ້າງເທິງດັ່ງກ່າວ.

### 2.3.1 ຍຸດທະສາດທີ 1: ສົ່ງເສີມໃຫ້ເດັກທຸກຄົນໄດ້ເຂົ້າຮຽນ ແລະ ຮຽນຈົນຈົບຊັ້ນປະຖົມສຶກສາຢ່າງມີຄຸນນະພາບ ໂດຍບໍ່ຈຳແນກເພດ, ເຜົ່າ, ພິການ ແລະ ຜູ້ທີ່ມີບັນຫາດ້ານເສດຖະກິດ-ສັງຄົມ.

➢ **ຈຸດປະສົງ:**

- ເພື່ອສ້າງເງື່ອນໄຂໃຫ້ເດັກໃນເກນອາຍຸທຸກຄົນໄດ້ເຂົ້າເຖິງການສຶກສາຊັ້ນປະຖົມ ແລະ ເພີ່ມປະສິດທິພາບພາຍໃນໃຫ້ດີຂຶ້ນ.

➢ **ວຽກຈຸດສຸມ:**

1. ປຸກສ້າງ ແລະ ສ້ອມແປງ ສະຖານການສຶກສາໃຫ້ໄດ້ມາດຕະຖານ ເພື່ອໃຫ້ມີສະພາບແວດລ້ອມທີ່ເອື້ອອຳນວຍແກ່ການຮຽນ-ການສອນ ໂດຍເອົາໃຈໃສ່ໃຫ້ມີລະບົບອຳນວຍຄວາມສະດວກສຳລັບຜູ້ຮຽນທີ່ເປັນຄົນພິການ.
2. ສະໜອງສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຮັບໃຊ້ການສິດສອນວິຊາພະລະ ແລະ ສິລະປະສຶກສາ.
3. ປຸກລະດົມ ແລະ ສະໜັບສະໜູນຊຸມຊົນໃຫ້ສົ່ງເດັກທຸກຄົນໄດ້ເຂົ້າຮຽນຖືກເກນອາຍຸ.
4. ທົບທວນ ແລະ ປັບປຸງ ລະບົບກຸ່ມໂຮງຮຽນຄືນໃໝ່.
5. ຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງຢ່າງທົ່ວເຖິງໃນປີ 2020.

### 2.3.2 ຍຸດທະສາດທີ 2: ຍົກສູງຄຸນນະພາບການຮຽນ-ການສອນໃນຊັ້ນປະຖົມສຶກສາ.

➢ **ຈຸດປະສົງ:**

- ເພື່ອໃຫ້ເດັກທີ່ຮຽນຈົບຊັ້ນປະຖົມສຶກສາໃຫ້ມີຄວາມຮູ້ພື້ນຖານ ທາງດ້ານວິທະຍາສາດທຳມະຊາດ-ສັງຄົມ, ຄວາມຮູ້ພື້ນຖານດ້ານພາສາອັງກິດ, ສາມາດອ່ານ, ຂຽນ, ໃຊ້ພາສາລາວຢ່າງຖືກຕ້ອງ ແລະ ຮູ້ຄິດໄລ່ເລກພື້ນຖານໄດ້ໃນລະດັບທີ່ແນ່ນອນ.

➢ **ວຽກຈຸດສຸມ:**

1. ເຝິກອົບຮົມຄູສອນປະຈຳການ ພ້ອມທັງປັບປຸງວິທີສອນຂອງຄູສອນຫ້ອງດ່ຽວ, ຫ້ອງຄວບ ແລະ ຫ້ອງຮຽນຮ່ວມທຸກໆປີໃນລະດັບໂຮງຮຽນ/ກຸ່ມໂຮງຮຽນ.

2. ສົ່ງເສີມການແລກປ່ຽນບົດຮຽນ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ພາຍໃນໂຮງຮຽນ ແລະ ກຸ່ມໂຮງຮຽນ
3. ປັບປຸງລະບົບນິເທດການສຶກສາ ແລະ ສ້າງຄູສຶກສານິເທດທົດແທນ ແລະ ເພີ່ມເຕີມ.
4. ສະໜອງອຸປະກອນ/ສື່ການຮຽນ-ການສອນ ແລະ ສິ່ງອໍານວຍຄວາມສະດວກສໍາລັບນັກຮຽນພິການ, ເດັກທີ່ມີຄວາມຕ້ອງການພິເສດ ແລະ ເດັກດ້ອຍໂອກາດ.
5. ເລີ່ມປັບປຸງ ແລະ ພັດທະນາຫຼັກສູດຊັ້ນປະຖົມສຶກສາ.
6. ປັບປຸງວິທີການຮຽນ-ການສອນພາສາລາວ ແລະ ສົ່ງເສີມການອ່ານ.
7. ປັບປຸງວິທີການຮຽນ-ການສອນຄະນິດສາດ ແລະ ວິທະຍາສາດ.
8. ຈັດໃຫ້ມີການບໍາລຸງ-ສອນເພີ່ມໃຫ້ນັກຮຽນອ່ອນ.
9. ສ້າງຄວາມເຂັ້ມແຂງການເຊື່ອມໂຍງ ແລະ ກົນໄກໃນການພັດທະນາວິຊາຊີບຂອງຄູແບບຕໍ່ເນື່ອງໂດຍອີງໃສ່ລະບົບການສ້າງຄູກ່ອນປະຈໍາການ ແລະ ບໍາລຸງຄູປະຈໍາການ.
10. ປະເມີນຜົນ ແລະ ວິໄຈຜົນການຮຽນຊັ້ນປະຖົມສຶກສາຕາມມາດຕະຖານຄຸນນະພາບການສຶກສາ.
11. ສ້າງເງື່ອນໄຂ ແລະ ຊຸກຍູ້ໃຫ້ມີການຈັດຕັ້ງການຮຽນ-ການສອນພາສາອັງກິດໃນຊັ້ນປະຖົມສຶກສານັບແຕ່ ປ.3 ຂຶ້ນໄປ.
12. ຈັດການວັດລະດັບ ແລະ ວິໄຈຜົນການຮຽນ ປ.5 ໃນທຸກໆ ພາກຮຽນທີ 2.
13. ຊຸກຍູ້ໃຫ້ໂຮງຮຽນສ້າງມູມອ່ານໜັງສື ຫຼື ຫ້ອງສະໝຸດຂອງໂຮງຮຽນເພື່ອເປັນການສ້າງໂອກາດການອ່ານໃຫ້ແກ່ເດັກ.
14. ຝຶກອົບຮົມກ່ຽວກັບລະບົບການດູແລຊ່ວຍເຫຼືອ ແລະ ການຟື້ນຟູຂັ້ນພື້ນຖານໃຫ້ແກ່ຄູ, ພໍ່,ແມ່ ນັກຮຽນພິການໃນໂຮງຮຽນ.

### 2.3.3 ຍຸດທະສາດທີ 3: ຍົກສູງປະສິດທິພາບໃນການບໍລິຫານ ແລະ ຄຸ້ມຄອງໂຮງຮຽນ ຕາມມາດຕະຖານຄຸນນະພາບການສຶກສາຊັ້ນປະຖົມສຶກສາ

- **ຈຸດປະສົງ:**
  - ເພື່ອເຮັດໃຫ້ການນໍາໃຊ້ຊັບພະຍາກອນມີ ປະສິດທິພາບ ແລະ ປະສິດທິຜົນ.
- **ວຽກຈຸດສຸມ:**

1. ປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງໂຮງຮຽນ ໂດຍຖືເອົາການບໍລິຫານ-ຄຸ້ມຄອງທີ່ເນັ້ນໃສ່ໂຮງຮຽນເປັນຫຼັກ ໂດຍເລີ່ມຈາກການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອໍານວຍການໂຮງຮຽນ.
2. ສ້າງເງື່ອນໄຂໃຫ້ຄູສຶກສານິເທດໄດ້ລົງຕິດຕາມ, ຊ່ວຍເຫຼືອຄູສອນ ເພື່ອຮັບປະກັນການຮຽນ-ການສອນ ຫ້ອງ ປ1 ທີ່ເປັນຫ້ອງດ່ຽວ ແລະ ສອນດ້ວຍຄູທີ່ມີປະສົບການສູງ ແລະ ຮັບປະກັນໃຫ້ຄູສຶກສານິເທດໄດ້ລົງຕິດຕາມ ແລະ ຊ່ວຍເຫຼືອຄູສອນຢ່າງໜ້ອຍ 1 ຄັ້ງ ຕໍ່ 1 ພາກຮຽນ.
3. ສົ່ງເສີມການສ້າງແຜນພັດທະນາໂຮງຮຽນແບບມີສ່ວນຮ່ວມ ແລະ ເຈົ້າການຂອງໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ.
4. ນໍາໃຊ້ເງິນບໍລິຫານໂຮງຮຽນ ແລະ ເງິນອຸດໜູນການສຶກສາໃຫ້ຖືກຕ້ອງຕາມລະບຽບຫຼັກການ.
5. ປັບປຸງ ແລະ ສ້າງນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບການສຶກສາຊັ້ນປະຖົມ.
6. ຕິດຕາມ ແລະ ປະເມີນຜົນ ການບໍລິຫານ ແລະ ຄຸ້ມຄອງໂຮງຮຽນ.

### 2.3.4 ຍຸດທະສາດທີ 4: ສົ່ງເສີມຄວາມເປັນເຈົ້າການ ແລະ ການມີສ່ວນຮ່ວມຂອງຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນໃນການພັດທະນາໂຮງຮຽນຕາມມາດຕະຖານຄຸນນະພາບການສຶກສາຊັ້ນປະຖົມສຶກສາ

➢ **ຈຸດປະສົງ:**

- ເພື່ອສົ່ງເສີມໃຫ້ຊຸມຊົນໄດ້ມີສ່ວນຮ່ວມໃນການພັດທະນາໂຮງຮຽນ.

➢ **ວຽກຈຸດສຸມ:**

1. ສ້າງຄວາມເຂັ້ມແຂງຄວາມເປັນເຈົ້າການໃນການພັດທະນາການສຶກສາ ໃຫ້ແກ່ຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ).
2. ປັບປຸງການໂຄສະນາເຜີຍແຜ່ກ່ຽວກັບວຽກງານການສຶກສາ ໃຫ້ແກ່ຄະນະພັດທະນາກາສຶກສາຂັ້ນບ້ານ ແລະ ຊຸມຊົນ.
3. ປັບປຸງການຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອການປະຕິບັດໜ້າທີ່ ແລະ ຄວາມເປັນເຈົ້າການຂອງຄະນະພັດທະນາການສຶກສາຂັ້ນບ້ານ.

### 2.3.5 ຍຸດທະສາດທີ 5: ສົ່ງເສີມວຽກງານສຸຂະພາບ, ສຸຂະອະນາໄມ, ໂພຊະນາການໃນໂຮງຮຽນ

➢ **ຈຸດປະສົງ:**

- ເພື່ອປັບປຸງໂພຊະນາການຂອງເດັກ, ເຮັດໃຫ້ເດັກມີສຸຂະພາບແຂງແຮງ, ມີພັດທະນາການທາງດ້ານຮ່າງກາຍ ແລະ ມັນສະໝອງທີ່ດີ ເພື່ອປັບປຸງຄຸນນະພາບຂອງການຮຽນ ໂດຍເນັ້ນໃສ່ເດັກທຸກຍາກ ແລະ ເດັກໃນເຂດຫ່າງໄກສອກຫຼີກ.

➢ **ວຽກຈຸດສຸມ:**

1. ສືບຕໍ່ສົ່ງເສີມການສະໜອງອາຫານໃນໂຮງຮຽນດ້ວຍຮູບແບບຕ່າງໆ.
2. ສົ່ງເສີມວຽກງານອາຫານ ແລະ ໂພຊະນາການໃນໂຮງຮຽນ.
3. ສົ່ງເສີມການສ້າງສວນຄົວ ແລະ ລ້ຽງສັດໃນໂຮງຮຽນ.
4. ປຸກລະດົມຊຸມຊົນໃຫ້ປະກອບສ່ວນວຽກງານສົ່ງເສີມສຸຂະອະນາໄມ, ສຸຂະພາບຈະເລີນພັນ ແລະ ໂພຊະນະສຶກສາໃນໂຮງຮຽນ.
5. ສ້າງຄວາມສາມາດໃຫ້ແກ່ຜູ້ບໍລິຫານ ແລະ ຄູກ່ຽວກັບວຽກງານສົ່ງເສີມສຸຂະອະນາໄມ, ໂພຊະນາສຶກສາ ແລະ ສຸຂະພາບຈະເລີນພັນໃນໂຮງຮຽນ.
6. ສ້າງ ແລະ ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍຕໍ່ສຸຂະພາບ ໃນຫ້ອງຮຽນ ແລະ ນອກຫ້ອງຮຽນໃຫ້ສະອາດ ແລະ ປອດໄພ ໄດ້ຕາມມາດຖານຄຸນນະພາບການສຶກສາສໍາລັບຊັ້ນປະຖົມ.
7. ປະສານພາກສວນກ່ຽວຂອງໃນການສ້າງ ແລະ ປັບປຸງລະບົບນໍ້າ, ວິດຖ່າຍ ແລະ ບ່ອນລ້າງມືໃນໂຮງຮຽນ.
8. ຊຸກຍູ້ຂະບວນການເຄື່ອນໄຫວນອກຫຼັກສູດທາງດ້ານສິລະປະ, ກິລາ ແລະ ການອອກແຮງງານໃນໂຮງຮຽນ.

## 2.4 ຄາດຄະເນການເຂົ້າຮຽນ ແລະ ຊັບພະຍາກອນທີ່ຕ້ອງການ

ໂດຍອີງໃສ່ນະໂຍບາຍ ແລະ ຄາດໝາຍ, ແຕ່ນີ້ຮອດປີ 2020 ຄາດວ່າຈະມີເດັກເຂົ້າຮຽນໃນໂຮງຮຽນປະຖົມທັງໝົດ, ມີຈໍານວນຄູ, ຈໍານວນຫ້ອງຮຽນ ແລະ ງົບປະມານທີ່ຕ້ອງການຮັບໃຊ້ວຽກງານການສຶກສາຊັ້ນປະຖົມດັ່ງນີ້:

### ຕາຕະລາງ 18: ຄາດຄະເນການເຂົ້າຮຽນສຳລັບການສຶກສາຊັ້ນປະຖົມ

| ປະຖົມສຶກສາ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ອັດຕາເຂົ້າຮຽນໃໝ່ສຸດທິ | 98% | 98% | 98% | 99% | 99% |
| ຈຳນວນນັກຮຽນທັງໝົດ (ທັງລັດ ແລະ ເອກະຊົນ) | 836,513 | 827,335 | 816,184 | 811,875 | 820,832 |
| ຈຳນວນຄູ (ສະເພາະຄູລັດ)* | 32,810 | 32,192 | 31,506 | 31,094 | 31,192 |
| ຈຳນວນຫ້ອງຮຽນ (ສະເພາະໂຮງຮຽນລັດ) | 31,714 | 31,384 | 30,979 | 30,833 | 31,192 |
| ຈຳນວນຫ້ອງຮຽນທີ່ຕ້ອງການສ້າງເພີ່ມເຕີມ ແລະ ທົດແທນ | 1,586 | 1,569 | 1,549 | 1,542 | 1,560 |

*ໝາຍເຫດ: * ເນື່ອງຈາກກະແສນັກຮຽນມີລັກສະນະຫຼຸດລົງ, ດັ່ງນັ້ນ ຖ້າມາດຖານນັກຮຽນຕໍ່ຄູມີເປັນຕົວກຳນົດ ຈະເຫັນໄດ້ວ່າ ແຕ່ນີ້ ຮອດປີ 2020 ຈະບໍ່ຕ້ອງການຄູຊັ້ນປະຖົມຕື່ມອີກ ແຕ່ມີຄວາມຈຳເປັນຕ້ອງໄດ້ສັບຊ້ອນຄືນໃໝ່ ໃຫ້ເໝາະສົມ.*

### ຕາຕະລາງ 19: ຄາດຄະເນງົບປະມານສຳລັບຊັ້ນປະຖົມສຶກສາ (ລ້ານກີບ)

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 57,244 | 81,391 | 80,577 | 80,561 | 80,512 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 81,206 | 79,674 | 77,978 | 76,957 | 77,199 |
| ງົບປະມານສຳລັບອຸປະກອນຮັບໃຊ້ການຮຽນ-ການສອນ | 34,256 | 29,391 | 30,083 | 29,765 | 31,078 |
| **ລວມບໍລິຫານ** | **172,705** | **190,456** | **188,638** | **187,283** | **188,790** |
| ການກໍ່ສ້າງ ແລະ ສ້ອມແປງຫ້ອງຮຽນ | 237,853 | 235,380 | 232,342 | 231,250 | 233,937 |
| ກໍ່ສ້າງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ | 30,282 | 30,282 | 30,282 | 30,282 | 30,282 |
| **ລວມລົງທຶນ** | **268,135** | **265,662** | **262,624** | **261,532** | **264,219** |
| **ລວມ** | **440,840** | **456,118** | **451,262** | **448,815** | **453,009** |

## 3. ມັດທະຍົມສຶກສາຕອນຕົ້ນ

### 2.1 ສະພາບລວມ:

ໃນໄລຍະຜ່ານມາ, ທັງລັດຖະບານ ແລະ ອົງການຈັດຕັ້ງສາກົນຕ່າງໆ ເຊັ່ນ: ທະນາຄານພັດທະນາອາຊີ ພາຍໃຕ້ໂຄງການພັດທະນາການສຶກສາຂັ້ນພື້ນຖານ (BESDP) ແລະ ໂຄງການພັດທະນາການສຶກສາຊັ້ນມັດທະຍົມ (SESDP) ອົງການ JICA, ກອງທຶນເຊື່ອມໂຍງຍີ່ປຸ່ນ-ອາຊຽນ Japan ASEAN Integration Fund (JAIF) ແລະ ອົງການ PLAN INTERNATIONAL ໄດ້ເອົາໃຈໃສ່ລົງທຶນເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ, ສະໜອງອຸປະກອນຮັບໃຊ້ການ ຮຽນ-ການສອນ, ຝຶກອົບຮົມຄູ ແລະ ສະໜອງສິ່ງອຳນວຍຄວາມສະດວກອື່ນໆເຊັ່ນ: ໄດ້ກໍ່ສ້າງຫ້ອງຮຽນ, ຫໍພັກນັກຮຽນ, ຫໍພັກຄູ ແລະ ສະໜອງທຶນການສຶກສາ ໃຫ້ແກ່ນັກຮຽນຈາກຄອບຄົວທຸກຍາກທີ່ບ້ານຢູ່ໄກໂຮງຮຽນໄດ້ມີໂອກາດເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຈຳນວນນັກຮຽນເພີ່ມຂຶ້ນໃນແຕ່ລະປີ. ຄຽງຄູ່ກັນນັ້ນຍັງໄດ້ສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູໃຫ້ແກ່ບັນໂຮງຮຽນມັດທະຍົມໃນທົ່ວປະເທດ. ຈາກການຈັດຕັ້ງປະຕິບັດກິດຈະກຳທີ່ກ່າວມານັ້ນ ເຮັດໃຫ້ບັນດາຕົວຊີ້ບອກຕ່າງໆຂອງມັດທະຍົມຕອນຕົ້ນມີການປ່ຽນແປງ ດັ່ງລຸ່ມນີ້:

### ຕາຕະລາງ 20: ສັງລວມຕົວຊີ້ບອກສຳລັບຊັ້ນມັດທະຍົມຕອນຕົ້ນແຕ່ປີ 2010-2015

| ຕົວຊີ້ບອກ | 2009-10 | 20110-11 | 2011-12 | 2012-13 | 2013-14 | 2014-15 |
|---|---|---|---|---|---|---|
| ຈຳນວນຫ້ອງຮຽນ (ລັດ ແລະ ເອກະຊົນ) | 8,103 | 8,560 | 9,217 | 9,946 | 10,941 | 11,631 |
| ຈຳນວນພະນັກງານ ແລະ ຄູສອນ ມັດທະຍົມທັງໝົດ (ສະເພາະລັດ) | 19,816 | 23,560 | 26,849 | 29,577 | 31,595 | 32,870 |
| ຈຳນວນນັກຮຽນ (ລັດ ແລະ ເອກະຊົນ) | 335,388 | 345,283 | 361,875 | 385,552 | 420,720 | 442,806 |
| | ຍິງ: 150,225 | ຍິງ: 157,015 | ຍິງ: 167.040 | ຍິງ: 180,030 | ຍິງ: 198,935 | ຍິງ: 210,816 |
| ອັດຕາເຂົ້າຮຽນລວມ | 60.2% | 62.9% | 64.7% | 69.0% | 74.4% | 78.1% |
| ອັດຕາເລື່ອນຊັ້ນ-ຈົບຊັ້ນ | 86.5% | 87.5% | 88.2% | 90.1% | 92.5% | 91.3% |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເຖິງວ່າລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ໃນການສະໜອງສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ການພັດທະນາວຽກງານມັດທະຍົມສຶກສາ ແຕ່ຍັງສັງເກດເຫັນວ່າການຂະຫຍາຍການສຶກສາຊັ້ນມັດທະຍົມຕອນຕົ້ນຍັງບໍ່ທັນຕອບສະໜອງໄດ້ກັບການເພີ່ມຂຶ້ນຂອງຈຳນວນນັກຮຽນຢູ່ໂຮງຮຽນບາງແຫ່ງ ຫ້ອງຮຽນມີສະພາບແອອັດ, ນັກຮຽນລົ້ນຫ້ອງ. ການຮັບບັນຈຸຄູບໍ່ຖືກຕ້ອງກັບຄວາມຕ້ອງການ ເຮັດໃຫ້ຄູຈຳນວນໜຶ່ງສອນຫຼາຍວິຊາ, ສອນບໍ່ຖືກຕາມຊັ້ນຮຽນ ແລະ ບໍ່ຖືກກັບວິຊາສະເພາະທີ່ຮຽນມາ ເຊິ່ງພາໃຫ້ເກີດສະພາບຄູເຫລືອບໍ່ພໍ. ຄູ ແລະ ຜູ້ບໍລິຫານໂຮງຮຽນຈຳນວນໜຶ່ງບໍ່ໄດ້ຮັບການຍົກລະດັບຢ່າງຕໍ່ເນື່ອງ ແລະ ບໍ່ເປັນປົກກະຕິ, ພ້ອມນັ້ນຍັງຂາດສິ່ງອຳນວຍຄວາມສະດວກຕ່າງໆເຊັ່ນ: ອາຄານຮຽນ, ຫ້ອງຮຽນຫ້ອງທົດລອງ, ຫ້ອງສະໝຸດ, ຫໍພັກຄູ ແລະ ຫໍພັກນັກຮຽນ. ນອກນັ້ນ, ສື່ການຮຽນ-ການສອນ, ປຶ້ມຕຳລາ, ອຸປະກອນຫ້ອງທົດລອງເຊິ່ງເປັນສິ່ງປະຈັກຕາທີ່ຊ່ວຍໃນການຮຽນ-ການສອນບໍ່ພຽງພໍ. ອັດຕາການປະລະການຮຽນຂອງນັກຮຽນໂດຍສະເພາະໃນຊັ້ນ ມ.1 ແລະ ມ.2 ຍັງສູງ ໂດຍສະເພາະຢູ່ບັນດາເມືອງເຂດຊາຍແດນ ແລະ ບັນດາແຂວງພາກໃຕ້ຂອງລາວ.

ນອກຈາກບັນຫາການປະລະການຮຽນຂອງນັກຮຽນແລ້ວ ການສະໜອງຄູສອນໃນບາງວິຊາບໍ່ພຽງພໍກັບການຂະຫຍາຍໂຮງຮຽນ ແລະ ຫ້ອງຮຽນເຊັ່ນ: ວິຊາວິທະຍາສາດທຳມະຊາດ, ວິຊາພະລະສຶກສາ ແລະ ສິລະປະສຶກສາ, ຂາດຄູສອນວິຊາຊີບພື້ນຖານ, ເຕັກໂນໂລຊີຂໍ້ມູນຂ່າວສານ (ICT) ເຮັດໃຫ້ຄູບາງຄົນສອນບໍ່ຖືກຕາມວິຊາສະເພາະທີ່ຮຽນຈົບມາ.

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບການສຶກສາຊັ້ນມັດທະຍົມຕອນຕົ້ນ, ໃນໄລຍະ 5 ປີ ຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 2.2 ຈຸດປະສົງ ແລະ ຄາດໝາຍ:

➢ **ຈຸດປະສົງ**

- ເພື່ອສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນປະຖົມສຶກສາທຸກຄົນໄດ້ເຂົ້າຮຽນຈົນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ.
- ເພື່ອໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ໄດ້ມີຄວາມຮູ້ພື້ນຖານດ້ານວິທະຍາສາດ ເພື່ອກະກຽມເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ຄຽງຄູ່ກັບການສ້າງທັກສະພື້ນຖານດ້ານວິຊາຊີບ ແລະ ທັກສະການແກ້ໄຂບັນຫາເຂົ້າໃນການດຳລົງຊີວິດປະຈຳວັນ.

➢ **ຄາດໝາຍຮອດປີ 2020**

1) ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນຈາກ 78% ເປັນ 85%.
2) ເພີ່ມອັດຕາການເລື່ອນຊັ້ນຂອງນັກຮຽນຈົບ ປ. 5 ຂຶ້ນ ມ. 1 ຈາກ 91.3% ເປັນ 100%.
3) ຫຼຸດຜ່ອນອັດຕາການປະລະຈາກ 7.7% ໃຫ້ເຫຼືອພຽງ 2%.
4) ໂຮງຮຽນມັດທະຍົມສຶກສາຕອນຕົ້ນແຕ່ລະແຫ່ງໃນເຂດຫ່າງໄກສອກຫຼີກມີຫໍພັກຄູ ແລະ ຫໍພັກນັກຮຽນຢ່າງໜ້ອຍ 1 ຫຼັງ.
5) ໂຮງຮຽນມັດທະຍົມທີ່ມີສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມເພີ່ມຈາກ 89% ເປັນ 100%.

### 2.3 ຍຸດທະສາດ :

ມີ 3 ຍຸດທະສາດ ທີ່ຈະໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸໄດ້ຈຸດປະສົງ ແລະ ຄາດໝາຍດັ່ງກ່າວຂ້າງເທິງນີ້:

### 2.3.1 ຍຸດທະສາດ 1: ສົ່ງເສີມນັກຮຽນທຸກຄົນທີ່ຮຽນຈົບຊັ້ນປະຖົມສຶກສາໄດ້ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນຕົ້ນ

➢ **ຈຸດປະສົງ:**

- ຊຸກຍູ້ສົ່ງເສີມໃຫ້ເດັກຍິງຊົນເຜົ່າ, ຜູ້ດ້ອຍໂອກາດ, ເດັກທີ່ມີຄວາມຕ້ອງການພິເສດໃນເຂດຫ່າງໄກສອກຫຼີກໄດ້ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນຕົ້ນ.

➢ **ວຽກຈຸດສຸມ:**

1. ສ້າງໂຮງຮຽນໃໝ່ໃນເຂດຈຸດສຸມພັດທະນາ, ສ້າງຫ້ອງທົດລອງວິທະຍາສາດ, ຫ້ອງຄອມພິວເຕີ, ຫ້ອງຝຶກປະຕິບັດ, ຫ້ອງສະໝຸດ/ຫ້ອງອ່ານ.
2. ສ້າງ ແລະ ຂະຫຍາຍຫ້ອງຮຽນ, ຢູ່ໂຮງຮຽນມັດທະຍົມສຶກສາຕອນຕົ້ນ ທີ່ມີແລ້ວເພື່ອແກ້ໄຂບັນຫານັກຮຽນແອອັດ, ລົ້ນຫ້ອງ; ພ້ອມທັງເອົາໃຈໃສ່ສະໜອງສິ່ງອໍານວຍຄວາມສະດວກສໍາລັບ ນັກຮຽນທີ່ມີຄວາມຕ້ອງການພິເສດ.
3. ສ້າງຫໍພັກນັກຮຽນ ແລະ ຄູອາຈານພ້ອມທັງສະໜອງລະບົບນໍ້າສະອາດ ແລະ ສິ່ງອໍານວຍສະດວກຕ່າງໆຕາມເງື່ອນໄຂຕົວຈິງ.
4. ສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນຜູ່ທຸກຍາກດ້ອຍໂອກາດ ແລະ ສະໜອງເງິນບໍລິຫານໂຮງຮຽນໃຫ້ໄດ້ຕາມມູນຄ່າຫົວໜ່ວຍທີ່ກໍານົດ.
5. ສົ່ງເສີມວຽກງານໂພຊະນາການ, ສຸຂະພາບ ແລະ ສຸຂະພາບຈະເລີນພັນ ໃນໂຮງຮຽນຊັ້ນມັດທະຍົມສຶກສາຢ່າງທົ່ວເຖິງ ແລະ ເປັນປົກກະຕິ.
6. ປັບປຸງສະພາບແວດລ້ອມຂອງໂຮງຮຽນໃຫ້ໄດ້ຕາມມາດຕະຖານຄຸນນະພາບຊັ້ນມັດທະຍົມສຶກສາ.
7. ເພີ່ມທະວີການມີສ່ວນຮ່ວມຂອງພາກສ່ວນເອກະຊົນ ແລະ ຊຸມຊົນເຂົ້າໃນການພັດທະນາການສຶກສາ.
8. ສົ່ງເສີມການຮຽນຮູ້ ແລະ ທັກສະທາງດ້ານພື້ນຖານວິຊາຊີບເຂົ້າໃນຊັ້ນມັດທະຍົມສຶກສາຕອນຕົ້ນ.
9. ສົ່ງເສີມ ແລະ ອໍານວຍຄວາມສະດວກໃຫ້ພາກສ່ວນເອກະຊົນມີສ່ວນຮ່ວມໃນການສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນ ໂດຍການຂະຫຍາຍໂຮງຮຽນເອກະຊົນໄປສູ່ຕົວເມືອງນ້ອຍ.

### 2.3.2 ຍຸດທະສາດ 2: ປັບປຸງຄຸນນະພາບການຮຽນ-ການສອນຊັ້ນມັດທະຍົມສຶກສາ

➢ **ຈຸດປະສົງ:**

- ເພື່ອຮັບປະກັນຜົນການຮຽນຂອງນັກຮຽນ ໃຫ້ບັນລຸຕາມມາດຕະຖານຄຸນນະພາບຂອງຊັ້ນມັດທະຍົມສຶກສາ.

➢ **ວຽກຈຸດສຸມ:**

1. ສະໜອງສື່ການຮຽນ-ການສອນ, ອຸປະກອນຫ້ອງທົດລອງວິທະຍາສາດ, ອຸປະກອນຫ້ອງສອນຄອມພິວເຕີ ແລະ ຫ້ອງຝຶກປະຕິບັດ, ປຶ້ມຕໍາລາ ແລະ ປຶ້ມອ່ານເສີມເຂົ້າຫ້ອງສະໝຸດ/ຫ້ອງອ່ານໃນໂຮງຮຽນໃຫ້ທຸກຄົນໄດ້ນໍາໃຊ້ຢ່າງທົ່ວເຖິງ.
2. ຈັດຕັ້ງການຮຽນ-ການສອນຕາມຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາກໍານົດໄວ້ຢ່າງຄົບຖ້ວນ ແລະ ມີປະສິດທິພາບ ແລະ ສົ່ງເສີມການຮຽນ-ການສອນພາສາອັງກິດໃຫ້ເຂັ້ມແຂງ.
3. ສ້າງຄູສຶກສານິເທດຂັ້ນເມືອງຢູ່ເມືອງທີ່ມີເງື່ອນໄຂ ແລະ ພັດທະນາລະບົບການນິເທດພາຍໃນ-ພາຍນອກໂຮງຮຽນ.
4. ສ້າງຄູສຶກສານິເທດທົດແທນ, ສ້າງແຜນຝຶກອົບຮົມ, ຍົກລະດັບຄູສຶກສານິເທດຢ່າງເປັນລະບົບ ແລະ ຕໍ່ເນື່ອງ.
5. ສ້າງຄວາມເຂັ້ມແຂງໃຫ້ຄູປະຈໍາການ ມີຄວາມສາມາດເຮັດການນິເທດພາຍໃນໂຮງຮຽນດ້ວຍຕົນເອງ ແລະ ມີຄຸນນະພາບ.
6. ສັບຊ້ອນຄູສອນໃນໂຮງຮຽນມັດທະຍົມສຶກສາຕອນຕົ້ນໃຫ້ໄດ້ສອນຄົບທຸກວິຊາຕາມຫຼັກສູດ.
7. ຈັດການສອນບໍາລຸງເພີ່ມໃຫ້ນັກຮຽນທີ່ມີຜົນການຮຽນອ່ອນ.
8. ຝຶກອົບຮົມຄູສອນລາຍວິຊາ, ສ້າງແຜນການຍົກລະດັບການຮຽນຮູ້ຢ່າງຕໍ່ເນື່ອງ, ການຮຽນຮູ້ຕະຫຼອດຊີວິດໃຫ້ພະນັກງານສຶກສາໂດຍສະເພາະຄູສອນ ແລະ ຈັດສໍາມະນາດ້ານວິຊາການເປັນປົກກະຕິ.
9. ພັດທະນາຄູ່ມືຕ່າງໆເພື່ອຮັບໃຊ້ການຝຶກອົບຮົມໄລຍະສັ້ນ, ເປັນຕົ້ນແມ່ນການປະເມີນຜົນການຮຽນຂອງນັກຮຽນ, ການຜະລິດອຸປະກອນການສອນ ທີ່ນໍາໃຊ້ວັດສະດຸທີ່ມີໃນທ້ອງຖິ່ນ, ພາສາອັງກິດ, ໄອທີ, ວິທີການເຂົ້າເຖິງແຫຼ່ງຂໍ້ມູນ ແລະ ອື່ນໆ.
10. ສ້າງເງື່ອນໄຂການຈັດຕັ້ງປະຕິບັດການຮຽນ-ການສອນພື້ນຖານວິຊາຊີບໃຫ້ທົ່ວເຖິງ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ.
11. ນໍາໃຊ້ ICT ເພື່ອຍົກສູງຄຸນນະພາບການຮຽນ-ການສອນ.

### 2.3.3 ຍຸດທະສາດ 3: ຍົກສູງປະສິດທິພາບໃນການ ບໍລິຫານ-ຄຸ້ມຄອງໂຮງຮຽນມັດທະຍົມສຶກສາ

➢ **ຈຸດປະສົງ:**

- ເພື່ອສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານການສຶກສາໃນການ ບໍລິຫານ-ຄຸ້ມຄອງໂຮງຮຽນ.

➢ **ວຽກຈຸດສຸມ:**

1. ສ້າງ ແລະ ປັບປຸງນິຕິກໍາຕ່າງໆທີ່ກ່ຽວຂ້ອງກັບການສຶກສາຊັ້ນມັດທະຍົມ.
2. ປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງໂຮງຮຽນໃຫ້ໄດ້ຕາມມາດຕະຖານ ແລະ ຕາມຫຼັກການບໍລິຫານ-ຄຸ້ມຄອງການສຶກສາ ໂດຍເນັ້ນໃສ່ໂຮງຮຽນເປັນຫຼັກ.
3. ສ້າງຄວາມເຂັ້ມແຂງແກ່ສະມາຄົມພໍ່, ແມ່ນັກຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ, ຂັ້ນເມືອງກ່ຽວກັບການບໍລິຫານ-ຄຸ້ມຄອງໂຮງຮຽນ.
4. ນໍາໃຊ້ ICT ເພື່ອຍົກສູງປະສິດທິພາບ ໃນການບໍລິຫານ-ຄຸ້ມຄອງໂຮງຮຽນ.

### 2.4 ຄາດຄະເນການເຂົ້າຮຽນ ແລະ ງົບປະມານ

ໂດຍອີງໃສ່ນະໂຍບາຍ ແລະ ຄາດໝາຍ, ແຕ່ນີ້ຮອດປີ 2020 ຄາດວ່າຈະມີເດັກເຂົ້າຮຽນໃນໂຮງຮຽນຊັ້ນມັດທະຍົມຕອນຕົ້ນທັງໝົດ, ມີຈຳນວນຄູ, ຈານວນຫ້ອງຮຽນ ແລະ ງົບປະມານທີ່ຕ້ອງການຮັບໃຊ້ວຽກງານການສຶກສາຊັ້ນມັດທະຍົມຕອນຕົ້ນດັ່ງນີ້:

**ຕາຕະລາງ 21: ຄາດຄະເນການເຂົ້າຮຽນໃນຊັ້ນມັດທະຍົມຕອນຕົ້ນ**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ອັດຕາເລື່ອນຊັ້ນນັກຮຽນຈົບ ປ5 ຂຶ້ນ ມ1 | 93.4% | 95.0% | 96.7% | 98.3% | 100.0% |
| ຈຳນວນນັກຮຽນທັງໝົດ (ທັງລັດ ແລະ ເອກະຊົນ) | 458,989 | 473,352 | 487,008 | 511,291 | 534,715 |
| ຈຳນວນຄູ (ສະເພາະຄູລັດ)* | 22,056 | 21,467 | 20,909 | 20,842 | 20,747 |
| ຈຳນວນຫ້ອງຮຽນ (ສະເພາະໂຮງຮຽນຂອງລັດ) | 11,500 | 11,762 | 12,003 | 12,499 | 12,967 |
| ຈຳນວນຫ້ອງຮຽນທີ່ຕ້ອງການໃໝ່ | 313 | 262 | 241 | 497 | 468 |

*ໝາຍເຫດ: * ຖ້າອີງໃສ່ມາດຖານອັດຕານັກຮຽນຕໍ່ຄູມີເປັນຕົວກຳນົດ ຈະເຫັນໄດ້ວ່າ ແຕ່ນີ້ ຮອດປີ 2020 ຈະບໍ່ຕ້ອງການຄູຊັ້ນມັດທະຍົມຕອນຕົ້ນຕື່ມອີກ ແຕ່ໃນຕົວຈິງຍັງມີຄວາມຕ້ອງການຄູສອນບາງວິຊາ. ດັ່ງນັ້ນ ໃນການຈັດຕັ້ງປະຕິບັດຕົວຈິງ ຕ້ອງໄດ້ມີການບັນຈຸຄູໃໝ່ໃນບາງວິຊາທີ່ຍັງຂາດເຂີນ.*

**ຕາຕະລາງ 22: ຄາດຄະເນງົບປະມານສຳລັບຊັ້ນມັດທະຍົມຕອນຕົ້ນ (ລ້ານກີບ)**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 23,009 | 57,412 | 59,691 | 61,140 | 62,905 |
| ເບັ້ຍລ້ຽງ | 17,810 | 18,367 | 18,897 | 19,838 | 20,747 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 54,590 | 53,130 | 51,751 | 51,583 | 51,349 |
| ງົບປະມານສຳລັບອຸປະກອນຮັບໃຊ້ການຮຽນ-ການສອນ | 21,131 | 24,007 | 27,239 | 29,334 | 32,994 |
| **ລວມບໍລິຫານ** | **116,540** | **152,916** | **157,577** | **161,895** | **167,994** |
| ການກໍ່ສ້າງຫ້ອງຮຽນ | 134,106 | 209,326 | 207,180 | 274,164 | 273,161 |
| ການກໍ່ສ້າງຫໍພັກຄູ ແລະ ນັກຮຽນ | 15,000 | 15,000 | 15,000 | 15,000 | 15,000 |
| ກໍ່ສ້າງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ | 2,523 | 2,523 | 2,523 | 2,523 | 2,523 |
| **ລວມລົງທຶນ** | **151,629** | **226,850** | **224,704** | **291,687** | **290,684** |
| **ລວມ** | 268,169 | 379,765 | 382,281 | 453,583 | 458,678 |

## 4. ມັດທະຍົມສຶກສາຕອນປາຍ

### 4.1 ສະພາບລວມ:

ການສຶກສາຊັ້ນມັດທະຍົມຕອນປາຍ ໄດ້ຮັບການປັບປຸງດີຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ. ຈຳນວນຫ້ອງຮຽນເພີ່ມຂຶ້ນຕາມລຳດັບໃນແຕ່ລະປີ, ອັດຕາເຂົ້າຮຽນລວມເພີ່ມຈາກ 33.9% ໃນສົກປີ 2009-2010 ເປັນ 45.8% ໃນປີ 2014-2015. ຜົນສຳເລັດດັ່ງກ່າວນີ້ ແມ່ນເນື່ອງມາຈາກລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ໃນການລົງທຶນເຂົ້າໃນການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ, ຝຶກອົບຮົມຄູ ແລະ ກໍ່ສ້າງພື້ນຖານໂຄງລ່າງຕ່າງໆເຊັ່ນ: ຫ້ອງຮຽນ, ຫໍພັກນັກຮຽນ, ຫໍພັກຄູ ແລະ ຍັງໄດ້ສະໜອງທຶນການສຶກສາໃຫ້ແກ່ນັກຮຽນຈາກຄອບຄົວທຸກຍາກອີກ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຕົວຊີ້ບອກຕ່າງໆໄດ້ພັດທະນາດີຂຶ້ນໃນແຕ່ລະປີດັ່ງລຸ່ມນີ້:

**ຕາຕະລາງ 23: ສັງລວມຕົວຊີ້ບອກຊັ້ນມັດທະຍົມຕອນປາຍ ແຕ່ປີ 2010-2015**

| ຕົວຊີ້ບອກ | 2009-10 | 2010-11 | 2011-12 | 2012-13 | 2013-14 | 2014-15 |
|---|---|---|---|---|---|---|
| ຈຳນວນຫ້ອງຮຽນ | 2,214 | 3,277 | 3,519 | 3,860 | 4,294 | 4,710 |
| ຈຳນວນນັກຮຽນທັງໝົດ (ລັດ ແລະ ເອກະຊົນ) | 98,039<br>ຍິງ: 43,450 | 142,860<br>ຍິງ: 63,631 | 149,065<br>ຍິງ: 66,659 | 157,737<br>ຍິງ: 71,112 | 171,645<br>ຍິງ: 78,561 | 187,870<br>ຍິງ: 86,784 |
| ອັດຕາເຂົ້າຮຽນລວມ | 33.9% | 33.4% | 34.7% | 37.3% | 41.3% | 45.8% |

*ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ກະຊວງສຶກສາທິການ ແລະ ກິລາ*

ເຖິງວ່າ ອັດຕາເຂົ້າຮຽນ ແລະ ຈຳນວນນັກຮຽນໄດ້ເພີ່ມຂຶ້ນໃນແຕ່ລະປີ, ແຕ່ການສຶກສາຊັ້ນມັດທະຍົມຕອນປາຍ ຍັງມີສິ່ງທ້າທາຍຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນອີກ 5 ປີຕໍ່ໜ້າ ເຊັ່ນ: ການກໍ່ສ້າງພື້ນຖານໂຄງລ່າງຕ່າງໆຄື: ໂຮງຮຽນ, ຫ້ອງຮຽນ, ຫໍພັກນັກຮຽນ, ຫໍພັກຄູ, ຫ້ອງສະໝຸດ, ຫ້ອງອ່ານ, ຫ້ອງປະຕິບັດຕົວຈິງ, ຫ້ອງທົດລອງວິທະຍາສາດ, ຫ້ອງຄອມພິວເຕີ, ຫ້ອງນ້ຳຍິງ-ຊາຍ ແລະ ການສະໜອງຄູສອນໃນບາງວິຊາທີ່ຍັງບໍ່ທັນພຽງພໍກັບການຂະຫຍາຍໂຮງຮຽນ, ຫ້ອງຮຽນ ເຊັ່ນ: ວິຊາວິທະຍາສາດທຳມະຊາດ, ວິຊາພະລະສຶກສາ, ສິລະປະສຶກສາ, ພື້ນຖານວິຊາຊີບ, ເຕັກໂນໂລຊີຂໍ້ມູນຂ່າວສານການສຶກສາ (ICT). ນອກຈາກນັ້ນຍັງຂາດອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ເຄື່ອງທົດລອງ.

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາສິ່ງທ້າທາຍທີ່ກ່ຽວຂ້ອງກັບການສຶກສາຊັ້ນມັດທະຍົມສຶກສາຕອນປາຍໃນໄລຍະ 5 ປີ ຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 4.2 ຈຸດປະສົງ ແລະ ຄາດໝາຍ

➢ **ຈຸດປະສົງ**

- ເພື່ອສ້າງໂອກາດໃຫ້ນັກຮຽນ, ຊາວໜຸ່ມມີຄວາມຮູ້ດ້ານວິຊາຊີບເພື່ອກຽມພ້ອມເຂົ້າສູ່ຕະຫຼາດແຮງງານ ພ້ອມທັງສືບຕໍ່ຮຽນໃນສາຍວິຊາຊີບ ແລະ ການສຶກສາຊັ້ນສູງ.

➢ **ຄາດໝາຍຮອດປີ 2020**

1. ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍຈາກ 45.8% ໃນປີ 2015 ໃຫ້ໄດ້ 60%.
2. ເພີ່ມອັດຕາການເລື່ອນຊັ້ນ-ຈົບຊັ້ນຈາກ 94.4% ໃນປີ 2015 ໃຫ້ໄດ້ 98%.
3. ຫຼຸດຜ່ອນອັດຕາການປະລະຈາກ 4.9% ໃນປີ 2015 ໃຫ້ເຫຼືອພຽງແຕ່ 2%.
4. ດຸ່ນດ່ຽງອັດຕາເລື່ອນຊັ້ນຂອງນັກຮຽນທີ່ຈົບມັດທະຍົມຕອນຕົ້ນ ຂຶ້ນມັດທະຍົມຕອນປາຍໃຫ້ຢູ່ລະດັບ 90% ຮອດປີ 2020.
5. ສົ່ງເສີມການຮຽນ-ການສອນວິຊາຊີບຂັ້ນພື້ນຖານຢູ່ຊັ້ນມັດທະຍົມສຶກສາໃຫ້ກວມຫຼາຍຂຶ້ນ.
6. ແຕ່ລະແຂວງໃຫ້ມີໂຮງຮຽນມັດທະຍົມສົມບູນ 1 ແຫ່ງ ທີ່ມີຫ້ອງສະໝຸດ ແລະ ຫ້ອງທົດລອງວິທະຍາສາດ.

## 4.3 ຍຸດທະສາດ

ເພື່ອໃຫ້ບັນລຸໄດ້ຈຸດປະສົງ ແລະ ຄາດໝາຍທີ່ກຳນົດ ມີ 2 ຍຸດທະສາດທີ່ຈະໄດ້ຈັດຕັ້ງປະຕິບັດ ດັ່ງລາຍລະອຽດລຸ່ມນີ້:

### 4.3.1 ຍຸດທະສາດທີ 1: ສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນທີ່ມີຄຸນນະພາບ ໄດ້ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ແລະ ຊຸກຍູ້ໃຫ້ນັກຮຽນທີ່ມີພອນສະຫວັນດ້ານວິຊາຊີບ ໄປຮຽນຕໍ່ໃນສາຍວິຊາຊີບໃຫ້ຫຼາຍຂຶ້ນ

- **ຈຸດປະສົງ:**
  - ເພື່ອສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ທີ່ມີຄຸນນະພາບໄດ້ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ແລະ ສືບຕໍ່ການສຶກສາຊັ້ນສູງ.
  - ເພື່ອປັບອັດຕາສ່ວນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ເຂົ້າຮຽນຕໍ່ມັດທະຍົມສຶກສາຕອນປາຍ ແລະ ຮຽນຕໍ່ສາຍອາຊີວະສຶກສາໃຫ້ມີຄວາມສົມດູນກັນ.
- **ວຽກຈຸດສຸມ:**

1. ສ້າງນິຕິກຳກ່ຽວກັບການຄັດເລືອກເອົານັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ.
2. ປັບປຸງເຄືອຂ່າຍແຜນທີ່ການສຶກສາຊັ້ນມັດທະຍົມສຶກສາໃຫ້ເຂັ້ມແຂງ.
3. ສ້າງຖານຂໍ້ມູນຊັ້ນມັດທະຍົມສຶກສາ ກ່ຽວກັບນັກຮຽນສອບເສັງຈົບຊັ້ນມັດທະຍົມສຶກສາຕອນຕົ້ນໃນແຕ່ລະສົກຮຽນ.
4. ສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນເອກະຊົນ ແລະ ຊຸມຊົນເຂົ້າໃນການປະກອບສ່ວນດ້ານທຶນຮອນ, ປະກອບສ່ວນດ້ານການຄຸ້ມຄອງ ຊ່ວຍເຫລືອໂຮງຮຽນຊັ້ນມັດທະຍົມຕອນປາຍ.
5. ສະໜອງສື່ການຮຽນ-ການສອນ, ອຸປະກອນຫ້ອງທົດລອງວິທະຍາສາດ, ອຸປະກອນຫ້ອງສອນຄອມພິວເຕີ ແລະ ຫ້ອງຝຶກປະຕິບັດ, ປຶ້ມຕຳລາ ແລະ ປຶ້ມອ່ານເສີມເຂົ້າຫ້ອງສະໝຸດໃນໂຮງຮຽນໃຫ້ທຸກຄົນໄດ້ນຳໃຊ້ຢ່າງທົ່ວເຖິງ.
6. ຈັດຕັ້ງການຮຽນ-ການສອນ ຕາມຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາກຳນົດໄວ້ຢ່າງຄົບຖ້ວນ ແລະ ມີປະສິດທິພາບ ແລະ ສົ່ງເສີມການຮຽນ-ການສອນພາສາອັງກິດໃຫ້ເຂັ້ມແຂງ.
7. ພັດທະນາລະບົບການນິເທດການສຶກສາຊັ້ນມັດທະຍົມສຶກສາ, ສ້າງຄູສຶກສານິເທດທົດແທນ, ສ້າງແຜນຝຶກອົບຮົມ, ຍົກລະດັບຄູສຶກສານິເທດຢ່າງເປັນລະບົບ ແລະ ຕໍ່ເນື່ອງ.
8. ສ້າງຄວາມເຂັ້ມແຂງໃຫ້ຄູປະຈຳການ ມີຄວາມສາມາດເຮັດການນິເທດພາຍໃນໂຮງຮຽນດ້ວຍຕົນເອງ ແລະ ມີຄຸນນະພາບ.
9. ສັບຊ້ອນຄູສອນໃຫ້ໄດ້ສອນຖືກຕາມວິຊາສະເພາະທີ່ຮຽນມາຄົບທຸກວິຊາຕາມຫຼັກສູດ.
10. ຝຶກອົບຮົມຜູ່ບໍລິຫານທຸກຂັ້ນເພື່ອຍົກລະດັບການຄຸ້ມຄອງບໍລິຫານການສຶກສາຊັ້ນມັດທະຍົມສຶກສາ.
11. ສ້າງແຜນຝຶກອົບຮົມຄູປະຈຳການເປັນປົກກະຕິ.
12. ນຳໃຊ້ ICT ເຂົ້າໃນການຮຽນ-ການສອນ.

### 4.3.2 ຍຸດທະສາດທີ 2: ສົ່ງເສີມການຮຽນ-ການສອນວິຊາຊີບຂັ້ນພື້ນຖານ ຢູ່ໃນຊັ້ນມັດທະຍົມຕອນປາຍ.

- **ຈຸດປະສົງ:**
  - ເພື່ອສົ່ງເສີມນັກຮຽນຊັ້ນມັດທະຍົມສຶກສາຕອນປາຍໃຫ້ມີຄວາມຮູ້ດ້ານວິຊາຊີບຂັ້ນພື້ນຖານໃດໜຶ່ງ ເພື່ອເປັນພື້ນຖານການຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.
- **ວຽກຈຸດສຸມ:**

1. ບັນຈຸຄູສາຍອາຊີວະສຶກສາເຂົ້າສອນຢູ່ໃນຊັ້ນມັດທະຍົມສຶກສາ.
2. ສະໜອງສິ່ງອຳນວຍຄວາມສະດວກ, ພື້ນຖານໂຄງລ່າງ, ສື່ການຮຽນ-ການສອນ ແລະ ອຸປະກອນທີ່ຈຳເປັນໃຫ້ແກ່ການສອນວິຊາຊີບ.

3. ສະໜອງຫ້ອງທົດລອງ ພ້ອມຄອມພິວເຕີ ໃຫ້ບັນດາໂຮງຮຽນມັດທະຍົມຕອນປາຍ ແລະ ສົມບູນ ຕາມຄວາມອາດສາມາດຕົວຈິງ.
4. ສົ່ງເສີມການເຊື່ອມໂຍງກັນລະຫວ່າງການສຶກສາຊັ້ນມັດທະຍົມສຶກສາຕອນປາຍ, ຊຸມຊົນ, ຜູ້ປະກອບການ ແລະ ສະຖາບັນທີ່ກ່ຽວຂ້ອງໃນການລົງຝຶກປະຕິບັດຕົວຈິງ.
5. ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານໂຮງຮຽນກ່ຽວກັບການຄຸ້ມຄອງ-ບໍລິຫານ, ການຮຽນ-ການສອນວິຊາຊີບໃນຊັ້ນມັດທະຍົມຕອນປາຍ.

### 4.4 ຄາດຄະເນການເຂົ້າຮຽນ ແລະ ງົບປະມານ

ໂດຍອີງໃສ່ນະໂຍບາຍ ແລະ ຄາດໝາຍ, ແຕ່ນີ້ຮອດປີ 2020 ຄາດວ່າຈະມີເດັກເຂົ້າຮຽນໃນໂຮງຮຽນຊັ້ນມັດທະຍົມຕອນຕົ້ນທັງໝົດ, ມີຈໍານວນຄູ, ຈໍານວນຫ້ອງຮຽນ ແລະ ງົບປະມານທີ່ຕ້ອງການຮັບໃຊ້ວຽກງານການສຶກສາຊັ້ນມັດທະຍົມຕອນຕົ້ນດັ່ງນີ້:

**ຕາຕະລາງ 24: ຄາດຄະເນການເຂົ້າຮຽນຊັ້ນມັດທະຍົມຕອນປາຍ**

| ມັດທະຍົມປາຍ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ມ 4 ຂຶ້ນ ມ5 | 93% | 92% | 91% | 91% | 90% |
| ຈໍານວນນັກຮຽນລວມ | 198,952 | 212,811 | 226,558 | 245,829 | 259,980 |
| ຈໍານວນຄູລວມ | 9,100 | 9,344 | 9,564 | 9,993 | 10,191 |
| ຈໍານວນຄູທີ່ຕ້ອງການບັນຈຸໃໝ່ | 357 | 472 | 454 | 668 | 448 |
| ຈໍານວນຫ້ອງຮຽນ | 4,487 | 4,897 | 5,321 | 5,895 | 6,370 |
| ຈໍານວນຫ້ອງຮຽນທີ່ຕ້ອງການໃໝ່ | 333 | 410 | 424 | 575 | 474 |

**ຕາຕະລາງ 25: ຄາດຄະເນງົບປະມານສໍາລັບການສຶກສາຊັ້ນມັດທະຍົມຕອນປາຍ (ລ້ານກີບ)**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 10,119 | 33,423 | 36,786 | 39,420 | 41,575 |
| ເບ້ຍລ້ຽງ | 7,794 | 8,338 | 8,878 | 9,635 | 10,191 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 22,522 | 23,126 | 23,672 | 24,734 | 25,223 |
| ງົບປະມານສໍາລັບອຸປະກອນຮັບໃຊ້ການຮຽນ-ການສອນ | 21,000 | 21,000 | 21,000 | 21,000 | 21,000 |
| **ລວມບໍລິຫານ** | **61,435** | **85,887** | **90,336** | **94,789** | **97,990** |
| ການກໍ່ສ້າງ ແລະ ສ້ອມແປງຫ້ອງຮຽນ | 105,581 | 163,055 | 172,173 | 215,498 | 198,097 |
| ການກໍ່ສ້າງຫໍພັກຄູ ແລະ ນັກຮຽນ | 15,000 | 15,000 | 15,000 | 15,000 | 15,000 |
| ການກໍ່ສ້າງຫ້ອງທົດລອງ | 3,000 | 6,000 | 6,000 | 6,000 | 6,000 |
| **ລວມລົງທຶນ** | **123,581** | **184,055** | **193,173** | **236,498** | **219,097** |
| **ລວມ** | **185,016** | **269,943** | **283,510** | **331,287** | **317,086** |

## 5. ການສຶກສານອກໂຮງຮຽນ

### 5.1 ສະພາບລວມ:

ການຈັດຕັ້ງປະຕິບັດແຜນພັດທະນາການສຶກສານອກໂຮງຮຽນ 5 ປີ (2011-2015) ມີຜົນສໍາເລັດຫຼາຍຢ່າງເຊັ່ນ: ວຽກງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຈົບຊັ້ນປະຖົມບໍາລຸງໂດຍສະເພາະແມ່ນການເພີ່ມອັດຕາການຮູ້ໜັງສືປະຊາກອນ 15-40 ປີ ແລະ 15 ປີຂຶ້ນໄປ, ສາມາດປະກາດຈົບຊັ້ນປະຖົມບໍາລຸງທົ່ວແຂວງໄດ້ 17 ແຂວງ/ນະຄອນຫຼວງ ແລະ ປະກາດຈົບຊັ້ນປະຖົມບໍາລຸງທົ່ວປະເທດ.

ການຈັດການຮຽນ-ການສອນລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຈົບຊັ້ນປະຖົມໃຫ້ແກ່ເດັກທີ່ປະລະການຮຽນ ແລະ ເດັກເກນອາຍຸທີ່ບໍ່ມີໂອກາດເຂົ້າຮຽນໃນໂຮງຮຽນ ຊຶ່ງເປັນວຽກໜຶ່ງທີ່ກະຊວງສຶກສາທິການ ແລະ ກິລາ ໃຫ້ບູລິມະສິດ ໂດຍໄດ້ຈັດສັນງົບປະມານເພື່ອພັດທະນາຫຼັກສູດ, ພິມປຶ້ມແບບຮຽນ ແລະ ສະໜອງເງິນອຸດໜູນໃຫ້ແກ່ຄູອາສາສະໝັກ. ນອກຈາກນັ້ນ ເພື່ອໃຫ້ໄດ້ຈັດການຮຽນ-ການສອນ ເດັກເກນອາຍຸ 6-14 ປີ ທີ່ບໍ່ໄດ້ເຂົ້າຮຽນຊັ້ນປະຖົມຢູ່ເຂດຫ່າງໄກສອກຫຼີກ ກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ສະໜອງຄູສອນເຄື່ອນທີ່ ໃຫ້ແກ່ເຂດດັ່ງກ່າວ.

ວຽກງານການບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ກໍ່ໄດ້ຈັດຕັ້ງການຮຽນ-ການສອນ ຢ່າງເປັນຂະບວນ. ວຽກງານຝຶກອົບຮົມວິຊາຊີບຂັ້ນພື້ນຖານ ກໍ່ໄດ້ຈັດກອງປະຊຸມຝຶກອົບຮົມວິຊາຊີບໃຫ້ປະຊາຊົນຢູ່ເຂດຈຸດສຸມພັດທະນາ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ປະຊາຊົນກຸ່ມເປົ້າໝາຍສຳເລັດໃນ 7 ສາຂາວິຊາ ຄື: ລ້ຽງໄກ່, ລ້ຽງປາ, ປູກເຫັດ, ປຸງແຕ່ງອາຫານ, ຕັດຫຍິບ, ເສີມສວຍ ແລະ ຊ່າງໄມ້.

ເຖິງວ່າໄດ້ມີຜົນສຳເລັດຫຼາຍດ້ານ ແຕ່ຍັງມີສິ່ງທ້າທາຍຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນຊຸມປີຕໍ່ໜ້າ ເຊັ່ນ:

1) ສູນການສຶກສານອກໂຮງຮຽນຂັ້ນແຂວງ, ຂັ້ນເມືອງ ແລະ ສູນການຮຽນຮູ້ຊຸມຊົນ ບໍ່ທັນສ້າງຂຶ້ນໄດ້ຢ່າງທົ່ວເຖິງ ຈຶ່ງເຮັດໃຫ້ການດຳເນີນກິດຈະກຳການສຶກສານອກໂຮງຮຽນ ກະແຈກກະຈາຍບໍ່ເຂົ້າສູ່ລະບົບ ຄຸນນະພາບບໍ່ສູງ.
2) ການສະໜອງງົບປະມານສຳລັບວຽກງານຊຸກຍູ້, ສົ່ງເສີມ ແລະ ພັດທະນາຄຸນນະພາບຂອງວຽກງານສຶກສານອກໂຮງຮຽນຍັງບໍ່ພຽງພໍ ແລະ ຊັກຊ້າເຊັ່ນ: ເງິນອຸດໜູນຄູອາສາສະໝັກຍັງຕ່ຳ, ເງິນບໍລິຫານໂຮງຮຽນຂອງສູນການສຶກສານອກໂຮງຮຽນຂັ້ນແຂວງ, ຂັ້ນເມືອງດ້ວຍຮູບແບບຄິດໄລ່ຕາມຫົວໜ່ວຍນັກຮຽນບໍ່ທັນໄດ້ປະຕິບັດ, ເງິນນະໂຍບາຍອຸດໜູນຄູສອນຢູ່ເຂດຫ່າງໄກສອກຫຼີກສຳລັບການສຶກສານອກໂຮງຮຽນກໍ່ຍັງບໍ່ທັນໄດ້ປະຕິບັດ.
3) ອາຄານສະຖານທີ່, ພື້ນຖານວັດຖຸ ແລະ ອຸປະກອນຮັບໃຊ້ ສຳລັບສູນການສຶກສານອກໂຮງຮຽນປະຈຳພາກ, ສູນຂັ້ນແຂວງ, ຂັ້ນເມືອງ ແລະ ສູນການຮຽນຮູ້ຊຸມຊົນ ແມ່ນຂາດເຂີນຫຼາຍ ແລະ ບໍ່ໄດ້ຕາມມາດຕະຖານ.

ເພື່ອປັບປຸງຄຸນນະພາບການສຶກສານອກໂຮງຮຽນໃຫ້ດີຂຶ້ນຈຶ່ງໄດ້ກຳນົດຈຸດປະສົງ, ຄາດໝາຍ, ນະໂຍບາຍ ແລະ ວຽກຈຸດສຸມ ແຕ່ປີ 2016-2020 ໄວ້ດັ່ງນີ້:

## 5.2 ຈຸດປະສົງ ແລະ ຄາດໝາຍ

### ➢ ຈຸດປະສົງ

- ເພື່ອສ້າງເງື່ອນໄຂໃຫ້ເດັກນ້ອຍທຸກຄົນທີ່ບໍ່ໄດ້ເຂົ້າໃນໂຮງຮຽນ ແລະ ເດັກທີ່ອອກໂຮງຮຽນໄດ້ມີໂອກາດໄດ້ຮຽນບຳລຸງຈົນຈົບຊັ້ນປະຖົມ ແລະ ສືບຕໍ່ຮຽນໃນຊັ້ນມັດທະຍົມ.

### ➢ ຄາດໝາຍ

1) ຈັດຕັ້ງການສອນບຳລຸງໃຫ້ເດັກທີ່ບໍ່ໄດ້ເຂົ້າຮຽນໃນໂຮງຮຽນປະຖົມ ອາຍຸ 6-14 ປີ ທີ່ຢູ່ເຂດຫ່າງໄກສອກຫຼີກ ບ້ານທີ່ບໍ່ມີໂຮງຮຽນປະຖົມ ໃຫ້ໄດ້ 15,000 ຄົນ.
2) ຈັດຕັ້ງການຮຽນລົບລ້າງຄວາມບໍ່ຮູ້ໜັງສື (ລະດັບ 1) ໃຫ້ໄດ້ 30,000 ຄົນ; ຈົບປະຖົມບຳລຸງໃຫ້ໄດ້ 20,000 ຄົນ).
3) ຈັດຕັ້ງການສອນບຳລຸງຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 300,000 ຄົນ, ມັດທະຍົມຕອນປາຍໃຫ້ໄດ້ 15,000 ຄົນ
4) ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ຊາວໜຸ່ມລວມທັງຜູ້ພິການ ທີ່ມີເງື່ອນໄຂໃຫ້ໄດ້ 20,000 ຄົນ.
5) ສ້າງຕັ້ງສູນການສຶກສານອກໂຮງຮຽນຂັ້ນແຂວງໃຫ້ໄດ້ 2 ແຂວງ ທີ່ບໍ່ທັນມີສູນແຂວງ.
6) ສ້າງເງື່ອນໄຂໃຫ້ມີສູນການສຶກສານອກໂຮງຮຽນຂັ້ນເມືອງທຸກເມືອງ ໃນທົ່ວປະເທດ.
7) ສືບຕໍ່ຈັດຕັ້ງບຳລຸງມັດທະຍົມຕອນຕົ້ນໃຫ້ປະຊາຊົນອາຍຸ 15-35 ປີ ແລະ ສາມາດປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວປະເທດໃນປີ 2020.

8) ຍົກລະດັບສູນພັດທະນາການສຶກສານອກໂຮງຮຽນ (ຫຼັກ 8) ໃຫ້ເປັນສະຖາບັນການສຶກສານອກໂຮງຮຽນ.
9) ພັດທະນາສູນການສຶກສານອກໂຮງຮຽນໃຫ້ເປັນສູນແຫ່ງການຮຽນຮູ້.

## 5.3 ກຸ່ມເປົ້າໝາຍຂອງການສຶກສານອກໂຮງຮຽນ:

ການສຶກສານອກໂຮງຮຽນແມ່ນການສຶກສາເພື່ອທຸກຄົນລວມທັງຜູ້ພິການໂດຍເນັ້ນໃສ່ກຸ່ມເປົ້າໝາຍດັ່ງລຸ່ມນີ້:

1) ເດັກໃນເກນອາຍຸ 6-14 ປີທີ່ບໍ່ໄດ້ເຂົ້າຮຽນໃນຊັ້ນປະຖົມ ຫຼື ປະລະການຮຽນກ່ອນຈົບປະຖົມ ໃນເຂດຫ່າງໄກສອກຫຼີກບໍ່ມີໂຮງຮຽນປະຖົມ.
2) ຊາວໜຸ່ມ ແລະ ຜູ້ໃຫຍ່ ໃນເກນອາຍຸ 15-45 ປີ.
3) ຊາວໜຸ່ມ ແລະ ຜູ້ໃຫຍ່ ໃນເກນອາຍຸ 15-35 ປີທີ່ຮຽນບໍ່ຈົບມັດທະຍົມຕອນຕົ້ນ ແລະ ຕອນປາຍ.
4) ຊາວໜຸ່ມ ແລະ ຜູ້ໃຫຍ່ ໃນເກນອາຍຸ 15 ປີຂຶ້ນໄປ.

## 5.4 ຍຸດທະສາດ.

ມີ 7 ຍຸດທະສາດ ທີ່ຈະໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸຈຸດປະສົງ ແລະ ການຄາດໝາຍໃນການພັດທະນາການສຶກສານອກຮງຮຽນ, ດັ່ງລາຍລະອຽດຕໍ່ໄປນີ້:

### 5.4.1 ຍຸດທະສາດ 1: ສົ່ງເສີມການສຶກສານອກໂຮງຮຽນໄປສູ່ເຂດຫ່າງໄກສອກຫຼີກ, ສ້າງເງື່ອນໄຂໃຫ້ແກ່ກຸ່ມເປົ້າໝາຍຜູ່ທີ່ດ້ອຍໂອກາດ, ຜູ່ທຸກຍາກ, ເພດຍິງ, ຊົນເຜົ່າ, ຜູ່ພິການໄດ້ຮັບການສຶກສາທີ່ມີຄວາມສະເໝີພາບ ແລະ ເທົ່າທຽມ

➢ **ຈຸດປະສົງ:**

- ເພື່ອລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຢ່າງຕໍ່ເນື່ອງໃຫ້ປະຊາຊົນບັນດາເຜົ່າໂດຍສະເພາະແມ່ນເພດຍິງ, ຊົນເຜົ່າ ແລະ ຜູ່ພິການ ແນໃສ່ສຳເລັດການສຶກສາຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນພາກບັງຄັບ.

➢ **ວຽກຈຸດສຸມ:**

1. ຂະຫຍາຍການສຶກສານອກໂຮງຮຽນເຂົ້າສູ່ໝູ່ບ້ານທີ່ບໍ່ມີໂຮງຮຽນ ແລະ ບ້ານທີ່ບໍ່ມີເງື່ອນໄຂສ້າງເປັນໂຮງຮຽນປະຖົມສົມບູນ.
2. ເກັບກຳສະຖິຕິຂໍ້ມູນບ້ານ ແລະ ກຸ່ມເປົ້າໝາຍເດັກໃນເກນອາຍຸ 6-14 ປີທີ່ບໍ່ໄດ້ເຂົ້າຮຽນ ແລະ ເດັກປະລະການຮຽນກ່ອນຈົບຊັ້ນປະຖົມ ຢູ່ເຂດຫ່າງໄກສອກຫຼີກແລ້ວຈັດຕັ້ງການຮຽນ - ການສອນ ຕາມສະພາບເງື່ອນໄຂ, ຄວາມຕ້ອງການຂອງເດັກໂດຍນຳໃຊ້ການສອນຫຼາຍຮູບແບບ, ການມີສ່ວນຮ່ວມຈາກທ້ອງຖິ່ນ, ຊຸມຊົນ ແລະ ສັງຄົມ.
3. ສ້າງສິ່ງອຳນວຍຄວາມສະດວກ ແລະ ສະໜອງອຸປະກອນຮັບໃຊ້ໃຫ້ແກ່ການຈັດການຮຽນ-ການສອນໃຫ້ທຸກຄົນເຂົ້າເຖິງ.
4. ປຸກສ້າງ, ສ້ອມແປງ ແລະ ປັບປຸງສະພາບແວດລ້ອມສູນການຮຽນຮູ້ຊຸມຊົນ, ຫ້ອງຮຽນຊຸມຊົນ ແລະ ບ່ອນພັກຂອງຄູໂດຍຊຸມຊົນເປັນເຈົ້າການ.
5. ສະໜອງເງິນເບ້ຍລ້ຽງໃຫ້ແກ່ນັກຮຽນດ້ອຍໂອກາດຊັ້ນປະຖົມນອກໂຮງຮຽນ ໂດຍທຶນຊ່ວຍເຫຼືອລ້າ.

### 5.4.2 ຍຸດທະສາດ 2: ປັບປຸງຄຸນນະພາບການຮຽນ-ການສອນສຳລັບການສຶກສານອກໂຮງຮຽນ

➢ **ຈຸດປະສົງ:**

- ເພື່ອໃຫ້ຄຸນນະພາບຂອງການສຶກສານອກໂຮງຮຽນ ໄດ້ຕາມມາດຕະຖານຄຸນນະພາບການສຶກສານອກໂຮງຮຽນ.

➢ **ວຽກຈຸດສຸມ:**

1. ປັບປຸງ ແລະ ພັດທະນາຫຼັກສູດ, ປຶ້ມແບບຮຽນ, ປຶ້ມຄູ່ມືຄູສຳລັບ ບຳລຸງຍົກລະດັບຊັ້ນປະຖົມ ແລະ ມັດທະຍົມ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານທຸກຊັ້ນຮຽນການສຶກສານອກໂຮງຮຽນ ໃຫ້ໄດ້ມາດຕະຖານການສຶກສາແຫ່ງຊາດ ສາມາດທຽບເທົ່າທຽບກັບການສຶກສາໃນໂຮງຮຽນ ແລະ ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ.
2. ສະໜອງປຶ້ມແບບຮຽນ, ຄູ່ມືຄູ, ອຸປະກອນການຮຽນ-ການສອນທີ່ຈຳເປັນແກ່ຜູ້ຮຽນທົ່ວໄປ ແລະ ຜູ້ຮຽນທີ່ມີຄວາມຕ້ອງການພິເສດໃຫ້ທົ່ວເຖິງ.
3. ຝຶກອົບຮົມຜູ້ບໍລິຫານ ແລະ ຄູສອນການສຶກສານອກໂຮງຮຽນ ແລະ ການຮຽນຮ່ວມຢູ່ສູນການສຶກສານອກໂຮງຮຽນຂັ້ນຕ່າງໆ.
4. ພັດທະນາລະບຽບການຕ່າງໆ ໃນການຕິດຕາມປະເມີນຜົນ ແລະ ຝຶກອົບຮົມ ໃຫ້ບຸກຄະລາກອນການສຶກສານອກໂຮງຮຽນ.
5. ສ້າງນິຕິກຳກ່ຽວກັບການປະຕິບັດນະໂຍບາຍ ແລະ ສິ່ງຈູງໃຈຕ່າງໆທີ່ເໝາະສົມຕໍ່ຄູສອນນອກໂຮງຮຽນ, ສະໜອງເງິນເດືອນ ແລະ ເງິນອຸດໜູນໃຫ້ຄູສອນການສຶກສານອກໂຮງຮຽນຢ່າງເໝາະສົມ.
6. ນຳໃຊ້ ICT ເພື່ອຍົກສູງຄຸນນະພາບການຮຽນ-ການສອນ.

### 5.4.3 ຍຸດທະສາດ 3: ສົ່ງເສີມການບຳລຸງຍົກລະດັບການສຶກສາຢ່າງຕໍ່ເນື່ອງ

➢ **ຈຸດປະສົງ:**

- ເພື່ອໃຫ້ຊາວໜຸ່ມ ແລະ ຜູ້ໃຫ່ຍລວມທັງຜູ້ພິການໄດ້ຍົກລະດັບການສຶກສາສູງຂຶ້ນ ແລະ ພັດທະນາວິຊາຊີບຕົນເອງ.

➢ **ວຽກຈຸດສຸມ:**

1. ປັບປຸງຄຸນນະພາບການຮຽນ - ການສອນທຸກຊັ້ນຕາມມາດຕະຖານຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາວາງອອກ.
2. ສ້າງລະບຽບການໃນການບຳລຸງຍົກລະດັບການສຶກສາໃນຫຼາຍຮູບແບບ.
3. ບຳລຸງຍົກລະດັບການສຶກສາໃຫ້ຊາວໜຸ່ມໃນຖັນແຖວລັດຖະກອນ, ກຳມະກອນ, ທະຫານ ແລະ ຕຳຫຼວດໃຫ້ຈົບຊັ້ນມັດທະຍົມຕອນຕົ້ນ ແລະ ຊັ້ນມັດທະຍົມຕອນປາຍ.
4. ພັດທະນາທັກສະວິຊາຊີບຂັ້ນພື້ນຖານທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແລະ ເງື່ອນໄຂຕົວຈິງຂອງທ້ອງຖິ່ນໃຫ້ແກ່ປະຊາຊົນບັນດາເຜົ່າຕິດພັນກັບການຍົກລະດັບການສຶກສາ.
5. ຊຸກຍູ້ສົ່ງເສີມໃຫ້ກຸ່ມເປົ້າໝາຍ ໄດ້ສືບຕໍ່ບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນໃຫ້ສຳເລັດໃນປີ 2020.
6. ຊຸກຍູ້ ແລະ ສົ່ງເສີມໃຫ້ກຸ່ມເປົ້າໝາຍຊາວໜຸ່ມ, ຜູ້ໃຫຍ່, ຜູ້ດ້ອຍໂອກາດ, ພາດໂອກາດ ແລະ ກຸ່ມສົນໃຈໄດ້ຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍບຳລຸງ.
7. ສ້າງຕັ້ງສູນການສຶກສານອກໂຮງຮຽນຂັ້ນຕ່າງໆໃຫ້ສາມາດຈັດຕັ້ງການຮຽນ-ການສອນ ແລະ ເຄື່ອນໄຫວກິດຈະກຳ ການສຶກສານອກໂຮງຮຽນໄດ້.

### 5.4.4 ຍຸດທະສາດ 4: ສົ່ງເສີມການຝຶກອົບຮົມວິຊາຊີບຂັ້ນພື້ນຖານຄວບຄູ່ກັບການຮຽນຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ

➢ **ຈຸດປະສົງ:**

- ເພື່ອໃຫ້ຜູ້ຮຽນສາມາດມີວິຊາອາຊີບໃດໜຶ່ງນຳໄປປັບປຸງຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນ.

➢ **ວຽກຈຸດສຸມ:**

1. ສ້າງໂອກາດໃຫ້ຊາວໜຸ່ມ, ຜູ້ໃຫຍ່ ລວມທັງຄົນພິການໄດ້ຮັບການຝຶກອົບຮົມວິຊາຊີບ ຂັ້ນພື້ນຖານທີ່ແທດເໝາະກັບຄວາມຕ້ອງການ ແລະ ສອດຄອງກັບເສດຖະກິດ-ສັງຄົມທ່າແຮງຂອງທ້ອງຖິ່ນ ແລະ ສາມາດເຊື່ອມຕໍ່ ແລະ ທຽບໂອນກັບລະບົບອາຊີວະສຶກສາໃນໂຮງຮຽນ.
2. ສ້າງລະບົບປະກັນຄຸນນະພາບວິຊາຊີບຂັ້ນພື້ນຖານ ແລະ ຈັດຕັ້ງປະຕິບັດລະບົບປະກັນຄຸນນະພາບວິຊາຊີບຂັ້ນພື້ນຖານ.
3. ສ້າງລະບຽບການທຽບເທົ່າ-ທຽບໂອນຜົນການຝຶກອົບຮົມວິຊາຊີບລະຫວ່າງນອກໂຮງຮຽນ ແລະ ໃນໂຮງຮຽນ
4. ຊຸກຍູ້ ແລະ ປະສານສົມທົບພາກສ່ວນທັງພາກລັດ ແລະ ເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນວຽກງານວິຊາຊີບຂັ້ນພື້ນຖານ.

### 5.4.5 ຍຸດທະສາດ 5: ພັດທະນາສູນການສຶກສານອກໂຮງຮຽນ ເປັນສູນແຫ່ງການຮຽນຮູ້ ແລະ ສົ່ງເສີມໃຫ້ທຸກຄົນໄດ້ຮຽນຮູ້ຕະຫຼອດຊີວິດ.

➢ **ຈຸດປະສົງ:**

- ເພື່ອໃຫ້ພົນລະເມືອງລາວທຸກຄົນມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ສາມາດປັບຕົວເຂົ້າກັບສະພາບການປ່ຽນແປງຢ່າງໄວວາຂອງສັງຄົມ.

➢ **ວຽກຈຸດສຸມ:**

1. ສ້າງນະໂຍບາຍ, ກົນໄກ ແລະ ວິທີການຕ່າງໆ ເພື່ອພັດທະນາສູນການສຶກສານອກໂຮງຮຽນໃຫ້ເປັນສູນແຫ່ງການຮຽນຮູ້.
2. ຄົ້ນຄວ້າ ແລະ ນຳສະເໜີ ສ້າງຕັ້ງຄະນະກຳມະການລະດັບຊາດ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດ.
3. ສ້າງແຜນດຳເນີນງານ ແລະ ກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບການຮຽນຮູ້ຕະຫຼອດຊີວິດ.
4. ພັດທະນາຮູບແບບຂອງການຮຽນຮູ້ຕະຫຼອດຊີວິດໃນວຽກງານການສຶກສານອກໂຮງຮຽນ.
5. ພັດທະນາສື່ໂຄສະນາວິທະຍຸ, ໂທລະພາບ, ສື່ສິ່ງພິມ, ສື່ເອເລັກໂທນິກ ແລະ ອື່ນໆ ທີ່ແທດເໝາະກັບກຸ່ມເປົ້າໝາຍ.
6. ໂຄສະນາເຜີຍແຜ່ໃຫ້ກຸ່ມເປົ້າໝາຍຮັບຮູ້ ແລະ ເຂົ້າໃຈກ່ຽວກັບການຮຽນຮູ້ຕະຫຼອດຊີວິດໂດຍ ຜ່ານທາງວິທະຍຸ, ໂທລະພາບ ແລະ ສື່ໂຄສະນາຕ່າງໆ.
7. ສ້າງ ແລະ ປັບປຸງສະຖານການສຶກສານອກໂຮງຮຽນ ໃຫ້ເປັນແຫຼ່ງບໍລິການຂໍ້ມູນຂ່າວສານການສຶກສາຕະຫຼອດຊີວິດ.
8. ສ້າງຄູ່ມືໃນການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດ.

### 5.4.6 ຍຸດທະສາດ 6: ສົ່ງເສີມການສຶກສາຕາມອັດຕະຍາໄສ ແລະ ການຮຽນທາງໄກ

➢ **ຈຸດປະສົງ:**

- ເພື່ອເປີດໂອກາດໃຫ້ຜູ້ທີ່ມີພອນສະຫວັນພິເສດດ້ານໃດໜຶ່ງສາມາດຮຽນຮູ້ ແລະ ສະສົມປະສົບການຕາມອັດຕະຍາໄສ ຫຼື ສາມາດຮຽນທາງໄກ.

- **ວຽກຈຸດສຸມ:**
  1. ສ້າງລະບຽບການ, ກົນໄກ, ເງື່ອນໄຂ, ມາດຕະຖານກ່ຽວກັບ ການຮັບຮູ້, ການຮັບຮອງ ແລະ ຢັ້ງຢືນຜົນການຮຽນຮູ້ຕາມອັດຕະຍາໄສ, ການຮຽນທາງໄກ, ການສຶກສາຜ່ານສື່ເອເລັກໂຕຣນິກ (e-learning) ແລະ ອື່ນໆ.
  2. ສ້າງຕັ້ງຄະນະກຳມະການຄົ້ນຄວ້າການຮັບຮອງ ແລະ ຢັ້ງຢືນຜົນຂອງການຮຽນຮູ້ຕາມອັດຕະຍາໄສ.
  3. ສ້າງລະບົບຕິດຕາມ, ກວດກາ ແລະ ປະເມີນຜົນການຮຽນຮູ້ຕາມອັດຕະຍາໄສ.

### 5.4.7 ຍຸດທະສາດ 7: ປັບປຸງຄຸນນະພາບ ການບໍລິຫານ-ຄຸ້ມຄອງການສຶກສານອກໂຮງຮຽນ

- **ຈຸດປະສົງ:**
  - ເພື່ອໃຫ້ການບໍລິຫານ-ຄຸ້ມຄອງການສຶກສານອກໂຮງຮຽນເຂົ້າສູ່ລະບົບ ແລະ ມີຄຸນນະພາບ.
- **ວຽກຈຸດສຸມ:**
  1. ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານ, ພະນັກງານວິຊາການ ແລະ ຄູສອນໃນວຽກງານບໍລິຫານ-ຄຸ້ມຄອງການສຶກສານອກໂຮງຮຽນ.
  2. ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ເພື່ອພິຈາລະນາໃຫ້ຄູອາສາສະໝັກຜູ້ທີ່ຫ້າວຫັນໃນການປະຕິບັດໜ້າທີ່ ໄດ້ບັນຈຸເປັນລັດຖະກອນຄູ ແລະ ສືບຕໍ່ປະຕິບັດໜ້າທີ່ຢູ່ເຂດຫ່າງໄກສອກຫຼີກ.
  3. ນຳໃຊ້ ICT ເຂົ້າໃນການບໍລິຫານ-ຄຸ້ມຄອງການສຶກສານອກໂຮງຮຽນ ນັບທັງການເກັບກຳສະຖິຕິ.
  4. ສ້າງ ແລະ ພັດທະນາລະບົບຄຸ້ມຄອງຖານຂໍ້ມູນຂ່າວສານການສຶກສານອກໂຮງຮຽນ ໃຫ້ເອກະພາບກັນທົ່ວປະເທດສາມາດນຳໃຊ້ເຂົ້າກັບລະບົບຖານຂໍ້ມູນຂອງ ກະຊວງສຶກສາທິການ ແລະ ກິລາ.

## 5.5 ຄາດຄະເນງົບປະມານ

ເພື່ອຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ຍຸດທະສາດຕ່າງໆ, ຄາດຄະເນຄວາມຕ້ອງການດ້ານງົບປະມານເພື່ອຮັບໃຊ້ວຽກງານການສຶກສານອກໂຮງຮຽນແຕ່ນີ້ຮອດປີ 2020 ມີດັ່ງນີ້:

**ຕາຕະລາງ 26: ຄາດຄະເນງົບປະມານສຳລັບການສຶກສານອກໂຮງຮຽນ**

(ຫົວໜ່ວຍ: ລ້ານກີບ)

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນອຸດໜູນຄູອາສາ | 9,658 | 9,948 | 10,246 | 10,554 | 10,870 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 906 | 906 | 906 | 906 | 906 |
| ງົບປະມານສຳລັບອຸປະກອນຮັບໃຊ້ການຮຽນ-ການສອນ | 1,000 | 1,000 | 1,000 | 1,000 | 1,000 |
| ລວມບໍລິຫານ | 11,564 | 11,854 | 12,153 | 12,460 | 12,777 |
| ການກໍ່ສ້າງສູນການສຶກສານອກໂຮງຮຽນ | 8,446 | 8,555 | 8,665 | 8,774 | 8,884 |
| ລວມລົງທຶນ | 8,446 | 8,555 | 8,665 | 8,774 | 8,884 |
| ລວມ | 20,010 | 20,409 | 20,817 | 21,234 | 21,661 |

# 6. ການສຶກສາຄູ

## 6.1 ສະພາບລວມ

ໃນແຜນພັດທະນາຂະແໜງການສຶກສາ 2011-2015 ທີ່ຜ່ານມາ, ໜຶ່ງໃນບັນດາຈຸດປະສົງຫຼັກຂອງນະໂຍບາຍການສ້າງຄູແມ່ນການບັນຈຸຄູໃຫ້ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງ ແລະ ມີປະສິດທິພາບ. ດັ່ງນັ້ນ, ແຜນພັດທະນາຂະແໜງການຍ່ອຍສ້າງຄູແຕ່ປີ 2016-2020 ຈຶ່ງມີເປົ້າໝາຍເລັ່ງໃສ່ແກ້ໄຂບັນຫາຫຼັກ ແລະ ບັນຫາທີ່ຈະກະທົບຕໍ່ວຽກງານການສ້າງຄູໃນປະເທດໃນຊ່ວງໄລຍະແຜນການ 5 ປີຕໍ່ໜ້າ. ແຜນຍຸດທະສາດການສ້າງຄູ (TESAP 2011-

2015)ໄດ້ຮັບການຈັດຕັ້ງປະຕິບັດດ້ວຍຜົນສຳເລັດເປັນຢ່າງດີ ເປັນຕົ້ນແມ່ນໄດ້ມີຄວາມພະຍາຍາມແກ້ໄຂບັນຫາການຂາດຄູໂດຍເພີ່ມປະລິມານການສ້າງຄູອະນຸບານ, ການສ້າງຄູປະຖົມ, ລວມທັງການສ້າງຄູມັດທະຍົມໃນລາຍວິຊາທີ່ຂາດແຄນຄູ.ພ້ອມນັ້ນ, ກໍ່ໄດ້ມີໂຄງການສະເພາະໃນການຮັບໃຊ້ການສ້າງຄູອະນຸບານ ແລະ ປະຖົມຮັບໃຊ້ໃຫ້ແກ່ເຂດຫ່າງໄກສອກຫຼີກ. ຫຼັກສູດສ້າງຄູໄດ້ມີການປັບປຸງ ແລະ ພັດທະນາຄືນໃໝ່; ການສ້າງຄູອະນຸບານ, ຄູປະຖົມ ແລະ ຄູມັດທະຍົມແມ່ນໄດ້ມີຫຼັກສູດຫຼາຍລະດັບ, ແຕ່ຊັ້ນກາງຈົນເຖິງປະລິນຍາຕີ. ພິເສດສຳລັບການສ້າງຄູມັດທະຍົມລະດັບປະລິນຍາຕີແມ່ນໄດ້ມີການຫັນທິດຈາກການສ້າງຄູມັດທະຍົມຕອນຕົ້ນ ແລະ ການສ້າງຄູມັດທະຍົມຕອນປາຍເປັນການສ້າງຄູມັດທະຍົມທີ່ສາມາດສອນໄດ້ແຕ່ ມ1-ມ7.

ພ້ອມນັ້ນ ກໍ່ໄດ້ມີການຈັດຕັ້ງບຳລຸງຍົກລະດັບວຸດທິການສຶກສາໃຫ້ແກ່ຄູປະຈຳການນັບມື້ນັບສູງຂຶ້ນ; ລວມທັງໄດ້ມີການລິເລີ່ມຈັດຕັ້ງທົດລອງ ແລະ ສ້າງເງື່ອນໄຂໃຫ້ຄູສາມັນທີ່ປະຈຳການແລ້ວ, ລວມທັງຄູໃນສະຖາບັນສ້າງຄູໄດ້ມີໂອກາດພັດທະນາວິຊາຊີບຂອງຕົນແບບຕໍ່ເນື່ອງ. ນັບແຕ່ສົກຮຽນ 2010-2011 ຫາ 2014-2015 ສາມາດກໍ່ສ້າງຄູໄດ້ຈຳນວນທັງໝົດ 43,230 ຄົນ.

**ຕາຕະລາງ 27: ຈຳນວນນັກສຶກສາຄູທັງໝົດໃນແຕ່ລະປີ**

| ຕົວຊີ້ບອກ | 2010-11 | 2011-12 | 2012-13 | 2013-14 | 2014-15 |
|---|---|---|---|---|---|
| ຈຳນວນພະນັກງານ ແລະ ຄູສອນ | 1,143 | 1,227 | 1,218 | 1,436 | 1,759 |
| ຈຳນວນນັກຮຽນຄູອະນຸບານທັງໝົດ | 1,209 | 1,939 | 3.664 | 4,901 | 4,839 |
| ຈຳນວນນັກຮຽນຄູປະຖົມທັງໝົດ | 1,968 | 2,688 | 4,452 | 5,739 | 5,401 |
| ຈຳນວນນັກຮຽນຄູມັດທະຍົມຕອນຕົ້ນ | 11,475 | 14,129 | 12,169 | 10,589 | 9,468 |
| ຈຳນວນນັກຮຽນຄູມັດທະຍົມປາຍ | 4,118 | 5,823 | 5,716 | 5,238 | 3,628 |
| ຈຳນວນນັກຮຽນຄູມັດທະຍົມ | | | | 975 | 3,444 |
| ຈຳນວນນັກຮຽນຄູພະລະສຶກສາທັງໝົດ | 642 | 998 | 1,127 | 928 | 824 |
| ຈຳນວນນັກຮຽນຄູສິລະປະສຶກສາທັງໝົດ | 549 | 524 | 626 | 492 | 552 |

*ແຫຼ່ງຂໍ້ມູນ: ກົມສ້າງຄູ*

**ຕາຕະລາງ 28: ຈຳນວນນັກຮຽນຄູທີ່ຈົບໃນແຕ່ລະປີ**

| ຕົວຊີ້ບອກ | 2010-11 | 2011-12 | 2012-13 | 2013-14 | 2014-15 |
|---|---|---|---|---|---|
| ຈຳນວນນັກຮຽນຄູອະນຸບານ | 925 | 603 | 1,037 | 2,028 | 1,928 |
| ຈຳນວນນັກຮຽນຄູປະຖົມ | 1,192 | 749 | 1,506 | 2,195 | 2,101 |
| ຈຳນວນນັກຮຽນຄູມັດທະຍົມຕອນຕົ້ນ | 4,810 | 5,429 | 4,701 | 3,158 | 3,144 |
| ຈຳນວນນັກຮຽນຄູມັດທະຍົມປາຍ | 597 | 689 | 1,479 | 1,391 | 1,454 |
| ຈຳນວນນັກຮຽນຄູພະລະສຶກສາ | | 194 | 377 | 277 | 313 |
| ຈຳນວນນັກຮຽນຄູສິລະປະສຶກສາ | 67 | 97 | 188 | 122 | 139 |

*ແຫຼ່ງຂໍ້ມູນ: ກົມສ້າງຄູ*

ເຖິງຢ່າງໃດກໍ່ຕາມ ໃນລາຍງານການຕິດຕາມກວດກາແຜນຍຸດທະສາດດັ່ງກ່າວໃນປີ 2013 ໄດ້ຊີ້ໃຫ້ເຫັນບັນຫາຂໍ້ຄົງຄ້າງຫຼາຍດ້ານເຊິ່ງຈຳເປັນຕ້ອງໄດ້ເອົາໃຈໃສ່ແກ້ໄຂຕື່ມ ໃນໄລຍະແຜນການ 5 ປີ ຕໍ່ໜ້າຄືແຕ່ປີ 2016-2020 ເປັນຕົ້ນວ່າ ຍັງມີຄວາມຈຳເປັນໃຫ້ການຝຶກອົບຮົມຕື່ມໃຫ້ແກ່ຜູ້ບໍລິຫານການສຶກສາ ໃນດ້ານການເກັບກຳຂໍ້ມູນຄວາມຕ້ອງການຄູ ແລະ ຈຳນວນນັກຮຽນໃນແຕ່ລະບ້ານໃຫ້ມີຄວາມຊັດເຈນເພື່ອເຮັດໃຫ້ການຄາດຄະເນຄວາມຕ້ອງການຄູມີຄວາມຊັດເຈນຂຶ້ນ. ນອກຈາກນັ້ນກໍ່ຍັງເຫັນວ່າຍັງມີຄວາມຈຳເປັນຫຼາຍ ໃນການຍົກລະດັບຄວາມຮູ້ຄວາມສາມາດຂອງຄູໃນສະຖາບັນສ້າງຄູ ເປັນຕົ້ນແມ່ນການນຳໃຊ້ເຕັກໂນໂລຊີເຂົ້າໃນການສິດສອນ ໂດຍສະເພາະແມ່ນການນຳໃຊ້ອິນເຕີ

ເນັດ ມາເປັນເຄື່ອງມືຊ່ວຍເຂົ້າໃນການສິດສອນ ໃນສະພາບເງື່ອນໄຂທີ່ພວກເຮົາຍັງຂາດເຂີນອຸປະກອນ ກໍ່ຄືສື່ການຮຽນ-ການສອນ ບໍ່ພຽງພໍໃນຫຼາຍແຫ່ງໃນປະຈຸບັນ. ບັນຫາຫຼັກທີ່ຈຳເປັນຕ້ອງໄດ້ແກ້ໄຂໃນໄລຍະປີ 2016-2020 ມີດັ່ງນີ້:

1. ການແຈກຢາຍ ແລະ ການບັນຈຸສັບຊ້ອນຄູໃນທົ່ວລະບົບບໍ່ທັນສອດຄ່ອງກັບຄວາມຕ້ອງການຕົວຈິງ ໂດຍສະເພາະການສະໜອງຄູຍັງບໍ່ພຽງພໍໃນເຂດບ້ານຊົນເຜົ່າ, ເຂດຊົນນະບົດ ແລະ ການສະໜອງຄູສຳລັບວິຊາທີ່ຂາດເຂີນຍັງບໍ່ທັນພຽງພໍ.
2. ຫຼັກສູດສ້າງຄູຍັງບໍ່ທັນກົມກຽວກັບຫຼັກສູດການສຶກສາເດັກກ່ອນໄວຮຽນ ແລະ ສາຍສາມັນສຶກສາ.
3. ຄຸນນະພາບຂອງນັກຮຽນ-ນັກສຶກສາຄູທີ່ຈົບຈາກສະຖາບັນສ້າງຄູກໍ່ຍັງບໍ່ທັນບັນລຸໄດ້ຕາມຄວາມຕ້ອງການ ເນື່ອງຈາກວ່າຄຸນນະພາບການສອນຂອງຄູໃນສະຖາບັນກໍ່ຍັງມີລັກສະນະຈຳກັດ.
4. ການພັດທະນາອາຊີບຄູແບບຕໍ່ເນື່ອງ ໂດຍຜ່ານການຝຶກອົບຮົມຄູປະຈຳການ (INSET) ຍັງບໍ່ທັນເນັ້ນໜັກໃສ່ສະມັດຖະພາບ ແລະ ຄວາມຕ້ອງການດ້ານການຝຶກອົບຮົມຂອງຄູ.
5. ຂາດສະມັດຖະພາບຄູທີ່ຄົບຊຸດແຍກຕາມລະດັບ ເພື່ອເປັນບ່ອນອີງໃຫ້ແກ່ການປະເມີນຜົນງານຂອງຄູ.

ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ສຳລັບວຽກງານການສ້າງຄູແມ່ນຈະເນັ້ນໃສ່ແກ້ໄຂບັນຫາແຕ່ລະດ້ານຕາມທີ່ໄດ້ສະເໜີມາເທິງນັ້ນ. ເຖິງວ່າຈະມີແຜນທີ່ເນັ້ນໃສ່ຜົນການຮຽນຂອງນັກຮຽນກໍ່ຕາມ ແຕ່ມາຮອດປະຈຸບັນນີ້ກໍ່ຍັງບໍ່ທັນສາມາດປະຕິບັດໃຫ້ບັນລຸຜົນໄດ້ ຍ້ອນວ່າຈຸດເລັ່ງຂອງຈຸດປະສົງ, ຍຸດທະສາດ ແລະ ເປົ້າໝາຍເພື່ອປັບປຸງຄຸນນະພາບຂອງການສ້າງຄູຍັງບໍ່ສອດຄ່ອງກັນເທົ່າໃດກັບການປັບປຸງຜົນການຮຽນຂອງນັກຮຽນ.

ສະນັ້ນ, ຈິ່ງມີຄວາມຈຳເປັນຕ້ອງເອົາໃຈໃສ່ສະເພາະຕໍ່ການແກ້ໄຂບັນຫານີ້. ການຍົກລະດັບຄຸນວຸດທິການສຶກສາຂອງຄູ ກໍ່ບໍ່ໝາຍຄວາມວ່າຈະສາມາດນຳໄປສູ່ການປັບປຸງຜົນການຮຽນ-ການສອນໃຫ້ໄດ້ດີສະເໝີໄປ.

ການເຊື່ອມໂຍງຍຸດທະສາດ, ການລົງທຶນ ແລະ ເປົ້າໝາຍໃນການສ້າງຄູ ກັບການປັບປຸງຜົນການຮຽນຂອງນັກຮຽນແມ່ນວຽກງານຈຸດສຸມຂອງແຜນການສ້າງຄູສຳລັບປີ 2016-2020. ການປັບປຸງຄວາມຮູ້ ແລະ ວຸດທິການສຶກສາຂອງຄູຈະມີຄວາມໝາຍສຳຄັນໜ້ອຍຖ້າວ່າບໍ່ປັບປຸງຜົນການຮຽນຂອງນັກຮຽນໄປຄຽງຄູ່ກັນ. ຖ້ານັກຮຽນບໍ່ມີຄວາມຮູ້ ແລະທັກສະສຳຄັນກໍ່ຈະບໍ່ສາມາດເຮັດໃຫ້ລາວເຮົາກ້າວເຂົ້າສູ່ຂະບວນການແຂ່ງຂັນທາງດ້ານເສດຖະກິດກັບສາກົນໄດ້.

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາ, ສິ່ງທ້າທາຍທີ່ກ່ຽວຂ້ອງກັບການສ້າງຄູ, ໃນໄລຍະ 5 ປີ ຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 6.2 ຈຸດປະສົງ ແລະ ຄາດໝາຍ

### ➢ ຈຸດປະສົງ

ຈຸດປະສົງລວມຂອງແຜນການສ້າງຄູແມ່ນເພື່ອປັບປຸງຄຸນນະພາບ, ຄວາມສອດຄ່ອງຂອງການກໍ່ສ້າງ ແລະ ບຳລຸງຄູ ເພື່ອເຮັດໃຫ້ນັກສຶກສາຄູ ແລະ ຄູຢູ່ໃນໂຮງຮຽນສາມັນໄດ້ມີການກະກຽມເປັນຢ່າງດີ ແນໃສ່ຕອບສະໜອງຄວາມຕ້ອງການ ການຮຽນຮູ້ຂອງນັກຮຽນຢູ່ໃນສະພາບແວດລ້ອມ ແລະ ສາຍວິຊາຊີບທີ່ແຕກຕ່າງກັນ.

ເພື່ອບັນລຸຈຸດປະສົງລວມດັ່ງກ່າວ ຈະຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານດັ່ງຕໍ່ໄປນີ້:

- ປັບປຸງຄວາມສອດຄ່ອງຂອງຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູປະຈຳການເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການໃນການຮຽນຮູ້ຂອງນັກຮຽນຢູ່ໂຮງຮຽນສາມັນ.
- ພັດທະນາລະບົບການພັດທະນາອາຊີບຄູແບບຕໍ່ເນື່ອງ, ສະໜອງການຝຶກອົບຮົມຄູໃຫ້ມີຄຸນນະພາບເທົ່າທຽມກັນທັງໃນຕົວເມືອງ ແລະ ຊົນນະບົດ.
- ພັດທະນາລະບົບການບຳລຸງຄູປະຈຳການແບບຄົບຊຸດ ເພື່ອເປັນການສະໜັບສະໜູນໃຫ້ແກ່ຄູໃນການພັດທະນາສະມັດຖະພາບທີ່ຮຽກຮ້ອງຕ້ອງການຂອງເຂົາເຈົ້າຢ່າງເປັນກ້າວໆ ບົນເສັ້ນທາງສາຍອາຊີບ.

- ສະໜັບສະໜູນ ແລະ ຍົກລະດັບສະຖາບັນສ້າງຄູໃຫ້ເປັນສູນບໍລິການດ້ານວິຊາການ ແລະ ການຄົ້ນຄວ້າວິໄຈ ຕາມສາຂາວິຊາທີ່ໄດ້ມອບໝາຍໃຫ້.
- ປັບປຸງເງື່ອນໄຂຂອງການເປັນຄູມືອາຊີບເຊັ່ນ: ການພັດທະນາມາດຕະຖານສະມັດຖະພາບຄູ ໃນໂຮງຮຽນສາມັນ, ຄູໃນສະຖາບັນສ້າງຄູໃນນັ້ນລວມທັງຄຸນສົມບັດ ແລະ ຈັນຍາບັນຂອງຄູ.

➢ **ຄາດໝາຍຮອດປີ 2020:**

1) ນັກຮຽນຄູໃໝ່ທີ່ຄັດເລືອກໂດຍຜ່ານການສອບເສັງເຂົ້າສະຖາບັນສ້າງຄູໃຫ້ກວມເອົາ 70% ແລະ ສ່ວນອີກ 30% ແມ່ນນັກຮຽນຄູໃໝ່ທີ່ແຂວງເປັນຜູ້ຄັດເລືອກ ແລະ ລັດຖະບານເປັນຜູ້ໃຫ້ທຶນ.
2) 95% ຂອງຈຳນວນນັກຮຽນຄູທີ່ມີສັນຍາ ແລະ ໄດ້ຮັບທຶນການສຶກສາໄດ້ຮັບການບັນຈຸ.
3) ພາຍໃນປີ 2020 ຄູໃນໂຮງຮຽນ ແລະ ໃນສະຖາບັນສ້າງຄູຈະຕ້ອງບັນລຸມາດຕະຖານທາງດ້ານວິຊາຊີບດັ່ງນີ້:
    - ຄູອະນຸບານ ແລະ ປະຖົມ: ຄູຊັ້ນກາງ: 35%; ຄູຊັ້ນສູງ: 50%; ຄູປະລິນຍາຕີ: 15%.
    - ຄູມັດທະຍົມຕອນຕົ້ນ: ຊັ້ນກາງ: 3%, ຊັ້ນສູງ: 57%; ປະລິນຍາຕີ: 40%.
    - ຄູມັດທະຍົມຕອນປາຍ: ຊັ້ນສູງ: 4%; ປະລິນຍາຕີ: 95% ແລະ ປະລິນຍາໂທ: 1%.
    - ສະຖາບັນສ້າງຄູ: ຄູຊັ້ນສູງ: 5%, ຄູປະລິນຍາຕີ: 51%; ຄູປະລິນຍາໂທ: 39% ແລະ ຄູປະລິນຍາເອກ: 5%.
4) ອັດຕາສ່ວນນັກຮຽນຄູຕໍ່ຄູໃນສະຖາບັນສ້າງຄູ ໃຫ້ໄດ້ 15:1.
5) ການແບ່ງພາລະບົດບາດຂອງສະຖາບັນສ້າງຄູ ພາຍໃນປີ 2020 ໂດຍໃຫ້ມີການກ່ຽວພັນກັບການສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ.
    - ສະຖາບັນສ້າງຄູ 3 ຫາ 5 ແຫ່ງ ເຮັດໜ້າທີ່ສ້າງຄູເພື່ອສອນຫ້ອງກຽມ ແລະ ອະນຸບານ.
    - ສະຖາບັນສ້າງຄູ 5 ຫາ 6 ແຫ່ງ ເຮັດໜ້າທີ່ຝຶກອົບຮົມ ຄູປະຖົມລະດັບປະລິນຍາຕີ.
    - ສະຖາບັນສ້າງຄູ 6 ຫາ 7 ແຫ່ງ ເຮັດໜ້າທີ່ຝຶກອົບຮົມຄູມັດທະຍົມໃນລະດັບປະລິນຍາຕີສະເພາະບາງວິຊາໂດຍອີງຕາມທ່າແຮງ ແລະ ຄວາມພ້ອມຂອງສະຖາບັນສ້າງຄູ.
    - ສະຖາບັນສ້າງຄູແຕ່ລະແຫ່ງມີໂຮງຮຽນສາທິດທີ່ຂຶ້ນກັບຕົນ ເຊິ່ງໄດ້ມີການກຳນົດພາລະບົດບາດ ແລະ ໜ້າທີ່ໄວ້ຢ່າງລະອຽດເພື່ອຈັດຕັ້ງປະຕິບັດ.
    - ສະຖາບັນສ້າງຄູແຕ່ລະແຫ່ງມີຂີດຄວາມສາມາດທີ່ຈະໃຫ້ການສະໜັບສະໜູນການພັດທະນາອາຊີບຄູແບບຕໍ່ເນື່ອງໃຫ້ແກ່ຄູສອນສາມັນສຶກສາ ໂດຍຜ່ານໂຄງການຝຶກອົບຮົມຄູປະຈຳການ.
6) ສະຖາບັນສ້າງຄູ 2 ຫາ 3 ແຫ່ງໄດ້ຮັບນາມມະຍົດເປັນສູນແຫ່ງການພັດທະນາ (Center of Development) ຫຼື ສູນແຫ່ງຄວາມເປັນເລີດ (Center of Excellence) ໂດຍອີງຕາມເງື່ອນໄຂມາດຕະຖານທີ່ກຳນົດໄວ້.
7) ລະບົບການບຳລຸງຄູປະຈຳການແບບຄົບຊຸດໄດ້ຮັບການພັດທະນາຂຶ້ນ ແລະ ໄດ້ມີການກຳນົດການຝຶກອົບຮົມທີ່ສອດຄ່ອງກັບເສັ້ນທາງສາຍອາຊີບ ແລະ ມີການປະສົມປະສານການຝຶກອົບຮົມທີ່ເນັ້ນພາກປະຕິບັດຢ່າງຕໍ່ເນື່ອງທັງຢູ່ໃນລະດັບໂຮງຮຽນ ແລະ ກຸ່ມໂຮງຮຽນ.

## 6.3 ຍຸດທະສາດ

ມີ 5 ຍຸດທະສາດ ທີ່ຈະຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸຈຸດປະສົງ ແລະ ຄາດໝາຍໃນການໃນການກໍ່ສ້າງ ແລະ ພັດທະນາຄູ, ດັ່ງລາຍລະອຽດລຸ່ມນີ້:

### 6.3.1 ຍຸດທະສາດ 1: ຍົກຄຸນນະພາບຂອງຫຼັກສູດສ້າງຄູໃຫ້ສູງຂຶ້ນ ແລະ ໃຫ້ມີຄວາມສອດຄ່ອງກົມກຽວກັບຫຼັກສູດສາຍສາມັນ.

➢ **ຈຸດປະສົງ:**

- ເພື່ອປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດສ້າງຄູຢູ່ໃນທຸກລາຍວິຊາ, ເປັນຕົ້ນແມ່ນສອດຄ່ອງກັບຄວາມຕ້ອງການການຮຽນຮູ້ຕາມຫຼັກສູດສາມັນ ແລະ ຕາມຄວາມຕ້ອງການຂອງທ້ອງຖິ່ນ ພ້ອມທັງສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

➢ **ວຽກຈຸດສຸມ:**

1. ແຕ່ງຕັ້ງຄະນະວິຊາການກ່ອນການເປີດກອງປະຊຸມປຶກສາຫາລື ກ່ຽວກັບຄວາມສອດຄ່ອງລະຫວ່າງຫຼັກສູດສ້າງຄູ ແລະ ຫຼັກສູດສາຍສາມັນ.
2. ເປີດກອງປະຊຸມສະພາທີ່ປຶກສາການສ້າງຄູໂດຍມີຕົວແທນເຂົ້າຮ່ວມຈາກກົມສ້າງຄູ, ວິທະຍາໄລຄູທຸກແຫ່ງ, ຄະນະສຶກສາສາດລວມໄປເຖິງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເພື່ອຮ່ວມກັນທົບທວນຫຼັກສູດສ້າງຄູເພີ່ມເຕີມ ແລະ ເພື່ອອຳນວຍຄວາມສະດວກໃຫ້ແກ່ການປັບປຸງເນື້ອໃນທັງຮັບປະກັນຄວາມສອດຄ່ອງກັບຫຼັກສູດປະຖົມ ແລະ ມັດທະຍົມ ແລະ ຕາມມາດຕະຖານຄຸນນະພາບຂອງໂຮງຮຽນດັ່ງກ່າວ.
3. ພັດທະນາແຫຼ່ງຮຽນຮູ້ຂອງທຸກສາຍວິຊາໃນຫຼັກສູດສ້າງຄູ ໃຫ້ສອດຄ່ອງກັບຫຼັກສູດສາຍສາມັນທີ່ໄດ້ຮັບການປັບປຸງ (ແຫຼ່ງຮຽນຮູ້ດຽວກັນນີ້ສາມາດນຳໃຊ້ສຳລັບຫຼັກສູດບຳລຸງຄູຢູ່ສະຖາບັນສ້າງຄູໄດ້ເຊັ່ນດຽວກັນ).
4. ທົບທວນ ແລະ ປັບປຸງຫຼັກສູດສ້າງຄູທຸກລະບົບໂດຍເນັ້ນສະມັດຖະພາບ, ລວມທັງທັກສະຄວາມສາມາດເພື່ອສິ່ງເສີມການອ່ານ-ການຂຽນ ແລະ ການຄິດໄລ່ເລກຢູ່ໃນຊັ້ນປະຖົມ ແລະ ມີຄວາມສອດຄ່ອງກັບຫຼັກສູດການສຶກສາຊັ້ນປະຖົມທີ່ໄດ້ຮັບການປັບປຸງ.
5. ຮັບປະກັນການຮຽນ-ການສອນຢູ່ສະຖາບັນສ້າງຄູ ໂດຍເນັ້ນເອົານັກຮຽນເປັນໃຈກາງ ແລະ ນຳໃຊ້ ICT ເຂົ້າໃນການຮຽນ-ການສອນ.
6. ພັດທະນາການຮຽນຮູ້ແບບບູລະນາການ ແລະ ການຮຽນຮ່ວມລວມທັງຮູບແບບຂອງການຮຽນທີ່ຕິດພັນກັບພາກປະຕິບັດຕົວຈິງໃນການກໍ່ສ້າງຄູປະຖົມ ລະບົບ 9+3 ເພື່ອໃຫ້ສາມາດປະຕິບັດການສິດສອນໃນສະພາບການສຶກສາຢູ່ເຂດຫ່າງໄກສອກຫຼີກໄດ້.
7. ຂະຫຍາຍເວລາ ແລະ ລະບົບການຝຶກຫັດວິຊາຊີບ ເພື່ອໃຫ້ນັກຮຽນຄູສາມາດປະຕິບັດການສອນຕົວຈິງຢູ່ໃນໂຮງຮຽນສາມັນ ຫຼື ຢູ່ໃນໂຮງຮຽນສາທິດຫຼາຍຂຶ້ນ. ກົມສ້າງຄູສົມທົບກັບວິທະຍາໄລຄູຄົ້ນຄວ້າການສ້າງຕັ້ງຄະນະວິຊາການເພື່ອພັດທະນາໂຄງການທົດລອງການຝຶກຫັດວິຊາຊີບແບບໃໝ່, ທັງນີ້ເພື່ອເປັນການບໍລິຫານຈັດການ ແລະ ປະເມີນຜົນການສຶກສາທົດລອງການຝຶກຫັດສອນຕົວຈິງ.

### 6.3.2 ຍຸດທະສາດ 2: ຍົກຄຸນນະພາບການສອນໃນສະຖາບັນສ້າງຄູໃຫ້ສູງຂຶ້ນ

➢ **ຈຸດປະສົງ:**

- ເພື່ອປັບປຸງມາດຕະຖານການສອນຢູ່ໃນສະຖາບັນສ້າງຄູໂດຍການສ້າງຂີດຄວາມສາມາດ ແລະ ການພັດທະນາທັກສະທາງດ້ານວິຊາຊີບໃຫ້ແກ່ພະນັກງານຄູ ລວມໄປເຖິງຍຸດທະສາດໃນການຄັດເລືອກພະນັກງານໃໝ່ທີ່ປະກອບດ້ວຍວຸດທິການສຶກສາທີ່ເໝາະສົມເຂົ້າໃນສະຖາບັນສ້າງຄູ.
- ເພື່ອປັບປຸງພື້ນຖານໂຄງລ່າງ ແລະ ສິ່ງແວດລ້ອມການຮຽນຮູ້ຢູ່ໃນສະຖາບັນສ້າງຄູ.

➢ **ວຽກຈຸດສຸມ:**

1. ພັດທະນາທັກສະຄວາມຮູ້ວິຊາຄູໃຫ້ແກ່ຄູ-ອາຈານ ໃນສະຖາບັນສ້າງຄູໃນການຈັດຕັ້ງ ການສອນ-ການຮຽນຮ່ວມໃຫ້ແກ່ນັກຮຽນທີ່ມີຄວາມຕ້ອງການຮຽນຮູ້ທີ່ຫຼາກຫຼາຍ (ນັກຮຽນຊົນເຜົ່າ, ບົດບາດຍິງ-ຊາຍ, ເດັກທີ່ມີຄວາມຕ້ອງການພິເສດ) ແລະ ການກະກຽມສື່ການຮຽນ-ການສອນເພື່ອຮັບໃຊ້ຈຸດປະສົງດັ່ງກ່າວ.
2. ສ້າງຕັ້ງໂຮງຮຽນສາທິດທີ່ຂຶ້ນກັບສະຖາບັນສ້າງຄູ ແນໃສ່ຮັບໃຊ້ການທົດລອງ ແລະ ຮັບຮອງຢ່າງເປັນທາງການກ່ຽວກັບຮູບແບບ ແລະ ນະວັດຕະກຳການສອນທີ່ດີ. ກຳນົດພາລະບົດບາດ, ໜ້າທີ່ ແລະ ການບໍລິຫານຄຸ້ມຄອງໂຮງຮຽນແຫ່ງດັ່ງກ່າວ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານ.

3. ຍົກລະດັບເນື້ອໃນຄວາມຮູ້ລາຍວິຊາ ແລະ ເນື້ອໃນວິທີສິດສອນລາຍວິຊາໃຫ້ແກ່ຄູ-ອາຈານສອນໃນສະຖາບັນສ້າງຄູຢູ່ໃນຂອບເຂດຫຼັກສູດຕ່າງໆເຊັ່ນ: ການສອນອ່ານ ແລະ ຂຽນພາສາລາວ, ຄະນິດສາດ, ວິທະຍາສາດທໍາມະຊາດ ແລະ ວິທະຍາສາດສັງຄົມ.
4. ເພີ່ມຈໍານວນພະນັກງານຄູ-ອາຈານໃນສະຖາບັນສ້າງຄູ ທີ່ມີວຸດທິການສຶກສາໃນລະດັບສູງໃຫ້ຫຼາຍຂຶ້ນໂດຍຊຸກຍູ້ໃຫ້ເຂົາເຈົ້າໄປຍົກລະດັບການສຶກສາປະລິນຍາໂທ ແລະ ປະລິນຍາເອກຢ່າງໜ້ອຍໃຫ້ໄດ້ປີລະ 30 ຄົນ.
5. ສືບຕໍ່ຝຶກອົບຮົມການນໍາໃຊ້ເຄື່ອງທົດລອງສອນສໍາລັບວິຊາ ຊີວະສາດ, ຟີຊິກ ແລະ ເຄມີໃຫ້ມີປະສິດທິພາບ.
6. ປັບປຸງຂີດຄວາມສາມາດດ້ານພາສາອັງກິດ, ດ້ານ IT, ດ້ານການຄົ້ນຄວ້າວິໄຈໃຫ້ບຸກຄະລາກອນໃນສະຖາບັນສ້າງຄູ ເພື່ອດໍາເນີນການຄົ້ນຄວ້າວິໄຈໃນຫ້ອງຮຽນ ແລະ ຊຸກຍູ້ໃຫ້ຄູໃນສະຖາບັນສ້າງຄູມີຄວາມກະຕືລືລົ້ນໃນການເວົ້າ, ການຂຽນ, ການບໍລິການໃຫ້ຄໍາປຶກສາຢູ່ໃນສະຖາບັນສ້າງຄູ ແລະ ສ້າງເງື່ອນໄຂໃຫ້ຄູໄດ້ຮັບຕໍາແໜ່ງວິຊາການຫຼາຍຂຶ້ນ.
7. ພັດທະນາຊຸດມາດຕະຖານສະມັດຖະພາບຂອງຄູ ໃຫ້ແກ່ຄູອາຈານໃນສະຖາບັນສ້າງຄູເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການພັດທະນາວິຊາຊີບຂອງຄູສອນ ໃນສະຖາບັນສ້າງຄູທັງຮັບປະກັນການປະຕິບັດຕາມຫຼັກຈັນຍາບັນຂອງຄູ.
8. ສ້າງເຄືອຂ່າຍການພົວພັນຮ່ວມມືກັບສະຖາບັນສ້າງຄູ ຢູ່ໃນບັນດາປະເທດອາຊຽນ ເພື່ອແລກປ່ຽນທັດສະນະກ່ຽວກັບແນວຄວາມຄິດ, ຫຼັກສູດ ແລະ ຄວາມເປັນໄປໄດ້ໃນການຈັດກິດຈະກໍາແລກປ່ຽນນັກຮຽນ ແລະ ພະນັກງານ.
9. ນໍາໃຊ້ ICT ເພື່ອຍົກສູງຄຸນນະພາບການຮຽນ-ການສອນ.

### 6.3.3 ຍຸດທະສາດ 3: ສະໜອງການບໍາລຸງຄູໃຫ້ເປັນລະບົບ ເພື່ອພັດທະນາວິຊາຊີບຄູແບບຕໍ່ເນື່ອງ

➢ **ຈຸດປະສົງ:**

- ເພື່ອຮັບປະກັນການສະໜັບສະໜູນຢ່າງຕໍ່ເນື່ອງ ແລະ ເປັນລະບົບໃຫ້ແກ່ຄູ ດ້ວຍຮູບການຕ່າງໆ, ແນໃສ່ເຮັດໃຫ້ຄູສາມາດພັດທະນາຄວາມສາມາດດ້ານວິຊາຊີບເປັນກ້າວໆ ແລະ ສອດຄ່ອງກັບເສັ້ນທາງສາຍອາຊີບຂອງຕົນ.
- ເພື່ອເຮັດໃຫ້ລະບົບການຝຶກອົບຮົມຄູປະຈໍາການມີຄຸນນະພາບ ແລະ ປະສິດທິພາບຫຼາຍຂຶ້ນ.
- ເພື່ອຮັບປະກັນໃຫ້ແກ່ການຮ່ວມມືລະຫວ່າງກົມສ້າງຄູ, ກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ສະຖາບັນສ້າງຄູ ແລະ ຄູຝຶກທີ່ມີຢູ່ໃນທ້ອງຖິ່ນເພື່ອເຮັດໃຫ້ເຂົາເຈົ້າດໍາເນີນການຝຶກອົບຮົມຄູປະຈໍາການໃຫ້ແກ່ຄູ-ອາຈານ.

➢ **ວຽກຈຸດສຸມ:**

1. ດໍາເນີນການສໍາຫຼວດຄວາມຕ້ອງການໃນການຝຶກອົບຮົມສໍາລັບຄູຝຶກຂອງຄູປະຈໍາການທຸກໆຄົນ, ແນໃສ່ພັດທະນາແຜນການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ແກ່ເຂົາເຈົ້າ ເພື່ອໃຫ້ກາຍເປັນຄູຝຶກຫຼັກແຫຼ່ງ.
2. ສ້າງກົນໄກການຮ່ວມມືກັນລະຫວ່າງກົມສ້າງຄູ, ກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ສະຖາບັນສ້າງຄູ ໃນການພັດທະນາຫຼັກສູດຝຶກອົບຮົມຄູປະຈໍາການໃນທຸກລະດັບຊັ້ນຮຽນ, ພ້ອມທັງກໍານົດພາລະບົດບາດທີ່ເປັນອັນສະເພາະຂອງສູນພັດທະນາຄູ ແລະ ຄູສຶກສານິເທດ.
3. ພັດທະນາຊຸດມາດຕະຖານສະມັດຖະພາບຂອງຄູ ໃຫ້ແກ່ຄູຜູ້ທີ່ຫາກໍ່ເລີ່ມຕົ້ນສິດສອນ, ຄູທີ່ຊ່ຽວຊານ ແລະ ຄູຫຼັກແຫຼ່ງເພື່ອຮັບປະກັນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ທັງຮັບປະກັນໃຫ້ພວກເຂົາເຈົ້າປະຕິບັດຕາມຫຼັກຈັນຍາບັນຂອງຄູ.
4. ພັດທະນາລະບົບການຝຶກອົບຮົມຄູປະຈໍາການທີ່ເນັ້ນໂຮງຮຽນເປັນຫຼັກ ເຊິ່ງສະໜັບສະໜູນໂດຍໂຮງຮຽນ, ກຸ່ມໂຮງຮຽນ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະ

ຄອນຫຼວງ ໂດຍສຸມໃສ່ຫົວຂໍ້ຕ່າງໆ ເຊັ່ນ: ການສອນພາສາລາວສໍາລັບຄູຊົນເຜົ່າ, ການສອນຫັດອ່ານ, ການສອນຄະນິດສາດ, ວິທະຍາສາດ, ການຮຽນຮ່ວມ ແລະ ການສອນຫ້ອງຄວບ.

5. ພັດທະນາເຄືອຂ່າຍວິຊາຊີບຄູລະຫວ່າງບັນດາໂຮງຮຽນໃກ້ຄຽງ ແລະ ລະຫວ່າງບັນດາຄູດ້ວຍກັນ ເພື່ອປະຕິບັດການບໍາລຸງຄູປະຈໍາການທີ່ເນັ້ນໃນຂັ້ນໂຮງຮຽນເປັນຫຼັກ ແລະ ຂັ້ນກຸ່ມໂຮງຮຽນ ເພື່ອເຮັດໃຫ້ເຂົາເຈົ້າສາມາດເຮັດວຽກຮ່ວມກັນເພື່ອປັບປຸງການຮຽນ-ການສອນ ໂດຍຜ່ານການປະຕິບັດການສຶກສາການສອນ (Lesson study).
6. ພັດທະນາຍຸດທະສາດການປະຕິບັດການຝຶກອົບຮົມ ແລະ ໂມດູນຮັບໃຊ້ການຝຶກອົບຮົມ ໄລຍະສັ້ນຢ່າງມີຈຸດປະສົງສະເພາະເຊັ່ນ: ການປະເມີນຜົນການຮຽນຂອງນັກຮຽນ, ການພັດທະນາສື່ການຮຽນ-ການສອນໂດຍນໍາໃຊ້ຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນ, ພາສາອັງກິດ ແລະ ໄອທີເພື່ອເຂົ້າເຖິງແຫຼ່ງຄວາມຮູ້ທາງສື່ອີເລັກໂທຣນິກ.
7. ສ້າງຂີດຄວາມສາມາດຂອງຄູໃນສະຖາບັນສ້າງຄູ ໃນການເຮັດວຽກກັບຄູຝຶກຫຼັກແຫຼ່ງ ແລະ ຄູສຶກສານິເທດເພື່ອສະໜັບສະໜູນຜູ້ອໍານວຍການໂຮງຮຽນ ແລະ ຄູໃນການປະຕິບັດຫຼັກສູດຂອງໂຮງຮຽນ ແລະ ປັບປຸງ, ການຮຽນຮູ້ຂອງນັກຮຽນ ໂດຍອີງໃສ່ຫຼັກສູດທີ່ໄດ້ຮັບການປັບປຸງແລ້ວ.
8. ສ້າງຂີດຄວາມສາມາດໃຫ້ແກ່ຄູຝຶກຫຼັກແຫຼ່ງ ແລະ ຄູຝຶກຂອງຄູປະຈໍາການ, ຄູສຶກສານິເທດ ເພື່ອພັດທະນາຫຼັກສູດຝຶກອົບຮົມຄູປະຈໍາການ, ສື່ການຮຽນ-ການສອນ ແລະ ເພື່ອສະໜັບສະໜູນການປະຕິບັດການຮຽນ-ການສອນ ຕາມຄວາມຕ້ອງການອັນຈໍາເປັນຂອງວຽກງານໃນການຝຶກອົບຮົມຄູ.
9. ເອົາໃຈໃສ່ປະຕິບັດລະບົບການໃຫ້ຄໍາປຶກສາ, ການສະໜັບສະໜູນ, ການປະຕິບັດຕົວຈິງ ແລະ ການກວດກາຊີ້ນໍາ ໃຫ້ແກ່ຄູຜູ້ທີ່ຫາກໍ່ເລີ່ມຕົ້ນສິດສອນ.

### 6.3.4 ຍຸດທະສາດ 4: ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການປະກັນຄຸນນະພາບພາຍໃນກ່ຽວກັບມາດຕະຖານຂອງຜູ້ຮຽນຈົບຈາກສະຖາບັນສ້າງຄູ ແລະ ການປັບປຸງການບໍລິຫານຈັດການໃນສະຖາບັນສ້າງຄູ

➢ **ຈຸດປະສົງ:**

- ເພື່ອຮັບປະກັນການຮັບຮອງວຸດທິຜູ້ຮຽນຈົບຈາກສະຖາບັນສ້າງຄູ ໂດຍໃບຢັ້ງຢືນວຸດທິທີ່ມີມາດຕະຖານ.
- ເພື່ອປັບປຸງຂີດຄວາມສາມາດໃນການຄຸ້ມຄອງບໍລິຫານຂອງຜູ້ບໍລິຫານສະຖາບັນສ້າງຄູ (ຜູ້ອໍານວຍການ ແລະ ບຸກຄະລາກອນທີ່ສໍາຄັນ) ໂດຍຜ່ານການຈັດຕັ້ງຝຶກອົບຮົມທີ່ເໝາະສົມ.
- ເພື່ອກະກຽມບຸກຄະລາກອນດ້ານການສິດສອນ ແລະ ຮັບປະກັນການເຊື່ອມໂຍງກັບລະບົບການສຶກສາຢູ່ໃນພາກພື້ນ ແລະ ສາກົນ.

➢ **ວຽກຈຸດສຸມ:**

1. ພັດທະນາຊຸດມາດຕະຖານສະມັດຖະພາບຂອງຄູໃຫ້ແກ່ຄູຜູ້ທີ່ຫາກໍ່ເລີ່ມຕົ້ນສິດສອນ, ຄູທີ່ຊ່ຽວຊານ, ຄູຫຼັກແຫຼ່ງຢູ່ໃນສະຖາບັນສ້າງຄູ ເພື່ອຮັບປະກັນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ທັງຮັບປະກັນໃຫ້ພວກເຂົາເຈົ້າປະຕິບັດຕາມຫຼັກຈັນຍາບັນຂອງຄູໃຫ້ສໍາເລັດໃນປີ 2017.
2. ພັດທະນາລະບົບການຕິດຕາມຄຸນນະພາບຂອງຫຼັກສູດໃນສະຖາບັນສ້າງຄູ ໂດຍປະສານງານກັບສູນປະກັນຄຸນນະພາບການສຶກສາ, ກົມກວດກາ ແລະ ພາກສ່ວນກ່ຽວຂ້ອງ. ກໍານົດນະໂຍບາຍສົ່ງເສີມຄູໃນສະຖາບັນສ້າງຄູໃຫ້ໄດ້ຮັບການພັດທະນາຕົນເອງຢ່າງຕໍ່ເນື່ອງ. ຈັດຝຶກອົບຮົມກ່ຽວກັບວຽກງານບໍລິຫານ ແລະ ຄຸ້ມຄອງໂດຍມີໃບຢັ້ງຢືນເພື່ອປັບປຸງຂີດຄວາມສາມາດຂອງຜູ້ບໍລິຫານສະຖາບັນສ້າງຄູ (ຜູ້ອໍານວຍການ ແລະ ພະນັກງານຫຼັກແຫຼ່ງ)ໃຫ້ສໍາເລັດພາຍໃນປີ 2018.
3. ພັດທະນາລະບົບການຮັບປະກັນຄຸນນະພາບພາຍໃນຂອງສະຖາບັນສ້າງຄູ ເຊິ່ງມີການເຊື່ອມໂຍງກັບລະບົບການຮັບຮອງວຸດທິການສຶກສາເພື່ອຮັບປະກັນໃຫ້ແຕ່ລະສະຖາບັນສ້າງຄູ ມີສ່ວນຮັບຜິດຊອບໃນການພັດທະນາຄຸນນະພາບຂອງນັກຮຽນ-ນັກສຶກສາທີ່ຮຽນຈົບ.

4. ປັບປຸງສິ່ງອຳນວຍຄວາມສະດວກໃນສະຖາບັນສ້າງຄູ ແລະ ສູນພັດທະນາຄູຂັ້ນແຂວງເພື່ອສະໜັບສະໜູນກິດຈະກຳການຮຽນ-ການສອນແບບຕັ້ງໜ້າເຊັ່ນ: ຫ້ອງທົດລອງ, ແຫຼ່ງຮຽນຮູ້ໃນຫ້ອງສະໝຸດ, ອຸປະກອນ ໄອທີ ແລະ ຫໍພັກສຳລັບນັກສຶກສາຄູ.
5. ກຳນົດເງື່ອນໄຂໃນການຮັບຮອງສະຖາບັນສ້າງຄູໃດໜຶ່ງທີ່ມີຜົນສຳເລັດສູງ ໃຫ້ສາມາດກາຍເປັນສູນກາງແຫ່ງການພັດທະນາກໍ່ຄືກາຍເປັນສູນກາງແຫ່ງຄວາມເປັນເລີດໃນດ້ານໃດໜຶ່ງ.
6. ສ້າງເງື່ອນໄຂເພື່ອຍົກລະດັບວິທະຍາໄລຄູຈຳນວນໜຶ່ງຂຶ້ນເປັນສະຖາບັນສ້າງຄູ ຫຼື ເປັນມະຫາວິທະຍາໄລສ້າງຄູ
7. ສ້າງລະບຽບການເພື່ອອອກໃບອະນຸຍາດການສອນໃຫ້ແກ່ຄູທີ່ມີຄຸນສົມບັດຄົບຕາມເງື່ອນໄຂທີ່ກຳນົດໄວ້. ວາງແຜນຍົກລະດັບວຸດທິຂອງຄູຢ່າງເປັນລະບົບ ໂດຍຜ່ານແຜນການການພັດທະນາວິຊາຊີບແບບຕໍ່ເນື່ອງທີ່ອອກແບບໃຫ້ບັນລຸຕາມຈຸດປະສົງດັ່ງກ່າວ.
8. ຈັດກອງປະຊຸມປະຈຳປີຜູ້ບໍລິຫານສະຖາບັນສ້າງຄູ, ກອງປະຊຸມສະມາຄົມຄູລາວ, ກອງປະຊຸມສະພາທີ່ປຶກສາການສ້າງຄູ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງກັບການວາງແຜນວຽກງານສ້າງຄູໃນຕໍ່ໜ້າ.
9. ສ້າງຄວາມເຂັ້ມແຂງທາງດ້ານກິລາ ໃຫ້ແກ່ສະຖາບັນສ້າງຄູເພື່ອເຂົ້າຮ່ວມການແຂ່ງຂັນກິລາມະຫາວິທະຍາໄລ.
10. ສ້າງຄວາມເຂັ້ມແຂງທາງດ້ານສິລະປະ - ວັນນະຄະດີໃຫ້ແກ່ສະຖາບັນສ້າງຄູ ເພື່ອສົ່ງເສີມວັດທະນະທຳຂອງທ້ອງຖິ່ນ ແລະ ເພື່ອແລກປ່ຽນວັດທະນະທຳກັບບັນດາປະເທດອາຊຽນ.

### 6.3.5 ຍຸດທະສາດ 5: ວາງແຜນ ແລະ ຄຸ້ມຄອງກ່ຽວກັບຄວາມຕ້ອງການ ແລະ ການສະໜອງຄູໃຫ້ມີການປະສານງານເປັນຢ່າງດີພ້ອມທັງມີການຄັດເລືອກເອົານັກຮຽນທີ່ໄດ້ຕາມມາດຕະຖານເຂົ້າຮຽນຄູ.

➢ **ຈຸດປະສົງ:**

- ເພື່ອຮັບປະກັນຕອບສະໜອງຄູໃຫ້ບັນລຸໄດ້ຕາມຄວາມຕ້ອງການຄູ, ໂດຍສະເພາະແມ່ນຄູທີ່ຢູ່ໃນເຂດຫ່າງໄກສອກຫຼີກແນໃສ່ຮັບປະກັນການສະໜອງຄຸນນະພາບຂອງການຮຽນຮູ້ໃຫ້ນັກຮຽນທຸກຄົນ.
- ເພື່ອຄັດເລືອກນັກຮຽນເຂົ້າຮຽນຄູໃຫ້ໄດ້ຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້.

➢ **ວຽກຈຸດສຸມ:**

1. ກຳນົດຄວາມຕ້ອງການຄູໂດຍເລີ່ມຈາກຂັ້ນໂຮງຮຽນຂຶ້ນມາຢ່າງໜ້ອຍໃນທຸກໆ 2 ປີ, ຄາດຄະເນຄວາມຕ້ອງການຄູທັງພາກລັດ-ເອກະຊົນ ໂດຍອີງໃສ່ຖານຂໍ້ມູນທີ່ໄດ້ຮັບການປັບປຸງພັດທະນາມິຕິກຳສຳລັບສະຖາບັນສ້າງຄູ ກ່ຽວກັບແຜນຮັບນັກຮຽນຄູ.
2. ດຸ່ນດ່ຽງລະຫວ່າງແຜນຮັບນັກຮຽນຄູກັບແຜນບັນຈຸຄູໃໝ່ ຢູ່ໃນແຕ່ລະຄະນະວິຊາ ແລະ ພາກວິຊາ ເພື່ອສະໜອງຄວາມຕ້ອງການຄູໃນແຕ່ລະວິຊາ ແລະ ໃນແຕ່ລະປີ.
3. ຮັບປະກັນລະບົບການສອບເສັງຄັດເລືອກ ເອົານັກຮຽນທີ່ໄດ້ມາດຕະຖານເຂົ້າຮຽນຄູ, ພ້ອມນັ້ນ ກໍ່ຄັດເລືອກຜູ້ທີ່ໄດ້ຮັບທຶນການສຶກສາເຂົ້າຮຽນຄູຕາມໂກຕາໃຫ້ຖືກຕາມມາດຕະຖານ, ເງື່ອນໄຂ, ມີຄວາມໂປ່ງໃສ ແລະ ເປັນຕົວແທນໃຫ້ແກ່ແຂວງ/ເມືອງ, ທັງຮັບປະກັນໃຫ້ເຂົາເຈົ້າໄດ້ບັນຈຸເຂົ້າເປັນຄູ ຢູ່ໃນເຂດທີ່ມີຄວາມຕ້ອງການຄູພາຍຫຼັງທີ່ຮຽນຈົບ.
4. ສົມທົບກັບສະຖາບັນພັດທະນາຜູ້ບໍລິຫານການສຶກສາ ໃນການຈັດຝຶກອົບຮົມໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນແຂວງ/ເມືອງ ແລະ ຂັ້ນໂຮງຮຽນ ກ່ຽວກັບການເກັບກຳຂໍ້ມູນການສຶກສາຢູ່ພາຍໃນບ້ານ ເພື່ອສະໜັບສະໜູນໃຫ້ແກ່ການກະກຽມວາງແຜນຄວາມຕ້ອງການຄູ, ລວມທັງການຄາດຄະເນແຜນຮັບນັກຮຽນຄູໃນຕໍ່ໜ້າ.

## 6.4 ຄາດຄະເນການເຂົ້າຮຽນ ແລະ ຄວາມຕ້ອງການດ້ານການເງິນ

ໂດຍອີງໃສ່ນະໂຍບາຍ ໄດ້ກຳນົດຄາດໝາຍການກໍ່ສ້າງຄູໃນແຕ່ລະປີ ລວມທັງການຄາດຄະເນງົບປະມານທີ່ຕ້ອງການ ແຕ່ນີ້ຮອດປີ 2020 ດັ່ງນີ້:

**ຕາຕະລາງ 29: ຄາດຄະເນການເຂົ້າຮຽນໃນສະຖາບັນສ້າງຄູ**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ຈຳນວນນັກຮຽນໃນແຜນ | 1,200 | 1,200 | 1,200 | 1,200 | 1,200 |
| ຈຳນວນນັກຮຽນນອກແຜນ | 2,800 | 2,800 | 2,800 | 2,800 | 2,800 |
| ລວມຈຳນວນນັກຮຽນເຂົ້າໃໝ່ທັງໝົດ | 4,000 | 4,000 | 4,000 | 4,000 | 4,000 |
| **ຈຳນວນນັກຮຽນຄູເຂົ້າໃໝ່ແຍກຕາມສາຍ** | | | | | |
| ຄູອະນຸບານ | 1,000 | 1,000 | 1,000 | 1,000 | 1,000 |
| ຄູປະຖົມສຶກສາ | 1,200 | 1,200 | 1,200 | 1,200 | 1,200 |
| ຄູມັດທະຍົມສຶກສາ | 1,470 | 1,470 | 1,470 | 1,470 | 1,470 |
| ຄູພະລະສຶກສາ | 180 | 180 | 180 | 180 | 180 |
| ຄູສິລະປະສຶກສາ | 150 | 150 | 150 | 150 | 150 |
| **ລວມຈຳນວນນັກຮຽນທັງໝົດ** | **25,373** | **21,373** | **17,800** | **16,000** | **16,000** |

**ຕາຕະລາງ 30: ຄວາມຕ້ອງການດ້ານການເງິນສຳລັບການກໍ່ສ້າງຄູ (ລ້ານກີບ)**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 7,612 | 6,412 | 5,340 | 4,800 | 4,800 |
| ເບ້ຍລ້ຽງ | 18,269 | 15,389 | 12,816 | 11,520 | 11,520 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 2,741 | 2,451 | 2,176 | 2,094 | 2,253 |
| ງົບປະມານສຳລັບອຸປະກອນຮັບໃຊ້ການຮຽນ-ການສອນ | 8,000 | 8,000 | 8,000 | 8,000 | 8,000 |
| ງົບປະມານສຳລັບນັກຮຽນຝຶກຫັດ | 12,000 | 12,000 | 12,000 | 12,000 | 12,000 |
| **ລວມບໍລິຫານ** | **48,621** | **44,252** | **40,332** | **38,414** | **38,573** |
| ການກໍ່ສ້າງຫໍພັກຄູ ແລະ ນັກຮຽນ | 3,200 | 3,200 | 6,400 | 6,400 | 6,400 |
| ການກໍ່ສ້າງຫ້ອງທົດລອງ | 0 | 3,200 | 6,400 | 6,400 | 6,400 |
| **ລວມລົງທຶນ** | **3,200** | **6,400** | **12,800** | **12,800** | **12,800** |
| **ລວມ** | **51,821** | **50,652** | **53,132** | **51,214** | **51,373** |

# 7. ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

## 7.1 ສະພາບລວມ

ພາຍໃຕ້ການຮ່ວມມືຈາກຫຼາຍພາກສ່ວນເຊັ່ນ: ລັດຖະບານ, ຫົວໜ່ວຍທຸລະກິດ ແລະ ຄູ່ຮ່ວມພັດທະນາ ໂດຍສະເພາະແມ່ນ ທະນາຄານພັດທະນາອາຊີ, ລັດຖະບານເຢຍລະມັນ ແລະ ລັດຖະບານ ສ. ເກົາຫຼີ, ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບໄດ້ຮັບການພັດທະນາດີຂຶ້ນໃນແຕ່ລະປີ ໂດຍສະເພາະແມ່ນໄດ້ລົງທຶນເຂົ້າໃນການສ້າງພື້ນຖານໂຄງລ່າງ ໃຫ້ແກ່ບັນດາສະຖາບັນອາຊີວະສຶກສາໃນທົ່ວປະເທດ. ມາຮອດປີ 2015 ມີສະຖາບັນອາຊີວະທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງສຶກສາທິການ ແລະ ກິລາ ທັງໝົດ 23 ແຫ່ງ ມີ: ສະຖາບັນ 02 ແຫ່ງ, ວິທະຍາໄລ 08 ແຫ່ງ, ໂຮງຮຽນເຕັກນິກ-ວິຊາຊີບ 05 ແຫ່ງ, ໂຮງຮຽນເຕັກນິກ-ວິຊາຊີບແບບປະສົມ 06 ແຫ່ງ ແລະ ໂຮງຮຽນວິຊາຊີບແບບປະສົມ 02 ແຫ່ງ ແລະ ສະຖານອາຊີວະສຶກສາພາກເອກະຊົນ ຈຳນວນ 76 ແຫ່ງ. ສະຖາບັນທີ່ຂຶ້ນກັບກະຊວງ ແລະ ຂະແໜງການອື່ນ ຈຳນວນ 23 ແຫ່ງ.

ເຖິງວ່າຈະມີການລົງທຶນເຂົ້າໃນການປັບປຸງພື້ນຖານໂຄງລ່າງ ແລະ ປັບປຸງຫຼັກສູດກໍ່ຕາມແຕ່ສະພາບການຮັບນັກຮຽນ-ນັກສຶກສາ ແມ່ນຍັງບໍ່ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານຢ່າງແທ້ຈິງ. ການເຂົ້າຮຽນໃນສາຍອາຊີວະສຶກສາ ສ່ວນໃຫຍ່ ແມ່ນເຂົ້າຮຽນໃນຂະແໜງບໍລິການ, ຖັດລົງມາແມ່ນຂະແໜງອຸດສາຫະກຳ, ສ່ວນຂະແໜງກະສິກຳ ຊຶ່ງເປັນຂະແໜງທີ່ຕະຫຼາດແຮງງານມີຄວາມຕ້ອງການສູງ ສັດສ່ວນການເຂົ້າຮຽນພັດມີໜ້ອຍ ໂດຍສະ

ເພາະຢູ່ສະຖາບັນການສຶກສາພາກເອກະຊົນແມ່ນບໍ່ມີເລີຍ. ບາງສາຍເຫດ ທີ່ເຮັດໃຫ້ການພັດທະນາວຽກງານອາຊີວະສຶກສາບໍ່ໄດ້ດີມີດັ່ງນີ້:

- ການແນະນຳວິຊາຊີບ ບໍ່ທັນເລິກເຊິ່ງ, ທົ່ວເຖິງ ແລະ ບໍ່ເປັນລະບົບ.
- ການສ້າງຫຼັກສູດຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ຍັງບໍ່ທັນຫຼາກຫຼາຍ.
- ເບ້ຍລ້ຽງນັກຮຽນອາຊີວະສຶກສາຍັງຕໍ່າ ແລະ ບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຕາມລະບອບເບ້ຍລ້ຽງໃໝ່.
- ຂາດການປະສານງານ ແລະ ການຮ່ວມມື ລະຫວ່າງສະຖາບັນພາກລັດ ກັບສະຖາບັນທີ່ຂຶ້ນກັບກະຊວງອື່ນ ລວມທັງສະຖາບັນການສຶກສາພາກເອກະຊົນ.
- ການລົງທຶນຂອງລັດໃສ່ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບຍັງມີຈຳນວນຈຳກັດ ສ່ວນຫຼາຍແມ່ນອີງໃສ່ການຊ່ວຍເຫຼືອລ້າຈາກຄູ່ຮ່ວມພັດທະນາ.
- ຂາດແບບແຜນພັດທະນາສິນເຊື່ອເພື່ອການສຶກສາທີ່ຍືນຍົງ.

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ, ໃນໄລຍະ 5 ປີ ຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 7.2 ຈຸດປະສົງ ແລະ ຄາດໝາຍ:

➢ **ຈຸດປະສົງ**

- ເພື່ອສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບສາຍສາມັນໃຫ້ເຂົ້າຮຽນໃນສາຍວິຊາຊີບໃຫ້ຫຼາຍຂຶ້ນ.
- ເພື່ອຮັບປະກັນໃຫ້ນັກຮຽນທີ່ຮຽນຈົບຈາກສະຖາບັນອາຊີວະສຶກສາທັງພາກລັດ ແລະ ເອກະຊົນມີທັກສະ ແລະ ສີມືແຮງງານທີ່ຜູ້ປະກອບການຍອມຮັບໄດ້.

➢ **ຄາດໝາຍ**

- ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບ ແລະ ສູນຝຶກອົບຮົມວິຊາຊີບໃຫ້ມີຢູ່ໃນທຸກໆແຂວງຢ່າງໜ້ອຍ 1 ແຫ່ງ.
- ຂະຫຍາຍໂອກາດເຂົ້າຮຽນໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ໄດ້ 60% ຂອງນັກຮຽນທີ່ຮຽນຈົບສາຍສາມັນ ໂດຍເອົາໃຈໃສ່ສົ່ງເສີມເພດຍິງໃຫ້ຫຼາຍຂຶ້ນ.

## 7.3 ຍຸດທະສາດ

ມີ 8 ຍຸດທະສາດ ທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸຈຸດປະສົງ ແລະ ຄາດໝາຍຂ້າງເທິງນີ້:

### 7.3.1 ຍຸດທະສາດ 1: ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍຄວາມສາມາດຂອງອາຊີວະສຶກສາ

➢ **ຈຸດປະສົງ:**

- ເພື່ອສົ່ງເສີມການຂະຫຍາຍໂອກາດເຂົ້າຮຽນຢ່າງທົ່ວເຖິງ, ເທົ່າທຽມ ແລະ ສອດຄ່ອງ.

➢ **ວຽກຈຸດສຸມ:**

1. ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນອາຊີວະສຶກສາ/ສູນຝຶກອົບຮົມວິຊາຊີບ ພ້ອມທັງ ສະໜອງອຸປະກອນການຮຽນ-ການສອນທີ່ດີ.
2. ຂະຫຍາຍສາຂາອາຊີບທີ່ເປັນທ່າແຮງທາງດ້ານເສດຖະກິດ.
3. ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບໃນບັນດາແຂວງ ແລະ ເມືອງບ່ອນທີ່ມີທ່າແຮງ.
4. ພັດທະນາການຝຶກອົບຮົມວິຊາຊີບສຳລັບຜູ້ດ້ອຍໂອກາດ.
5. ປັບປຸງ ແລະ ຂະຫຍາຍບັນດາໂຮງຮຽນເຕັກນິກ-ວິຊາຊີບ, ສູນຝຶກອົບຮົມວິຊາຊີບ ແລະ ສູນພັດທະນາສີມືແຮງງານທີ່ມີຢູ່ແລ້ວ; ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບໃນບາງແຂວງທີ່ມີເງື່ອນໄຂຄວາມສາມາດເປັນວິທະຍາໄລເພື່ອສະໜອງການຝຶກອົບຮົມໃນລະດັບຕ່າງໆ ດ້ວຍຫຼາຍຮູບແບບຕາມຂອບວຸດທິວິຊາຊີບ.

### 7.3.2 ຍຸດທະສາດ 2: ສົ່ງເສີມສັງຄົມ ແລະ ພາກສ່ວນທຸລະກິດປະກອບສ່ວນໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ

- **ຈຸດປະສົງ:**
- ເພື່ອປຸກລະດົມສັງຄົມ, ພາກສ່ວນທຸລະກິດມີສ່ວນຮ່ວມໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- **ວຽກຈຸດສຸມ:**

1. ປຸກລະດົມ, ຊຸກຍູ້, ສົ່ງເສີມຊຸມຊົນ, ອົງການຈັດຕັ້ງສັງຄົມ, ຜູ້ປະກອບການປະກອບສ່ວນເຂົ້າໃນການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
2. ສ້າງຄວາມເຂັ້ມແຂງໃຫ້ສະພາທີ່ປຶກສາ, ພັດທະນາສີມື ແລະ ໜ່ວຍງານກຸ່ມອາຊີບ.
3. ສົ່ງເສີມການຮ່ວມມືພາກລັດ-ເອກະຊົນໃນການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ (PPP).

### 7.3.3 ຍຸດທະສາດ 3: ປັບປຸງຮູບແບບອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

- **ຈຸດປະສົງ:**
- ເພື່ອປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານໃນດ້ານຕ່າງໆ, ສົ່ງເສີມການມີສ່ວນຮ່ວມ ຂອງບັນດາພາກສ່ວນເສດຖະກິດໃນການພັດທະນາອາຊີວະສຶກສາ ແລະ ການເຊື່ອມໂຍງພາກພື້ນ ແລະ ສາກົນ.
- **ວຽກຈຸດສຸມ:**

1. ປັບປຸງຮູບແບບການຝຶກອົບຮົມວິຊາຊີບຕາມຂອບວຸດທິວິຊາຊີບ.
2. ນຳເອົາວິຊາເຕັກໂນໂລຊີການສື່ສານ, ວິຊາຄວາມຮູ້ດ້ານການປະກອບການ, ສິ່ງແວດລ້ອມ ແລະ ພາສາອັງກິດເຂົ້າໃນຫຼັກສູດອາຊີວະສຶກສາ.
3. ສ້າງປຶ້ມຄູ່ມື, ສື່ການຮຽນ-ການສອນ ແລະ ອຸປະກອນສຳລັບການຝຶກອົບຮົມວິຊາຊີບໃນຮູບແບບຕ່າງໆໂດຍການມີສ່ວນຮ່ວມຂອງຜູ້ຈ້າງງານ ເພື່ອໃຫ້ສອດຄ່ອງກັບມາດຕະຖານຫຼັກສູດແຫ່ງຊາດ ແລະ ຂອບວຸດທິການສຶກສາແຫ່ງຊາດ ແລະ ຄວາມຕ້ອງການຂອງຜູ້ຈ້າງງານ.

### 7.3.4 ຍຸດທະສາດ 4: ກໍ່ສ້າງ, ບຳລຸງຄູ, ພັດທະນາບຸກຄະລາກອນອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

- **ຈຸດປະສົງ:**
- ເພື່ອຍົກລະດັບການສຶກສາໃຫ້ແກ່ຄູສອນ, ບຸກຄະລາກອນສາຍອາຊີວະສຶກສາໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ, ມີສະມັດຖະພາບພຽງພໍໃນການຈັດຕັ້ງການຮຽນ-ການສອນໃນສາຂາອາຊີບທີ່ກ່ຽວຂ້ອງ.
- **ວຽກຈຸດສຸມ:**

1. ຕິດຕາມ ແລະ ປະເມີນຜົນການກໍ່ສ້າງ ແລະ ບຳລຸງຄູອາຊີວະສຶກສາ ແລະ ອົບຮົມວິຊາຊີບໃນລະດັບຕ່າງໆ.
2. ປັບປຸງສະຖາບັນພັດທະນາອາຊີວະສຶກສາ.
3. ສ້າງຕາໜ່າງ ແລະ ຂໍ້ຕົກລົງຮ່ວມມື ກັບພາຍໃນພາກພື້ນ ແລະ ສາກົນ.

### 7.3.5 ຍຸດທະສາດ 5: ປະກັນຄຸນນະພາບຂອງວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

- **ຈຸດປະສົງ:**
- ເພື່ອປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານໃນດ້ານຕ່າງໆ.
- **ວຽກຈຸດສຸມ:**

1. ປັບປຸງມາດຖານຄູ ແລະ ຜູ້ບໍລິຫານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
2. ປັບປຸງມາດຖານສະຖານອາຊີວະສຶກສາ.

3. ປັບປຸງ ແລະ ພັດທະນາມາດຖານອາຊີບ.
4. ພັດທະນາການທົດສອບ, ການທຽບໂອນຄວາມຮູ້ ແລະ ປະສົບການ..

### 7.3.6 ຍຸດທະສາດ 6: ພັດທະນາຂໍ້ມູນ-ຂ່າວສານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

➢ **ຈຸດປະສົງ:**

- ເພື່ອສຶກສາ, ວິໄຈຄວາມຕ້ອງການຝຶກອົບຮົມ, ສົ່ງເສີມການແນະນຳວິຊາຊີບ ແລະ ການແນະນຳການປະກອບອາຊີບ.

➢ **ວຽກຈຸດສຸມ:**

1. ປັບປຸງລະບົບຂໍ້ມູນ-ຂ່າວສານອາຊີວະສຶກສາ.
2. ສຶກສາ-ວິໄຈ ຄວາມຕ້ອງການດ້ານຝຶກອົບຮົມ.
3. ໂຄສະນາປະຊາສຳພັນແນະແນວວິຊາຊີບ, ແນະແນວການປະກອບອາຊີບ ແລະ ຕິດຕາມຜູ້ຮຽນຈົບ.

### 7.3.7 ຍຸດທະສາດ 7: ປັບປຸງກົງຈັກການຄຸ້ມຄອງສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ

➢ **ຈຸດປະສົງ:**

- ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານ-ຄຸ້ມຄອງວຽກງານອາຊີວະສຶກສາ.

➢ **ວຽກຈຸດສຸມ:**

1. ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຄຸ້ມຄອງ-ບໍລິຫານວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
2. ຍົກລະດັບທາງດ້ານການບໍລິຫານ ແລະ ການຄຸ້ມຄອງໃຫ້ແກ່ຜູ້ບໍລິຫານອາຊີວະສຶກສາ.

### 7.3.8 ຍຸດທະສາດທີ 8: ສ້າງນະໂຍບາຍ, ເຄື່ອງມືຄຸ້ມຄອງອາຊີວະສຶກສາ ແລະ ອົບຮົມວິຊາຊີບ

➢ **ຈຸດປະສົງ:**

- ເພື່ອປັບປຸງເຄື່ອງມືໃນການບໍລິຫານ-ຄຸ້ມຄອງອາຊີວະສຶກສາ.

➢ **ວຽກຈຸດສຸມ:**

1. ປັບປຸງຂໍ້ກຳນົດ, ກົດລະບຽບກ່ຽວກັບການຄຸ້ມຄອງວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
2. ຜັນຂະຫຍາຍ ແລະ ປັບປຸງຂໍ້ກຳນົດ, ກົດລະບຽບກ່ຽວກັບນະໂຍບາຍຕໍ່ຄູອາຊີວະສຶກສາ.
3. ປັບປຸງຂໍ້ກຳນົດກົດລະບຽບໃນການໃຊ້ຈ່າຍ ແລະ ການລົງທຶນໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

## 7.4 ຄາດຄະເນການເຂົ້າຮຽນ ແລະ ຄວາມຕ້ອງການດ້ານການເງິນ

ໂດຍອີງໃສ່ນະໂຍບາຍ ແລະ ຄາດໝາຍ, ແຕ່ນີ້ຮອດປີ 2020 ຄາດວ່າຈະມີນັກຮຽນເຂົ້າຮຽນໃນໂຮງຮຽນອາຊີວະສຶກສາ ແລະ ອົບຮົມວິຊາຊີບທີ່ກະຊວງສຶກສາທິການ ແລະ ກິລາ ຄຸ້ມຄອງທັງໝົດ ແລະ ຄາດຄະເນງົບປະມານທີ່ຕ້ອງການຮັບໃຊ້ວຽກງານດັ່ງກ່າວດັ່ງນີ້:

**ຕາຕະລາງ 31: ຄາດຄະເນການເຂົ້າຮຽນໃນສາຍອາຊີວະສຶກສາ**

| ອາຊີວະສຶກສາ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ຈຳນວນນັກຮຽນເຂົ້າຮຽນໃນຫຼັກສູດວິຊາຊີບລະດັບ 1 ແລະ 2 | 3,800 | 3,300 | 3,000 | 2,600 | 2,400 |
| ຈຳນວນນັກຮຽນເຂົ້າຮຽນໃໝ່ຫຼັກສູດ 9+3 | 2,000 | 2,500 | 3,000 | 4,000 | 5,000 |
| ຈຳນວນນັກຮຽນເຂົ້າຮຽນໃໝ່ຫຼັກສູດ 12+2 ແລະ 12+3 | 12,000 | 13,000 | 14,000 | 15,000 | 16,000 |
| ນັກຮຽນທັງໝົດ (ບໍ່ລວມນັກຮຽນໃນຫຼັກສູດ ວິຊາຊີບລະດັບ 1 ແລະ 2) | 34,500 | 39,000 | 43,000 | 48,000 | 51,000 |

ຕາຕະລາງ 32: ຄາດຄະເນຄວາມຕ້ອງການດ້ານການເງິນສໍາລັບອາຊີວະສຶກສາ (ລ້ານກີບ)

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 17,234 | 19,410 | 21,436 | 24,060 | 25,658 |
| ເບັ້ຍລ້ຽງ | 40,356 | 47,381 | 53,637 | 62,031 | 68,354 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 3,287 | 3,298 | 3,284 | 3,356 | 3,284 |
| ງົບປະມານສໍາລັບອຸປະກອນຮັບໃຊ້ການຮຽນ-ການສອນ | 10,200 | 10,200 | 10,200 | 10,200 | 10,200 |
| ງົບປະມານສໍາລັບນັກຮຽນຝຶກຫັດ | 5,485 | 6,363 | 7,238 | 8,368 | 9,191 |
| **ລວມບໍລິຫານ** | **76,562** | **86,652** | **95,794** | **108,014** | **116,687** |
| ການກໍ່ສ້າງ ແລະ ສ້ອມແປງຫ້ອງຮຽນ | 7,500 | 7,422 | 4,536 | 10,302 | 7,500 |
| ການກໍ່ສ້າງຫໍພັກຄູ ແລະ ນັກຮຽນ | 6,400 | 9,600 | 9,600 | 9,600 | 9,600 |
| ການກໍ່ສ້າງຫ້ອງທົດລອງ | 0 | 16,000 | 16,000 | 16,000 | 16,000 |
| **ລວມລົງທຶນ** | **13,900** | **33,022** | **30,136** | **35,902** | **33,100** |
| **ລວມ** | **90,462** | **119,674** | **125,930** | **143,916** | **149,787** |

# 8. ການສຶກສາຊັ້ນສູງ

## 8.1 ສະພາບລວມ

ໄລຍະ 5 ປີຜ່ານມາ ໂດຍລວມແລ້ວເຫັນວ່າ ການສຶກສາຊັ້ນສູງໄດ້ມີການຂະຫຍາຍຕົວດີພໍສົມຄວນທາງດ້ານປະລິມານ ແລະ ຄຸນນະພາບ ໃນດ້ານການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ ແລະ ການອະນຸລັກຮັກສາວັດທະນະທໍາຂອງຊາດ ຊຶ່ງເປັນພາລະກິດຫຼັກຂອງການສຶກສາຊັ້ນສູງ ໂດຍສະເພາະແມ່ນຢູ່ມະຫາວິທະຍາໄລ. ຄຽງຄູ່ກັນນັ້ນ ພັກ-ລັດຖະບານ ເວົ້າລວມ, ເວົ້າສະເພາະກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ໃນການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ ຢູ່ມະຫາວິທະຍາໄລ 4 ແຫ່ງທີ່ຂຶ້ນກັບກະຊວງ, ລວມທັງມີນະໂຍບາຍສົ່ງເສີມໃຫ້ຜູ້ສະໜອງການສຶກສາ ພາກລັດ ແລະ ເອກະຊົນ ໄດ້ດໍາເນີນການຮຽນ-ການສອນ ເພື່ອພັດທະນາການສຶກສາຊັ້ນສູງໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ. ມາຮອດປະຈຸບັນລັດຖະບານໄດ້ລົງທຶນໃສ່ການພັດທະນາການສຶກສາຊັ້ນສູງເປັນຈໍານວນຫຼາຍ ໂດຍສະເພາະ ມີການສ້າງ ແລະ ປັບປຸງ 5 ມະຫາ ວິທະຍາໄລຂອງລັດໃນນັ້ນມີການກໍ່ສ້າງອາຄານໃໝ່, ປະກອບວັດຖຸອຸປະກອນເພື່ອ ຮັບໃຊ້ການຮຽນການສອນ ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ. ນອກນັ້ນ, ຍັງໄດ້ຮັບການສະໜັບສະໜູນຈາກພາກສ່ວນອື່ນໆທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດທັງພາກລັດ ແລະ ເອກະຊົນ ເຊັ່ນ: ທະນາຄານພັດທະນາອາຊີ, ທະນາຄານໂລກ, ອົງການ KOICA, ອົງການ JICA, ອົງການ SEAMEO RIHED ແລະ ອົງການອື່ນໆເຫລົ່ານີ້ເປັນຕົ້ນ.

ໃນສົກຮຽນ 2014-2015 ມີນັກສຶກສາເຂົ້າຮຽນໃນມະຫາວິທະຍາໄລ 5 ແຫ່ງຈໍານວນ 36,728 ຄົນ (ຍິງ 16,087 ຄົນ), ມີພະນັກງານ ແລະ ຄູ-ອາຈານ ທີ່ເຮັດວຽກ ແລະ ສິດສອນຢູ່ 5 ມະຫາວິທະຍາໄລ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ຈໍານວນ 2,935 ຄົນຍິງ 1,221 ຄົນ ເທົ່າກັບ 41.60% ໃນນັ້ນ ມີລະດັບປະລິນຍາເອກ ຈໍານວນ 135 ຄົນ, ຍິງ 29 ຄົນ; ລະດັບປະລິນຍາໂທຈໍານວນ 935 ຄົນ, ຍິງ 297 ຄົນ; ລະດັບປະລິນຍາຕີ 1,534 ຄົນຍິງ 759 ຄົນ; ລະດັບອະນຸປະລິນຍາ 156 ຄົນ, ຍິງ 92 ຄົນ ແລະ ລະດັບຊັ້ນກາງລົງມາຈໍານວນ 175 ຄົນ, ຍິງ 44ຄົນ. ພ້ອມກັນນັ້ນ, ມີ ສາດສະດາຈານ 07 ຄົນ ແລະ ຮອງສາດສະດາຈານ 171 ຄົນ, ຍິງ 31 ຄົນ. ມີຫຼັກສູດການສຶກສາຊັ້ນສູງທັງໝົດ 456 ຫຼັກສູດ (ຫຼັກສູດລະດັບອະນຸປະລິນຍາ 19 ຫຼັກສູດ, ລະດັບປະລິນຍາຕີ 352 ຫຼັກສູດ, ລະດັບປະລິນຍາໂທ 66 ຫຼັກສູດ ແລະ ລະດັບປະລິນຍາເອກ 2 ຫຼັກສູດ, ຊ່ຽວຊານຂັ້ນໜຶ່ງ 9 ຫຼັກສູດ, ຊ່ຽວຊານຂັ້ນສອງ, ລົງເລິກຂະແໜງວິຊາ 2 ຫຼັກສູດ).

ເຖິງວ່າການພັດທະນາການສຶກສາຊັ້ນສູງໄດ້ມີການຂະຫຍາຍຕົວດັ່ງກ່າວຂ້າງເທິງກໍ່ຕາມ ແຕ່ວ່າດ້ານຄວາມຕ້ອງການຕົວຈິງແລ້ວເຫັນວ່າ ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການ ຊຶ່ງບັນຫາ ແລະ ສິ່ງທ້າທາຍ ຂອງການພັດທະນາການສຶກສາຊັ້ນສູງໃນປັດຈຸບັນ ສັງລວມໄດ້ຄືດັ່ງນີ້:

ການວາງແຜນການສຶກສາຊັ້ນສູງໃນໄລຍະຜ່ານມາ ຍັງບໍ່ທັນສອດຄ່ອງກັບແຜນພັດທະນາຊັບພະຍາກອນມະນຸດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ. ບັນດາສະຖາບັນການສຶກສາຊັ້ນສູງທັງພາກລັດ ແລະ ພາກເອກະຊົນ ບໍ່ໄດ້ອີງໃສ່ການສຶກສາຄວາມຕ້ອງການຂອງຕະຫຼາດແຮງງານ ໃນການພັດທະນາສາຂາວິຊາຮຽນ. ຜູ່ເຂົ້າຮຽນສ່ວນຫຼາຍ ສົນໃຈແຕ່ສາຂາວິຊາທີ່ຕົນຄິດວ່າຈະສາມາດຊອກຫາວຽກເຮັດງານທຳໄດ້ງ່າຍ ແລະ ມີລາຍໄດ້ດີ ຊຶ່ງເຮັດໃຫ້ມີປະກົດການເຫຼືອ-ບໍ່ພໍ.

ຫຼັກສູດການສຶກສາຊັ້ນສູງ ແລະ ປຶ້ມແບບຮຽນ ຍັງບໍ່ທັນສອດຄ່ອງຕາມຄວາມຮຽກຮ້ອງຕ້ອງຂອງຕະຫຼາດແຮງງານ. ຜົນການສຳຫຼວດຜູ່ໃຊ້ແຮງງານ ແລະ ນັກສຶກສາທີ່ຮຽນຈົບຈາກສະຖາບັນການສຶກສາຊັ້ນສູງ ໃນປີ 2014 ໄດ້ຊີ້ໃຫ້ເຫັນວ່າ ຄຸນນະພາບຂອງຜູ່ຮຽນຈົບ ທີ່ເຂົ້າເຮັດວຽກຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ່ໃຊ້ແຮງງານ. ຜູ່ຮຽນຈົບຍັງຂາດທັກສະດ້ານວິຊາສະເພາະ, ດ້ານການວິໄຈ, ການຄຸ້ມຄອງບໍລິຫານ ແລະ ທັກສະໃນການເຮັດວຽກ.

ພະນັກງານ ແລະ ຄູອາຈານທີ່ສິດສອນຢູ່ໃນສະຖາບັນການສຶກສາຊັ້ນສູງ ບໍ່ວ່າທັງພາກລັດ ແລະ ພາກເອກະຊົນຍັງມີວຸດທິການສຶກສາຕໍ່າ. ການວາງຄາດໝາຍອັດຕາສ່ວນຂອງຄູທີ່ສອນຢູ່ໃນສະຖາບັນການສຶກສາຊັ້ນສູງ ໂດຍສະເພາະລະດັບມະຫາວິທະຍາໄລໃຫ້ໄດ້ 1:6:3 ຍັງບໍ່ສາມາດບັນລຸໄດ້ຈົນຮອດປັດຈຸບັນ. ສະຖາບັນການສຶກສາຊັ້ນສູງພາກເອກະຊົນ ສ່ວນຫຼາຍຍັງຂາດເຂີນຄູສອນ ແລະ ໄດ້ເຊື້ອເຊີນຄູສອນຈາກສະຖາບັນການສຶກສາຊັ້ນສູງຂອງລັດມາຊ່ວຍສອນ.

ຄວາມສາມາດໃນການຄົ້ນຄວ້າວິທະຍາສາດຂອງພະນັກງານ-ຄູອາຈານໃນສະຖາບັນການສຶກສາຊັ້ນສູງ ຍັງມີຂີດຈຳກັດ. ນອກນັ້ນ, ທຶນສະໜັບສະໜູນ, ວັດຖຸອຸປະກອນ ແລະ ນະໂຍບາຍສິ່ງຈູງໃຈ ເພື່ອຄົ້ນຄວ້າວິທະຍາສາດຍັງບໍ່ທັນພຽງພໍ. ສະນັ້ນ, ຈະຕ້ອງໄດ້ມີການກຳນົດນະໂຍບາຍທີ່ເໝາະສົມ ເພື່ອສົ່ງເສີມການຄົ້ນຄວ້າ ແລະ ຄຸ້ມຄອງການຄົ້ນຄວ້າວິທະຍາສາດ.

ງົບປະມານທີ່ໄດ້ຮັບຈາກລັດຖະບານ ແມ່ນຮັບໃຊ້ແຕ່ສະເພາະວຽກງານບໍລິຫານຂອງສະຖາບັນການສຶກສາຊັ້ນສູງ ແລະ ເງິນເດືອນຂອງພະນັກງານ ເປັນສ່ວນໃຫຍ່ ແຕ່ຍັງບໍ່ພຽງພໍ ສຳລັບຮັບໃຊ້ການພັດທະນາວຽກງານວິຊາການຊຶ່ງສ່ວນໃຫຍ່ແມ່ນໄດ້ມາຈາກລາຍຮັບວິຊາການຂອງສະຖາບັນການສຶກສາຊັ້ນສູງເອງ.

ນິຕິກຳເພື່ອຄຸ້ມຄອງການສຶກສາຊັ້ນສູງຍັງບໍ່ທັນຄົບຊຸດ. ການປະສານງານລະຫວ່າງອົງການບໍລິຫານການສຶກສາຊັ້ນສູງ ແລະ ສະຖາບັນການສຶກສາຊັ້ນສູງທັງພາກລັດ ແລະ ພາກເອກະຊົນກໍ່ຍັງບໍ່ໄດ້ດີເທົ່າທີ່ຄວນ. ນອກນັ້ນ, ຂີດຄວາມສາມາດໃນການຄຸ້ມຄອງບໍລິຫານ, ການວາງແຜນ, ການນຳພາ ຂອງຜູ່ບໍລິຫານການສຶກສາຊັ້ນສູງຍັງຈຳກັດ. ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ່ບໍລິຫານການສຶກສາຊັ້ນສູງ ແລະ ຄູອາຈານໃນສະຖາບັນການສຶກສາຊັ້ນສູງ ແມ່ນມີຄວາມຈຳເປັນ ເພື່ອສົ່ງເສີມຄວາມເປັນເຈົ້າຕົນເອງ ຂອງສະຖາບັນການສຶກສາຊັ້ນສູງ ໂດຍສະເພາະໃນລະດັບມະຫາວິທະຍາໄລ.

ການເກັບກຳສະຖິຕິ, ຂໍ້ມູນຂ່າວສານ ແລະ ການລາຍງານປະຈຳປີຍັງບໍ່ທັນຄົບຖ້ວນ ແລະ ສາມາດນຳໃຊ້ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນພັດທະນາການສຶກສາຊັ້ນສູງ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ພັດທະນາລະບົບຄຸ້ມຄອງຂໍ້ມູນຂ່າວສານການສຶກສາຊັ້ນສູງເພື່ອເກັບກຳສະຖິຕິທາງດ້ານບຸກຄະລາກອນ ລວມທັງຜູ່ບໍລິຫານ, ພະນັກງານ, ຄູ-ອາຈານ, ນັກສຶກສາ, ດ້ານການເງິນພ້ອມທັງສ້າງລະບົບລາຍງານປະຈຳປີໃນຂະແໜງການສຶກສາຊັ້ນສູງ.

ເພື່ອສືບຕໍ່ແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບການສຶກສາຊັ້ນສູງ, ໃນໄລຍະ 5 ປີ ຕໍ່ໜ້າກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມໃຫ້ມີການພັດທະນາ ດັ່ງຕໍ່ໄປນີ້:

## 8.2 ຈຸດປະສົງ ແລະ ຄາດໝາຍ

- **ຈຸດປະສົງ**

1) ສົ່ງເສີມການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບ, ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ສາມາດແຂ່ງຂັນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.
2) ສະໜອງການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຊີ ແລະ ນະວັດຕະກໍາໃຫ້ແກ່ປະເທດຊາດ.
3) ປັບປຸງລະບົບການປົກຄອງ ແລະ ຄຸ້ມຄອງການສຶກສາຊັ້ນສູງ.

- **ຄາດໝາຍ**

1) ຮອດປີ 2020 ໃຫ້ມີນັກສຶກສາທີ່ເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງທັງໝົດ 200,000 ຄົນ ທັງພາກລັດ ແລະ ເອກະຊົນ (ໃນນັ້ນ ຢູ່ 5 ມະຫາວິທະຍາໄລຂອງລັດ ໃຫ້ມີ ຈໍານວນ 45,000 ຄົນ).
2) ອັດຕາສ່ວນແມ່ຍິງເຂົ້າຮຽນໃນການສຶກສາຊັ້ນສູງໃຫ້ໄດ້ 45% ຂອງຈໍານວນນັກຮຽນທັງໝົດຢູ່ສະຖາບັນການສຶກສາຊັ້ນສູງ.
3) ມີຫຼັກສູດວິຊາສະເພາະທີ່ສອນພາສາຕ່າງປະເທດ 5 ຫຼັກສູດ.
4) ເປີເຊັນຜູ້ຮຽນຈົບການສຶກສາຊັ້ນສູງມີວຽກເຮັດງານທໍາ 85%.
5) ສ້າງມະຫາວິທະຍາໄລເຕັກໂນໂລຊີ 1 ແຫ່ງ ແລະ ມະຫາວິທະຍາໄລເອກະຊົນ 1 ແຫ່ງ.
6) ຍົກລະດັບຄູອາຈານສອນໃນແຕ່ລະວິຊາໃຫ້ໄດ້ສັດສ່ວນ 1:6:3.
7) ທຸກສະຖາບັນການສຶກສາຊັ້ນສູງ ມີໜ່ວຍງານປະກັນຄຸນນະພາບ ແລະ ໄດ້ຈັດຕັ້ງການປະເມີນພາຍໃນ ແລະ ພາຍນອກ.
8) ມີນິຕິກໍາເພື່ອຄຸ້ມຄອງການສຶກສາຊັ້ນສູງຄົບຊຸດ.
9) ມີຜົນງານການຄົ້ນຄວ້າວິທະຍາສາດ ພິມເຜີຍແຜ່ໃນວາລະສານພາຍໃນ ແລະ ຕ່າງປະເທດ.

## 8.3 ຍຸດທະສາດ

ມີ 6 ຍຸດທະສາດທີ່ຈະໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸຈຸດປະສົງ ແລະ ຄາດໝາຍ ດັ່ງລາຍລະອຽດລຸ່ມນີ້:

### 8.3.1 ຍຸດທະສາດທີ 1. ພັດທະນາການສຶກສາຊັ້ນສູງໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

- **ຈຸດປະສົງ**:

- ເພື່ອສົ່ງເສີມການເຂົ້າເຖິງ ການສຶກສາຊັ້ນສູງຢ່າງເປັນທໍາ
- ການປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງ ຂອງການສຶກສາຊັ້ນສູງ.

- **ວຽກຈຸດສຸມ**:

1. ກໍ່ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງຂອງສະຖາບັນການສຶກສາຊັ້ນສູງທີ່ເປັນບູລິມະສິດຂອງຂະແໜງການ ໂດຍສະເພາະມະຫາວິທະຍາໄລສະຫວັນນະເຂດ ແລະ ມະຫາວິທະຍາໄລເຕັກໂນໂລຊີ.
2. ທົບທວນຄືນ ແລະ ປະຕິບັດນະໂຍບາຍການຂະຫຍາຍໂອກາດເຂົ້າເຖິງການສຶກສາຊັ້ນສູງໂດຍສະເພາະນັກຮຽນເກັ່ງທີ່ດ້ອຍໂອກາດ, ເພດຍິງ, ຊົນເຜົ່າ ແລະ ຜູ້ທຸກຍາກ ດ້ວຍການສະໜອງທຶນການສຶກສາ ແລະ ຄົ້ນຄວ້າກ່ຽວກັບການສ້າງລະບົບການກູ້ຢືມທຶນການສຶກສາ.
3. ສະຖາບັນການສຶກສາຊັ້ນສູງທຸກແຫ່ງສ້າງຫ້ອງການໃຫ້ຄໍາປຶກສາທາງດ້ານການປະກອບອາຊີບ
4. ເພີ່ມອັດຕາເຂົ້າຮຽນ ແລະ ອັດຕາການຮຽນຈົບຂອງນັກສຶກສາໃນຂະແໜງບູລິມະສິດເຊັ່ນ: ວິສະວິກໍາສາດ, ວິທະຍາສາດ, ວິຊາເຕັກໂນໂລຊີ ແລະ ກະສິກໍາເປັນຕົ້ນ ໂດຍອີງໃສ່ຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ທ້ອງຖິ່ນ.

5. ສົ່ງເສີມການມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ການໃນການພັດທະນາການສຶກສາຊັ້ນສູງ ແລະ ການຄົ້ນຄວ້າວິທະຍາສາດ.
6. ສະຖາບັນການສຶກສາຊັ້ນສູງທຸກແຫ່ງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຶກສາຕິດຕາມນັກສຶກສາທີ່ຮຽນຈົບ ແລະ ການສຳຫຼວດຄວາມພໍໃຈຂອງຜູ້ຈ້າງງານເພື່ອເປັນບ່ອນອີງໃນການວາງແຜນປັບປຸງປະສິດທິພາບ ແລະ ປະສິດທິຜົນຂອງການກໍ່ສ້າງ.
7. ສຳຫຼວດຕະຫຼາດແຮງງານ ເພື່ອສະໜອງການວາງແຜນຂອງການສຶກສາຊັ້ນສູງໂດຍການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ.
8. ດັດສົມກະແສການເຂົ້າຮຽນຂອງນັກຮຽນ-ນັກສຶກສາ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກັບທ່າອ່ຽງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງກັບສາກົນຂອງປະເທດຊາດ.
9. ສ້າງຕັ້ງ ແລະ ພັດທະນາສູນບໍລິການນັກສຶກສາ.

### 8.3.2 ຍຸດທະສາດທີ 2: ການປັບປຸງຄຸນນະພາບການຮຽນ-ການສອນ

➢ **ຈຸດປະສົງ**:

- ການປັບປຸງຄຸນນະພາບການຮຽນ-ການສອນຂອງການສຶກສາຊັ້ນສູງ.

➢ **ວຽກຈຸດສຸມ**:

1. ປັບປຸງມາດຖານການຄັດເລືອກນັກສຶກສາເຂົ້າຮຽນໃຫ້ແທດເໝາະ ເພື່ອໃຫ້ໄດ້ຜູ້ເຂົ້າຮຽນໃນສາຍການສຶກສາຊັ້ນສູງທີ່ມີຄຸນນະພາບ.
2. ປັບປຸງຫຼັກສູດການສຶກສາຊັ້ນໃຫ້ໄປຕາມມາດຕະຖານຫຼັກສູດແຫ່ງຊາດ ແລະ ຂອບວຸດທິການສຶກສາແຫ່ງຊາດ.
3. ສະຖາບັນການສຶກສາຊັ້ນສູງທຸກແຫ່ງ ທົບທວນຄືນ ແລະ ຍົກລະດັບຫຼັກສູດ ແລະ ສື່ການຮຽນ-ການສອນຮ່ວມກັບຜູ້ຈ້າງງານ ເພື່ອໃຫ້ສອດຄ່ອງກັບມາດຕະຖານຫຼັກສູດແຫ່ງຊາດ ແລະ ຂອບວຸດທິການສຶກສາແຫ່ງຊາດ ແລະ ຄວາມຕ້ອງການຂອງຜູ້ຈ້າງງານ.
4. ສະໜອງ ແລະ ປັບປຸງສິ່ງອຳນວຍຄວາມສະດວກໃຫ້ຂະແໜງການທີ່ເປັນບູລິມະສິດ (ສ້າງຫ້ອງສະມຸດເອເລັກໂຕຣນິກ, ແຫຼ່ງຂໍ້ມູນທາງອິນເຕີເນັດ, ຫ້ອງທົດລອງ ແລະ ຫ້ອງປະຕິບັດງານສຳລັບວິຊາກະສິກຳ ແລະ ວິທະຍາສາດ, ເທັກໂນໂລຊີ, ວິສາວະກຳ ແລະ ຄະນິດສາດ (STEM).
5. ສ້າງສູນແຫ່ງຄວາມເປັນເລີດ ສຳລັບຂະແໜງການບູລິມະສິດ ຢູ່ສະຖາບັນການສຶກສາຊັ້ນສູງ.
6. ຍົກລະດັບຄວາມຮູ້ ແລະ ເຕັກນິກການສິດສອນໃຫ້ແກ່ຄູ (ລວມທັງ ໄອທີ) ໂດຍຜ່ານການຝຶກອົບຮົມໃນຫ້ອງຮຽນ ແລະ ການຝຶກອົບຮົມທາງໄກ ໂດຍສະເພາະຢູ່ຂະແໜງການບູລິມະສິດ.
7. ພັດທະນາກົນໄກການຕິດຕາມ ແລະ ການປະເມີນຜົນການຮຽນຂອງນັກຮຽນ.
8. ປັບປຸງຫຼັກສູດການຮຽນ-ການສອນ ເພື່ອເຮັດໃຫ້ຜູ້ຮຽນຈົບມີທັກສະ ແລະ ຄວາມຮູ້ຕາມທີ່ຜູ້ປະກອບການ ແລະ ພາກສ່ວນອຸດສາຫະກຳມີຄວາມຕ້ອງການ. ພ້ອມນັ້ນມີຄວາມຮູ້ດ້ານການບໍລິຫານ, ການປະກອບການ, ມີຄວາມເປັນຜູ້ນຳ ແລະ ມີຄວາມຮູ້ດ້ານພາສາຕ່າງປະເທດຕື່ມ.
9. ນຳໃຊ້ ICT ເພື່ອຍົກສູງຄຸນນະພາບການຮຽນ-ການສອນ.

### 8.3.3 ຍຸດທະສາດ 3: ສະໜັບສະໜູນການຄົ້ນຄວ້າວິທະຍາສາດ, ການພັດທະນາເຕັກໂນໂລຍີ ແລະ ການບໍລິການທາງດ້ານວິຊາການ ໃຫ້ສອດຄ່ອງກັບຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ

➢ **ຈຸດປະສົງ**:

- ເພີ່ມຄວາມສາມາດ ໃນການຄົ້ນຄວ້າວິທະຍາສາດໃຫ້ມີຄຸນນະພາບ, ສ້າງນະວັດຕະກຳທາງດ້ານເຕັກໂນໂລຊີ ແລະ ການບໍລິການທາງດ້ານວິຊາການ.

- **ວຽກຈຸດສຸມ:**

1. ຈັດຝຶກອົບຮົມວິທີການວິໄຈ ແລະ ພິມເຜີຍແຜ່ຜົນການວິໄຈສຳລັບນັກຄົ້ນຄວ້າວິໄຈຢູ່ໃນສະຖາບັນການສຶກສາຊັ້ນສູງ.
2. ນຳສະເໜີຕໍ່ລັດຖະບານ ພິຈາລະນາກ່ຽວກັບນະໂຍບາຍ ແລະ ຍຸດທະສາດ ສຳລັບການຄົ້ນຄວ້າວິທະຍາສາດ ແລະ ການຄຸ້ມຄອງການຄົ້ນຄວ້າວິທະຍາສາດ.
3. ຊຸກຍູ້ສະຖາບັນການສຶກສາຊັ້ນສູງທຸກແຫ່ງໄດ້ສ້າງຕັ້ງສູນວິໄຈ ແລະ ຄົ້ນຄວ້າວິທະຍາສາດ.
4. ຮ່ວມມືກັບພາກສ່ວນອຸດສະຫະກຳໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໂດຍນຳໃຊ້ຮູບແບບ ການຮ່ວມມືພາກລັດ-ເອກະຊົນ (PPPs) ແລະ ສົ່ງເສີມການສ້າງສູນບົ່ມເພາະທາງດ້ານທຸລະກິດ.
5. ເພີ່ມງົບປະມານຈາກລັດຖະບານ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ ສຳລັບການຄົ້ນຄວ້າວິທິຍາສາດ, ເທັກໂນໂລຊີ, ແລະ ນະວັດຕະກຳ.
6. ສົ່ງເສີມການເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດລົງໃນວາລະສານພາຍໃນ ແລະ ຕ່າງປະເທດ.
7. ສະໜັບສະໜູນການໃຫ້ບໍລິການທາງດ້ານເຕັກນິກວິຊາການໃຫ້ແກ່ສັງຄົມ ໂດຍອີງຕາມຜົນການວິໄຈ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນພັດທະນາເສດຖະກິດ-ສັງຄົມ.
8. ທົບທວນຄືນລະບຽບຕ່າງໆເພື່ອກຳນົດ ແລະ ໃຫ້ຂໍ້ສະເໜີແນະຕ່າງໆ ໃນການຫຼຸດຜ່ອນອຸປະສັກໃຫ້ການຄົ້ນຄວ້າວິໄຈ.

### 8.3.4 ຍຸດທະສາດທີ 4: ປັບປຸງລະບົບການປະກັນຄຸນນະພາບຂອງການສຶກສາຊັ້ນສູງ

- **ຈຸດປະສົງ:**
  - ສ້າງ ແລະ ປັບປຸງລະບົບປະກັນຄຸນນະພາບການສຶກສາຊັ້ນສູງ.
- **ວຽກຈຸດສຸມ:**

1. ສະຖາບັນການສຶກສາຊັ້ນສູງ ສ້າງຕັ້ງໜ່ວຍງານປະກັນຄຸນນະພາບ ແລະ ຈັດການປະເມີນພາຍໃນ.
2. ສ້າງເຄື່ອງມືໃນການປະກັນຄຸນນະພາບຄົບຊຸດລວມທັງ ການປະກັນຄຸນນະພາບພາຍໃນ ແລະ ພາຍນອກ.
3. ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນປະກັນຄຸນນະພາບໃນສາຍການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ.
4. ສ້າງຕັ້ງສະພາຮັບຮອງການປະກັນຄຸນນະພາບໃນສາຍການສຶກສາຊັ້ນສູງ.
5. ສ້າງຕັ້ງສະພາສາຂາວິຊາສະເພາະ ເພື່ອຄົ້ນຄວ້າ ແລະ ປະເມີນ ມາດຕະຖານຂອງສາຂາວິຊາຮຽນທີ່ເປັນບູລິມະສິດ.

### 8.3.5 ຍຸດທະສາດທີ 5: ປັບປຸງການປົກຄອງ ແລະ ຄຸ້ມຄອງ ການສຶກສາຊັ້ນສູງ

- **ຈຸດປະສົງ:**
  - ສ້າງລະບົບການປົກຄອງ ແລະ ຄຸ້ມຄອງທີ່ດີຂອງໃນການສຶກສາຊັ້ນສູງ.
  - ສະໜັບສະໜູນການສ້າງລະບົບຂໍ້ມູນຂ່າວສານ ຢູ່ໃນກົມການສຶກສາຊັ້ນສູງ ແລະ ສະຖາບັນການສຶກສາຊັ້ນສູງທຸກແຫ່ງ ໃຫ້ມີລະບົບຂໍ້ມູນຂ່າວສານ ເພື່ອເປັນບ່ອນອີງໃນການ ຕັດສິນໃຈ ແລະ ການວາງແຜນ.
  - ເພີ່ມງົບປະມານຈາກພາກລັດ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານໃຫ້ແກ່ສະຖາບັນການສຶກສາຊັ້ນສູງ.
- **ວຽກຈຸດສຸມ:**

1. ທົບທວນຄືນລະບົບການໃຊ້ຈ່າຍເງິນ ແລະ ການລົງທຶນໃນການສຶກສາຊັ້ນສູງ ພ້ອມທັງພັດທະນານິຕິກຳທີ່ກ່ຽວຂ້ອງໃຫ້ສອດຄ່ອງ.

2. ປັບປຸງ ແລະ ຮັບຮອງນິຕິກຳກ່ຽວກັບ ການປົກຄອງໃນສາຍການສຶກສາຊັ້ນສູງ ເພື່ອສົ່ງເສີມຄວາມເປັນເຈົ້າຕົນເອງຂອງສະຖາບັນການສຶກສາຊັ້ນສູງ ທາງດ້ານວິຊາການ, ການຄົ້ນຄວ້າວິທະຍາສາດ, ການເງິນ, ການສັບຊ້ອນພະນັກງານ ແລະ ການຮ່ວມມືກັບຕ່າງປະເທດ.
3. ສ້າງລະບຽບການຄຸ້ມຄອງນັກສຶກສາທັງພາຍໃນ ແລະ ພາຍນອກ.
4. ສະຖາບັນການສຶກສາຊັ້ນສູງທຸກແຫ່ງ ທົບທວນຄືນ ແລະ ຈັດຕັ້ງປະຕິບັດແຜນພັດທະນາຊັບພະຍາກອນມະນຸດ ແລະ ວາງແຜນຍົກລະດັບຄູ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງ ກັບຄວາມຕ້ອງການຕາມຕຳແໜ່ງງານ
5. ພັດທະນາລະບົບການຄຸ້ມຄອງຂໍ້ມູນຂ່າວສານ ໃນສາຍການສຶກສາຊັ້ນສູງ ແລະ ນຳໃຊ້ໄອຊີທີເຂົ້າໃນການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການຮຽນທາງໄກ ແລະ ການລົງທະບຽນຂອງນັກສຶກສາ.

#### 8.3.6 ຍຸດທະສາດທີ 6: ການເພີ່ມຂຶ້ນການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ

➢ **ຈຸດປະສົງ**:

- ສະໜັບສະໜູນການຮ່ວມມືພາຍໃນ ແລະ ຕ່າງປະເທດເພື່ອປັບປຸງຜົນການຮຽນ-ການສອນ ແລະ ສ້າງໃຫ້ການສຶກສາຊັ້ນສູງໄດ້ເຮັດວຽກເພື່ອສັງຄົມ.

➢ **ວຽກຈຸດສຸມ**:

1. ສະໜັບສະໜູນການແລກປ່ຽນດ້ານວິຊາການ, ແລກປ່ຽນຄູ, ນັກຮຽນ ເພື່ອສົ່ງເສີມການເຊື່ອມໂຍງກັບພາກພື້ນ ແລະ ສາກົນດ້ານການສຶກສາຊັ້ນສູງ.
2. ຮ່ວມມືລະຫວ່າງສະຖາບັນການສຶກສາຊັ້ນສູງພາຍໃນ ແລະ ຮ່ວມມືກັບສະຖາບັນການສຶກສາຊັ້ນສູງຕ່າງປະເທດໃນການພັດທະນາຫຼັກສູດ ແລະ ການໂອນໜ່ວຍກິດ ເພື່ອສ້າງພະລັງແຮງສັງລວມຮ່ວມກັນ ແລະ ປັບປຸງຄຸນນະພາບ ແລະ ຮັບຮູ້ວຸດທິການສຶກສາຊຶ່ງກັນ ແລະ ກັນ.
3. ເພີ່ມການຮ່ວມມືກັບສະຖາບັນການສຶກສາຊັ້ນສູງ ຂອງປະເທດອາຊຽນ ແລະ ປະເທດອື່ນໆ ໃນການສ້າງໂຄງການຄົ້ນຄວ້າວິທະຍາສາດຮ່ວມກັນ.
4. ເຂົ້າຮ່ວມໃນເຄືອຂ່າຍການສຶກສາຊັ້ນສູງ ຂອງພາກພື້ນ ແລະ ສາກົນ ເພື່ອຮ່ວມມືດ້ານການສຶກສາຊັ້ນສູງ ແລະ ການປະກັນຄຸນນະພາບ.

### 8.4 ຄາດຄະເນການເຂົ້າຮຽນ ແລະ ຄວາມຕ້ອງການດ້ານການເງິນ

**ຕາຕະລາງ 33: ຄາດຄະເນການເຂົ້າຮຽນໃນມະຫາວິທະຍາໄລ 4 ແຫ່ງ**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ລວມຈຳນວນນັກຮຽນເຂົ້າໃໝ່ | 9,000 | 10,000 | 11,000 | 12,000 | 12,500 |
| ລວມຈຳນວນນັກຮຽນທັງໝົດ (ສະເພາະ 5 ມະຫາວິທະຍາໄລ) | 36,000 | 38,000 | 39,000 | 42,000 | 45,000 |

**ຕາຕະລາງ 34: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບມະຫາວິທະຍາໄລ (ລ້ານກີບ)**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ເງິນບໍລິຫານໂຮງຮຽນ | 19,765 | 20,879 | 21,246 | 23,580 | 25,280 |
| ເບ້ຍລ້ຽງ | 17,250 | 18,221 | 18,542 | 20,579 | 22,063 |
| ງົບປະມານຝຶກອົບຮົມ ແລະ ຍົກລະດັບຄູ | 2,886 | 2,866 | 2,752 | 2,891 | 2,942 |
| ງົບປະມານສຳລັບອຸປະກອນຮັບໃຊ້ການຮຽນ-ການສອນ | 20,000 | 20,000 | 20,000 | 20,000 | 20,000 |
| ງົບປະມານສຳລັບການຄົ້ນຄວ້າວິໄຈ | 5,000 | 5,000 | 5,000 | 5,000 | 5,000 |

| | | | | | |
|---|---|---|---|---|---|
| **ລວມບໍລິຫານ** | **64,901** | **66,966** | **67,539** | **72,049** | **75,285** |
| ການກໍ່ສ້າງ ແລະ ສ້ອມແປງຫ້ອງຮຽນ | 4,058 | 6,855 | 2,985 | 13,671 | 10,472 |
| ການກໍ່ສ້າງຫ້ອງທົດລອງ | 16,000 | 16,000 | 16,000 | 16,000 | 16,000 |
| ການສ້າງຕັ້ງມະຫາວິທະຍາໄລເທັກໂນໂລຊີ | - | 21,410 | 21,410 | 21,410 | 21,410 |
| ການກໍ່ສ້າງມະຫາວິທະຍາໄລສະຫວັນນະເຂດ | 25,000 | 50,000 | 50,000 | 50,000 | 50,000 |
| ການປັບປຸງມະຫາວິທະຍາໄລສຸພານຸວົງ | - | 5,000 | 5,000 | 5,000 | 5,000 |
| ການສ້າງຕັ້ງສູນ SEAMEO | - | 15,000 | 10,000 | 10,000 | 5,000 |
| **ລວມລົງທຶນ** | **45,058** | **114,265** | **105,395** | **116,081** | **107,882** |
| **ລວມ** | **109,959** | **181,230** | **172,934** | **188,130** | **183,166** |

## 9. ການບໍລິຫານ ແລະ ຄຸ້ມຄອງການສຶກສາ

### 9.1 ສະພາບລວມ:

ກະຊວງສຶກສາທິການ ແລະ ກິລາ ໄດ້ມີການປະຕິຮູບລະບົບການບໍລິຫານ ແລະ ຄຸ້ມຄອງຂະແໜງການ ເພື່ອແນໃສ່ປັບປຸງປະສິດທິຜົນໃນການບໍລິຫານ ແລະ ຄຸ້ມຄອງໃຫ້ໄດ້ດີກວ່າເກົ່າ, ພ້ອມທັງໄດ້ມີນະໂຍບາຍການແບ່ງຂັ້ນຄຸ້ມຄອງໂດຍອີງໃສ່ນະໂຍບາຍ 3 ສ້າງ, ໄດ້ປັບປຸງລະບົບການຄຸ້ມຄອງ ແລະ ບໍລິຫານຂໍ້ມູນດ້ານການສຶກສາ, ຂໍ້ມູນບຸກຄະລາກອນ ແລະ ຂໍ້ມູນດ້ານການເງິນ. ໄດ້ປັບປຸງກົງຈັກການຈັດຕັ້ງແຕ່ສູນກາງຮອດທ້ອງຖິ່ນ ໃຫ້ມີການສອດຄ່ອງກວ່າເກົ່າ. ນອກຈາກນັ້ນ, ຍັງໄດ້ປັບປຸງຂັ້ນຕອນໃນການຕັດສິນໃຈ ໂດຍຜ່ານການປຶກສາຫາລື ແລະ ການມີສ່ວນຮ່ວມພາຍໃຕ້ກົນໄກ ຄະນະປະສານງານ ແລະ ສະໜັບສະໜູນດ້ານວິຊາການ (Focal Groups). ພາຍໃຕ້ບັນດາໂຄງການທີ່ໄດ້ຮັບງົບປະມານຈາກຜູ້ໃຫ້ທຶນຕ່າງໆ, ຜ່ານມາວຽກງານການບໍລິຫານ ແລະ ຄຸ້ມຄອງໄດ້ມີການປັບປຸງຂຶ້ນຫຼາຍຢ່າງ ແລະ ກໍ່ເຫັນໄດ້ມີການປ່ຽນແປງຫຼາຍຢ່າງເກີດຂຶ້ນ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີບາງປະເດັນບັນຫາທີ່ຈຳເປັນຕ້ອງແກ້ໄຂເພື່ອປັບປຸງລະບົບການຄຸ້ມຄອງບໍລິຫານໃຫ້ມີປະສິດທິຜົນ ແລະ ຄວາມຍືນຍົງໃນໄລຍະຍາວ ຂອງຂະແໜງການ.

ໃນປັດຈຸບັນ, ລັດຖະບານມີນະໂຍບາຍວ່າດ້ວຍການແບ່ງຂັ້ນຄຸ້ມຄອງແຕ່ສູນກາງລົງສູ່ທ້ອງຖິ່ນ, ແຕ່ວ່າຂີດຄວາມສາມາດຂອງຂັ້ນທ້ອງຖິ່ນ (ຂັ້ນແຂວງ ແລະ ຂັ້ນເມືອງ) ໃນການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ຕ້ອງໄດ້ຮັບການປັບປຸງຕື່ມເພື່ອໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະແມ່ນທັກສະ ແລະ ຄວາມສາມາດດ້ານວິຊາການຂອງພະນັກງານ. ຕ້ອງໄດ້ມີການຕິດຕາມການຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່ຽວຂ້ອງຂອງລັດຖະບານ ທີ່ມີຈຸດປະສົງເພື່ອປະຕິຮູບລະບົບການວາງແຜນການ, ແຜນງົບປະມານ ແລະ ການຄຸ້ມຄອງບໍລິຫານໃຫ້ໄດ້ດີກວ່າເກົ່າ. ມີຄວາມຈຳເປັນທີ່ຕ້ອງສ້າງຄວາມເຂັ້ມແຂງທາງດ້ານສາຍພົວພັນທາງຍຸດທະສາດລະຫວ່າງບັນດາກົມບໍລິຫານ ແລະ ສະໜັບສະໜູນ ຂອງກະຊວງສຶກສາທິການ ແລະ ກິລາ ເຊັ່ນ: ກົມຈັດຕັ້ງ ແລະ ພະນັກງານ, ກົມແຜນການ, ກົມການເງິນ ແລະ ກົມກວດກາເປັນຕົ້ນ ເພື່ອເຮັດໃຫ້ການວາງແຜນທີ່ອີງໃສ່ສະພາບຕົວຈິງ, ການສ້າງແຜນງົບປະມານທີ່ມີລັກສະນະຍຸດທະສາດ ແລະ ການຕິດຕາມ ມີຄວາມເຊື່ອມໂຍງກັນຕາມທີ່ໄດ້ກຳນົດໄວ້ໃນຂອບນະໂຍບາຍ ຂອງຂອບພັດທະນາຂະແໜງການສຶກສາ. ສາຍພົວພັນທາງຍຸດທະສາດນີ້ຄວນຈະໄດ້ຮັບການປັບປຸງ ໂດຍຜ່ານຄະນະຮັບຜິດຊອບປະສານງານ - ສະໜັບສະໜູນ ວຽກງານແຜນການ, ງົບປະມານ ແລະ ຕິດຕາມ ແລະ ປະເມີນຜົນ ຫຼື ຄະນະຮັບຜິດຊອບປະສານງານ-ສະໜັບສະໜູນວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ.

ໃນປັດຈຸບັນນີ້, ຄວາມສາມາດຂັ້ນສະຖາບັນ ແລະ ພະນັກງານທີ່ຈະດຳເນີນການຕິດຕາມ ການປະຕິບັດວຽກງານຂອງຂະແໜງການ ຕາມທີ່ໄດ້ກຳນົດໄວ້ໃນຂອບປະເມີນຜົນການປະຕິບັດວຽກງານຂອງຂອບພັດທະນາຂະແໜງການສຶກສາແມ່ນບໍ່ພຽງພໍ. ປະສິດທິຜົນຂອງການຄຸ້ມຄອງ ແລະ ການນຳໃຊ້ຊູ ແມ່ນມີຄວາມຈຳເປັນຕ້ອງໄດ້ປັບປຸງໃຫ້ດີຂຶ້ນກວ່າເກົ່າ. ການແບ່ງຄວາມຮັບຜິດຊອບຂັ້ນສະຖາບັນ ແລະ ຄຸນນະພາບຂອງການຝຶກອົບຮົມກ່ຽວກັບການຄຸ້ມຄອງການສຶກສາ ແມ່ນຍັງຢູ່ໃນໄລຍະເລີ່ມຕົ້ນ ແລະ ຈຳເປັນຈະຕ້ອງໄດ້ຍົກລະດັບຂຶ້ນເພື່ອໃຫ້ສາມາດສຳເລັດພາລະໜ້າທີ່ຂອງຕົນໃນການຝຶກອົບຮົມບັນດາຜູ້ບໍລິຫານການສຶກສາຕ່າງໆ. ບໍ່ມີລະບົບທີ່ແນ່ນອນໃນການປະເມີນຜູ້ອຳນວຍການໂຮງຮຽນ

ແລະ ຄູ; ບາງນິຕິກຳທີ່ມີຢູ່ແລ້ວກໍ່ບໍ່ເໝາະສົມ ຫຼື ບໍ່ໄດ້ນຳໄປຈັດຕັ້ງປະຕິບັດເລີຍ. ການຈັດຕັ້ງປະຕິບັດດຳລັດວ່າດ້ວຍລັດຖະກອນຄູຍັງບໍ່ປະກົດຜົນເປັນຈິງ. ຈາກປະເດັນທີ່ກ່າວມານີ້ ຈຶ່ງໃຫ້ເກີດມີບັນຫາທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນໄລຍະ 5 ປີຕໍ່ໜ້າ ເຊັ່ນ:

- ຂີດຄວາມສາມາດຂອງພະນັກງານກ່ຽວກັບການວິໄຈສະພາບການສຶກສາ ແລະ ກິລາ ແລະ ການວາງແຜນການສຶກສາ ແລະ ກິລາຍັງຕໍ່າ.
- ຄວາມສອດຄ່ອງລະຫວ່າງການວາງແຜນ ແລະ ການຂຶ້ນແຜນງົບປະມານຍັງບໍ່ເຊື່ອມໂຍງກັນເທົ່າທີ່ຄວນ ຊຶ່ງສ່ວນໜຶ່ງແມ່ນມາຈາກລະບົບການແບ່ງຂັ້ນຄຸ້ມຄອງພາຍໃນຂະແໜງການຍັງບໍ່ຊັດເຈນ.
- ການວິເຄາະ ແລະ ການກຳນົດຕຳແໜ່ງງານຂອງພະນັກງານໃນບາງພາກສ່ວນຍັງບໍ່ເໝາະສົມ ແລະ ຈະແຈ້ງຈຶ່ງເຮັດໃຫ້ການບັນຈຸ ແລະ ສັບຊ້ອນບໍ່ທັນສອດຄ່ອງກັບການກຳນົດຕຳແໜ່ງງານ ແລະ ມີຂໍ້ຫຍຸ້ງຍາກໃນການຕິດຕາມກວດກາການເຮັດວຽກງານຂອງພະນັກງານ.
- ການບັນຈຸ ແລະ ສັບຊ້ອນຄູ ໃຫ້ແກ່ໂຮງຮຽນຍັງບໍ່ທັນສອດຄ່ອງ ແລະ ຂາດປະສິດທິຜົນ.
- ລະບົບການຕິດຕາມ ປະເມີນຜົນຍັງບໍ່ທັນເປັນລະບົບຄົບຊຸດ, ບຸກຄະລາກອນທີ່ເຮັດວຽກຕິດຕາມ-ກວດກາ ແລະ ປະເມີນຜົນຍັງມີຂີດຈຳກັດເຄື່ອງມືຮັບໃຊ້ຕິດຕາມ ກວດກາ ແລະ ປະເມີນຜົນ ຍັງບໍ່ທັນໄດ້ມາດຕະຖານ ແລະ ທັນສະໄໝ, ສິ່ງເອື້ອອຳນວຍຄວາມສະດວກໃຫ້ແກ່ວຽກງານການຕິດຕາມກວດກາ ແລະ ປະເມີນຜົນທຸກຂັ້ນຍັງບໍ່ທັນພຽງພໍ.
- ຕົວຊີ້ບອກທີ່ສຳຄັນ ກ່ຽວກັບຜົນການປະຕິບັດວຽກງານເພື່ອໃຫ້ເປັນບ່ອນອີງໃນການຕິດຕາມຜົນງານຂອງຂະແໜງການຢ່າງເປັນປົກກະຕິຍັງບໍ່ທັນໄດ້ຮັບການພັດທະນາເທື່ອ.
- ການຊ່ວຍເຫຼືອທາງການເພື່ອການພັດທະນາບາງໂຄງການ ບໍ່ສອດຄ່ອງກັບນະໂຍບາຍການພັດທະນາການສຶກສາ ແລະ ກິລາ.
- ການສ້າງແຜນພັດທະນາການສຶກສາ ແລະ ກິລາ ຍັງບໍ່ໄດ້ອີງໃສ່ຫຼັກຖານ ແລະ ຜົນການສຶກສາວິໄຈຢ່າງເປັນລະບົບ
- ຜູ້ອຳນວຍການໂຮງຮຽນ ຍັງບໍ່ສາມາດບໍລິຫານຄຸ້ມຄອງຊັບພະຍາກອນຂອງໂຮງຮຽນໄດ້ດີເທົ່າທີ່ຄວນເພື່ອຍົກລະດັບຜົນການຮຽນໃຫ້ໄດ້ໃນລະດັບສູງສຸດ.
- ການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຂອງຂະແໜງການສຶກສາ ແລະ ກິລາຍັງບໍ່ທັນກວ້າງຂວາງ ແລະ ທົ່ວເຖິງຢ່າງເລິກເຊິ່ງ.

ເພື່ອສືບຕໍ່ພັດທະນາ ແລະ ແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບການບໍລິຫານ ແລະ ຄຸ້ມຄອງວຽກງານສຶກສາ ແລະ ກິລາ, ໃນໄລຍະ 5 ປີ ຕໍ່ໜ້າ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດຈຸດປະສົງ ແລະ ວຽກງານຈຸດສຸມ ດັ່ງຕໍ່ໄປນີ້:

## 9.2 ຈຸດປະສົງ

- ເພື່ອໃຫ້ຂະແໜງການສຶກສາ ແລະ ກິລາ ມີການເກັບກຳ, ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນການ, ການສ້າງແຜນງົບປະມານ ແລະ ມີການຕິດ ຕາມທີ່ເປັນລະບົບ ເພື່ອເຮັດໃຫ້ການນຳໃຊ້ແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດຢ່າງມີປະສິດທິພາບ.
- ເພື່ອເຮັດໃຫ້ກົງຈັກການຈັດຕັ້ງແຕ່ສູນກາງຮອດທ້ອງຖິ່ນ ມີຄວາມສອດຄ່ອງກັບພາລະບົດບາດ, ໜ້າທີ່ ແລະ ສະພາບຄວາມເປັນຈິງຂອງແຕ່ລະພາກສ່ວນ.
- ເພື່ອໃຫ້ຂະແໜງການສຶກສາ ແລະ ກິລາມີຂໍ້ມູນທີ່ເປັນຫຼັກຖານອ້າງອີງ ໃຫ້ແກ່ການສ້າງນະໂຍບາຍຕ່າງໆ.
- ປັບປຸງ ແລະ ພັດທະນາຄວາມຮູ້, ຄວາມສາມາດ ແລະ ປະສົບການດ້ານການຄຸ້ມຄອງບໍລິຫານການສຶກສາທີ່ມີຄຸນນະພາບໃຫ້ຜູ້ບໍລິຫານການສຶກສາທຸກຂັ້ນ.

## 9.3 ຍຸດທະສາດ

ມີ 8 ຍຸດທະສາດ ທີ່ຈະຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸຈຸດປະສົງການພັດທະນາການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ດັ່ງນີ້:

### 9.3.1 ຍຸດທະສາດທີ 1: ປັບປຸງລະບົບການສ້າງແຜນການ ແລະ ແຜນງົບປະມານມີຄວາມສອດຄ່ອງກັນເພື່ອຮັບປະກັນໃຫ້ການນໍາໃຊ້ງົບປະມານມີປະສິດທິພາບ

- **ຈຸດປະສົງ:**
  - ເພື່ອເຮັດໃຫ້ການສ້າງແຜນງົບປະມານຮັບໃຊ້ນະໂຍບາຍໃນການພັດທະນາການສຶກສາ.
- **ວຽກຈຸດສຸມ:**
  1. ພັດທະນາເຄື່ອງມືໃນການສ້າງແຜນການທີ່ມີການຄິດໄລ່ມູນຄ່າໃຫ້ສໍາເລັດ ແລະ ທົດລອງນໍາໃຊ້ເລີ່ມແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.
  2. ສ້າງຄວາມເຂັ້ມແຂງກ່ຽວກັບວຽກງານແຜນການ ແລະ ງົບປະມານ ໃຫ້ແກ່ພະນັກງານທຸກຄົນທີ່ຮັບຜິດ ຊອບວຽກງານວາງແຜນ ແລະ ງົບປະມານຢ່າງໜ້ອຍປີລະຄັ້ງ.
  3. ສ້າງຕັ້ງຄະນະກໍາມະການ ການສ້າງແຜນການ ແລະ ແຜນງົບປະມານ ຢູ່ທຸກຂັ້ນຄຸ້ມຄອງເພື່ອຕິດຕາມ, ກວດກາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນການ ແລະ ງົບປະມານ, ຮັບປະກັນຄວາມກົມກືນກັນຂອງແຜນປະຈໍາປີ ແລະ ການຈັດສັນງົບປະມານ ແລະ ການໃຊ້ຈ່າຍສໍາລັບແຜນ ຊຶ່ງສໍາເລັດໃນປີ 2016 ແລະ ປັບປຸງໄປແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ.
  4. ປັບປຸງກົນໄກ ການຈັດຕັ້ງປະຕິບັດແຜນການ ແລະ ງົບປະມານ ໃຫ້ຖືກຕ້ອງຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່.

### 9.3.2 ຍຸດທະສາດທີ 2: ປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ໂດຍນໍາໃຊ້ ICT ເພື່ອໃຫ້ສອດຄ່ອງກັບ ສະພາບຄວາມເປັນຈິງໃນການພັດທະນາການສຶກສາ ແລະ ກິລາ

- **ຈຸດປະສົງ:**
  - ເພື່ອເຮັດໃຫ້ລະບົບການບໍລິຫານການຄຸ້ມຄອງທັນສະໄໝ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນການພັດທະນາການສຶກສາ ແລະ ກິລາ.
- **ວຽກຈຸດສຸມ:**
  1. ປັບປຸງກົງຈັກການຈັດຕັ້ງ ແລະ ປະກອບບຸກຄະລາກອນບໍລິຫານຂະແໜງການສຶກສາ ແລະ ກິລາ ໃຫ້ສອດຄ່ອງກັບການພັດທະນາການສຶກສາໃນແຕ່ລະໄລຍະ ພ້ອມທັງປັບປຸງພາລະບົດບາດ ແລະ ຄູ່ມືໃນການເຮັດວຽກຂອງແຕ່ລະພາກສ່ວນໃຫ້ເໝາະສົມ ໃຫ້ສໍາເລັດໃນປີ 2016.
  2. ທົບທວນຕໍາແໜ່ງງານຢູ່ຂັ້ນກົມ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງຄືນໃໝ່ໃຫ້ສົມບູນ. ພ້ອມກັນນັ້ນ ກໍ່ກໍານົດຕໍາແໜ່ງງານຂັ້ນໂຮງຮຽນໃຫ້ຮັດກຸມ ໃຫ້ສໍາເລັດໃນປີ 2016.
  3. ປັບປຸງ ແລະ ສ້າງບັນດານິຕິກໍາຕ່າງໆທີ່ຈໍາເປັນ.
  4. ຂະຫຍາຍລະບົບເຄືອຂ່າຍອິນເຕີເນັດ ແລະ ອິນຕຣາເນັດ ເພື່ອເຊື່ອມຕໍ່ກັບບັນດາແຂວງ ແລະ ເມືອງ ເພື່ອໃຫ້ສະດວກໃນການແລກປ່ຽນຂໍ້ມູນ ໃຫ້ສໍາເລັດໃນປີ 2020. ພ້ອມທັງພັດທະນາ ແລະ ປັບປຸງລະບົບຊອບແວ ແລະ ຮາດແວຮັບໃຊ້ການຄຸ້ມຄອງບໍລິຫານແບບເອເລັກໂຕນິກທີ່ເປັນລະບົບໃໝ່ ແລະ ປັບປຸງລະບົບເກົ່າທີ່ມີຢູ່ແລ້ວເຊັ່ນ: EMIS, PMIS, FMIS, TMIS ໃຫ້ລວມສູນ.
  5. ສ້າງຂີດຄວາມສາມາດໃຫ້ພະນັກງານວິຊາການ ICT ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

**9.3.3 ຍຸດທະສາດທີ 3: ປັບປຸງລະບົບການຄຸ້ມຄອງ, ການນຳໃຊ້ຄູ ແລະ ບຸກຄະລາກອນສຶກສາ ແລະ ກິລາໃນແຕ່ລະຂັ້ນ ໃຫ້ມີປະສິດທິພາບ**

➢ **ຈຸດປະສົງ:**

- ເພື່ອເຮັດໃຫ້ລະບົບການຄຸ້ມຄອງ, ການນຳໃຊ້ຄູ ແລະ ບຸກຄະລະກອນມີປະສິດທິພາບ ແລະ ຍືນຍົງ.
- ເພື່ອເຮັດໃຫ້ການບັນຈຸ ແລະ ສັບຊ້ອນລັດຖະກອນບໍລິຫານໃຫ້ສອດຄ່ອງກັບການກຳນົດຕຳແໜ່ງງານ ແລະ ໃຫ້ຖືກຕ້ອງຕາມຄວາມຕ້ອງການຂອງອົງການຈັດຕັ້ງ.

➢ **ວຽກຈຸດສຸມ:**

1. ປັບປຸງລະບົບການບັນຈຸ, ສັບຊ້ອນ ແລະ ນຳໃຊ້ບຸກຄະລາກອນບໍລິຫານການສຶກສາ ແລະ ກິລາ ແລະ ລັດຖະກອນຄູຕາມຕຳແໜ່ງງານທີ່ກຳນົດໄວ້ໃຫ້ພຽງພໍ ໃຫ້ສຳເລັດໃນປີ 2017.
2. ພັດທະນາ, ປັບປຸງ ແລະ ນຳໃຊ້ລະບົບ PMIS ໃນການຕິດຕາມ ແລະ ຄຸ້ມຄອງລັດຖະກອນສຶກສາແຕ່ສູນກາງຮອດທ້ອງຖິ່ນ ໃຫ້ສຳເລັດພາຍໃນປີ 2016.
3. ສ້າງ ແລະ ພັດທະນາລະບົບຄຸ້ມຄອງຫ້ອງການແບບເອເລັກໂຕຣນິກພາຍໃນສຳນັກກະຊວງສຶກສາທິການ ແລະ ກິລາໃຫ້ສຳເລັດໃນປີ 2016.

**9.3.4 ຍຸດທະສາດ 4: ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການກວດກາ, ຕິດຕາມ-ປະເມີນຜົນ ແລະ ການປະກັນຄຸນນະພາບທົ່ວຂະແໜງການສຶກສາ ແລະ ກິລາ.**

➢ **ຈຸດປະສົງ:**

- ເພື່ອໃຫ້ມີຂໍ້ມູນອ້າງອີງໃນການກຳນົດນະໂຍບາຍ ແລະ ສ້າງແຜນພັດທະນາການສຶກສາ ແລະ ກິລາ ໃນແຕ່ລະປີ.

➢ **ວຽກຈຸດສຸມ:**

➢ <u>ວຽກງານກວດກາ-ຕິດຕາມ</u>

1. ສ້າງ ແລະ ພັດທະນາລະບົບຕິດຕາມ ແລະ ປະເມີນຜົນໃຫ້ຄົບຊຸດທຸກຂະແໜງການຍ່ອຍ ໃຫ້ສຳເລັດພາຍໃນປີ 2019 ໂດຍອີງໃສ່ກົງຈັກການຈັດຕັ້ງທີ່ໄດ້ປັບປຸງໃໝ່ ແລະ ການກຳນົດພາລະບົດບາດ ແລະ ຕຳແໜ່ງງານຢູ່ໃນແຕ່ລະຂັ້ນແຕ່ສູນກາງຮອດທ້ອງຖິ່ນ.
2. ສ້າງ ແລະ ພັດທະນາເຄື່ອງມື ການຕິດຕາມ ກວດກາ, ປະເມີນຜົນ ແລະ ກວດສອບບັນຊີພາຍໃນໃຫ້ສອດຄ່ອງກັບຄວາມຕ້ອງການໃນເງື່ອນໄຂໃໝ່. ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນທີ່ເຮັດວຽກງານການກວດກາ, ຕິດຕາມ ແລະ ປະເມີນຜົນ ທຸກຂັ້ນໃຫ້ມີຄວາມຮູ້ຄວາມສາມາດເໝາະສົມກັບໜ້າທີ່.
3. ປັບປຸງພາລະບົດບາດ, ສ້າງຕັ້ງກົງຈັກການຈັດຕັ້ງກວດກາໃຫ້ທົ່ວເຖິງຮາກຖານການສຶກສາ ແລະ ກິລາ ໂຄສະນາເຜີຍແຜ່ ນິຕິກຳກ່ຽວກັບວຽກງານຕິດຕາມ ກວດກາ ແລະ ປະເມີນຜົນ, ວຽກງານຕ້ານການສໍ້ລາດບັງຫຼວງໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ.
4. ຕອບສະໜອງງົບປະມານ ແລະ ສິ່ງເອື້ອອຳນວຍຄວາມສະດວກໃຫ້ແກ່ທຸກຂັ້ນ.

➢ <u>ວຽກງານການປະກັນຄຸນນະພາບ:</u>

1. ສ້າງ ແລະ ພັດທະນາລະບົບປະກັນຄຸນນະພາບໃຫ້ຄົບຊຸດທຸກຂະແໜງການຍ່ອຍ ໃຫ້ສຳເລັດພາຍໃນປີ 2018 ໂດຍອີງໃສ່ກົງຈັກການຈັດຕັ້ງທີ່ໄດ້ປັບປຸງໃໝ່ ແລະ ການກຳນົດພາລະບົດບາດ ແລະ ຕຳແໜ່ງງານຢູ່ໃນແຕ່ລະຂັ້ນແຕ່ສູນກາງຮອດທ້ອງຖິ່ນ.
2. ດຳເນີນການປະກັນຄຸນນະພາບໃນສະຖານການສຶກສາຮອດປີ 2020 ໃຫ້ໄດ້ດັ່ງນີ້: ການສຶກສາກ່ອນໄວຮຽນໃຫ້ໄດ້ 1,000 ແຫ່ງ, ຊັ້ນປະຖົມສຶກສາໃຫ້ໄດ້ 4,000 ແຫ່ງ, ຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍໃຫ້ໄດ້ 100%, ການສຶກສາສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງປະເມີນພາຍໃນໃຫ້ໄດ້

100% ແລະ ປະເມີນພາຍນອກໃຫ້ໄດ້ 50% ສະຖາບັນສ້າງຄູປະເມີນພາຍໃນ ແລະ ພາຍນອກໃຫ້ໄດ້ 100% ຂອງວິທະຍາໄລທັງໝົດ.

3. ສ້າງ ແລະ ພັດທະນາເຄື່ອງມືປະກັນຄຸນນະພາບ ໃຫ້ສອດຄ່ອງກັບຄວາມຕ້ອງການໃນເງື່ອນໄຂໃໝ່.
4. ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ທີ່ເຮັດວຽກງານການປະກັນຄຸນນະພາບທຸກຂັ້ນໃຫ້ມີຄວາມຮູ້ຄວາມສາມາດສົມຄູ່ກັບໜ້າທີ່.
5. ປັບປຸງພາລະບົດບາດ, ສ້າງຕັ້ງກົງຈັກການຈັດຕັ້ງປະກັນຄຸນນະພາບ ໃຫ້ທົ່ວເຖິງຮາກຖານການສຶກສາ ແລະ ກິລາ.
6. ໂຄສະນາເຜີຍແຜ່ນິຕິກຳກ່ຽວກັບວຽກງານການປະກັນຄຸນນະພາບໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ.

### 9.3.5 ຍຸດທະສາດ 5: ປັບປຸງ ແລະ ສ້າງຄວາມເຂັ້ມແຂງລະບົບການບໍລິຫານ ແລະ ຄຸ້ມຄອງໂຄງການຊ່ວຍເຫຼືອຈາກຕ່າງປະເທດ.

➢ **ຈຸດປະສົງ:**

- ເພື່ອເຮັດໃຫ້ການຊ່ວຍເຫຼືອຂອງບັນດາໂຄງການມີຄວາມສອດຄ່ອງ ແລະ ຖືກຕ້ອງຕາມແຜນນະໂຍບາຍຂອງການສຶກສາ ແລະ ກິລາ.

➢ **ວຽກຈຸດສຸມ**

1. ພັດທະນາຖານຂໍ້ມູນຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃຫ້ສາມາດນຳໃຊ້ໄດ້ໃຫ້ສຳເລັດໃນປີ 2016.
2. ປັບປຸງກົນໄກໃນການບັນຈຸເອົາໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃໝ່ເຂົ້າໃນແຜນໂດຍຈັດສັນງົບປະມານບໍລິຫານເຂົ້າໃສ່ກ່ອນທີ່ຈະມີການຈັດຕັ້ງປະຕິບັດ ໂດຍອີງໃສ່ບູລິມະສິດຂອງລັດຖະບານ ທີ່ກຳນົດໃນແຜນພັດທະນາການສຶກສາ.
3. ປັບປຸງນິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ.
4. ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນໃນການຄຸ້ມຄອງ ແລະ ຕິດຕາມໂຄງການຊ່ວຍເຫຼືອຈາກຕ່າງປະເທດ.

### 9.3.6 ຍຸດທະສາດ 6: ການຄົ້ນຄວ້າ ແລະ ວິໄຈ ໃນປະເດັນທີ່ເປັນບັນຫາທາງດ້ານນະໂຍບາຍໃນການພັດທະນາວຽກງານສຶກ ແລະ ກິລາ.

➢ **ຈຸດປະສົງ:**

- ເພື່ອໃຫ້ຂະແໜງການສຶກສາ ແລະ ກິລາມີຂໍ້ມູນທີ່ເປັນຫຼັກຖານອ້າງອີງ ໃຫ້ແກ່ການສ້າງນະໂຍບາຍຕ່າງໆ.

➢ **ວຽກຈຸດສຸມ**

1. ພັດທະນາຂີດຄວາມສາມາດຂອງບຸກຄະລາກອນໃນການດຳເນີນການຄົ້ນຄວ້າ-ວິໄຈນະໂຍບາຍການສຶກສາ ແລະ ກິລາ.
2. ພັດທະນາເຄືອຂ່າຍດ້ານການຄົ້ນຄວ້າ-ວິໄຈໃຫ້ກວ້າງຂວາງ, ສ້າງຖານຂໍ້ມູນຂອງການວິໄຈໃຫ້ກວ້າງຂວາງ ແລະ ເລິກເຊິ່ງ.
3. ສ້າງຄວາມເຂັ້ມແຂງໃຫ້ແກ່ສູນວິໄຈການສຶກສາ-ກິລາ ເພື່ອກະກຽມສ້າງເປັນສະຖາບັນຄົ້ນຄວ້າ ແລະ ວິໄຈນະໂຍບາຍການສຶກສາ ແລະ ກິລາ ໃຫ້ສຳເລັດໃນປີ 2017.
4. ດຳເນີນການຄົ້ນຄວ້າ ແລະ ວິໄຈໃນແຕ່ລະປີກ່ຽວກັບບັນຫາທີ່ກ່ຽວຂ້ອງກັບປະເດັນທີ່ກ່ຽວຂ້ອງກັບນະໂຍບາຍ ແລະ ປະເດັນບັນຫາສຳຄັນທີ່ໄດ້ລະບຸໄວ້ໃນແຜນພັດທະນາການສຶກສາ ແລະ ກິລາ 2016-2020.

5. ປັບປຸງພາລະບົດບາດ, ສ້າງຕັ້ງກົງຈັກການຈັດຕັ້ງການວິໄຈການສຶກສາ ແລະ ກິລາ ໃຫ້ທົ່ວເຖິງຮາກຖານການສຶກສາ ແລະ ກິລາ.
6. ຕອບສະໜອງງົບປະມານ ແລະ ສິ່ງເອື້ອອຳນວຍຄວາມສະດວກໃຫ້ແກ່ວຽກງານການຄົ້ນຄວ້າ ແລະ ວິໄຈທຸກຂັ້ນ.

### 9.3.7 ຍຸດທະສາດ 7: ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຝຶກອົບຮົມ ແລະ ຍົກລະດັບຜູ້ບໍລິຫານການສຶກສາແລະກິລາ ເພື່ອໃຫ້ກາຍເປັນຜູ້ບໍລິຫານມືອາຊີບ

➢ **ຈຸດປະສົງ**

- ເພື່ອສ້າງຂີດຄວາມສາມາດໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນໃຫ້ມີຄວາມຮູ້ ແລະ ຄວາມສາມາດທາງດ້ານການວາງແຜນການ, ແຜນງົບປະມານ, ການຕິດຕາມ ແລະ ປະເມີນຜົນ.
- ເພື່ອເຮັດໃຫ້ລະບົບການບໍລິຫານ-ຄຸ້ມຄອງການສຶກສາ ແລະ ກິລາ ມີຄຸນນະພາບ ແລະ ມີປະສິດທິພາບ.

➢ **ວຽກຈຸດສຸມ**

1. ຄົ້ນຄວ້າຫຼັກສູດການຝຶກອົບຮົມໄລຍະສັ້ນສຳລັບຜູ້ບໍລິຫານການສຶກສາ ແລະ ຜູ້ບໍລິຫານສະຖານການສຶກສາໃຫ້ສຳເລັດຢ່າງໜ້ອຍ 5 ຫຼັກສູດ ພາຍໃນປີ 2016.ພ້ອມກັນນັ້ນກໍ່ຄົ້ນຄວ້າຫຼັກສູດໄລຍະຍາວລະດັບປະລິນຍາຕີດ້ານການບໍລິຫານການສຶກສາ ໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນຕ່າງໆ ໃຫ້ທັນໄດ້ເປີດພາຍຫຼັງປີ 2020.
2. ສ້າງຄວາມສາມາດໃຫ້ວິທະຍາກອນ (ຄູຝຶກ) ທີ່ເປັນແກນຫຼັກໃນການຝຶກອົບຮົມໃຫ້ແກ່ຜູ້ບໍລິຫານການສຶກສາໃຫ້ໄດ້ 20 ຄົນ ພາຍໃນປີ 2016.
3. ປັບປຸງຫຼັກສູດບໍລິຫານການສຶກສາໃນສະຖາບັນສ້າງຄູ.
4. ຈັດຕັ້ງການຝຶກອົບຮົມວຽກງານບໍລິຫານໂຮງຮຽນ ໂດຍຖືເອົາການບໍລິຫານທີ່ເນັ້ນໃສ່ໂຮງຮຽນເປັນຫຼັກ (SBM) (ຫຼັກສູດບໍ່ເກີນ 2 ອາທິດ) ໃຫ້ແກ່ຜູ້ອຳນວຍການໂຮງຮຽນສາມັນຢ່າງໜ້ອຍໃຫ້ໄດ້ປີລະ 20% ຂອງຈຳນວນຜູ້ອຳນວຍການສະຖານການສຶກສາແຕ່ລະຊັ້ນການສຶກສາ.
5. ຝຶກອົບຮົມດ້ານການບໍລິຫານ ແລະ ຄຸ້ມຄອງການສຶກສາໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນກະຊວງ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາ ແລະ ກິລາເມືອງຫຼັກສູດບໍ່ເກີນ 3 ເດືອນໃຫ້ໄດ້ປີລະ 3 ຊຸດ , ຊຸດລະ 35 ຄົນ.

### 9.3.8 ຍຸດທະສາດ 8: ສ້າງຄວາມເຂັ້ມແຂງໃຫ້ວຽກງານໂຄສະນາຂ່າວສານ

➢ **ຈຸດປະສົງ**

- ເຮັດໃຫ້ສື່ໂຄສະນາຂ່າວສານການສຶກສາ ເປັນກະບອກສຽງ ແລະ ເຄື່ອງມືອັນແຫຼມຄົມໃນການເຜີຍແຜ່ຜົນງານທາງດ້ານການສຶກສາ ແລະ ກິລາ ພ້ອມທັງຕອບໂຕ້ປະກົດການຫຍໍ້ທໍ້ ຫຼື ຫາງສຽງທີ່ບໍ່ດີຕໍ່ຂົງເຂດສຶກສາ ແລະ ກິລາໃຫ້ກວ້າງຂວາງທົ່ວເຖິງ.
- ໃຫ້ມີນັກວິຊາການຊ່ຽວຊານດ້ານສື່ມວນຊົນຂອງຂະແໜງການສຶກສາ ແລະ ກິລາຢ່າງພຽງພໍ.

➢ **ວຽກຈຸດສຸມ**

1. ສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແລະ ບໍລິຫານໃຫ້ແກ່ວຽກງານໂຄສະນາຂ່າວສານຂອງຂະແໜງສຶກສາ ແລະ ກິລາ ໃຫ້ມີຄວາມກ້າວໜ້າວ່ອງໄວ ທັນສະໄໝ ແລະ ກວ້າງໄກ ຮັບໃຊ້ສັງຄົມຢ່າງທົ່ວເຖິງ.
2. ສ້າງເຄື່ອຂ່າຍໂຄສະນາຂ່າວສານການສຶກສາ ແລະ ກິລາ ຮອບດ້ານປະຈຳບັນດາກົມກອງ, ສະຖາບັນ ແລະ ສູນຕ່າງໆອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ,ຫ້ອງການສຶກສາທິການ ແລະ ກິລາເມືອງ, ສະຖາບັນ, ໂຮງຮຽນ, ສະໂມສອນກິລາໃນຂອບເຂດທົ່ວປະເທດ.

3. ປັບປຸງລາຍການໂທລະພາບສຶກສາ ແລະ ກິລາ, ໜັງສືພິມສຶກສາ-ກິລາລາຍວັນ, ວາລະສານ ແລະ ສິ່ງພິມຕ່າງໆ, ສ້າງຫ້ອງສະຕູດີໂອ້ສຳລັບຈັດລາຍການວິທະຍຸ ແລະ ໂທລະພາບ, ສ້າງເງື່ອນໄຂເພື່ອໃຫ້ມີສະຖານີວິທະຍຸ ແລະ ສະຖານີໂທລະພາບຂອງສຶກສາ-ກິລາເອງ.
4. ສະໜອງສິ່ງເອື້ອອຳນວຍຄວາມສະດວກທີ່ຈຳເປັນຮັບໃຊ້ໃຫ້ແກ່ວຽກງານໂຄສະນາຂ່າວສານ.
5. ເສີມຂະຫຍາຍການພົວພັນຮ່ວມມືກັບພາຍໃນ ແລະ ສາກົນໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອຍາດແຍ່ງການຊ່ວຍເຫຼືອ.

### 9.4 ຄາດຄະເນຄວາມຕ້ອງການດ້ານການເງິນ

ເພື່ອຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ຍຸດທະສາດຕ່າງໆໃນການປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ, ຄາດຄະເນຄວາມຕ້ອງການດ້ານງົບປະມານ ແຕ່ນີ້ຮອດປີ 2020 ມີດັ່ງນີ້:

**ຕາຕະລາງ 35: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບການບໍລິຫານ ແລະ ຄຸ້ມຄອງການສຶກສາ (ລ້ານກີບ)**

| | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ງົບປະມານບໍລິຫານປົກກະຕິ | 85,333 | 86,500 | 87,667 | 88,833 | 90,000 |
| ງົບປະມານສຳລັບການເກັບກຳຂໍ້ມູນ | 31,782 | 31,782 | 31,782 | 31,782 | 31,782 |
| ງົບປະມານສຳລັບວຽກງານນິເທດ | 30,720 | 30,720 | 30,720 | 30,720 | 30,720 |
| ງົບປະມານສຳລັບການຕິດຕາມ ແລະ ປະເມີນ | 31,782 | 31,782 | 31,782 | 31,782 | 31,782 |
| ງົບປະມານສຳລັບການຈັດຊື້ໃໝ່ | 12,000 | 12,000 | 12,000 | 12,000 | 12,000 |
| ງົບປະມານສຳລັບການຝຶກອົບຮົມຜູ້ບໍລິຫານ | 10,923 | 11,072 | 11,221 | 11,371 | 11,520 |
| **ລວມບໍລິຫານ** | **202,541** | **203,857** | **205,173** | **206,489** | **207,805** |
| ການກໍ່ສ້າງ ແລະ ສ້ອມແປງຫ້ອງການ | 8,460 | 8,460 | 8,460 | 8,460 | 8,460 |
| ການກໍ່ສ້າງຕຶກກະຊວງສຶກສາທິການ ແລະ ກິລາ | 2,500 | 15,000 | 15,000 | 15,000 | 15,000 |
| ການກໍ່ສ້າງສະຖາບັນພັດທະນາການບໍລິຫານການສຶກສາ | 0 | 10,000 | 10,000 | 10,000 | 10,000 |
| **ລວມລົງທຶນ** | **10,960** | **33,460** | **33,460** | **33,460** | **33,460** |
| **ລວມ** | **213,501** | **237,317** | **238,633** | **239,949** | **241,265** |

## 10. ກິລາ-ກາຍຍະກຳ

### 10.1 ສະພາບລວມ

ກິລາ-ກາຍຍະກຳລາວໄດ້ມີການຂະຫຍາຍຕົວ ຢ່າງກວ້າງຂວາງແຕ່ສູນກາງລົງຮອດທ້ອງຖິ່ນ, ໄດ້ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ, ແກ້ໄຂຄວາມທຸກຍາກ, ພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ. ກິລາ-ກາຍຍະກຳໄດ້ປະກອບສ່ວນເຂົ້າໃນການເຊື່ອມໂຍງລະຫວ່າງປະເທດເຮົາ ກັບບັນດາປະເທດເພື່ອນມິດສາກົນ, ເຮັດໃຫ້ຖານະບົດບາດຂອງລາວສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ, ມາຮອດປະຈຸບັນ ກິລາ-ກາຍຍະກຳ ໄດ້ຖືກສັບຊ້ອນໃຫ້ເຈື່ອຈ່ານເຂົ້າສູ່ສັງຄົມຕົວຈິງຢ່າງກວ້າງຂວາງໃນທຸກຂົງເຂດ, ທຸກສຳນັກງານອົງການ, ຄຸ້ມບ້ານ, ສະຖານທີ່ຊຸມຊົນລ້ວນແຕ່ມີຂະບວນການຫຼິ້ນກິລາ-ກາຍຍະກຳ ຕາມຄວາມສາມາດຕົວຈິງຂອງແຕ່ລະບ່ອນ, ເວົ້າໄດ້ວ່າ: "ບ່ອນໃດມີຊຸມຊົນບ່ອນນັ້ນມີກິລາ-ກາຍຍະກຳເກີດຂຶ້ນ" ພິເສດ: ຜົນສຳເລັດອັນໃຫຍ່ຫຼວງຂອງປວງຊົນລາວທັງຊາດແມ່ນ ສປປ.ລາວ ເຮົາສາມາດຈັດງານແຂ່ງຂັນມະຫາກຳກິລາ-ກາຍຍະກຳລະດັບອາຊຽນເປັນປະຫວັດສາດເຊັ່ນ: ງານມະຫາກຳກິລາຊີເກມຄັ້ງທີ່ 25 ໃນປີ2009 ແລະ ງານມະຫາກຳກິລາມະຫາວິທະຍາໄລອາຊຽນ ຄັ້ງທີ່ 16 ໃນປີ 2012.

ເຖິງວ່າພາບລວມວຽກງານກິລາ-ກາຍຍະກຳມີການຂະຫຍາຍຕົວກວ້າງຂວ້າງ ແຕ່ການຂະຫຍາຍຕົວດັ່ງກ່າວຍັງບໍ່ທັນເຂົ້າເຖິງທຸກຊຸມຊົນ ແລະ ທ້ອງຖິ່ນ, ກົງຈັກການຈັດຕັ້ງໃນຂະແໜງການກິລາ-ກາຍຍະກຳ ແຕ່ສູນກາງລົງເຖິງທ້ອງຖິ່ນບໍ່ທັນເຂັ້ມແຂງ; ມາດຕະຖານການພັດທະນາກິລາ-ກາຍຍະກຳລາວຍັງບໍ່ທັນສົມບູນ; ບຸກຄະລາກອນດ້ານກິລາ-

ກາຍຍະກຳ ຍັງຈຳກັດທາງດ້ານປະລິມານ ແລະ ຄຸນນະພາບ ແລະ ການນຳໃຊ້ພື້ນຖານໂຄງລ່າງຍັງບໍ່ມີປະສິດທິຜົນສູງ, ອຸປະກອນກິລາ-ກາຍຍະກຳ ຍັງຈຳກັດບໍ່ທັນຕອບສະໜອງໄດ້ເທົ່າທີ່ຄວນ.

### 10.2 ຈຸດປະສົງ

- ພັດທະນາກິລາ-ກາຍຍະກຳ ເພື່ອເຮັດໃຫ້ພົນລະເມືອງລາວມີສຸຂະພາບເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈ, ມີຄວາມເສຍສະຫຼະ, ອົດທົນ ແລະ ມີນໍ້າໃຈກິລາ-ກາຍຍະກຳທີ່ຜ່ອງໃສ ກຽມພ້ອມປົກປັກຮັກສາ ແລະ ພັດທະນາປະເທດຊາດ.
- ກິລາ-ກາຍຍະກຳໄດ້ຮັບການພັດທະນາຢ່າງແຂງແຮງ, ມີຄຸນນະພາບ, ມີການຂະຫຍາຍຕົວຢ່າງກວ້າງຂວາງແຕ່ສູນກາງລົງຮອດທ້ອງຖິ່ນ, ສາມາດເຊື່ອມໂຍງອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

### 10.3 ຄາດໝາຍ

- **ກິລາ-ກາຍຍະກຳມວນຊົນ**

1) ສົ່ງເສີມມວນຊົນທຸກເພດ, ທຸກໄວໃນສັງຄົມເຂົ້າຮ່ວມການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍຍະກຳປົກກະຕິໃຫ້ໄດ້ 30% ຂອງປະຊາກອນ ໃນປີ 2020.
2) ສົ່ງເສີມການເຄື່ອນໄຫວກິລາ-ກາຍຍະກຳ ຂອງສະໂມສອນໃນລະດັບບ້ານ/ກຸ່ມບ້ານ, ເມືອງໃຫ້ໄດ້ 30% ຂອງບ້ານ/ກຸ່ມບ້ານ ແລະ ເມືອງ ໃນປີ 2020.
3) ສົ່ງເສີມໃຫ້ມີຄອບຄົວໄດ້ຫຼິ້ນກິລາ-ກາຍຍະກຳ 10% ຂອງຄອບຄົວໃນປີ 2020 ໃນຂອບເຂດທົ່ວປະເທດ.
4) ສົ່ງເສີມຄົນພິການໃຫ້ອອກກຳລັງກາຍ ແລະ ເຂົ້າຮ່ວມຂະບວນການແຂ່ງຂັນກິລາ-ກາຍຍະກຳຄົນພິການແຕ່ສູນກາງຮອດທ້ອງຖິ່ນ ໃຫ້ໄດ້ 10% ຂອງຈຳນວນຄົນພິການທັງໝົດຮອດປີ 2020.
5) ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງ, ການເຄື່ອນໄຫວວຽກງານກິລາກາຍຍະກຳມວນຊົນ ແລະ ສະໜອງນິຕິກຳໃຫ້ບັນດາແຂວງ, ເມືອງ ແລະ ບ້ານ.
6) ບຳລຸງຍົກລະດັບວິຊາການຂະແໜງກິລາມວນຊົນ ແລະ ອົບຮົມຄູຝຶກ ກຳມະການຕັດສິນລະດັບຊຸມຊົນ, ບ້ານ, ເມືອງ ແລະ ແຂວງ.
7) ສົ່ງເສີມດ້ານອຸປະກອນກິລາຮັບໃຊ້ການຈັດກິດຈະກຳຫັດກາຍ, ການອອກກຳລັງກາຍຂອງມວນຊົນ ແລະ ການແຂ່ງຂັນກິລາກາຍຍະກຳມວນຊົນ, ຍຸວະຊົນ ຢູ່ຂັ້ນບ້ານ, ເມືອງ ແລະ ແຂວງ.

- **ພະລະສຶກສາ, ສິລະປະສຶກສາ ແລະ ກິລາ-ກາຍຍະກຳໃນໂຮງຮຽນ ແລະ ສະຖາບັນການສຶກສາ :**

1) ຈັດຕັ້ງການຮຽນ-ການສອນວິຊາພະລະສຶກສາ ແລະ ວິຊາສິລະປະສຶກສາ ໃຫ້ໄດ້ 90% ຂອງໂຮງຮຽນສາມັນທົ່ວປະເທດ
2) ສະໜອງຄູພະລະສຶກສາ ແລະ ຄູສິລະປະສຶກສາໃຫ້ແກ່ໂຮງຮຽນປະຖົມ, ມັດທະຍົມ, ສະຖາບັນການສຶກສາໂດຍຂັ້ນພື້ນຖານຄື:
   - ສະໜອງຄູພະລະສຶກສາໃຫ້ຊັ້ນປະຖົມຢ່າງໜ້ອຍໃຫ້ໄດ້ 1.752 ຄົນ; ຊັ້ນມັດທະຍົມຢ່າງໜ້ອຍໃຫ້ໄດ້ 2.132 ຄົນ ແລະ ສະຖາບັນການສຶກສາ ຢ່າງໜ້ອຍ 244 ຄົນ.
   - ສະໜອງຄູສິລະປະສຶກສາໃຫ້ຊັ້ນປະຖົມຢ່າງໜ້ອຍໃຫ້ໄດ້ 1.763 ຄົນ; ຊັ້ນມັດທະຍົມຢ່າງໜ້ອຍ 2.683 ຄົນ ແລະ ສະຖາບັນການສຶກສາ 244 ຄົນ.
3) ຈັດຕັ້ງການຮຽນ-ການສອນ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນໂຮງຮຽນມັດທະຍົມສຶກສາຕອນປາຍ, ອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນໃຫ້ໄດ້90% ຂຶ້ນໄປ.
4) ປະກາດ ແລະ ຮັບຮອງໂຮງຮຽນມັດທະຍົມສຶກສາປອດຢາເສບຕິດໃຫ້ໄດ້ 90%, ຊັ້ນປະຖົມສຶກສາໃຫ້ໄດ້ 95%.

5) ຊຸກຍູ້, ສົ່ງເສີມດ້ານວິຊາການໃນການຂະຫຍາຍຫຼັກສູດທ້ອງຖິ່ນໃນຂັ້ນເມືອງໃຫ້ໄດ້ 48.64% ໃນທົ່ວປະເທດ.
6) ເຖິງປີ 2020 ນັກຮຽນຊັ້ນປະຖົມ 70%, ຊັ້ນມັດທະຍົມສຶກສາ 80% ແລະ ນັກສຶກສາໃນສະຖາບັນການສຶກສາຕ່າງໆ 55% ໄດ້ເຄື່ອນໄຫວພະລະສຶກສາ-ກິລາ ແລະ ສິລະປະສຶກສາ.
7) ຈັດງານແຂ່ງຂັນມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດໃຫ້ເປັນປົກກະຕິ 3 ປີຕໍ່ຄັ້ງ
8) ເຂົ້າຮ່ວມແຂ່ງຂັນກິລານັກຮຽນສາມັນອາຊຽນເປັນປົກກະຕິ 1 ຄັ້ງຕໍ່ປີ.

- **ກິລາ-ກາຍຍະກຳສາຍສູງ:**
  - **ການສ້າງບຸກຄະລາກອນດ້ານການກິລາ ແລະ ນັກກິລາ-ກາຍຍະກຳພອນສະຫວັນ**

1) ເຖິງປີ 2020 ຈະສ້າງຄູຝຶກໃຫ້ໄດ້ 650 ຄົນ ໃນນີ້ມີ ຄູຝຶກລະດັບຕົ້ນ 400 ຄົນ, ຄູຝຶກລະຊາດ 150 ຄົນ ແລະ ຄູຝຶກລະດັບສາກົນ 100 ຄົນ, ສ້າງກຳມະການຕັດສິນໃຫ້ໄດ້ 720 ຄົນ, ກຳມະການ ລະດັບເມືອງ 450 ຄົນ, ກຳມະການລະດັບແຂວງ, ນະຄອນຫຼວງ 150 ຄົນ, ກຳມະການ ລະດັບຊາດ 80 ຄົນ ແລະ ກຳມະການລະດັບສາກົນ 40 ຄົນ.
2) ເຖິງປີ 2020 ຈະສູ້ຊົນສ້າງນັກກິລາ-ກາຍຍະກຳທີ່ມີພອນສະຫວັນ ທີ່ມີຄຸນນະພາບແຕ່ລະລຸ້ນອາຍຸໃນທົ່ວປະເທດໃຫ້ໄດ້ຈຳນວນ 1,800-2,200 ຄົນຄື: ນັກກິລາ-ກາຍຍະກຳລຸ້ນ 14 ປີ 600-700 ຄົນ, ລຸ້ນ 16 ປີ 500-600 ຄົນ, ລຸ້ນ 18 ປີ 400-500 ຄົນ ແລະ ລຸ້ນ 20 ປີ 300-400 ຄົນ.

- **ກິລາ-ກາຍຍະກຳເພື່ອການແຂ່ງຂັນພາຍໃນ ແລະ ຕ່າງປະເທດ:**
  - **<u>ການແຂ່ງຂັນພາຍໃນປະເທດ:</u>**

1) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການແຂ່ງຂັນງານມະຫາກຳກິລາແຫ່ງຊາດ, ງານມະຫາກຳກິລາມະຫາວິທະຍາໄລ-ອະຊີວະສຶກສາ ແລະ ງານມະຫາກຳກິລານັກຮຽນຊັ້ນມັດທະຍົມສຶກສາໃຫ້ເປັນປົກກະຕິ 3 ປີ ຕໍ່ຄັ້ງທີ່ໄດ້ກຳນົດໄວ້.
2) ການແຂ່ງຂັນບຸນມະໂຫລານກິລາຄົນພິການໃຫ້ເປັນປົກກະຕິ 3 ປີຕໍ່ຄັ້ງ.

- **<u>ການເຂົ້າຮ່ວມແຂ່ງຂັນຢູ່ຕ່າງປະເທດ:</u>**

1) ລະດັບຊີເກມສູ້ຊົນໃຫ້ໄດ້ໃນລະດັບທີ 6-7 ໃນ 11 ປະເທດ.
2) ລະດັບເອຊຽນເກມສູ້ຊົນໃຫ້ນັກກິລາ-ກາຍຍະກຳຍາດຫຼຽນຄຳໃຫ້ໄດ້ 2-3 ຫຼຽນຄຳ (ໃນ 45 ປະເທດ).
3) ລະດັບໂອແລມປິກເກມສູ້ຊົນໃຫ້ມີສອງປະເພດກິລາ-ກາຍຍະກຳໄດ້ຜ່ານການຄັດເລືອກເຂົ້າຮ່ວມການແຂ່ງຂັນກິລາໂອແລມປິກສາກົນ, ສູ້ຊົນຍາດໃຫ້ມີຫຼຽນທອງ 1-2 ຫຼຽນ.
4) ເຂົ້າຮ່ວມກິລາເສີມສ້າງຄວາມສຳພັນ.

- **ກິລາ-ກາຍຍະກຳອາຊີບ:**

1) ສູ້ຊົນໃຫ້ປະເພດກິລາທີ່ເປັນປາຍແຫຼມກາຍເປັນກິລາ-ກາຍຍະກຳອາຊີບເຊັ່ນ: ກິລາບານເຕະ, ກິລາຕໍ່ສູ້ປ້ອງກັນໂຕ ແລະ ປະເພດກິລາທີ່ມີທ່າແຮງ.

- **ກິລາໂອແລມປິກ**

1) ສ້າງເງື່ອນໄຂໃຫ້ໄດ້ເຂົ້າເປັນຄະນະບໍລິຫານງານໃນຄະນະກຳມະທິການໂອແລມປິກສາກົນ, ອາຊີ ແລະ ສະຫະພັນກິລາສາກົນ.
2) ສ້າງກຳມະການຕັດສິນບາງປະເພດກິລາ ໃຫ້ສາມາດເຂົ້າຮ່ວມໃນການຕັດສິນລະດັບຊີເກມ, ເອຊຽນເກມ ແລະ ໂອແລມປິກເກມ.
3) ຍົກລະດັບຄູຝຶກລາວໃຫ້ເປັນຄູຝຶກລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນຊຶ່ງມີຄວາມສາມາດຮັບໃຊ້ເປັນຄູຝຶກພາຍໃນປະເທດ ແລະ ສົ່ງອອກຕ່າງປະເທດ.
4) ສ້າງ ແລະ ຍົກລະດັບຜູ້ບໍລິຫານກິລາ-ກາຍຍະກຳແຕ່ລະຂັ້ນ ເພື່ອເຊື່ອມໂຍງອາຊຽນ ແລະ ສາກົນ.

## 10.4 ຍຸດທະສາດ

### 10.4.1 ຍຸດທະສາດທີ 1: ສົ່ງເສີມວຽກງານກິລາ-ກາຍຍະກຳມວນຊົນໃຫ້ກວ້າງຂວາງ:

➢ **ວຽກຈຸດສຸມ**

❖ **ກິລາ-ກາຍຍະກຳຂັ້ນພື້ນຖານ**

1. ຈັດຕັ້ງ, ສົ່ງເສີມໜ່ວຍກິລາ-ກາຍຍະກຳຂອງຊຸມຊົນ, ລະດັບບ້ານ, ເມືອງ, ແຂວງ ແລະ ນະຄອນຫຼວງ.
2. ສ້າງໃຫ້ມີສະຖານທີ່ຫຼິ້ນກິລາ-ກາຍຍະກຳ, ສະໜອງອຸປະກອນອອກກຳລັງກາຍໃນຊຸມຊົນ, ລະດັບບ້ານ, ລະດັບເມືອງ, ແຂວງ ແລະ ນະຄອນຫຼວງ. ສະຫງວນ ແລະ ຈັດສັນທີ່ດິນໄວ້ໃຫ້ເປັນສະໜາມສາທາລະນະ ຫຼື ສ້າງເດີ່ນກິລາ-ກາຍຍະກຳ ປະເພດຕ່າງໆ ໃນການເຄື່ອນໄຫວຮັບໃຊ້ການອອກກຳລັງກາຍຂອງມວນຊົນ.
3. ຖືເອົາວຽກກິລາ-ກາຍຍະກຳມວນຊົນ ເປັນພາຫະນະປະກອບສ່ວນເພື່ອປົກປັກຮັກສາສຸຂະພາບຂອງຄົນໃນຊຸມຊົນ, ສ້າງພະນັກງານບໍລິຫານ ວິຊາການເພື່ອຮັບໃຊ້ກິລາ-ກາຍຍະກຳ ຂັ້ນພື້ນຖານໃຫ້ສູນກາງ ແລະ ທ້ອງຖິ່ນ.
4. ຫັນເອົາການໂຄສະນາປະຊາສຳພັນ, ເຜີຍແຜ່ຄວາມໝາຍຄວາມສຳຄັນຂອງວຽກງານກິລາ-ກາຍຍະກຳມວນຊົນ.
5. ຊຸກຍູ້ໃຫ້ມີການອອກກຳລັງກາຍໃນບັນດາສຳນັກງານ, ອົງການ, ບໍລິສັດ, ໂຮງຈັກ, ໂຮງງານເພື່ອແນໃສ່ຜ່ອນຄາຍ, ປົກປັກຮັກສາສຸຂະພາບ ຂອງບັນດາພະນັກງານ ແລະ ກຳມະກອນຜູ້ອອກແຮງງານ.
6. ສົ່ງເສີມໃຫ້ບັນດາສຳນັກງານ, ອົງການ, ແຂວງ, ນະຄອນ, ເມືອງ, ບ້ານ, ບໍລິສັດ, ໂຮງຈັກ, ໂຮງງານໄດ້ມີການເຄື່ອນໄຫວແຂ່ງຂັນກິລາ-ກາຍຍະກຳ ແລະ ພັດປ່ຽນກັນເປັນເຈົ້າພາບໃນແຕ່ລະປີ.
7. ສົ່ງເສີມພາກເອກະຊົນມີສ່ວນຮ່ວມສ້າງພື້ນຖານໂຄງລ່າງກິລາ-ກາຍຍະກຳ ແຕ່ສູນກາງລົງຮອດທ້ອງຖິ່ນ. ໂດຍມີນະໂຍບາຍສົ່ງເສີມທີ່ເໝາະສົມເຊັ່ນ: ໄຟຟ້າ, ນໍ້າປະປາ ແລະ ອື່ນໆຕາມແຕ່ລະກໍລະນີ.
8. ສົ່ງເສີມການອອກກຳລັງກາຍທົ່ວປະເທດໃຫ້ກວ້າງຂວາງ ແລະ ຟົດຟື້ນ.
9. ຊຸກຍູ້ທ້ອງຖິ່ນສະຫງວນເນື້ອທີ່ດິນ ແລະ ປົກປັກຮັກສາສະຖານທີ່ອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍຍະກຳ ໃຫ້ສຳເລັດ 2016-2017.

❖ **ກິລາ-ກາຍຍະກຳພື້ນເມືອງ:**

1. ສົ່ງເສີມກິລາ-ກາຍຍະກຳພື້ນເມືອງຕາມທ່າແຮງຂອງຊຸມຊົນ, ຂອງບ້ານ, ຂອງເມືອງ, ແຂວງ ແລະ ນະຄອນຫຼວງຕາມປະເພນີຈຸດພິເສດຂອງແຕ່ລະທ້ອງຖິ່ນ ມີການອອກກຳລັງກາຍ, ການຝຶກແອບ ແລະ ການແຂ່ງຂັນໃຫ້ຖືກຕ້ອງ ຕາມລະບຽບຫຼັກການ.
2. ສົ່ງເສີມກິລາ-ກາຍຍະກຳພື້ນເມືອງທີ່ມີກົດລະບຽບອັນແນ່ນອນ ເຂົ້າໃນງານມະຫາກຳກິລາ-ກາຍຍະກຳແຫ່ງຊາດ ແລະ ສາມາດອອກໄປແຂ່ງຂັນຢູ່ຕ່າງປະເທດ.

❖ **ກິລາ-ກາຍຍະກຳສຳລັບ ຊາວໜຸ່ມ, ເພດຍິງ, ຜູ້ອາຍຸສູງ ແລະ ຄົນພິການ:**

1. ສົ່ງເສີມຊາວໜຸ່ມ, ເພດຍິງ, ຜູ້ອາຍຸສູງ ແລະ ຄົນພິການຫັນມາອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍຍະກຳໃຫ້ກວ້າງຂວາງ ຢູ່ສູນກາງ ແລະ ທ້ອງຖິ່ນ.
2. ເອົາໃຈໃສ່ສ້າງ, ຈັດສັນສະຖານທີ່, ອຸປະກອນກິລາ-ກາຍຍະກຳ ເພື່ອຮັບໃຊ້ການອອກກຳລັງກາຍຝຶກຊ້ອມ ແລະ ແຂ່ງຂັນສຳລັບຊາວໜຸ່ມ, ເພດຍິງ, ຜູ້ອາຍຸສູງ ແລະ ຄົນພິການ.
3. ເຂົ້າຮ່ວມການເຄື່ອນໄຫວແຂ່ງຂັນກິລາ-ກາຍຍະກຳ ຊາວໜຸ່ມ, ເພດຍິງ, ຜູ້ອາຍຸສູງ ແລະ ຄົນພິການຢູ່ພາຍໃນ ແລະ ຕ່າງປະເທດ.
4. ຄົ້ນຄວ້າສ້າງຫຼັກສູດ, ປຶ້ມຕຳລາ, ກົດລະບຽບ, ກະຕິກາກິລາ-ກາຍຍະກຳ ປະເພດຕ່າງໆໃຫ້ສອດຄ່ອງກັບການແຂ່ງຂັນກິລາ-ກາຍຍະກຳ.

### 10.4.2 ຍຸດທະສາດທີ 2: ສົ່ງເສີມວຽກງານພະລະສຶກສາ, ສິລະປະສຶກສາ ແລະ ກິລາ-ກາຍຍະກຳໃນໂຮງຮຽນ ແລະ ສະຖາບັນການສຶກສາ.

➢ **ວຽກຈຸດສຸມ**

1. ກໍ່ສ້າງ, ປັບປຸງ ແລະ ຍົກລະດັບການສ້າງຄູພະລະສຶກສາ ແລະ ສິລະປະສຶກສາ.
2. ກໍ່ສ້າງ, ປັບປຸງ, ບູລະນະພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ການຮຽນ-ການສອນ.
3. ຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ ວິຊາພະລະສຶກສາ, ສິລະປະສຶກສາ ໃນທຸກຊັ້ນທຸກສາຍໃຫ້ທົ່ວເຖິງ.
4. ສະໜອງວັດຖຸອຸປະກອນການຮຽນ-ການສອນ ຕາມຫຼັກສູດທີ່ໄດ້ກຳນົດໄວ້ໃນແຕ່ລະຊັ້ນຮຽນ ໂດຍຂັ້ນພື້ນຖານ.
5. ຈັດຕັ້ງປະຕິບັດຫຼັກສູດ, ການຮຽນ-ການສອນ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນໂຮງຮຽນມັດທະຍົມສຶກສາຕອນປາຍ, ໂຮງຮຽນເຕັກນິກວິຊາຊີບ, ວິທະຍາໄລ ແລະ ມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ.
6. ສົ່ງເສີມທັກສະຊີວິດໃນການປ້ອງກັນສິ່ງເສບຕິດ ແລະ ປະກົດການຫຍໍ້ທໍ້ໃນໂຮງຮຽນສາມັນ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.
7. ສົ່ງເສີມ ແລະ ອະນຸລັກພູມປັນຍາທ້ອງຖິ່ນຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ.
8. ສົ່ງເສີມຂະບວນການແຂ່ງຂັນກິລາ ແລະ ສິລະປະນັກຮຽນ-ນັກສຶກສາໃຫ້ດີຂຶ້ນ, ຈັດຕັ້ງງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດຕາມກຳນົດການ ແລະ ເຂົ້າຮ່ວມການແຂ່ງຂັນກິລານັກຮຽນອາຊຽນ ແລະ ສາກົນ.
9. ປັບປຸງການບໍລິຫານ, ການຄຸ້ມຄອງວຽກງານພະລະ ແລະ ສິລະປະສຶກສາ ແລະ ເພີ່ມທະວີການພົວພັນຮ່ວມມືພາຍໃນ-ສາກົນ.

### 10.4.3 ຍຸດທະສາດທີ 3: ສົ່ງເສີມກິລາ-ກາຍຍະກຳອາຊີບໃຫ້ມີຄວາມເຂັ້ມແຂງ

➢ **ວຽກຈຸດສຸມ**

1. ເລີ່ມແຕ່ສົກປີ 2016-2017 ປັບປຸງສູນຝຶກກິລາແຫ່ງຊາດ (ສີເກີດ) ຂຶ້ນເປັນສະຖາບັນກິລາ-ກາຍຍະກຳ ໂດຍປະກອບມີ: ສູນວິທະຍາສາດການກິລາ, ວິທະຍາໄລກິລາ-ກາຍຍະກຳ, ສູນຝຶກກິລາແຫ່ງຊາດ ແລະ ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ.
2. ໃນສົກປີ 2018-2019 ສ້າງຕັ້ງໂຮງຮຽນພອນສະຫວັນກິລາ - ກາຍຍະກຳຢູ່ທ້ອງຖິ່ນ ສຳລັບແຂວງທີ່ມີທ່າແຮງ
3. ຊຸກຍູ້ທ້ອງຖິ່ນຈັດຕັ້ງສູນຝຶກແອບກິລາ-ກາຍຍະກຳພອນສະຫວັນຂອງບາງປະເພດກິລາ-ກາຍຍະກຳ ຕາມທ່າແຮງຂອງທ້ອງຖິ່ນ ເລີ່ມ ສົກປີ 2018-2019 ເປັນຕົ້ນໄປ.
4. ພັດທະນາການບໍລິຫານຈັດການແຂ່ງຂັນກິລາ-ກາຍຍະກຳໃຫ້ກວ້າງຂວາງ ແລະ ສູງຂຶ້ນ ເລັ່ງໃສ່ສ້າງບຸກຄະລາກອນດ້ານການຈັດການແຂ່ງຂັນ, ກຳມະການຄຸ້ມຄອງການແຂ່ງຂັນ, ກຳມະການຕັດສິນ ໄປສູ່ລະດັບພາກພື້ນ ແລະ ສາກົນ ເພື່ອສ້າງທ່າແຮງໃຫ້ແກ່ຊາດ.
5. ພັດທະນານັກກິລາ-ກາຍຍະກຳເຂົ້າຮ່ວມການແຂ່ງຂັນໃຫ້ນັບມື້ສູງຂຶ້ນ ໂດຍເລັ່ງໃສ່ການສ້າງນັກກິລາ-ກາຍຍະກຳທີ່ເປັນປາຍແຫຼມ, ຄູຝຶກ, ຜູ້ບໍລິຫານການກິລາ-ກາຍຍະກຳໃຫ້ໄດ້ທັງດ້ານປະລິມານ ແລະ ມີຄຸນນະພາບ.
6. ເພີ່ມທະວີການຮ່ວມມືກັບພາກພື້ນ ແລະ ສາກົນ ເພື່ອພັດທະນາກິລາ-ກາຍຍະກຳລາວ.
7. ຄຸ້ມຄອງນຳໃຊ້ສະໜາມກິລາ-ກາຍຍະກຳ ແລະ ອຸປະກອນທີ່ມີແລ້ວໃຫ້ເກີດປະໂຫຍດສູງສຸດເພື່ອການພັດທະນາກິລາ-ກາຍຍະກຳລາວ.

8. ສືບຕໍ່ປະຕິບັດນະໂຍບາຍຕໍ່ນັກກິລາ-ກາຍຍະກຳ, ຄູຝຶກທີມຊາດ ທີ່ມີຜົນງານ ແລະ ຜູ້ມີສ່ວນຮ່ວມໃນການພັດທະນາກິລາ-ກາຍຍະກຳລາວໂດຍໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ.
9. ໃຫ້ມີນະໂຍບາຍໃນການນຳໃຊ້ໄຟຟ້າ, ນໍ້າປະປາ ຕໍ່ຜູ້ລົງທຶນດ້ານກິລາ-ກາຍຍະກຳ ແລະ ການແຂ່ງຂັນລະດັບຊາດ.
10. ສົ່ງເສີມບາງປະເພດກິລາ-ກາຍຍະກຳ ທີ່ເປັນທ່າແຮງຂອງລາວ ເພື່ອພັດທະນາໄປເປັນກິລາ-ກາຍຍະກຳອາຊີບໃນຕໍ່ໜ້າ.
11. ສົມທົບກັບມະຫາວິທະຍາໄລແຫ່ງຊາດ ສ້າງຕັ້ງຄະນະວິຊາວິທະຍາສາດກິລາ-ກາຍຍະກຳ ທີ່ມະຫາວິທະຍາໄລແຫ່ງຊາດ ສົກປີ 2016-2017.
12. ຄຸ້ມຄອງ ແລະ ນຳໃຊ້ພື້ນຖານໂຄງລ່າງກິລາ-ກາຍຍະກຳ ທີ່ມີແລ້ວໃຫ້ເກີດຜົນປະໂຫຍດສູງສຸດ.

### 10.4.4 ຍຸດທະສາດທີ 4: ສົ່ງເສີມວຽກງານກິລາໂອແລມປິກ

- **ວຽກຈຸດສຸມ**

1. ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານກິລາ-ກາຍຍະກຳ ລະດັບທ້ອງຖິ່ນ ແລະ ສະຫະພັນກິລາແຫ່ງຊາດສູ່ໂອແລມປິກ.
2. ຍົກລະດັບຄູຝຶກ, ກຳມະການຕັດສິນ ແລະ ນັກກິລາເພື່ອກະກຽມເຂົ້າຮ່ວມການແຂ່ງຂັນໂອແລມປິກ, ພາກພື້ນ, ອະນຸພາກພື້ນ ແລະ ສາກົນ.
3. ສົມທົບກັບບັນດາກົມວິຊາການ, ສະຫະພັນກິລາແຫ່ງຊາດຈັດຕັ້ງປະຕິບັດບັນດາໂຄງການຂອງໂອແລມປິກໃຫ້ກວ້າງຂວາງ ແລະ ມີປະສິດທິຜົນ.
4. ສົມທົບກັບກົມແຜນການ, ບັນດາກົມວິຊາການ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າຊອກຫາແຫຼ່ງທຶນພັດທະນາກິລາສູ່ໂອແລມປິກໂດຍຜ່ານກຸ່ມ 5 ແລະ ຄູ່ຮ່ວມພັດທະນາ.
5. ສືບຕໍ່ຄົ້ນຄວ້າ ປັບປຸງບັນດານິຕິກຳ, ລະບຽບກະຕິການການແຂ່ງຂັນກິລາໂອແລມປິກເພື່ອຍົກລະດັບຄວາມສາມາດໃຫ້ແກ່ສະຫະພັນກິລາໂອແລມປິກ.
6. ເພີ່ມທະວີການຮ່ວມມື ແລະ ແລກປ່ຽນບົດຮຽນໃນການພັດທະນາກິລາສູ່ໂອແລມປິກກັບບັນດາປະເທດເພື່ອນມິດ ແລະ ສາກົນ.
7. ສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງປັບປຸງບັນດານິຕິກຳທີ່ເປັນການຈຳກັດ ແລະ ກີດຂວາງໃນການພັດທະນາກິລາລາວເວົ້າລວມເວົ້າສະເພາະກິລາສູ່ໂອແລມປິກ.
8. ສົມທົບກັບພາກສ່ວນຕ່າງໆເພື່ອຄົ້ນຄວ້າວິໄຈປະເມີນການພັດທະນາກິລາລາວ ສູ່ໂອແລມປິກເພື່ອບັນລຸຄາດໝາຍໃນຍຸດທະສາດການພັດທະນາກິລາລາວເຖິງປີ 2020.

## 10.5 ຄວາມຕ້ອງການດ້ານການເງິນ

ເພື່ອຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ຍຸດທະສາດຕ່າງໆໃນການປັບປຸງວຽກງານກິລາ-ກາຍຍະກຳ, ຄາດຄະເນຄວາມຕ້ອງການດ້ານງົບປະມານ ແຕ່ນີ້ຮອດປີ 2020 ມີດັ່ງນີ້:

**ຕາຕະລາງ 36: ຄາດຄະເນຄວາມຕ້ອງການດ້ານການເງິນສຳລັບວຽກງານກິລາ-ກາຍຍະກຳ**

| ກິລາ-ກາຍຍະກຳ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|
| ງົບປະມານຊື້ໃໝ່ | 5,000 | 5,000 | 5,000 | 5,000 | 5,000 |
| ງົບປະມານບໍລິຫານປົກກະຕິ | 5,000 | 5,000 | 5,000 | 5,000 | 5,000 |
| ການສ້າງຄວາມເຂັ້ມແຂງນັກກິລາ, ກຳມະການ ແລະ ຄູຝຶກ | 28,200 | 28,200 | 28,200 | 28,200 | 28,200 |
| **ລວມບໍລິຫານ** | **38,200** | **38,200** | **38,200** | **38,200** | **38,200** |
| ການກໍ່ສ້າງພື້ນຖານໂຄງລ່າງສຳລັບກິລາ-ກາຍຍະກຳ | 5,000 | 30,000 | 30,000 | 30,000 | 30,000 |
| **ລວມລົງທຶນ** | **5,000** | **30,000** | **30,000** | **30,000** | **30,000** |
| **ລວມ** | **43,200** | **68,200** | **68,200** | **68,200** | **68,200** |

ສະໜັບສະໜູນການຈັດພິມໂດຍ
ປະເທດອົດສະຕຣາລີ ແລະ ສະຫາພາບເອີຣົບ

Australian Aid

European Union

ສະໜັບສະໜູນການຈັດພິມໂດຍ
ປະເທດອົດສະຕຣາລີ ແລະ ສະຫາພາບເອີຣົບ